ສ.ປ.ປ ລາວ

# ສະພາບລວມດ້ານບົດບາດຍິງ-ຊາຍ

ເດືອນ ພະຈິກ, ປີ 2005








ສະຫະພັນແມ່ຍິງລາວ
ສູນຂໍ້ມູນຂ່າວສານ ບົດບາດຍິງ-ຊາຍ ເພື່ອການພັດທະນາ (ສຂບພ)

ສະໜັບສະໜູນໂດຍ: ທະນາຄານໂລກ

ສ.ປ.ປ ລາວ ສະພາບລວມດ້ານບົດບາດຍິງ-ຊາຍ

# ສະພາບລວມດ້ານບົດບາດຍິງ-ຊາຍ
# ໃນ ສ ປ ປ ລາວ

ສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍເພື່ອການພັດທະນາ (ສຂບພ)

ສະໜັບສະໜູນໂດຍ: ທະນາຄານໂລກ

ພະຈິກ, 2005

**ຄະນະຈັດທຳບົດລາຍງານ**

ສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍເພື່ອການພັດທະນາແມ່ນໂຄງການກໍ່ສ້າງຄວາມສາມາດຂອງສະຫະພັນແມ່ຍິງລາວ, ຊຶ່ງເປັນຜູ້ຈັດພິມເອກະສານກ່ຽວກັບສະພາບລວມດ້ານບົດບາດຍິງ-ຊາຍໃນ ສປປ ລາວ ສະບັບນີ້ຂຶ້ນມາ.

**ຜູ້ຂຽນບົດລາຍງານ**

ອາຈານ ໂພທອງ ສີລິພົງ, ທີ່ປຶກສາໂຄງການ,
ສູນຂໍ້ມູນຂ່າວສານ ບົດບາດຍິງ-ຊາຍ ເພື່ອການພັດທະນາ (ຫົວໜ້າທີມງານ)
ທ່ານ ດຣ. ອຸທາກີ ຄຳພຸຍ, ຊ່ຽວຊານດ້ານບົດບາດຍິງ-ຊາຍ,
ສູນຂໍ້ມູນຂ່າວສານ ບົດບາດ ຍິງ-ຊາຍ ເພື່ອການພັດທະນາ
ທ່ານ ນາງ ສຸກີ ມິນໂຍ, ທີ່ປຶກສາດ້ານບົດບາດຍິງ-ຊາຍຈາກ SNV ປະຈຳສູນຂໍ້ມູນຂ່າວສານ
ບົດບາດຍິງ-ຊາຍ ເພື່ອການພັດທະນາ

**ຄະນະບໍລິຫານງານ ແລະ ທີມງານວິຊາການ**

ທ່ານ ນາງ ບັນດິດ ປະທຸມວັນ, ຫົວໜ້າໂຄງການ
ທ່ານ ນາງ ບົວຈັນ ສີຫານາດ, ຜູ້ຈັດການໂຄງການ
ທ່ານ ນາງ ດວງສະໝອນ ດາລາວົງ ຜູ້ຊ່ວຍຜູ້ຈັດການໂຄງການ
ທ່ານ ທັດສະພອນ ຊົງບັນດິດ, ວິຊາການ
ທ່ານ ນາງ ວັນທິດດາ ເມືອງຄຳເປົ່າ, ວິຊາການດ້ານສື່ມວນຊົນ
ທ່ານ ນາງ ຄຳຊ່າງ ວົງຄຳຊາວ, ພະນັກງານບັນຊີ-ການເງິນ
ທ່ານ ບຸນແພງ ປັນຍາສິດ, ພະນັກງານເລຂາໂຄງການ
ທ່ານ ນາງ ວັນມະນີ ດິດຕະພົງ, ພະນັກງານຫໍສະໝຸດ
ທ່ານ ພອນສະຫວັນ ລັດມະນີ ພະນັກງານຂ່າວສານ
ທ່ານ ລຳພອງ ຄັນທະລີວັນ ພະນັກງານຂ່າວສານ

**ຜູ້ກວດແກ້ບົດລາຍງານ**

ອາຈານ ໂພທອງ ສີລີພົງ, ທີ່ປຶກສາສູນຂໍ້ມູນຂ່າວສານ ບົດບາດ ຍິງ-ຊາຍ ເພື່ອການພັດທະນາ
ທ່ານ ນາງ ສຸກີ ມິນໂຍ, ທີ່ປຶກສາດ້ານບົດບາດຍິງ-ຊາຍຈາກ SNV ປະຈຳສູນຂໍ້ມູນຂ່າວສານ
ບົດບາດຍິງ-ຊາຍ ເພື່ອການພັດທະນາ
ທ່ານ ນາງ ໄລລາ ອານ-ຣາມັດສ, ທະນາຄານໂລກ
ນາງ ຈິວລຽນ ມ.ບຣາວ, ທ່ານ ນ. ນາລິນທອນ ພົນຍາພັນ ທະນາຄານໂລກ

# ສາລະບານ


**ອັກສອນຫຍໍ້**.............................................................................................................. 7

**ແຜນທີ່ ສປປ ລາວ** ...................................................................................................... 9

**ຄໍາຂອບໃຈ**............................................................................................................... 10

**ຄໍານໍາ**.................................................................................................................... 12

**ແນວຄວາມຄິດ ແລະ ນິຍາມກ່ຽວກັບບົດບາດຍິງ-ຊາຍ** ....................................................... 15

**ບົດສະຫຼຸບຫຍໍ້** ......................................................................................................... 16

**ບົດທີ 1**.................................................................................................................. 22

**ສະພາບເສດຖະກິດ, ສັງຄົມ, ການເມືອງ ແລະ ວັດທະນະທໍາ** ................................................. 22

1.1 ສະພາບລວມ .........................................................................................................22

1.2 ສະພາບປະຫວັດສາດ ..............................................................................................24

1.3 ສະພາບທາງດ້ານການເມືອງ.......................................................................................25

1.4 ສະພາບທາງດ້ານວັດທະນະທໍາ ...................................................................................26

1.5 ຄວາມທຸກຍາກ ແລະ ເສດຖະກິດ..................................................................................30

**ບົດທີ 2**.................................................................................................................. 35

**ສະພາບແວດລ້ອມທີ່ເອື້ອອໍານວຍໃນການສົ່ງເສີມ ຄວາມສະເໝີພາບ** .......................................... 35

**ລະຫວ່າງຍິງ-ຊາຍ: ດ້ານກົດໝາຍ, ການຈັດຕັ້ງ ແລະ ແຜນນະໂຍບາຍ**........................................ 35

2.1. ສະພາບລວມ .......................................................................................................35

2.2. ດ້ານກົດໝາຍ........................................................................................................35

2.2 ກົນໄກເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງລາວ ..........................................................39

2.3 ດ້ານນະໂຍບາຍ.......................................................................................................42

**ບົດທີ 3**.................................................................................................................. 51

**ບົດບາດຍິງ-ຊາຍ, ກະສິກໍາ ແລະ ຊັບພະຍາກອນຊົນນະບົດ** ..................................................... 51

3.1. ສະພາບລວມ .........................................................................................................51

3.2. ວຽກກະສິກໍາ ແລະ ກິດຈະກໍາສ້າງລາຍໄດ້.........................................................................51

3.3. ການເຂົ້າເຖິງທີ່ດິນ ......................................................................................................57

3.4. ການເຂົ້າເຖິງໂຄງລ່າງພື້ນຖານ ແລະ ຕະຫລາດ......................................................................59

3.5. ການເຂົ້າເຖິງແຫລ່ງທຶນ ຫລື ສິນເຊື່ອ...............................................................................60

3.6. ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ.....................................................................64

**ບົດທີ 4** .......... 67
**ການມີສ່ວນຮ່ວມທາງດ້ານເສດຖະກິດ** .......... 67
4.1. ສະພາບລວມ .......... 67
4.2. ການມີສ່ວນຮ່ວມດ້ານກຳລັງແຮງງານ .......... 68
4.3. ຂະແໜງເສດຖະກິດນອກລະບົບ (ບໍ່ເປັນທາງການ) .......... 69
4.4. ຂະແໜງເສດຖະກິດໃນລະບົບ .......... 72
ໃນຂະແໜງເສດຖະກິດໃນລະບົບມີການຈ້າງກຳມະກອນເພດຍິງຫລາຍກວ່າເພດຊາຍ, ແຕ່ວ່າ ເຂົາເຈົ້າ 72
4.5. ການເຄື່ອນຍ້າຍແຮງງານ .......... 73
**ບົດທີ 5** .......... 76
**ການເຂົ້າເຖິງການສຶກສາ** .......... 76
5.1. ສະພາບລວມ .......... 76
5.2. ການຮູ້ໜັງສື .......... 77
5.3. ການເຂົ້າໂຮງຮຽນ .......... 79
5.4. ອຸປະສັກໃນການເຂົ້າໂຮງຮຽນ .......... 81
5.5. ແຜນປະຕິບັດງານຂອງລັດຖະບານ .......... 87
**ບົດທີ 6** .......... 88
**ການເຂົ້າເຖິງການປິ່ນປົວສຸຂະພາບ** .......... 88
6.2. ສຸຂະພາບຈະເລີນພັນ ແລະ ສຸຂະພາບເດັກ .......... 88
6.3. ການເຂົ້າເຖິງການບໍລິການສາທາລະນະສຸກ .......... 92
6.4. ບູລິມະສິດດ້ານສາທາລະນະສຸກຂອງຊາດ .......... 95
**ບົດທີ 7** .......... 97
**ປະກົດການຫຍໍ້ທໍ້** .......... 97
7.1. ສະພາບລວມ .......... 97
7. 2. ການເຄື່ອນຍ້າຍແຮງງານ ແລະ ການຄ້າມະນຸດ .......... 97
7.3. ເຊື້ອໄວຣັດເອດສໄອວີ/ເອດສ (HIV/AIDS) .......... 99
7.4. ການນຳໃຊ້ຄວາມຮຸນແຮງຕໍ່ກັບແມ່ຍິງ .......... 101
7.5. ຢາເສບຕິດ .......... 103
**ບົດທີ 8** .......... 104
**ການມີສ່ວນຮ່ວມຂອງແມ່ຍິງໃນການຕັດສິນໃຈ** .......... 104
8.1. ສະພາບລວມ .......... 104

8.2. ແມ່ຍິງໃນສະພາແຫ່ງຊາດ ....................................................................... 105
8.3. ແມ່ຍິງໃນໜ່ວຍງານຂອງລັດ ...................................................................... 106
**ບົດທີ 9** ........................................................................................................ 109
**ບົດສະຫຼຸບ ແລະ ຂໍ້ສະເໜີແນະ** ........................................................................ 109
9.1. ບົດສະຫຼຸບ ..................................................................................................... 109
9.2. ຂໍ້ສະເໜີແນະ ................................................................................................. 110
**ເອກະສານອ້າງອີງ** .......................................................................................... 118

# ອັກສອນຫຍໍ້

| | | |
|---|---|---|
| ADB | : | ທະນາຄານພັດທະນາອາຊີ |
| ASEAN | : | ສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້ |
| CPI | : | ຄະນະກຳມະການແຜນການ ແລະ ການລົງທຶນ |
| DOF | : | ກົມປ່າໄມ້ |
| FOMACOP | : | ໂຄງການຄຸ້ມຄອງ ແລະ ອານຸລັກຊັບພະຍາກອນປ່າໄມ້ |
| GOL | : | ລັດຖະບານແຫ່ງ ສປປ ລາວ |
| GRID | : | ສູນຂໍ້ມູນຂ່າວສານ ບົດບາດຍິງ-ຊາຍເພື່ອການພັດທະນາ |
| ILO | : | ອົງການແຮງງານສາກົນ |
| INGO | : | ອົງການຈັດຕັ້ງສາກົນທີ່ບໍ່ແມ່ນລັດຖະບານ |
| LECS | : | ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ຂອງຄົວເຮືອນ |
| LNFC | : | ແນວລາວສ້າງຊາດ |
| LWU | : | ສະຫະພັນແມ່ຍິງລາວ |
| LYO | : | ອົງການຈັດຕັ້ງຊາວໜຸ່ມລາວ |
| MAF | : | ກະຊວງ ກະສິກຳ ແລະ ປ່າໄມ້ |
| MOC | : | ກະຊວງການຄ້າ |
| MOE | : | ກະຊວງສຶກສາທິການ |
| MOF | : | ກະຊວງການເງິນ |
| MRC | : | ອົງການແມ່ນ້ຳຂອງ |
| NGPES | : | ແຜນຍຸດທະສາດເພື່ອການເຕີບໂຕ ແລະ ຫຼຸດຜ່ອນຄວາມທຸກຍາກແຫ່ງຊາດ |
| NSEDP | : | ແຜນງານພັດທະນາເສດຖະກິດ-ສັງຄົມແຫ່ງຊາດ |
| NSC | : | ສູນສະຖິຕິແຫ່ງຊາດ |
| NTFP | : | ຜະລິດຕະພັນເຄື່ອງປ່າຂອງດົງ |
| PAFES | : | ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້ ແຂວງ |
| PAFO | : | ພະແນກກະສິກຳ ແລະ ປ່າໄມ້ແຂວງ |
| PMO | : | ຄຳສັ່ງແນະນຳຂອງນາຍົກລັດຖະມົນຕີ |
| PPA | : | ການປະເມີນຄວາມທຸກຍາກແບບມີສ່ວນຮ່ວມ |
| PRA | : | ການປະເມີນສະພາບຊົນນະບົດແບບມີສ່ວນຮ່ວມ |
| RRA | : | ການປະເມີນສະພາບຊົນນະບົດແບບເລັ່ງດ່ວນ |
| SFM | : | ການຄຸ້ມຄອງປ່າໄມ້ແບບຍືນຍົງ |

| | | |
|---|---|---|
| SUFORD | : | ໂຄງການຈັດສັນປ່າຜະລິດ ແລະ ພັດທະນາຊົນນະບົດແບບຍືນຍົງ |
| SIDA | : | ອົງການພັດທະນາສາກົນຂອງປະເທດສະວີເດັນ |
| STEA | : | ອົງການວິທະຍາສາດ, ເຕັກໂນໂລຢີ ແລະ ສິ່ງແວດລ້ອມ |
| THB | : | ສະກຸນເງິນບາດໄທ |
| UNDP | : | ອົງການສະຫະປະຊາຊາດ ເພື່ອການພັດທະນາ |
| VFA | : | ສະມາຄົມປ່າໄມ້ຂັ້ນບ້ານ |
| VFC | : | ຄະນະກຳມະການປ່າໄມ້ຂັ້ນບ້ານ |
| VRF | : | ກອງທຶນໝູນວຽນຂັ້ນບ້ານ |
| WB | : | ທະນາຄານໂລກ |

ອັດຕາແລກປ່ຽນ (2004) 1 US $ = 10.700 ກີບ.

# ແຜນທີ່ ສປປ ລາວ


N
0
200
kilometres
Phongsaly
Luang Namtha
Oudomxay
Bokeo
Luang Prabang
Huaphanh
Xiengkhouang
Xayabury
Vientiane Province
Xaysomboun (SR)
Borikhamxay
Vientiane Municipality
Khammouane
Savannakhet
Saravane
Sekong

## ຄຳຂອບໃຈ

ພວກຂ້າພະເຈົ້າຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນມາຍັງບັນດາທ່ານ ທີ່ໃຫ້ການຊ່ວຍເຫຼືອ, ແນະນຳ ແລະ ຮ່ວມມືໃນການຮ່າງບົດລາຍງານສະບັບນີ້. ທີມງານພວກເຮົາຂໍຖືເອົາໂອກາດດັ່ງກ່າວນີ້ ສະແດງຄວາມຊົມເຊີຍຕໍ່ບັນດາທ່ານ ແລະ ກະຊວງຕ່າງໆ ທີ່ໃຫ້ ຄວາມ ຊ່ວຍເຫຼືອ. ພິເສດແມ່ນສະແດງ ຄວາມຮູ້ບຸນຄຸນຕໍ່ທ່ານ ນາງ ອ່ອນຈັນ ທຳມະວົງ, ອາດີດປະທານ ສະຫະພັນແມ່ຍິງລາວ, ທ່ານ ນາງ ເຂັມເພັດ ພົນເສນາ ແລະ ທ່ານ ນາງ ບົວວອນ ອ່ອນຈັນທອມ ອາດີດຮອງປະທານສູນກາງ ສະຫະພັນແມ່ຍິງລາວ ທີ່ໄດ້ໃຫ້ການຊີ້ນຳ. ຂໍຂອບໃຈຕໍ່ບັນດາທ່ານ ແລະ ກະຊວງຕ່າງໆທີ່ໄດ້ໃຫ້ ການຊ່ວຍເຫຼືອໃນການຂຽນບົດ ລາຍ ງານສະບັບນີ້:

1. ທ່ານ ນາງ ບົງອອນ ໄຊຍະລາດ, ຮອງປະທານ ສະຫະພັນແມ່ຍິງນະຄອນຫຼວງວຽງຈັນ, ສະມາຊິກສະພາແຫ່ງຊາດ
2. ທ່ານ ນາງ ສີງຄຳ ຄົງສະຫວັນ, ຮອງຫົວໜ້າກົມແຜນການ, ຄະນະກຳມະການແຜນການ ແລະ ການລົງທຶນ
3. ທ່ານ ນາງ ຂັນທະລີ ສີລິພົງພັນ, ຮອງຫົວໜ້າກົມສາມັນສຶກສາ, ກະຊວງສຶກສາທິການ, ປະທານ ສະຫະພັນແມ່ຍິງກະຊວງສຶກສາທິການ.
4. ທ່ານ ສົມບຸນມີ ພົມມະວົງ, ວິຊາການ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ
5. ທ່ານ ນາງ ທີລາຄາ ຈັນທະລານຸວົງ, ພະນັກງານສະຖິຕິ, ສູນສະຖິຕິແຫ່ງຊາດ
6. ທ່ານ ນາງ ສົມຈິດ ບຸບຜາ, ຫົວໜ້າກົມພະຍາບານ ແລະ ຜູ້ຊ່ວຍທາງການແພດ, ກະຊວງສາທາ ລະນະສຸກ, ປະທານສະຫະພັນແມ່ຍິງກະຊວງສາທາລະນະສຸກ
7. ທ່ານ ນາງ ວຽງຄຳ ວົງເດືອນ, ຫົວໜ້າພະແນກແຜນການ
8. ທ່ານ ໜູພັນ ມະຫາພົນ, ປະທານສານນະຄອນຫຼວງວຽງຈັນ
9. ທ່ານ ນາງ ແກ້ວມະນີໂຊດ ວໍລະລາດ, ຜູ້ພິພາກສາສານນະຄອນຫຼວງວຽງຈັນ
10. ທ່ານ ທອງເພັດ ອິນທະວອນ, ຜູ້ອຳນວຍການ ພັກ ແລະ ອົງການຈັດຕັ້ງມະຫາຊົນ
11. ທ່ານ ສໍສອນພົດ ພານຸວົງ, ຮອງຫົວໜ້າກົມຄົ້ນຄວ້າຊົນເຜົ່າ, ສູນກາງແນວລາວສ້າງຊາດ
12. ທ່ານ ນາງ ວິໄລຄຳ ໂພສາລາດ, ປະທານສະຫະພັນແມ່ຍິງກະຊວງ ຄົມມະນາຄົມ-ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ
13. ທ່ານ ນາງ ສຸວັນນີ ພອນວິໄລ, ຮອງປະທານສະຫະພັນແມ່ຍິງກະຊວງ ກະສິກຳ ແລະ ປ່າໄມ້
14. ທ່ານ ຄຳເພັດ ແສງຈັນອຸດົມ, ທີ່ປຶກສາຈາກທະນາຄານໂລກ
15. ທ່ານ ນາງ ຈັນທົ່ມ ລັດມະນີ, ຫົວໜ້າຫ້ອງການສູນກາງສະຫະພັນແມ່ຍິງລາວ
16. ທ່ານ ນາງ ຄຳໝັ້ນ ທາວົງລາດ, ຫົວໜ້າສູນຝຶກອົບຮົມສະຫະພັນແມ່ຍິງລາວ

17. ທ່ານ ນາງ ຫວັດສະດີ ໂຄດໂຍທາ, ຫົວໜ້າກົມວັດທະນາທຳ ແລະ ສື່ມວນຊົນ, ສະຫະພັນແມ່ຍິງລາວ
18. ທ່ານ ນາງ ທຸມພອນ ດວງດາວົງ, ຫົວໜ້າກົມອົບຮົມ ແລະ ຄົ້ນຄ້ວາສະພາບແມ່ຍິງ, ສະຫະພັນແມ່ຍິງ
19. ທ່ານ ນາງ ບົວພອນ ດາລາແສນ, ຫົວໜ້າກົມປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ, ສະຫະພັນແມ່ຍິງ

ພ້ອມນີ້ ຂໍຂອບໃຈມາຍັງ ທ່ານ ອຽນ ພອດເຕີ (Mr. Ian C. Porter) ຜູ້ອຳນວຍການ ທະນາຄານໂລກ, ຫົວຫນ້າ ທະນາຄານໂລກປະຈຳ ສປປ ລາວ ທ່ານ ອີລັງໂກວານ ປັດຈາມູທູ (Mr. Patchumutu Illangovan) ທີ່ໄດ້ໃຫ້ ການ ສະໜັບສະໜູນ, ຫົວຫນ້າ ທີມງານ ຂອງ ທະນາຄານໂລກ ນຳພາໂດຍ ທ່ານ ນາງ ຈີວລຽນ ມ.ບຣາວ (Ms. Gillian M. Brown) ແລະ ທ່ານ ນາງ ນາລິນທອນ ພົນຍາພັນ (Nalinthone Phonyaphanh) ໄດ້ໃຫ້ ຄຳແນະນຳ ແລະ ປະສານງານ ໂດຍຕະຫຼອດ, ທ່ານ ນາງ ໄລລາ ອາລ-ຮາມັດ (Ms. Laila al-Hamad), ທ່ານ ນາງ ປະມອນລັດ ທັນສະຫງວນວົງ (Ms.Pamornrat Tansanguanwong), ທ່ານ ນາງ ຈູນເວຊຸມ (Ms. June-wei Sum) ແລະ ທ່ານ ນາງ ຄາເມັນ ເດີ ປາດຊ ນີວສ (Ms. Carmen de Paz Nieves) ທີ່ໄດ້ໃຫ້ການ ຊ່ວຍເຫຼືອທີ່ມີຄຸນຄ່າ ແລະ ທີມງານກໍ່ໄດ້ຮັບ ຄຳເຫັນ ແລະ ການແນະນຳ ຈາກ ທ່ານ ອາເລດສານໂດຣ ມາກໂນລີ (Alessandro Magnoli), ກັດສະປາ ຣິດສເຕີ (Kaspar Richter) ແລະ ທ່ານ ໂທມັດສ ເມັດເລ (Thomas Medley).

# ຄຳນຳ

ເອກະສານສະພາບລວມດ້ານບົດບາດຍິງ-ຊາຍສະບັບນີ້ ແມ່ນ ຖືກລວບລວມຂື້ນມາໂດຍ ສູນຂໍ້ມູນ ຂ່າວສານບົດບາດຍິງ-ຊາຍ ເພື່ອການພັດທະນາ, ຊຶ່ງແມ່ນໂຄງການສ້າງຄວາມສາມາດ ຂອງ ສະຫະພັນ ແມ່ຍິງລາວ. ເອກະສານສະບັບນີ້ໄດ້ຮັບການສະໜັບສະໜູນ ແລະ ຊ່ວຍເຫລືອຈາກທະນາຄານໂລກ. ຂໍ້ມູນຕ່າງໆແມ່ນຖືກເກັບກຳຮັບໂຮມຈາກຂໍ້ມູນມືສອງໄປພ້ອມໆກັບການລົງເກັບກຳຂໍ້ມູນຢູ່ພາກສະໜາມ ແລະ ສຳພາດຜູ້ໃຫ້ຂໍ້ມູນຢູ່ຂັ້ນກະຊວງ, ສະຖາບັນ, ອົງການຈັດຕັ້ງສາກົນ ພ້ອມດ້ວຍພາກສ່ວນເອກະຊົນຕ່າງໆ. ບົດລາຍງານສະບັບຮ່າງ ແມ່ນໄດ້ຜ່ານພາກສ່ວນກ່ຽວຂ້ອງຕ່າງໆເພື່ອປະກອບຄຳຄິດເຫັນ ແລະ ສະໜອງຂໍ້ມູນ ເພື່ອໃຫ້ມີຄວາມສົມບູນຂື້ນ.

**ເອກະສານສະພາບລວມດ້ານບົດບາດຍິງ-ຊາຍ ມີເປົ້າໝາຍເພື່ອ:** (1) ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການປະຕິບັດແຜນຍຸດທະສາດ ເພື່ອການເຕີບໂຕ ແລະ ຫລຸດຜ່ອນຄວາມທຸກຍາກແຫ່ງຊາດໂດຍ ການສະໜອງຂໍ້ມູນແຍກເພດ ແລະ ຂໍ້ມູນເພື່ອການວາງແຜນແບບເອົາໃຈໃສ່ບົດບາດຍິງຊາຍ; (2) ສະໜອງເອກະສານທີ່ເປັນພື້ນຖານໃຫ້ແກ່ ບັນດາກະຊວງ, ສະຖາບັນ, ສະມາຄົມຜູ້ໃຫ້ທຶນ ແລະ ອົງການຈັດຕັ້ງສາກົນຕ່າງໆ ທີ່ຈັດຕັ້ງປະຕິບັດວຽກງານພັດທະນາ ເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ; (3) ສ້າງຄວາມເຂົ້າໃຈອັນເລິກເຊິ່ງເຖິງສະພາບບົດບາດຂອງແມ່ຍິງ ແລະ ຜູ້ຊາຍໃນຂະບວນການພັດທະນາຂອງ ສປປ ລາວ, ຊຶ່ງຈະຊ່ວຍໃຫ້ນະໂຍບາຍ ແລະ ແຜນງານພັດທະນາໄດ້ເອົາໃຈໃສ່ທັດສະນະບົດບາດຍິງ-ຊາຍ ເພື່ອແກ້ໄຂບັນຫາຄວາມບໍ່ດຸ່ນດ່ຽງ ຫຼື ຫຼຸດໂຕນກັນລະຫວ່າງຍິງ-ຊາຍ.

ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແມ່ນເປົ້າໝາຍອັນສຳຄັນຂອງ ສປປ ລາວ ຄືດັ່ງທີ່ໄດ້ລະບຸໄວ້ໃນເປົ້າໝາຍ ແລະ ບຸລິມະສິດຂອງແຜນຍຸດທະສາດ ເພື່ອການເຕີບໂຕ ແລະ ຫຼຸດຜ່ອນຄວາມທຸກຍາກແຫ່ງຊາດ. ຍຸດທະສາດບົດບາດຍິງ-ຊາຍໃນແຜນຍຸດທະສາດ ເພື່ອການເຕີບໂຕ ແລະ ຫຼຸດຜ່ອນຄວາມທຸກຍາກແຫ່ງ ຊາດ ມີເປົ້າໝາຍເພື່ອຫຼຸດຜ່ອນຄວາມທຸກຍາກ, ໄດ້ຮັບຮູ້ເຖິງບົດບາດອັນສຳຄັນຂອງແມ່ຍິງລາວທີ່ສະແດງອອກໃນສັງຄົມ. ການມີສ່ວນຮ່ວມຂອງແມ່ຍິງ ໂດຍສະເພາະແມ່ນຜູ້ທີ່ມີຖານະທຸກຍາກ ແລະ ແມ່ຍິງຊົນເຜົ່າ ແມ່ນມີຄວາມສຳຄັນຫຼາຍສຳລັບປະເທດເຮົາເພື່ອໃຫ້ບັນລຸເປົ້າໝາຍຫຼຸດຜ່ອນຄວາມທຸກຍາກ ແລະ ປັບປຸງມາດຕະຖານການດຳລົງຊີວິດ. ເພື່ອບັນລຸຕາມເປົ້າໝາຍດັ່ງກ່າວ, ລັດຖະບານ ໄດ້ສ້າງກົນໄກລະດັບຊາດ ເພື່ອສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ຊຶ່ງລວມມີລັດຖະທຳມະນູນ (ມາດຕາທີ 22 ແລະ 24), ກົດໝາຍສະບັບຕ່າງໆ ເຊັ່ນ: ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງສິດທິຂອງແມ່ຍິງ (2003), ແລະ ອົງການຈັດຕັ້ງຕ່າງໆ, ເຊັ່ນ:ສະຫະພັນແມ່ຍິງລາວແລະ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ. ນອກນັ້ນຍັງໄດ້ຮັບຮອງ

ເອົາສົນທິສັນຍາ ສາກົນສະບັບຕ່າງໆ ເຊັ່ນ: ສົນທິສັນຍາສາກົນ ວ່າການດ້ວຍການລຶບລ້າງທຸກຮູບແບບການຈໍາແນກຕໍ່ແມ່ ຍິງ (CEDAW 1981) ແລະ ແຜນປະຕິບັດປັກກິ່ງ (1995). ສປປ ລາວ ຍັງໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດ ເປົ້າໝາຍສະຫັດສະຫວັດເພື່ອການພັດທະນາ (MDGs) ຊຶ່ງຖືເອົາການສົ່ງເສີມຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ແລະ ຄວາມກ້າວໜ້າຂອງແມ່ຍິງແມ່ນໜຶ່ງໃນບັນດາເປົ້າໝາຍເຫຼົ່ານີ້.

ໜ້າທີ່ອັນສໍາຄັນຂອງສະຫະພັນແມ່ຍິງລາວ ແມ່ນ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ, ເຮັດໜ້າທີ່ໃນການສົ່ງເສີມ ແລະ ຕິດຕາມໃນການຈັດຕັ້ງ ປະຕິບັດ ແຜນງານການພັດທະນາແມ່ຍິງ ໃຫ້ສອດຄ່ອງກັບ ລັດຖະທໍາມະນູນ ແລະ ກົດໝາຍ ຂອງ ຊາດ, ແລະ ນະໂຍບາຍຂອງພັກ-ລັດ, ແລະ ພ້ອມທັງຕິດຕາມການປະຕິບັດສິດສະເໝີພາບ ລະຫວ່າງຍິງ-ຊາຍ. ໜ້າທີ່ຮັບຜິດຊອບ ຕົ້ນຕໍຂອງຄະນະກໍາມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ແມ່ນຮັບປະກັນຄວາມສະເຫມີພາບ ໃນການເຂົ້າເຖິງແຫຼ່ງຊັບພະຍາກອນ ແລະ ການບໍລິການຂັ້ນພື້ນຖານສໍາລັບທຸກຄົນ ໂດຍບໍ່ຈໍາແນກເພດ, ຖານະທາງສັງຄົມ, ຊົນເຜົ່າ ແລະ ລະດັບການສຶກສາ. ພາຍໃຕ້ການຊີ້ນໍາ ຂອງຄະນະກໍາມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ທຸກກະຊວງ ຕ້ອງໄດ້ ວາງຍຸດທະສາດ ແລະ ແຜນການຈັດຕັ້ງປະຕິບັດ ເພື່ອສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍໃນທຸກລະດັບ. ກ່ຽວກັບບັນຫາດັ່ງກ່າວນີ້, ຂໍ້ມູນສະຖິຕິແຍກເພດໃນເອກະສານສະພາບລວມກ່ຽວກັບບົດບາດຍິງ-ຊາຍສະບັບນີ້ ເປັນແຫຼ່ງຂໍ້ມູນທີ່ມີປະໂຫຍດໃຫ້ແກ່ບັນດາກະຊວງຕ່າງໆ ໃນການວາງແຜນງານ ແລະ ໂຄງການ ໂດຍຮັບປະກັນໃຫ້ແມ່ຍິງ ແລະ ຜູ້ຊາຍມີສ່ວນຮ່ວມ ແລະ ໄດ້ຮັບຜົນປະໂຫຍດເທົ່າທຽມກັນ. ມີຫຼາຍອົງການຈັດຕັ້ງ ມະຫາຊົນ ເຊັ່ນ: ແນວລາວສ້າງຊາດ, ອົງການຈັດຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫະພັນກໍາມະບານລາວ ແລະ ສະຫະພັນແມ່ຍິງລາວ ຊຶ່ງເຮັດໜ້າທີ່ເຕົ້າໂຮມຄວາມສາມັກຄີປວງຊົນລາວ ບັນດາຊົນເຜົ່າ ໂດຍບໍ່ຈໍາແນກເພດ, ເຊື້ອຊາດ, ຊົນເຜົ່າ, ສາດສະໜາ ພ້ອມນັ້ນ ເອກະສານສະພາບ ລວມທາງດ້ານບົດບາດຍິງ-ຊາຍ ຍັງຈະມີຜົນປະໂຫຍດ ຢ່າງຫຼວງຫຼາຍ ຕໍ່ການປະຕິບັດ ວຽກງານຂອງເຂົາເຈົ້າ.

ບັນດາກະຊວງຕ່າງໆ ໄດ້ເລີ່ມຕົ້ນເຊື່ອມໂຍງບົດບາດຍິງ-ຊາຍເຂົ້າໃນວຽກງານຕ່າງໆທີ່ກ່ຽວຂ້ອງດ້ວຍການສ້າງຕັ້ງກຸ່ມຮັບຜິດຊອບບົດບາດຍິງ-ຊາຍໃນລະດັບສູງ, ເກັບກໍາຂໍ້ມູນແບບແຍກເພດ ທີ່ພົວພັນເຖິງຍຸດທະສາດການຫຼຸດຜ່ອນຄວາມທຸກຍາກ ແລະ ເປົ້າໝາຍອື່ນໆຂອງຊາດ, ນໍາໃຊ້ຂໍ້ມູນຕ່າງໆ ເພື່ອສ້າງເປັນເອກະສານສະພາບລວມທາງດ້ານບົດບາດຍິງ-ຊາຍ ຫຼື ການປະເມີນຜົນແຕ່ລະຂະແໜງການ, ສ້າງແຜນຍຸດທະສາດ ແລະ ແຜນປະຕິບັດບົດບາດຍິງ-ຊາຍ, ກໍານົດປະເດັນ ຫຼື ບັນຫາຕ່າງໆ ທີ່ພົວພັນເຖິງການມີສ່ວນຮ່ວມຂອງແມ່ຍິງໃນແຕ່ລະຂະແໜງການ ແລະ ພ້ອມທັງກໍານົດແນວທາງແກ້ໄຂບັນຫາເຫຼົ່ານັ້ນ. ນອກຈາກນັ້ນ ເຂົາເຈົ້າຍັງໄດ້ສະໜອງການຝຶກອົບຮົມ ແລະ ສ້າງຄວາມສາມາດດ້ານບົດບາດຍິງ-ຊາຍໃຫ້ແກ່ພະນັກງານຂອງເຂົາເຈົ້າ, ປັບປຸງອັດຕາສ່ວນພະນັກງານຍິງ-ຊາຍ ແລະ ຊົນເຜົ່າໃນທຸກໆລະດັບ, ທົບທວນນະໂຍບາຍ, ແຜນງານ ແລະ ໂຄງການໃໝ່ທັງໝົດ ໃນແງ່ບົດບາດຍິງ-ຊາຍ ແລະ ປຶກ

ສາຫາລືກັບແມ່ຍິງທ້ອງຖິ່ນ ໃນການອອກແບບໂຄງການລຶບລ້າງຄວາມທຸກຍາກ ແລະ ຮັບປະກັນໃຫ້ເຂົາເຈົ້າໄດ້ເຂົ້າຮ່ວມໃນທຸກໆກິດຈະກຳຂອງໂຄງການ ຊຶ່ງລວມມີການບໍລິການສົ່ງເສີມ ແລະ ການຝຶກອົບຮົມຕ່າງໆ. ເອກະສານແນະນຳຕ່າງໆໄດ້ຖືກສ້າງຂຶ້ນ ເພື່ອເປັນແນວທາງໃນການສ້າງແຜນປະຕິບັດ ບົດບາດຍິງ-ຊາຍແຫ່ງຊາດ ເພື່ອຮວບຮວມແຜນຍຸດທະສາດ ແລະ ແຜນການຈັດຕັ້ງປະຕິບັດຂອງກະຊວງ, ອົງກອນ ແລະ ອົງການຈັດຕັ້ງມະຫາຊົນຕ່າງໆ.

ສະຫະພັນແມ່ຍິງລາວ ແລະ ທະນາຄານໂລກໄດ້ເອົາໃຈໃສ່ເພື່ອສົ່ງເສີມຄວາມສະເໝີພາບ ລະຫວ່າງຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ. ພາຍໃຕ້ການ ສະໜັບ ສະໜູນ ແລະ ຮ່ວມມືຈາກອົງການຈັດຕັ້ງຂອງລັດຖະບານ, ອົງການຈັດຕັ້ງສາກົນ ແລະ ບັນດາ ຜູ້ໃຫ້ທຶນ, ຈະເຮັດໃຫ້ຄວາມສະເໝີພາບລະຫວ່າງຍິງ-ຊາຍໄດ້ຮັບການປັບປຸງ ແລະ ສືບຕໍ່ປະກອບສ່ວນເຮັດໃຫ້ເສດຖະກິດເຕີບໃຫຍ່ຂະຫຍາຍຕົວແນໃສ່ ຫຼຸດຜ່ອນຄວາມທຸກຍາກ ເພື່ອ ປັບປຸງມາດຕະຖານ ການດຳລົງ ຊີວິດຂອງແມ່ຍິງ ແລະ ຜູ້ຊາຍບັນດາເຜົ່າໃນ ສປປ ລາວໃຫ້ດີຂຶ້ນ.

---

| | |
|---|---|
| ທ່ານ ນາງ ສີໃສ ລືເດດມູນສອນ | ທ່ານ ອຽນ ຊີ ພອດເຕີ |
| ປະທານສູນກາງສະຫະພັນແມ່ຍິງລາວ | ຜູ້ອຳນວຍການທະນາຄານໂລກ |
| ສປປລາວ | ປະຈຳຂົງເຂດອາຊີຕາເວັນອອກ ແລະ ປາຊີຟິກ |

## ແນວຄວາມຄິດ ແລະ ນິຍາມກ່ຽວກັບບົດບາດຍິງ-ຊາຍ

**ບົດບາດຍິງ-ຊາຍ** ໝາຍເຖິງຄວາມແຕກຕ່າງລະຫວ່າງແມ່ຍິງ ແລະ ຜູ້ຊາຍໃນຄົວເຮືອນດຽວກັນ ແລະ ລະຫວ່າງວັດທະນະທຳທີ່ແຕກຕ່າງກັນ ຊຶ່ງຖືກສ້າງຂຶ້ນໂດຍສັງຄົມ ແລະ ວັດທະນະທຳ ໂດຍປ່ຽນແປງໄປຕາມເວລາ. ຄວາມແຕກຕ່າງເຫຼົ່ານີ້ໄດ້ສະແດງອອກໃນ: ບົດບາດ, ຄວາມຮັບຜິດຊອບ, ການເຂົ້າເຖິງຊັບພະຍາກອນ ແລະ ການບໍລິການພື້ນຖານ, ອຸປະສັກ, ໂອກາດ, ຄວາມຕ້ອງການ, ຄວາມເຂົ້າໃຈ, ທັດສະນະ ແລະ ບັນຫາອື່ນໆທີ່ມີຢູ່ໃນຕົວຂອງແມ່ຍິງ ແລະ ຜູ້ຊາຍເອງ (Moser 1993).

**ບົດບາດຍິງ-ຊາຍ ແລະ ເພດ.** ບົດບາດຍິງ-ຊາຍຖືກສ້າງຂຶ້ນມາໂດຍສັງຄົມ (ສັງຄົມກຳນົດ), ຊຶ່ງເພດແມ່ນຄວາມແຕກຕ່າງລະຫວ່າງຍິງ-ຊາຍ ທາງດ້ານທຳມະຊາດ/ຊີວະສາດ ແລະ ຟີຊິກສາດທາງດ້ານຮ່າງກາຍ. ເພດກຳນົດໃຫ້ແມ່ຍິງຕ້ອງຖືພາ ແລະ ເກີດລູກ ແຕ່ບົດບາດຍິງ-ຊາຍໄດ້ກຳນົດໃຫ້ແມ່ຍິງຕ້ອງເບິ່ງແຍງລູກໃນຂະນະທີ່ຜູ້ຊາຍກໍ່ສາມາດເຮັດໄດ້ຄືກັນ. ການໃຫ້ກຳເນີດລູກແມ່ນຊີວະສາດເປັນຕົວກຳນົດ, ແຕ່ການລ້ຽງດູລູກເຕົ້າ (ເບິ່ງແຍງລູກ) ແມ່ນສັງຄົມກຳນົດ.

**ຄວາມສະເໝີພາບລະຫວ່າງຍິງ-ຊາຍ** ໝາຍເຖິງການມີໂອກາດເທົ່າທຽມກັນ, ຊຶ່ງລວມມີຄວາມເທົ່າທຽມກັນໃນການໄດ້ຮັບຄ່າຕອບແທນຈາກການເຮັດວຽກ, ການເຂົ້າເຖິງຊັບພະຍາກອນການຜະລິດ (ສັງຄົມ ແລະ ເສດຖະກິດ), ເຂົ້າເຖິງໂຄງລ່າງພື້ນຖານ ເຊັ່ນ: ສາທາລະນະສຸກ, ການສຶກສາ ແລະ ການຈ້າງງານ. ມັນຍັງໝາຍເຖິງໂອກາດເທົ່າທຽມກັນໃນການມີສ່ວນຮ່ວມ, ການຕັດສິນໃຈ, ສິ່ງອິດທິພົນ ແລະ ປະກອບສ່ວນ ໃນຂະບວນການພັດທະນາ (World Bank, 2001).

**ວິທີການບົດບາດຍິງ-ຊາຍ ແລະ ການພັດທະນາ** (GAD) ແມ່ນການກຳນົດ ແລະ ວິເຄາະສະພາບຂອງແມ່ຍິງ ແລະ ຜູ້ຊາຍໃນສັງຄົມ, ການເຂົ້າເຖິງຊັບພະຍາກອນ, ເຊັ່ນ: ທີ່ດິນ, ການຈ້າງງານ, ສິນເຊື່ອ, ການລ້ຽງສັດ, ລາຍໄດ້ ແລະ ທຶນຮອນຕ່າງໆ. ນອກຈາກນັ້ນຍັງວິເຄາະການເຂົ້າເຖິງ ແລະ ລະດັບການມີສ່ວນຮ່ວມໃນດ້ານສັງຄົມ, ເສດຖະກິດ ແລະ ການເມືອງຕ່າງໆ. ວິທີການດັ່ງກ່າວແມ່ນຊ່ວຍໃຫ້ເຂົ້າໃຈສະພາບຂອງແມ່ຍິງ ແລະຜູ້ຊາຍ ໂດຍຮັບປະກັນວ່າແຜນການພັດທະນາໄດ້ພິຈາລະນາເຖິງຄວາມຕ້ອງການ ແລະ ສິດຜົນປະໂຫຍດຂອງເຂົາເຈົ້າ. ວິທີການດັ່ງກ່າວ ຈະຖືກນຳໃຊ້ເພື່ອແກ້ໄຂຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ.

# ບົດສະຫຼຸບຫຍໍ້

ບົດລາຍງານສະບັບນີ້ ແມ່ນຜົນສຳເລັດຂອງການຮ່ວມມືລະຫວ່າງ ສູນຂໍ້ມູນຂ່າວສານບົດບາດຍິງຊາຍເພື່ອການພັດທະນາ ຂອງສູນກາງສະຫະພັນແມ່ຍິງລາວ ແລະ ທະນາຄານໂລກ. ສະພາບລວມທາງດ້ານບົດບາດຍິງ-ຊາຍໃນສປປລາວໄດ້ຖືກຂຽນຂື້ນ ໂດຍຜ່ານການທົບທວນປະເດັນບົດບາດຍິງ-ຊາຍຈາກເອກະສານຕ່າງໆໃນ ສປປ ລາວ ແລະ ການສົນທະນາກຸ່ມທີ່ກວມເອົາປະເດັນຕ່າງໆທີ່ສຳຄັນ ເຊັ່ນ: ດ້ານການສຶກສາ, ສາທາລະນະສຸກແລະດ້ານກະສິກຳ. ບົດລາຍງານສະບັບນີ້ປະກອບມີປະເດັນຕ່າງໆດັ່ງລຸ່ມນີ້:

## 1. ສະພາບເສດຖະກິດ, ສັງຄົມ, ການເມືອງ, ແລະ ວັດທະນະທຳ

- ສ ປ ປ ລາວ ເປັນປະເທດໜຶ່ງທີ່ປະກອບມີຊົນນະບົດເປັນສ່ວນໃຫ່ຍ ແລະ ມີຊັບພະຍາກອນທຳມະຊາດອຸດົມສົມບູນ. ປະຊາກອນສ່ວນໃຫຍ່ດຳລົງຊີວິດຢູ່ໃນເຂດຊົນນະບົດ ແລະ ອາໃສວຽກງານກະສິກຳເພື່ອລ້ຽງຊີບ ແລະ ສ້າງລາຍໄດ້.
- ສປປ ລາວເປັນປະເທດໜຶ່ງທີ່ມີຊົນເຜົ່າຫຼາຍທີ່ສຸດໃນໂລກ, ໂດຍມີ 49 ຊົນເຜົ່າທີ່ເປັນທາງການ ແລະ ແບ່ງອອກເປັນ 4 ກຸ່ມພາສາໃຫຍ່ຄື: ລາວ-ໄຕ (Lao-Tai), ມອນ-ຂະແມ (Mon-Khmer), ມົ້ງ-ມ້ຽນ ( Hmong-Mien) ແລະ ຈີນຕິເບດ (Chine-Tibet). ຍ້ອນມີຫຼາຍຊົນເຜົ່າ ກະຈາຍຢູ່ຢ່າງກວ້າງດັ່ງນັ້ນ ມັນຈຶ່ງມີຄວາມຫຼາກຫຼາຍທາງດ້ານວັດທະນະທຳທີ່ແຕກຕ່າງກັນ, ຊຶ່ງວັດທະນາທຳເຫຼົ່ານີ້ ແມ່ນມີຄວາມສຳຄັນຫຼາຍຕໍ່ການວິເຄາະບົດບາດ ແລະ ສາຍພົວພັນ ຂອງຍິງ-ຊາຍ.
- ການເຂົ້າເຖິງຖະໜົນ, ຕະຫຼາດ, ໂຮງຮຽນ ແລະ ສິ່ງອຳນວຍຄວາມສະດວກດ້ານສາທາລະນະສຸກໃນເຂດຊົນນະບົດຍັງຈຳກັດ. ຖະໜົນທີ່ປູຢາງມີພຽງແຕ່ 14 % ເທົ່ານັ້ນ, ຊຶ່ງເຮັດໃຫ້ມີຄວາມຫຍຸ້ງຍາກໃນການເດີນທາງໃນລະດູຝົນ. ໂດຍສະເພາະແລ້ວສະພາບດັ່ງກ່າວ ເປັນຜົນກະທົບຕໍ່ປະຊາຊົນຜູ້ທີ່ອາໃສຢູ່ໃນບ້ານເຂດຊົນນະບົດຫ່າງໄກສອກຫຼີກ, ແລະ ສ່ວນຫຼາຍຈະແມ່ນຊົນເຜົ່າທີ່ບໍ່ສາມາດເວົ້າພາສາລາວໄດ້.
- ກາງປີ 1980 ເປັນຕົ້ນມາ, ສປປ ລາວ ໄດ້ຫັນປ່ຽນຈາກເສດຖະກິດແບບລັດເກື້ອກູນມາເປັນລະບົບເສດຖະກິດຕະຫຼາດ. ລັດໄດ້ພະຍາຍາມສົ່ງເສີມໃຫ້ກາຍເປັນປະເທດອຸດສາຫະກຳ ແລະ ທັນສະໄໝ ແລະ ເພີ້ມທະວີການຮ່ວມມືດ້ານເສດຖະກິດໃນພາກພື້ນ ແລະ ສາກົນອີກດ້ວຍ.
- ສາຍພົວພັນໃນຄອບຄົວ ແລະ ສັງຄົມ ແມ່ນມີຄວາມໝາຍສຳຄັນຢູ່ໃນວັດທະນາທຳຂອງແຕ່ລະຊົນເຜົ່າລາວ, ສາຍພົວພັນ ດັ່ງກ່າວມີຜົນກະທົບອັນໜັກໜ່ວງຕໍ່ສະພາບ ແລະ ທັດສະນະຄະຕິຂອງແມ່ຍິງ, ຜູ້ຊາຍ ແລະຄອບ ຄົວ ແລະ ຮີດຄອງປະເພນີ ຊຶ່ງສືບທອດກັນໄປຕາມລຸ້ນຄົນຕ່າງໆ.

## 2. ສະພາບແວດລ້ອມທີ່ອຳນວຍຄວາມສະດວກໃນການສົ່ງເສີມຄວາມສະເໝີພາບ ລະຫວ່າງຍິງ-ຊາຍ

- ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແມ່ນຈຸດປະສົງເປົ້າໝາຍສຳຄັນຂອງຊາດ ເຊິ່ງສະແດງອອກໃນລັດຖະທຳມະນູນ ແລະກົນໄກລະດັບຊາດເພື່ອຄວາມກ້າວໜ້າຂອງແມ່ຍິງລາວ.
- ການສ້າງສະພາບແວດລ້ອມທີ່ອຳນວຍຄວາມສະດວກໃນການສົ່ງເສີມຄວາມສະເໝີລະຫວ່າງຍິງ-ຊາຍໃນ ສປປ ລາວ ປະກອບດ້ວຍ: ກົດໝາຍ, ສົນທິສັນຍາສາກົນ, ນະໂຍບາຍ ແລະ ກົນໄກຕ່າງໆ ເພື່ອຍົກສູງຖານະບົດບາດຂອງແມ່ຍິງໃຫ້ສູງຂຶ້ນ.
- ຢູ່ໃນລັດຖະທຳມະນູນ ແລະ ກົດໝາຍຕ່າງໆຂອງລາວ ໄດ້ຮັບປະກັນຄວາມສະເໝີພາບລະຫວ່າງຍິງ-ຊາຍ, ຊຶ່ງມີສອງອົງການຈັດຕັ້ງຂອງລັດຖະບານ ທີ່ຮັບຜິດຊອບເຮັດໃຫ້ນະໂຍບາຍ ແລະແຜນງານຕ່າງໆມີທັດສະນະບົດບາດຍິງ-ຊາຍ ແລະ ແຜນງານຍຸດທະສາດເພື່ອການເຕີບໂຕ ແລະຫຼຸດຜ່ອນຄວາມທຸກຍາກແຫ່ງຊາດ ຊຶ່ງແມ່ນແຜນພັດທະນາລະດັບຊາດຂອງລັດຖະບານໄດ້ກຳນົດເອົາວຽກງານບົດບາດຍິງ-ຊາຍເປັນບຸລິມະສິດ ເພື່ອເຊື່ອມເຂົ້າໃນທຸກຂົງເຂດວຽກງານ.
- ລະດັບຄວາມຮັບຮູ້ທາງດ້ານກົດໝາຍຂອງແມ່ຍິງ ແລະ ຜູ້ຊາຍ ໃນ ສປປ ລາວ ແມ່ນຍັງຕ່ຳ, ໂດຍສະເພາະແມ່ນກົດໝາຍທີ່ພົວພັນເຖິງຜົນກະທົບຕໍ່ແມ່ຍິງ. ການປະຕິບັດກົດໝາຍຍັງບໍ່ທັນເຮັດໄດ້ດີ ໂດຍສະເພາະ ແມ່ນໃນລະດັບແຂວງ ແລະ ເມືອງ. ມີຄວາມຈຳເປັນຕ້ອງໄດ້ສ້າງຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດວຽກງານດ້ານນະໂຍບາຍຂອງບັນດາກະຊວງຕ່າງໆເພື່ອລົບລ້າງປະກົດການຫຍໍ້ທໍ້ຕ່າງໆ ເຊັ່ນ: ການຄ້າມະນຸດ ແລະ ຄວາມຮຸນແຮງຕໍ່ແມ່ຍິງ.
- ສະຫະພັນແມ່ຍິງລາວ ແມ່ນອົງການຈັດຕັ້ງມະຫາຊົນທີ່ມີໜ້າທີ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບ ທຳຂອງແມ່ຍິງ ແລະ ເດັກນ້ອຍບັນດາເຜົ່າ. ຫວ່າງບໍ່ດົນມານີ້ກໍ່ໄດ້ສ້າງຕັ້ງ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງຂຶ້ນ ໂດຍມີໜ້າທີ່ຊ່ວຍເຫຼືອລັດຖະບານໃນການກຳນົດນະໂຍບາຍ ແລະ ສ້າງແຜນປະຕິບັດງານແຫ່ງຊາດ ເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ.

## 3. ບົດບາດຍິງ-ຊາຍໃນວຽກງານກະສິກຳ ແລະ ການເຂົ້າເຖິງແຫ່ລງຊັບພະຍາກອນໃນຊົນນະບົດ

- ວຽກງານກະສິກຳກວມເອົາ 80 % ຂອງແຮງງານທັງໝົດ 2,4 ລ້ານຄົນ, ຊຶ່ງແມ່ຍິງເຮັດວຽກດັ່ງກ່າວມີຫຼາຍກ່ວາເຄິ່ງໜຶ່ງ, ກວມເອົາ 54 %. ແຕ່ເຖິງຢ່າງໃດກໍ່ຕາມ, ເນື່ອງຈາກຄວາມຮັບຮູ້ທາງດ້ານບົດບາດຍິງ-ຊາຍຂອງສັງຄົມຍັງຢູ່ໃນລະດັບຕ່ຳ, ສະນັ້ນ ຈຶ່ງເຮັດໃຫ້ບົດບາດຂອງເຂົາເຈົ້າຖືກເບິ່ງຂ້າມ ແລະ ບໍ່ມີຄຸນຄ່າ.
- ແມ່ຍິງລາວມີບົດບາດສຳຄັນຫຼາຍໃນວຽກງານກະສິກຳ ແລະ ການຊົມໃຊ້ແຫຼ່ງຊັບພະຍາກອນທຳມະຊາດ ແລະ ມີໜ້າທີ່ຕົ້ນຕໍໃນການຮັບປະກັນທາງດ້ານສະບຽງອາຫານຂອງຄອບຄົວ.

- ຜູ້ຊາຍຖືວ່າເປັນຫົວໜ້າຄອບຄົວ, ສະນັ້ນ ເຂົາເຈົ້າຈຶ່ງເປັນຕົວແທນຄອບຄົວເພື່ອເຂົ້າຮ່ວມໃນກອງປະຊຸມຕ່າງໆທີ່ທາງການຈັດຂຶ້ນເພື່ອຄົ້ນຄວ້າວຽກງານພັດທະນາບ້ານ. ຍ້ອນວ່າແມ່ຍິງ,ໂດຍສະເພາະແມ່ຍິງຊົນເຜົ່າແມ່ນກືກໜັງສື, ສະນັ້ນ ຈຶ່ງເຮັດໃຫ້ເຂົາເຈົ້າບໍ່ສາມາດເຂົ້າຮ່ວມວຽກງານພັດທະນາບ້ານໄດ້ຢ່າງເຕັມສ່ວນ.
- ຜູ້ຊາຍ ແລະ ແມ່ຍິງໃຊ້ເວລາເທົ່າໆກັນໃນວຽກງານກະສິກຳ,ແຕ່ວ່າຜູ້ຊາຍໃຊ້ເວລາເຮັດກິດຈະກຳສ້າງລາຍຮັບຕ່າງໆຫລາຍກ່ວາ (ລວມທັງວຽກງານກະສິກຳ).
- ໃນ ສປປ ລາວ, ການເຂົ້າເຖິງເສັ້ນທາງ ແລະ ພື້ນຖານໂຄງລ່າງອື່ນໆ ແມ່ນຈະຂື້ນກັບສະພາບທີ່ຕັ້ງພູມສັນຖານ, ຢູ່ໃນຕົວເມືອງຈະມີຄວາມສະດວກຫລາຍກວ່າຊົນນະບົດ.

## 4. ການມີສ່ວນຮ່ວມໃນວຽກງານເສດຖະກິດ

- ສປປ ລາວ ເປັນປະເທດໜຶ່ງທີ່ແມ່ຍິງມີສ່ວນຮ່ວມ ໃນວຽກງານເສດຖະກິດສູງທີ່ສຸດ ໃນເຂດພາກພື້ນ.
- ນອກຈາກວຽກງານການຜະລິດ ແລະ ວຽກໃນຄົວເຮືອນແລ້ວ, ແມ່ຍິງຍັງມີສ່ວນຮ່ວມໃນກິດຈະກຳຊອກຫາລາຍໄດ້ຂະໜາດນ້ອຍ ແລະ ຜະລິດຕະພັນເຄື່ອງຫັດຖະກຳເພື່ອສ້າງລາຍໄດ້ເພີ່ມໃຫ້ແກ່ຄອບຄົວຂອງເຂົາເຈົ້າ.
- ເສດຖະກິດນອກລະບົບ (ບໍ່ແມ່ນທາງການ) ປະກອບມີແມ່ຍິງເປັນສ່ວນໃຫຍ່, ຊຶ່ງສ່ວນຫຼາຍເປັນເຈົ້າຂອງຫົວໜ່ວຍທຸລະກິດຂະໜາດນ້ອຍ, ຂາຍເຄື່ອງຍ່ອຍ ແລະ ຕັດຫຍິບ.
- ຄວາມດ້ອຍໂອການດ້ານການສຶກສາ, ຂໍ້ຈຳກັດດ້ານເສດຖະກິດ ແລະ ໂອກາດທີ່ຈະເຂົ້າເຖິງແຫລ່ງຊັບພະຍາກອນ ເປັນສິ່ງພັກດັນໃຫ້ແມ່ຍິງເຂົ້າມາມີສ່ວນຮ່ວມໃນພາກສ່ວນເສດຖະກິດທີ່ບໍ່ເປັນທາງການ ແລະ ຫົວໜ່ວຍທຸລະກິດຂະໜາດນ້ອຍ.
- ແມ່ຍິງຍັງມີຂໍ້ຈຳກັດໃນການເຄື່ອນໄຫວໄປມາ ແລະ ຮີດຄອງປະເພນີບໍ່ອະນຸຍາດໃຫ້ແມ່ຍິງໄປເຮັດວຽກຢູ່ຫ່າງໄກຈາກບ້ານ.
- ນັກທຸລະກິດຍິງສ່ວນໃຫຍ່ຈະພົບກັບຄວາມຫຍຸ້ງຍາກໃນການລົງທະບຽນ ເນື່ອງຈາກເຂົາເຈົ້າມີການ ສຶກສາຕ່ຳ ແລະ ບໍ່ມີເວລາ.
- ແມ່ຍິງເຮັດວຽກຢູ່ໃນຂະແໜງເສດຖະກິດທີ່ເປັນທາງການຫລາຍກວ່າຜູ້ຊາຍ, ແຕ່ເຖິງແນວໃດກໍ່ຕາມ, ເຂົາເຈົ້າຂ້ອນຂ້າງຈະເຮັດວຽກປະເພດທີ່ໃຊ້ຄວາມຊຳນານຕ່ຳຫຼາຍ ແລະ ເຮັດວຽກໃນລະດັບບໍລິຫານຍັງມີໜ້ອຍ.
- ການເຄື່ອນຍ້າຍແຮງງານເປັນທາງເລືອກໜຶ່ງຂອງແມ່ຍິງ ແລະ ຜູ້ຊາຍລາວ ແລະ ສິ່ງນີ້ໄດ້ສ້າງຄວາມດ້ອຍໂອກາດໃຫ້ແກ່ແມ່ຍິງ ແລະ ເດັກນ້ອຍເພີ່ມຂື້ນ.

## 5. ການສຶກສາ

- ເຖິງວ່າວຽກງານການສຶກສາຢູ່ໃນ ສປປ ລາວ ໄດ້ບັນລຸຜົນສຳເລັດທາງດ້ານຄຸນນະພາບ ແລະ ປະລິມານໃນທົດສະວັດຜ່ານມາກໍ່ຕາມ, ຕົວຊີ້ບອກດ້ານການສຶກສາສະແດງໃຫ້ເຫັນວ່າ ລະດັບການສຶກສາຂອງລາວຍັງຕ່ຳກວ່າໝູ່ໃນອາຊີຕາເວັນອອກ.
- ຍັງມີຄວາມຫຼຸດໂຕນກັນລະຫວ່າງຕົວເມືອງ ແລະ ຊົນນະບົດ, ເດັກຊາຍ ແລະ ເດັກຍິງ, ຄົນຮັ່ງ ແລະ ຄົນທຸກຈົນ. ໃນເຂດຕົວເມືອງ, ຊ່ອງຫວ່າງການສຶກສາລະຫວ່າງແມ່ຍິງ ແລະ ຜູ້ຊາຍແມ່ນໃກ້ຄຽງກັນ. ແຕ່ໃນເຂດຊົນນະບົດການສຶກສາຍັງຢູ່ໃນລະດັບຕ່ຳທີ່ສຸດ ແລະ ຊອ່ງຫວ່າງການສຶກສາລະຫວ່າງຍິງ-ຊາຍຍັງຫຼຸດໂຕນກັນຫຼາຍ.
- ປະຊາຊົນທີ່ອາໃສຢູ່ໃນເຂດບ້ານຫ່າງໄກສອກຫລີກຈະແມ່ນກຸ່ມຄົນທີ່ດ້ອຍໂອກາດ ແລະບໍ່ໄດ້ຮັບການບໍລິການເທົ່າທີ່ຄວນ, ຊຶ່ງສ່ວນຫຼາຍກໍ່ແມ່ນຊົນເຜົ່າຕ່າງໆ. ຄວາມຈິງແລ້ວ, ແມ່ຍິງ ແລະ ເດັກນ້ອຍ ຊົນເຜົ່າທີ່ຢູ່ຫ່າງໄກສອກຫລີກແມ່ນບໍ່ໄດ້ເຂົ້າໂຮງຮຽນເລີຍ.
- ຈຳນວນແມ່ຍິງທີ່ບໍ່ຮູ້ໜັງສືມີຫລາຍກ່ວາຜູ້ຊາຍ, ຊຶ່ງມີສາເຫດແຕກຕ່າງກັນໄປຕາມແຕ່ລະແຂວງ ແລະ ຊົນເຜົ່າຕ່າງໆ, ແຕ່ສ່ວນໃຫ່ຍຈະແມ່ນຄວາມທຸກຍາກ, ຄວາມ ຫ່າງໄກສອກຫລີກ, ຄ່າຮຽນ ແລະ ຄວາມເຊື່ອຖືໃນຮີດຄອງປະເພນີ ເປັນສາເຫດຕົ້ນຕໍ. ສ່ວນປັດໃຈອື່ນໆກໍ່ແມ່ນການແບກຫາບພາລະຕ່າງໆໃນຄອບຄົວ, ການແຕ່ງງານ ແລະ ມີລູກກ່ອນໄວອັນຄວນ.
- ເດັກນ້ອຍປະມານ 35 % ເທົ່ານັ້ນ ທີ່ລົງທະບຽນເຂົ້າໃນໂຮງຮຽນມັດທະຍົມຕອນຕົ້ນ, ແຕ່ມີພຽງ 5% ທີ່ຮຽນຈົບມັດທະຍົມຕອນປາຍ. ໂອກາດທີ່ຈະໄດ້ຮັບການຝຶກອົບຮົມວິຊາຊີບຍັງຈຳກັດ ແລະ ມີເດັກນ້ອຍລາວພຽງແຕ່ 5% ເທົ່ານັ້ນທີ່ສາມາດເຂົ້າໄປຮຽນໃນມະຫາວິທະຍາໄລໄດ້.
- ມີຫລາຍຄອບຄົວທີ່ມີຖານະທຸກຍາກ ບໍ່ເຫັນຄວາມສຳຄັນຂອງການສຶກສາທີ່ຈະຊ່ວຍປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າໄດ້ ແລະ ຂາດຄວາມເອົາໃຈໃສ່ຈາກພໍ່ແມ່ເຮັດໃຫ້ເດັກນ້ອຍບໍ່ຢາກເຂົ້າໂຮງຮຽນ. ອຸປະສັກທາງດ້ານພາສາ ແລະ ວັດທະນະທຳຕໍ່ກັບການສຶກສາເປັນສາເຫດເຮັດໃຫ້ການພັດທະນາຊັບພະຍາກອນມະນຸດຢູ່ໃນລະດັບຕ່ຳ ແລະ ມີຫລາຍຊົນເຜົ່າຍັງທຸກຍາກ.

## 6. ສາທາລະນະສຸກ

- ໂດຍອີງຕາມຮີດຄອງປະເພນີ ເຮັດໃຫ້ແມ່ຍິງເປັນຜູ້ດູແລສຸຂະພາບຂອງສະມາຊິກໃນຄົວເຮືອນ, ລວມທັງການປ້ອງກັນພະຍາດຂອງລູກເຕົ້າຕ່າງໆ.
- ວັດທະນະທຳ ແລະ ຮີດຄອງປະເພນີມີບົດບາດສຳຄັນຕໍ່ພຶດຕິກຳການດູແລສຸຂະພາບຕ່າງໆ ເຊັ່ນ: ສະຖານທີ່ເກີດລູກ, ການຢູ່ກຳ ແລະ ການເຮັດໝັນ.
- ເຖິງວ່າອັດຕາການຕາຍຂອງແມ່ຫລຸດລົງເຖິງ 530, ແຕ່ຖ້າທຽບໃສ່ເຂດພາກພື້ນແມ່ນຍັງມີອັດຕາ

ສູງທີ່ສຸດ ແລະ ອັດຕາການຕາຍຍັງມີຄວາມຫຼຸດໂຕນກັນຫຼາຍລະຫວ່າງ ເຂດຊົນນະບົດ ແລະ ຕົວເມືອງ.

- ແມ່ຍິງມັກຈະເກີດລູກເອງໃນບ້ານ, ໂດຍສະເພາະແມ່ນ ຄອບຄົວທີ່ທຸກຍາກໃນເຂດຊົນນະບົດ ຍ້ອນວ່າ ເຂົາເຈົ້າຍັງຂາດເງື່ອນໄຂພື້ນຖານດ້ານສຸຂະອານາໄມທີ່ຈຳເປັນເພື່ອຄວາມປອດໄພ ໃນການເກີດລູກ.
- ການເຂົ້າເຖິງການບໍລິການດ້ານສາທາລະນະສຸກກໍ່ມີຄວາມແຕກຕ່າງໄປຕາມສະພາບພູມສັນຖານຂອງປະເທດ, ຢູ່ເຂດຫ່າງໄກຈາກຕົວເມືອງເທົ່າໃດ ການເຂົ້າເຖິງຍິ່ງຫຼຸດລົງເທົ່ານັ້ນ. ຍັງມີການຫຼຸດໂຕນກັນຫຼາຍລະຫວ່າງການບໍລິການດ້ານສາທາລະນະສຸກຢູ່ເຂດຊົນນະບົດ ແລະ ຊົນນະບົດທີ່ຫ່າງໄກສອກຫຼີກ.
- ຍ້ອນຊົນເຜົ່າສ່ວນຫລາຍແມ່ນດຳລົງຊີວິດຢູ່ໃນເຂດຊົນນະບົດຫ່າງໄກສອກຫລີກ, ດັ່ງນັ້ນພວກເຂົາເຈົ້າຖືກຕັດຂາດຈາກການບໍລິການດ້ານຕ່າງໆ. ຄຸນນະພາບຂອງການບໍລິການ ດ້ານສາທາລະນະສຸກໃນເຂດຊົນນະບົດຍັງບໍ່ໄດ້ມາດຖານ,ເຊິ່ງຈະເປັນຜົນກະທົບຕໍ່ການບໍລິການດ້ານສຸຂະພາບ
- ແມ່ຍິງຕ້ອງຍ່າງເປັນໄລຍະທາງໄກ ເພື່ອໄປປິ່ນປົວພະຍາດ ເພາະວ່າ ບໍ່ມີສຸກສາລາ, ບໍ່ມີເສັ້ນທາງ ແລະ ຍານພາຫະນະທີ່ສະດວກ. ຄວາມຫຍຸ້ງຍາກໃນການເດີນທາງເຮັດໃຫ້ແມ່ຍິງຫຼາຍຄົນບໍ່ຢາກໄປຮັບການປິ່ນປົວສຸຂະພາບຂອງເຂົາເຈົ້າ.

## 7. ປະກົດການຫຍໍ້ທໍ້ຕ່າງໆ

- ໄປຄຽງຄູ່ກັບການປ່ຽນແປງຢ່າງໄວວານັ້ນ ສປປ ລາວ ກໍ່ຍັງມີປະກົດການຫຍໍ້ທໍ້ຫຼາຍຢ່າງເກີດຂຶ້ນ, ຊຶ່ງມີຫຼາຍປະກົດການທີ່ເປັນຜົນກະທົບຕໍ່ແມ່ຍິງ.
- ການເຕີບໂຕທາງດ້ານເສດຖະກິດ ແລະ ການພັດທະນາໃນເຂດພາກພື້ນໄດ້ກໍ່ໃຫ້ເກີດມີການເຄື່ອນຍ້າຍແຮງງານໄປປະເທດເພື່ອນບ້ານ, ໂດຍສະເພາະແມ່ນ ປະເທດໄທ. ການເຄື່ອນຍ້າຍແຮງງານໄດ້ກໍ່ໃຫ້ເກີດມີຄວາມສ່ຽງຫຼາຍຢ່າງ ເຊັ່ນວ່າ: ສ່ຽງຕໍ່ການຄ້າປະເວນີ, ການຕິດເຊື້ອໂລກເອດສ, ຄວາມຮຸນແຮງ ແລະ ຕົກເປັນເຫຍື່ອຂອງການຄ້າມະນຸດ.
- ການໃຊ້ຄວາມຮຸນແຮງຕໍ່ກັບແມ່ຍິງ ຍັງເປັນບັນຫາໜຶ່ງທີ່ເພີ່ມຂຶ້ນເລື້ອຍໆ ແລະ ຍັງມີໃຫ້ເຫັນຢູ່ທົ່ວໄປ. ຜົນຂອງການຄົ້ນຄວ້າຄັ້ງຫຼ້າສຸດສະແດງໃຫ້ເຫັນວ່າ: ແມ່ຍິງສ່ວນໃຫຍ່ໄດ້ຮັບຜົນກະທົບຈາກການທາລຸນ ໂດຍສະເພາະແມ່ນຢູ່ໃນຄົວເຮືອນ ແຕ່ມີແມ່ຍິງຈຳນວນໜຶ່ງໄດ້ໃຊ້ສິດຕາມກົດໝາຍ ຫຼື ໄດ້ຮັບຄຳປຶກສາ.
- ແມ່ຍິງໄດ້ຮັບພາລະໜັກ ແລະ ຖືກທາລຸນຈາກຄົນຕິດຝິ່ນ, ໂດຍສະເພາະແມ່ນແມ່ຍິງຊົນເຜົ່າ ຊຶ່ງຕ້ອງໄດ້ແບກຮາບພາລະເພີ່ມຂຶ້ນ ຍ້ອນສະມາຊິກຄອບຄົວຕິດຝິ່ນ ທັ້ງໆທີ່ເຂົາເຈົ້າແບກຫາບພາລະເຮັດວຽກໜັກຢູ່ແລ້ວ.

## 8. ບົດບາດຂອງແມ່ຍິງໃນການຕັດສິນໃຈ

- ສະມາຊິກສະພາແຫ່ງຊາດເພດຍິງກວມເຖິງຈຳນວນ 23%, ຊຶ່ງເຮັດໃຫ້ ສປປລາວ ກາຍເປັນປະເທດໜຶ່ງທີ່ມີສະມາຊິກສະພາແຫ່ງຊາດເພດຍິງຫຼາຍເປັນທີ່ສອງໃນເຂດພາກພື້ນ. ແຕ່ເຖິງຢ່າງໃດກໍ່ຕາມ, ຕົວແທນຂອງແມ່ຍິງຍັງຄົງມີໜ້ອຍຢູ່ໃນລະດັບແຂວງ, ເມືອງ ແລະ ໃນຄະນະກຳມະການຂັ້ນບ້ານ ສ່ວນຫຼາຍແມ່ນຜູ້ຊາຍ.
- ຈຳນວນແມ່ຍິງທີ່ເປັນການນຳຢູ່ໃນກະຊວງ ແລະອົງການຈັດຕັ້ງຕ່າງໆຍັງມີໜ້ອຍ, ເຊັ່ນບໍ່ມີແມ່ຍິງເປັນລັດຖະມົນຕີ, ມີພຽງ 2 ທ່ານ ເທົ່ານັ້ນທີ່ເປັນລັດຖະມົນຕີຊ່ວຍ ແລະ ມີຕົວແທນແມ່ຍິງໃນລະບົບສານປະຊາຊົນອີກຈຳນວນໜຶ່ງ.
- ແມ່ຍິງທີ່ເປັນການນຳໃນລະດັບແຂວງກໍ່ຍັງມີໜ້ອຍ, ທົ່ວປະເທດມີພຽງແມ່ຍິງໜຶ່ງທ່ານເທົ່ານັ້ນທີ່ເປັນເຈົ້າແຂວງ.
- ຄຸນຄ່າທາງດ້ານວັດທະນະທຳເຮັດໃຫ້ແມ່ຍິງດ້ອຍໂອກາດດ້ານການມີສ່ວນຮ່ວມໃນເວທີການເມືອງ ແລະ ການຕັດສິນໃຈຕ່າງໆ.

# ບົດທີ 1

## ສະພາບເສດຖະກິດ, ສັງຄົມ, ການເມືອງ ແລະ ວັດທະນະທໍາ

### 1.1 ສະພາບລວມ

ດັ່ງທີ່ຮູ້ກັນດີວ່າ “ດິນແດນລ້ານຊ້າງ”, ສປປ ລາວ ເປັນປະເທດໜຶ່ງທີ່ມີເຂດຊົນນະບົດ ແລະ ຊັບພະຍາກອນທໍາມະຊາດປົກຄຸມເປັນສ່ວນໃຫ່ຍ. ບໍ່ມີທາງອອກສູ່ທະເລ, ຊຶ່ງມີຊາຍແດນຕິດກັບບັນດາປະເທດຕ່າງໆເຊັ່ນ: ພາກເໜືອຕິດກັບປະເທດຈີນ, ພາກຕາເວັນອອກສ່ຽງເໜືອ ຕິດກັບສະຫະພາບພະມ້າ, ທິດຕາເວັນຕົກຕິດກັບໄທ, ທິດໃຕ້ຕິດກັບກໍາປູເຈຍ ແລະ ທິດຕາເວັນອອກຕິດກັບຫວຽດນາມ. ຈຸດເດັ່ນຂອງປະເທດແມ່ນມີນໍ້າຂອງໄຫຼຜ່ານແຕ່ເໜືອຕະຫຼອດໃຕ້ ມີຄວາມຍາວທັງໝົດ 1,900 Km. ເນື້ອທີ່ທັງໝົດ 236.800 Km2 ແລະ 70 % ແມ່ນເຂດພູພຽງ ແລະ ພູສູງ.

**ຕາຕະລາງ 1: ຂໍ້ມູນທົ່ວໄປກ່ຽວກັບ ສປປ ລາວ**

| | |
|---|---|
| **ສະພາບພູມມີປະເທດ** | |
| ເນື້ອທີ່ທັງໝົດ b/ | 236.800 $Km^2$ (91.430 $mi^2$) |
| ນະຄອນຫຼວງຂອງປະເທດ b/ | ນະຄອນຫຼວງວຽງຈັນ (ປີ 2005 ມີພົນລະເມືອງ 695.473 ຄົນ) |
| ເມືອງ/ແຂວງໃຫຍ່ | ສະຫັວນນະເຂດ, ຫລວງພະບາງ, ປາກເຊ, ທ່າແຂກ |
| ສະພາບພູມສັນຖານ | ເຂດພູຜາສູງຊັນ, ເຂດພູພຽງ ແລະ ພູພຽງ |
| ພູມອາກາດ | ເຂດຮ້ອນຊຸ່ມ, ລະດູຝົນ ເລີ່ມແຕ່ ເດືອນ 5 ຫາເດືອນ 10, ລະດູແລ້ງ ເລີ່ມແຕ່ ເດືອນ 6 ຫາເດືອນ 10, |
| ລະບົບການປົກຄອງ b/ | ປະກອບດ້ວຍ 18 ແຂວງ (16 ແຂວງ, 1 ເຂດພິເສດ ແລະ ນະຄອນ ຫຼວງວຽງຈັນ) ມີ 141 ເມືອງ, 10.522 ບ້ານ (2005) |
| **ຂໍ້ມູນດ້ານພົນລະເມືອງ** | |
| ພົນລະເມືອງ (2005) b/ | ມີ 5.6 ລ້ານ (ເປັນຍິງ 50.2%) |
| ຄວາມໜາແໜ້ນຂອງພົນລະເມືອງ b/ | 23.7 ຄົນ/ $Km^2$ |
| ອັດຕາການເຕີບໂຕຂອງພົນລະເມືອງ (ຄາດຄະເນປີ 2004) b/ | 2.1 % |
| ຊົນເຜົ່າc/ | ໄຕ-ກະໄດ (66,7%), ມອນ-ຂະແມ (20,6%), ມົ້ງ-ມ້ຽນ (8.4%), ຈີນ-ຕີເບດ (3,3%) ແລະ ອື່ນໆອີກ (1%) |
| ສາສະໜາ | ສ່ວນໃຫຍ່ແມ່ນນັບຖືສາສະໜາພຸດ |

| | |
|---|---|
| ພາສາ | ພາສາລາວ (ເປັນພາສາທາງການ), ພາສາທ້ອງຖິ່ນອື່ນໆ |
| ອັດຕາການຮູ້ໜັງສື (2004) [a/]<br>ອາຍຸ 15 ປີ ຂຶ້ນໄປ<br>ອາຍຸ 15-24 ປີ | <br>ຍິງ 61% ແລະ ຊາຍ 77%<br>ຍິງ 75% ແລະ ຊາຍ 83% |
| ອາຍຸຍືນສະເລ່ຍ(2005) [a/] | 63 ປີ ສຳລັບແມ່ຍິງ, 59 ປີ ສຳລັບຜູ້ຊາຍ, |
| ອັດຕາການຕາຍຂອງເດັກນ້ອຍ (2004) [a/] | 65/1.000 ເດັກເກີດມີຊີວິດ |
| ອັດຕາຈະເລີນພັນ ((2004) [a/] | 4.6/ແມ່ຍິງ |
| ແມ່ຍິງເປັນຫົວໜ້າຄອບຄົວ (2005) [b/] | 10 % ຂອງຄົວເຮືອນທັງໝົດ |
| ການນຳໃຊ້ແຮງງານ | ກະສິກຳກວມເອົາ 80 %, ອຸດສາຫະກຳ ແລະ ການບໍລິການ 20 % |
| **ດ້ານເສດຖະກິດ** | |
| ລວມຍອດຜະລິດຕະພັນພາຍໃນ (ເສດຖະກິດ) ປີ 2004 [b/] | ▪ ກະສິກຳ 46,6%: ຜະລິດຕະພັນຕົ້ນຕໍ-ເຂົ້າໜຽວ, ກາເຟ,ສາລີ, ອ້ອຍ, ພືດຜັກ, ຢາສູບ, ຂີງ, ຄວາຍ, ໝູ, ງົວ, ສັດປີກ, ມັນຝຣັ່ງ, ຝ້າຍ, ຊາ ແລະ ຖົ່ວດິນ.<br>▪ ອຸດສາຫະກຳ 27%: ໂຮງງານຕັດຫຍິບ, ໄຟຟ້າ, ການຂຸດຄົ້ນຍິບຊຳ ແລະ ກົ່ວ, ການປຸງແຕ່ງໄມ້, ຊີມັງ ແລະ ການແປຮູບກະສິກຳ.<br>▪ ການບໍລິການ 25.5 % ແລະ ພາສີນຳເຂົ້າ 0.9 % |
| ລວມຍອດຜະລິດຕະພັນພາຍໃນ (2004) [b/] | 2,4 ຕື້ໂດລາສະຫະລັດ |
| ລາຍໄດ້ຕໍ່ຫົວຄົນ (2004) [b/] | 390 ໂດລາສະຫະລັດ |
| ອັດຕາການເຕີບໂຕຂອງລວມຍອດຜະລິດຕະພັນພາຍໃນ (2004) [b/] | 6,9 % |

***ແຫຼ່ງຂໍ້ມູນ:*** *a/ ທະນາຄານໂລກ, http://devdata.worldbank.org/genderstats/home.asp*

*b] ສູນສະຖິຕິແຫ່ງຊາດ ປີ 2005,*

--______*c/LECS 3*

ເນື່ອງຈາກ ສປປ ລາວ ເປັນປະເທດໜຶ່ງທີ່ປົກຄຸມໄປດ້ວຍເຂດຊົນນະບົດເປັນສ່ວນໃຫຍ່ ແລະ ມີແຫຼ່ງຊັບພະຍາກອນທຳມະຊາດ ແລະ ຊົນຊາດຊົນເຜົ່າຢ່າງຫຼວງຫຼາຍ, ຈຶ່ງເຮັດໃຫ້ 3/4 ຂອງຈຳນວນພົນລະເມືອງລາວທັງໝົດ 5,6 ລ້ານຄົນ ດຳລົງຊີວິດຢູ່ໃນເຂດຊົນນະບົດ ຊຶ່ງມີການເຂົ້າເຖິງຕະຫຼາດ, ໂຮງຮຽນ ແລະ ສິ່ງອຳນວຍຄວາມສະດວກທາງດ້ານສາທາລະນະສຸກຕ່າງໆຢູ່ໃນຂອບເຂດຈຳກັດ. ຫົນທາງໄດ້ຮັບການປູຢາງມີພຽງແຕ່ 14 % ເທົ່ານັ້ນ, ຊຶ່ງເຮັດໃຫ້ມີຄວາມຫຍຸ້ງຍາກໃນການເດີນທາງໃນລະດູຝົນ. ສະພາບດັ່ງກ່າວ ໄດ້ສົ່ງຜົນກະທົບຕໍ່ຜູ້ທີ່ດຳລົງຊີວິດໃນບ້ານເຂດຊົນນະບົດຫ່າງໄກສອກຫຼີກ ແລະ ສ່ວນໃຫຍ່

ແມ່ນຊົນເຜົ່າທີ່ບໍ່ໄດ້ພາສາລາວ. ພວກເຂົາເຫຼົ່ານັ້ນມີຂໍ້ຈຳກັດທາງດ້ານເສດຖະກິດ, ການສຶກສາ ແລະ ໂອກາດອື່ນໆ.

## 1.2 ສະພາບປະຫວັດສາດ

*ຈາກການທົບທວນປະຫວັດສາດລາວໄດ້ຊ່ວຍໃຫ້ພວກເຮົາເຂົ້າໃຈເຖິງສະພາບຂອງຊົນເຜົ່າທີ່ມີຄວາມຫຼາກຫຼາຍ ແລະ ສາຍພົວພັນຕ່າງໆຂອງບັນດາຊົນເຜົ່າໃນປະເທດ*

ຈາກການສຶກສາປະຫວັດສາດສະໄໝບູຮານ ແລະ ປະຫວັດສາດສະໄໝໃໝ່ ຂອງ ສປປ ລາວ, ໄດ້ສະແດງໃຫ້ເຫັນວ່າ ຊົນເຜົ່າທີ່ມາອາໃສດິນແດນແຫ່ງນີ້ກ່ອນຊົນເຜົ່າລາວ-ໄຕ ແມ່ນຊົນເຜົ່າມອນ-ຂະແມ (Chamberlain et al, 1995a ແລະ 1995b). ຊົນເຜົ່າມອນ-ຂະແມເຂົ້າມາອາໃສຢູ່ໃນດິນແດນອັນກວ້າງໃຫຍ່ໄພສານຂອງອາຊີຕອນໃຕ້ ເປັນເວລາ 500 ກວ່າປີມາແລ້ວ. ຊົນເຜົ່າລາວ-ໄຕ ເລີ່ມຕົ້ນອົບພະຍົກຂຶ້ນໄປຢູ່ພາກເໜືອຂອງລາວໃນສັດຕະວັດທີ 19 ແລະ ໃນປີ 1353 ເຈົ້າຟ້າງຸ່ມໄດ້ເຮັດການທ້ອນໂຮມດິນແດນດັ່ງກ່າວເປັນອານາຈັກລ້ານຊ້າງ.

ເລີ່ມຈາກສັດຕະວັດທີ 18 ເປັນຕົ້ນມາ ປະເທດລາວໄດ້ຖືກຮຸກຮານຫຼາຍຄັ້ງ ຈາກບັນດາປະເທດອ້ອມຂ້າງ. ການຕໍ່ສູ້ເພື່ອປົກປ້ອງຄວາມເປັນເອກະລາດ ແລະ ເອກະພາບ, ຕະຫຼອດຮອດຄວາມເປັນເອກະລາດ ໃນທົ່ວປະເທດ ໂດຍໄດ້ຮັບການນຳພາ ຈາກວິລະບູລຸດ ທີ່ສືບທອດກັນມາຂອງບັນພະບູລຸດ. ນັບແຕ່ປີ 1930 ເປັນຕົ້ນມາ ພາຍໃຕ້ການນຳພາຂອງພັກຄອມມູນິດ ອິນດູຈີນ ແລະ ພັກປະຊາຊົນປະຕິວັດລາວ ໃນປະຈຸບັນ, ປະຊາຊົນລາວບັນດາເຜົ່າໄດ້ພ້ອມກັນຕໍ່ສູ້ເພື່ອຕ້ານການຕົກເປັນຫົວເມືອງຂຶ້ນຂອງລັດທິລ່າເມືອງຂຶ້ນ ແລະ ລະບອບສັກດີນາ. ຕົກມາຮອດ ເດືອນ 12 ປີ 1975 ສປປ ລາວ ໄດ້ ສະຖາປະນາ ແລະ ປະກາດຄວາມເປັນເອກະລາດຂອງຊາດ ແລະ ສິດເສລີພາບຂອງ ຕົນ.

*ພາຍໃຕ້ນະໂຍບາຍກ່ຽວກັບກົນໄກເສດຖະກິດໃໝ່ໃນປີ 1986* ໄດ້ຄ່ອຍໆພັກດັນໃຫ້ມີຫົວໜ່ວຍທຸລະກິດເອກະຊົນເກີດຂຶ້ນ. ນັບຈາກນັ້ນເປັນຕົ້ນມາ ສປປ ລາວໄດ້ຮັບການຫັນປ່ຽນຈາກເສດຖະກິດແບບລັດເກື້ອກູນກ້າວໄປສູ່ລະບົບເສດຖະກິດຕະຫຼາດ. ເຖິງວ່າສະພາບການທາງເສດຖະກິດ ມີການເຕີບໃຫຍ່ຂະຫຍາຍຕົວນັ້ນ, ນະໂຍບາຍທາງດ້ານການເມືອງຂອງປະເທດ ແມ່ນຍັງຢຶດຖືລະບອບສັງຄົມນິຍົມ. ເສດຖະກິດແຫ່ງຊາດຖືກແບ່ງອອກເປັນຫຼາຍພາກສ່ວນ, ຊຶ່ງມີຈຸດປະສົງເພື່ອຂະຫຍາຍຄວາມສາມາດໃນການຜະລິດ, ການເຕີບໃຫຍ່ ຂະຫຍາຍຕົວທາງດ້ານເສດຖະກິດ ແລະ ການບໍລິການເພື່ອຫັນປ່ຽນໄປເປັນເສດຖະກິດສິນຄ້າ, ການສົ່ງເສີມໃຫ້ ເປັນອຸດສາຫະກຳ ແລະ ທັນສະໄໝ ແລະ ເພີ່ມທະວີການຮ່ວມມືທາງດ້ານເສດຖະກິດກັບພາກພື້ນ ແລະສາກົນ ໂດຍມີເປົ້າໝາຍໃນການສ້າງຄວາມເຕີບໃຫຍ່ຂະຫຍາຍຕົວຂອງເສດຖະກິດແຫ່ງຊາດ ແລະ ເພື່ອປັບປຸງ ສະພາບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ບໍ່ວ່າຈະເປັນທາງດ້ານຮ່າງກາຍ ແລະ ຈິດໃຈ.

ໃນປີ 1997 ສປປ ລາວ ຖືກຮັບຮອງໃຫ້ເຂົ້າເປັນ ສະມາຊິກ ສະມາຄົມປະຊາຊາດ ອາຊີຕາເວັນອອກສຽງໃຕ້ (ASEAN) ແລະ ຫຼັງຈາກນັ້ນກໍ່ໄດ້ເຂົ້າຮ່ວມໃນການເຊັນສັນຍາການຄ້າເສລີຂອງສະມາຄົມປະຊາຊາດອາຊີຕາເວັນອອກສຽງໃຕ້ (AFTA). ຍ້ອນເປັນສ່ວນນຶ່ງຂອງ (AFTA) ສປປລາວໄດ້ຕົກລົງເຫັນດີຍົກເວັ້ນອັດຕາພາສີໃຫ້ເປັນເອກະພາບກັບປະເທດອື່ນໆ, ຊຶ່ງມີຜົນບັງຄັບໃຊ້ໃນປີ 2008. ນອກຈາກນັ້ນ ລາວຍັງໄດ້ເຂົ້າຮ່ວມພາຄີກັບອົງການຈັດຕັ້ງສາກົນຕ່າງໆໃນພາກພື້ນອື່ນອີກເຊັ່ນ: ເປັນສະມາຊິກຂອງອົງການແມ່ນ້ຳຂອງ, ທັງນີ້ກໍ່ເພື່ອເຮັດໃຫ້ການເຊື່ອມໂຍງເຂົ້າກັບພາກພື້ນໃຫ້ກ້ວາງຂວາງຂຶ້ນກ່ວາເກົ່າ.

## 1.3 ສະພາບທາງດ້ານການເມືອງ

*ພັກ ແລະ ລັດຖະບານ*

ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ, ສປປ ລາວ ໄດ້ຍຶດຖືເອົາປະຊາຊົນບັນດາເຜົ່າເປັນໝາກຫົວໃຈອັນສຳຄັນຂອງລະບົບການເມືອງລາວ. ສະພາແຫ່ງຊາດ ແມ່ນຜູ້ທີ່ມີອຳນາດສູງສຸດທາງດ້ານກົດໝາຍ ເຊິ່ງເຮັດໜ້າທີ່ເປັນຕົວແທນໃຫ້ແກ່ປະຊາຊົນບັນດາເຜົ່າ. ການເລືອກຕັ້ງສະມາຊິກສະພາແຫ່ງຊາດໄດ້ປະຕິບັດກັນຢ່າງເປີດກວ້າງ, ມີສິດເທົ່າທຽມກັນໃນການລົງຄະແນນສຽງເລືອກຕັ້ງ ຕະຫຼອດຮອດການລົງຄະແນນສຽງແບບປິດລັບ.

ລັດຖະທຳມະນູນໄດ້ຖືກຮັບຮອງເອົາເປັນຄັ້ງທຳອິດ ໃນປີ 1991 ທີ່ໄດ້ໃຫ້ສິດອຳນາດແກ່ລັດຖະບານ ໃນການບໍລິຫານ ແລະ ຈັດຕັ້ງປະຕິບັດໜ້າທີ່ໃນດ້ານການເມືອງ, ເສດຖະກິດ, ສັງຄົມ ແລະ ວັດທະນະທຳ, ປົກປັກຮັກສາຄວາມສະຫງົບ ແລະ ວຽກງານການຕ່າງປະເທດ. ອົງການຈັດຕັ້ງບໍລິຫານຂອງລັດຖະບານ ປະກອບດ້ວຍ ນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ແລະ ປະທານອົງການທຽບເທົ່າລັດຖະມົນຕີ.

ສປປ ລາວ ມີເຈົ້າແຂວງ 18 ທ່ານ ເຊິ່ງໄດ້ຮັບການແຕ່ງຕັ້ງ ໂດຍປະທານປະເທດ ໃຫ້ຮັບຜິດຊອບໃນແຕ່ລະແຂວງ. ລະບົບການເມືອງພາຍໃນແຂວງປະກອບດ້ວຍ ເຈົ້າເມືອງ ໂດຍໄດ້ຮັບການແຕ່ງຕັ້ງຈາກຮອງນາຍົກລັດຖະມົນຕີ, ສ່ວນນາຍບ້ານ ແມ່ນໄດ້ຮັບການເລືອກຕັ້ງຈາກພົນລະເມືອງພາຍໃນບ້ານ, ດ້ວຍການຄັດເລືອກເອົາຜູ້ລົງຮັບສະໝັກເລືອກຕັ້ງຂອງບ້ານ. ໂດຍປະຕິບັດໜ້າທີ່ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ວຽກງານຕ່າງໆຂອງລັດຖະບານ, ປົກປັກຮັກສາຄວາມສະຫງົບ ແລະປັບປຸງສະພາບທາງດ້ານເສດຖະກິດ-ສັງຄົມໃຫ້ມີຄວາມຮັບປະກັນ.

ພາຍໃຕ້ການຊີ້ນຳຂອງພັກ, ສປປ ລາວ ປະກອບມີ 4 ອົງການຈັດຕັ້ງມະຫາຊົນ ທີ່ເຮັດໜ້າທີ່ຕົ້ນຕໍໃນການສ້າງຄວາມສາມັກຄີຂອງປວງຊົນບັນດາເຜົ່າໃຫ້ເປັນໜຶ່ງດຽວ, ໂດຍບໍ່ຈຳແນກເພດ, ຊັ້ນວັນນະ ແລະ ສາສະໜາ ເພື່ອປະກອບສ່ວນໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ. 4 ອົງການຈັດຕັ້ງມະຫາຊົນປະກອບດ້ວຍ: ແນວລາວສ້າງຊາດ, ຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫະພັນແມ່ຍິງລາວ ແລະ ສະຫະພັນກຳມະບານລາວ.

## 1.4 ສະພາບທາງດ້ານວັດທະນະທຳ

*ຈຸດພິເສດຂອງ ສປປ ລາວ ແມ່ນມີຫຼາຍຊົນເຜົ່າ ແລະ ວັດທະນະທຳແຕກຕ່າງກັນ*

ສປປ ລາວ ແມ່ນປະເທດໜຶ່ງໃນບັນດາປະເທດທີ່ມີຊົນເຜົ່າຫຼາຍທີ່ສຸດໃນໂລກ ຊຶ່ງມີ 49 ຊົນເຜົ່າທີ່ເປັນທາງການ ແລະ ແບ່ງເປັນ 4 ກຸ່ມພາສາໃຫ່ຍຄື: ລາວ-ໄຕ (Lao-Tai), ມອນ-ຂະແມ (Mon Khmer), ມົ້ງ-ມ້ຽນ (Hmong Mien) ແລະ ຈີນ-ຕີເບດ (Chine -Tibet)[1]. ຈາກການຄົ້ນຄວ້າທາງມະນຸດວິທະຍາພົບວ່າ ໃນ ສປປ ລາວ ມີເຖິງ 230 ຊົນເຜົ່າທີ່ມີພາສາປາກເວົ້າທີ່ແຕກຕ່າງກັນ (Chamberlainetal, 1996). ສ່ວນຫຼາຍຊົນເຜົ່າຕ່າງໆແມ່ນດຳລົງຊີວິດຢູ່ແຂວງຕ່າງໆ ໂດຍຂື້ນກັບສະພາບລັກສະນະຂອງພູມມີປະເທດ ແລະ ສ່ວນຫຼາຍ ຈະແມ່ນຢູ່ໃນເຂດຫ່າງໄກສອກຫຼີກ ແລະ ຢູ່ຕາມເປີ້ນພູ ທີ່ມີຈຸດພິເສດຂອງການດຳລົງຊີວິດແຕກຕ່າງກັນອອກໄປຕາມສະພາບທີ່ຕັ້ງຂອງພູມມີປະເທດ ໃນ ສປປ ລາວ. ຈຸດພິເສດທີ່ສຳຄັນອັນພົ້ນເດັ່ນຂອງລາວ-ໄຕ ແມ່ນດຳລົງຊີວິດໃນເຂດທົ່ງພຽງ, ມອນຂະແມ ແລະ ມົ້ງ-ມ້ຽນ ດຳລົງຊີວິດໃນເຂດພູພຽງ ແລະ ຊົນເຜົ່າຈີນ-ຕີເບດ ແມ່ນດຳລົງຊີວິດໃນເຂດພູສູງ.

**ຕາຕະລາງ 1: ອັດຕາສ່ວນຊົນເຜົ່າໃນ ສປປ ລາວ**

| ລ/ດ | ກຸ່ມຊົນເຜົ່າ | ຈຳນວນພົນລະເມືອງ (%) |
|---|---|---|
| 1 | ລາວ-ໄຕ | 66,7 |
| 2 | ມອນ-ຂະແມ | 20,6 |
| 3 | ມົ້ງ-ມ້ຽນ | 8,4 |
| 4 | ຈີນ-ຕີເບດ | 3,3 |
| 5 | ອື່ນ ໆ | 1 |
| ລວມ: | | 100 |

*ແຫຼ່ງຂໍ້ມູນ: ການສຳຫຼວດການໃຊ້ຈ່າຍ ແລະການຊົມໃຊ້ຂອງຄົວເຮືອນ ຄັ້ງທີ 3*

[1] ການຈັດກຸ່ມນີ້ແມ່ນອີງໃສ່ການສຳຫຼວດປີ 2000.

ຍ້ອນມີຫຼາຍຊົນຊາດຊົນເຜົ່າ ກະຈາຍຢູ່ຢ່າງກວ້າງຂວາງນັ້ນ ມັນໄດ້ເຮັດໃຫ້ວັດທະນາທຳຂອງແຕ່ລະທ້ອງຖິ່ນແຕກຕ່າງກັນ, ຊຶ່ງວັດທະນາທຳເຫຼົ່ານີ້ ແມ່ນມີຄວາມສຳຄັນຫຼາຍຕໍ່ການວິເຄາະບົດບາດ ແລະ ສາຍພົວພັນຂອງຍິງ-ຊາຍ. ຄວາມແຕກຕ່າງທາງດ້ານວັດທະນະທຳ ຂອງແຕ່ລະກຸ່ມຊົນເຜົ່າໄດ້ຖືກລວບລວມຢູ່ໃນບົດລາຍງານການປະເມີນຄວາມທຸກຍາກແຫ່ງຊາດ (PPA), ຊຶ່ງໄດ້ເນັ້ນໜັກເຖິງສາຍພົວພັນຂອງວັດທະນະທຳໃນການວິເຄາະຄວາມທຸກຍາກ. ໂຄງປະກອບພື້ນຖານໃນສັງຄົມອາດແຕກຕ່າງກັນໄປຕາມແຕ່ລະເຜົ່າ, ເຊັ່ນວ່າ ຈຳນວນວັນໃນອາທິດໜຶ່ງ ອາດຈະມີຄວາມແຕກຕ່າງກັນໄປຕາມແຕ່ລະເຂດພູມີປະເທດ (ADB, 2001). ຍົກຕົວຢ່າງ ເຊັ່ນ: ຜູ້ຊາຍຊົນເຜົ່າມົ້ງ-ມ້ຽນ ໃນບ້ານປາກນ້ຳຕົງ, ແຂວງອຸດົມໄຊ ບອກວ່າ ອາທິດໜຶ່ງມີ 6 ວັນ, ຊຶ່ງໃນ ຂະນະທີ່ຂະມຸລື້ (ມອນ-ຂະແມ) ໃນບ້ານປາງສາ, ຊຶ່ງຕັ້ງຢູ່ຫ່າງຈາກບ້ານປາກນ້ຳຕົງພຽງ 3 ກິໂລແມັດ ບອກວ່າ ມີ 10 ວັນຕໍ່ອາທິດ (ADB, 2001). ຈຳນວນບ້ານເຄິ່ງ ໜຶ່ງຂອງບ້ານທີ່ໄດ້ສຶກສາຄົ້ນຄວ້າທັງໝົດໃນການປະເມີນຄວາມທຸກຍາກແບບມີສ່ວນຮ່ວມ ແມ່ນອີງຕາມອາທິດໜຶ່ງມີ 10 ວັນ, ຕົວຢ່າງເຊັ່ນ: ກຸ່ມຊົນເຜົ່າຂະມຸອຳ (ມອນ-ຂະແມ), ວັນທີ 1 ແລະ ວັນທີ 8 ແມ່ນວັນຢຸດການເຮັດວຽກ ຫຼື ວັນສິນ. ຊົນເຜົ່າລາວໃນວຽງຈັນແມ່ນນຳໃຊ້ປະຕິທິນຕາເວັນຕົກ, ແຕ່ໃນຂະນະດຽວກັນນັ້ນກໍ່ຍັງມີວັນສິນຕາມສາສະໜາພຸດ.

ຄວາມແຕກຕ່າງດ້ານເວລາອີກຢ່າງໜຶ່ງກໍ່ແມ່ນການສະຫຼອງປີໃໝ່ຂອງກຸ່ມຊົນເຜົ່າຕ່າງໆ. ຊົນເຜົ່າມົ້ງ, ຊົນເຜົ່າຂະມຸ (ມອນ-ຂະແມ) ແລະ ອາຄາ ຈີໄປຢາ (ຈີນ-ຕີເບດ) ເຮັດການສະຫຼອງເທດສະການປີໃໝ່ຂອງເຂົາເຈົ້າໃນທ້າຍເດືອນ 11 (ພະຈິກ) ຫຼື ຕົ້ນເດືອນ 12 (ທັນວາ) (ໂດຍອີງໃສ່ມື້ຂື້ນທຳອິດຂອງດວງເດືອນ). ເທດສະການປີໃໝ່ຂອງຊົນເຜົ່າລາວລຸ່ມແມ່ນຖືກຈັດຂຶ້ນໃນລະຫວ່າງ ເດືອນ 4 (ເດືອນທີ 5 ລາວ) ກ່ອນຈະເຂົ້າສູ່ລະດູຝົນ. ໃນຂະນະທີ່ ຊົນເຜົ່າຢ້າວ (ມົ້ງ-ມ້ຽນ), ລາຫູຈີ (ຈີນ-ຕີເບດ), ໄທດຳ (ລາວ-ໄຕ) ແລະ ອື່ນໆ ການສະຫຼອງເທດສະການປີໃໝ່ແມ່ນຈັດຂຶ້ນໃນທ້າຍ ເດືອນ 2 ເຊິ່ງພໍດີກັບເທດສະການສະຫຼອງປີໃໝ່ຂອງຊາວຈີນ ແລະ ຫວຽດນາມ. ແຕ່ໃນກຸ່ມຊົນເຜົ່າມອນ-ຂະແມ ສ່ວນຫຼາຍຈະສະຫຼອງເທດສະການປີໃໝ່ໃນຊ່ວງເລີ່ມຕົ້ນການຖາງປ່າເຮັດໄຮ່ ຫຼື ຊ່ວງເກັບກ່ຽວ. ສ່ວນຊົນເຜົ່າອື່ນໆແມ່ນບໍ່ໄດ້ສະແດງຢູ່ໃນປະຕິທິນຢ່າງຈະແຈ້ງ ມີແຕ່ອີງໃສ່ຄວາມຊົມເຊີຍຈາກສຽງຕ່າງໆຂອງປ່າໄມ້, ສຽງນົກຮ້ອງ, ສຽງຂອງຈັກຈັ່ນ.

### *ຄວາມແຕກຕ່າງຂອງແຕ່ລະຊົນເຜົ່າ ແລະ ວັດທະນະທຳເປັນຜົນກະທົບຕໍ່ບົດບາດຍິງ-ຊາຍ ແລະ ບັນຫາທີ່ກ່ຽວຂ້ອງ*

ຍ້ອນມີວັດທະນະທຳອັນຫຼາກຫຼາຍ, ມີຮີດຄອງປະເພນີ ແລະ ທັດສະນະທີ່ແຕກຕ່າງກັນ ມັນຈຶ່ງມີອິດທິພົນຕໍ່ພຶດຕິກຳ, ກິດຈະກຳ ແລະ ສາຍພົວພັນຕ່າງໆ ຊຶ່ງມີຜົນກະທົບໂດຍກົງຕໍ່ບົດບາດຍິງ-ຊາຍ ແລະ ສາຍພົວພັນຕ່າງໆ (RTI, 2000). ຄືດັ່ງກຸ່ມຊົນເຜົ່າທີ່ມີພົນລະເມືອງໜ້ອຍມີຄ່ານິຍົມທີ່ແຕກຕ່າງຈາກ ກຸ່ມຊົນເຜົ່າລາວ-ໄຕ, ສະນັ້ນ ແນວຄວາມຄິດກ່ຽວກັບບົດບາດຍິງ-ຊາຍ ແລະ ສາຍພົວພັນອື່ນໆກໍ່ມີ

ຄວາມແຕກຕ່າງກັນໄປ. ຕົວຢ່າງໃນກຸ່ມຊົນເຜົ່າລາວ-ໄຕມີການສືບທອດເຊື້ອສາຍທາງແມ່, ການສືບທອດມູນມັງມໍລະດົກ, ເປັນຕົ້ນແມ່ນທີ່ດິນຈະຍົກໃຫ້ລູກສາວເປັນຄົນສືບທອດ, ໂດຍທີ່ໃນກຸ່ມຊົນເຜົ່າທີ່ມີພົນລະເມືອງໜ້ອຍຈະບໍ່ເຮັດຄືແນວນັ້ນ. ໃນທຳນອງດຽວກັນ, ແມ່ຍິງໃນຂົງເຂດທົ່ງພຽງສ່ວນໃຫຍ່ແມ່ນຊົນເຜົ່າລາວລຸ່ມຈະຮັບຜິດຊອບວຽກງານການເງິນຂອງຄອບຄົວ, ໃນຂະນະທີ່ຜູ້ຊາຍຂອງຊົນເຜົ່າອື່ນໆແມ່ນເປັນຜູ້ຮັບຜິດຊອບວຽກງານດັ່ງກ່າວ. ພ້ອມກັນນັ້ນຍ້ອນມີຄວາມແຕກຕ່າງ ທາງດ້ານວັດທະນາທຳຂອງແຕ່ລະຊົນເຜົ່າ ຈຶ່ງເຮັດໃຫ້ມີຄວາມແຕກຕ່າງທາງດ້ານບົດບາດຍິງ-ຊາຍໃນການເຂົ້າມາຊົມໃຊ້ການບໍລິການສັງຄົມຕ່າງໆ (ເຊັ່ນ: ການສຶກສາ ແລະ ສາທາລະນະສຸກ) ແລະ ທັດສະນະ ແລະ ໂອກາດ ໃນການຊົມໃຊ້ການບໍລິການຕ່າງໆ.

*ໃນສັງຄົມລາວໃຫ້ຄວາມສຳຄັນຂອງຄອບຄົວ ແລະ ການແຕ່ງງານແຕກຕ່າງກັນອອກໄປ ຕາມແຕ່ລະວັດທະນະທຳ*

ສາຍພົວພັນຂອງຄອບຄົວ ແລະ ສັງຄົມແມ່ນມີຄວາມສຳຄັນຫຼາຍໃນວັດທະນະທຳລາວ. ສາຍສຳພັນເຫຼົ່ານີ້ ມີຜົນກະທົບໂດຍກົງຕໍ່ສະຖານະພາບ ແລະ ທັດສະນະຄະຕິຂອງແມ່ຍິງ ແລະ ຜູ້ຊາຍ. ພ້ອມກັນນັ້ນຄອບຄົວເປັນບ່ອນຫລໍ່ຫລອມທັດສະນະຂອງສັງຄົມ ແລະ ຮີດຄອງປະເພນີ ຊຶ່ງສືບທອດຈາກຄົນລຸ້ນໜຶ່ງໄປຫາຄົນອີກລຸ້ນໜຶ່ງ. ເຖິງວ່າໃນວັດທະນະທຳລາວຈະມີຮີດຄອງປະເພນີ ແລະ ພິທີການທາງສາສະໜາຫລາຍຢ່າງແຕກຕ່າງກັນອອກໄປກໍ່ຕາມ, ແຕ່ປະເພນີການແຕ່ງງານແມ່ນຖືວ່າສຳຄັນ ແລະ ມີຄຸນຄ່າສູງໃນສັງຄົມລາວ, ໂດຍສະເພາະມີຄຸນຄ່າຫລາຍຕໍ່ແມ່ຍິງລາວ. ຊຶ່ງໄດ້ສະແດງອອກໃນຄຳສຸພາສິດລາວບູຮານທີ່ວ່າ "ຍິງບໍ່ມີຜົວ ຄືແຫວນຫົວເປົ່າ ຍິງບໍ່ມີຄູ່ຊ້ອນຢູ່ໄປກໍ່ໄຮ້ຄ່າແທ້ໃດ". ດັ່ງນັ້ນຈຶ່ງມີຄວາມຈຳເປັນຕ້ອງໄດ້ເຂົ້າໃຈ ແລະ ສຶກສາ ຮີດຄອງປະເພນີ ແລະ ຮູບແບບການແຕ່ງງານຕ່າງໆທີ່ມີຜົນກະທົບຕໍ່ເສດຖະກິດ-ສັງຄົມ ແລະ ສະພາບຂອງແມ່ຍິງ ແລະ ຜູ້ຊາຍຢູ່ໃນສັງຄົມລາວ.

*ສິນສອດຄ່າດອງຍັງຄົງໄດ້ຮັບການປະຕິບັດຢ່າງແພ່ຫຼາຍໃນ ສປປ ລາວ*

ຄືກັນກັບປະເທດຕ່າງໆໃນອາຊີ, ພິທີແຕ່ງງານ ໃນ ສປປ ລາວໄດ້ໃຫ້ຂອງ ຂວັນຊຶ່ງກັນ ແລະ ກັນ. ຕາມຮີດຄອງປະເພນີທີ່ສືບທອດກັນມາ ຄອບຄົວຂອງເຈົ້າບ່າວ ແລະ ເຈົ້າສາວ ຕ້ອງໄດ້ໃຫ້ຂອງຂວັນຊຶ່ງກັນ ແລະ ກັນ ຫຼື ວ່າຝ່າຍໃດຝ່າຍໜຶ່ງເປັນຜູ້ມອບ ສິ່ງທີ່ມີຄ່າໃຫ້ກັບອີກຝ່າຍໜຶ່ງ. ຮີດຄອງດັ່ງກ່າວນີ້ມີຄວາມໝາຍສະເພາະໃນຕົວຂອງມັນເອງ ແລະ ມີຄຸນຄ່າລະຫວ່າງຜູ້ຮັບ ແລະ ຜູ້ມອບ. ຂະນົບທຳນຽມກ່ຽວກັບການວາງຄ່າສິນສອດ ແລະ ຂອງຂວັນຈາກຄອບຄົວຝ່າຍເຈົ້າບ່າວ ໃຫ້ກັບຄອບຄົວເຈົ້າສາວຍັງຄົງຖືກປະຕິບັດກັນຢ່າງແພ່ຫຼາຍໃນ ສປປ ລາວ. ໃນທາງກົງກັນຂ້າມກໍ່ຍັງມີຂະນົບທຳນຽມໃນການມອບເງິນ ແລະ ຂອງຂວັນຈາກຄອບຄົວເຈົ້າສາວໃຫ້ທາງເຈົ້າບ່າວ. ອີງຕາມການສຳຫຼວດຜ່ານມາ ພົບວ່າປະມານ 85% ຂອງຈຳນວນຄອບຄົວເຈົ້າສາວໄດ້ຮັບຄ່າດອງໃນພິທີການແຕ່ງງານ. ແຕ່ເຖິງຢ່າງໃດກໍ່

ຕາມ, ໃນບັນດາຊົນເຜົ່າອື່ນໆ ກໍ່ຍັງມີຄວາມແຕກຕ່າງ ກັນໄປອີກຫຼາຍຢ່າງ (ການສຳຫລວດສະພາບແມ່ຍິງລາວ, ປີ 1999) ແລະ ອີກ 15 % ຂອງຈຳນວນຄອບຄົວທີ່ບໍ່ໄດ້ຮັບຄ່າດອງແມ່ນຜູ້ທີ່ເຮັດພິທີແຕ່ງງານໃນລະຫວ່າງສົງຄາມເພາະ ຂາດລາຍໄດ້ ແລະ ບໍ່ມີຄວາມພ້ອມທີ່ຈະຕ້ອງເຮັດຕາມຂະນົບທຳນຽມ.

### *ຫຼັງຈາກແຕ່ງງານແລ້ວແຕ່ລະກຸ່ມຊົນເຜົ່າຈະມີການຍົກຍ້າຍທີ່ຢູ່ແຕກຕ່າງກັນອອກໄປ*

ໃນ ສປປ ລາວ, ການຍົກຍ້າຍທີ່ຢູ່ຫຼັງຈາກແຕ່ງງານແລ້ວ ແມ່ນປະຕິບັດຕາມ 3 ຮູບແບບ ຄື: ລະບົບສືບທອດເຊື້ອສາຍທາງແມ່, ສືບທອດເຊື້ອສາຍທາງພໍ່ ຫຼື ທັງສອງ. ລາວ-ໄຕສ່ວນໃຫ່ຍຈະຖືລະບົບສືບທອດເຊື້ອສາຍທາງແມ່. ສ່ວນກຸ່ມຊົນເຜົ່າອື່ນໆແມ່ນຖືລະບົບສືບເຊື້ອສາຍທາງພໍ່ ຫຼື ທັງສອງ. ໂດຍທົ່ວໄປແລ້ວ, ລະບົບສືບເຊື້ອສາຍທາງແມ່, ເຈົ້າບ່າວຈະຕ້ອງຍ້າຍເຂົ້າມາຢູ່ນຳຄອບຄົວທາງຝ່າຍຍິງ ຊຶ່ງເຮັດໃຫ້ແມ່ຍິງມີສະພາບ ແລະ ອຳນາດໃນການຕັດສິນໃຈຫຼາຍກວ່າ. ສະພາບທຸກຢ່າງແມ່ນຂຶ້ນກັບແມ່ຍິງເພາະເຮືອນ ແລະ ຊັບສົມບັດຕ່າງໆແມ່ນຂອງຄອບຄົວລາວທັງໝົດ ແລະ ລາວກໍ່ຄຸ້ນເຄີຍກັບສະພາບແວດລ້ອມດີ. ຖ້າຫາກມີບັນຫາໃນການຕ່າງງານ, ຜົວເທົ່ານັ້ນທີ່ຈະຕ້ອງອອກຈາກເຮືອນໄປ. ລູກສາວຜູ້ທີ່ຢູ່ລ້ຽງດູພໍ່ແມ່ ຈະໄດ້ສືບທອດ ຫຼື ມູນມໍລະດົກຈາກພໍ່ແມ່ ຊຶ່ງສ່ວນຫຼາຍແມ່ນ ເຮືອນ ແລະ ທີ່ດິນ (ດິນເຮືອນ ແລະ ນາ). ມີແຕ່ຄອບຄົວຮັ່ງມີເທົ່ານັ້ນທີ່ຈະແບ່ງດິນຫຼາຍຕອນທີ່ເຫຼືອໃຫ້ແກ່ເອື້ອຍອ້າຍນ້ອງຄົນອື່ນໆ. ໃນທຳນອງດຽວກັນ, ໃນລະບົບສືບເຊື້ອສາຍທາງແມ່ນັ້ນລູກສາວຈະໄດ້ຮັບມູນມໍລະດົກຫຼາຍກວ່າລູກຊາຍ.

### *ການຢ່າຮ້າງຍັງເປັນບັນຫາໃນສັງຄົມລາວ*

ການຢ່າຮ້າງແມ່ນບັນຫາສັງຄົມອັນໜຶ່ງໃນວັດທະນະທຳລາວ; ກົດໝາຍລາວໄດ້ອະນຸຍາດໃຫ້ມີການຢ່າຮ້າງ ໂດຍບໍ່ໄດ້ຮັບຜິດຊອບການລ້ຽງດູຄູ່ສົມລົດຂອງຕົນເອງ ຍົກເວັ້ນແຕ່ລູກ (ເບິ່ງບົດທີ 2). ການສຶກສາຜ່ານມາພົບວ່າ ຊົນເຜົ່າຂະມຸລີ (ມອນ-ຂະແມ) ໃນບ້ານ ພູທອງ, ແຂວງອຸດົມໄຊ ມີສາມຄຳທີ່ບົ່ງບອກເຖິງສະພາບສົມລົດ (ທະນາຄານໂລກ, 2004). ຄຳສັບໜຶ່ງແມ່ນ "ມາຮັງ" ໝາຍວ່າຢ່າຮ້າງ, ອີກຄຳໜຶ່ງແມ່ນ "ຢົງປອຍ" ໝາຍວ່າພໍ່ໝ້າຍ ແລະ ຄຳສັບທີ່ສາມແມ່ນ "ມາປອຍ" ໝາຍເຖິງແມ່ໝ້າຍ. ສອງຄຳສັບສຸດທ້າຍແມ່ນໃຊ້ກັບຄົນໜຸ່ມ, ເຊັ່ນ ຜູ້ທີ່ຜົວ ຫຼື ເມຍຕາຍຈາກຕັ້ງແຕ່ຍັງໜຸ່ມ. ສິ່ງເຫຼົ່ານີ້ແມ່ນການຖືກຈຳແນກຈາກສັງຄົມ, ເຖິງວ່າເຂົາເຈົ້າບໍ່ໄດ້ຖືກຕັດຂາດອອກຈາກສັງຄົມຢ່າງສິ້ນເຊີງກໍ່ຕາມ, ແຕ່ພວກເຂົາເຈົ້າຖືກດູໝິ່ນຈາກສະມາຊິກບ້ານຄົນອື່ນໆ (ທະນາຄານໂລກ, 2004).

## 1.5 ຄວາມທຸກຍາກ ແລະ ເສດຖະກິດ

### ເສດຖະກິດ ສປປ ລາວມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ລວມຍອດຜະລິດຕະພັນພາຍໃນເພີ່ມຂື້ນ

ເສດຖະກິດຂອງ ສປປ ລາວ ແມ່ນອີງໃສ່ທ່າແຮງທາງດ້ານກະສິກຳ, ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນແມ່ນ 390 US $ ຕໍ່ປີ(ປີ 2004) ແລະໃນນັ້ນກະສິກຳແມ່ນ ກວມເອົາ 46,6 %ຂອງລວມຍອດຜະລິດຕະພັນພາຍໃນ, ສ່ວນທີ່ເຫຼືອ ແມ່ນ 27 % ຈາກອຸດສາຫະກຳ ແລະ ຫັດຖະກຳ, 25 % ແມ່ນຈາກການບໍລິການ ແລະ ອີກ 0,9 % ແມ່ນລາຍຮັບຈາກ ການເກັບພາສີນຳ ເຂົ້າ. 85 % ຂອງການໃຊ້ແຮງງານແມ່ນຖືກໃຊ້ເຂົ້າໃນວຽກງານກະສິກຳ (ທະນາຄານໂລກ, 2005), ຜົນຜະລິດທີ່ສຳຄັນແມ່ນ: ເຂົ້າ,ຢາສູບ,ກາເຟ,ແຮ່ທາດຕ່າງໆແລະອຸດສາຫະກຳໄມ້ປຸງແຕ່ງ.
ໃນປະເທດຍັງມີຄວາມອຸດົມສົມບູນຂອງຊັບໃພະຍາກອນ ທຳມະຊາດເຊັ່ນ: ປ່າໄມ້ແລະແຫຼ່ງນ້ຳອື່ນໆເຊິ່ງເປັນທ່າແຮງທີ່ສຳຄັນ ໃນການພັດທະນາປະເທດຊາດ.

ເພື່ອໃຫ້ບັນລຸເປົ້າໝາຍການເຕີບໃຫຍ່ຂະຫຍາຍຕົວທາງເສດຖະກິດ ແລະ ຫຼຸດຜ່ອນຄວາມທຸກຍາກ, ສປປ ລາວໄດ້ຫັນປ່ຽນນະໂຍບາຍ ເພື່ອປັບປຸງເສດຖະກິດໃນລະຫວ່າງປີ 1986 ແລະ 1987 ໂດຍການສົ່ງເສີມເສດຖະກິດຕະຫຼາດ, ພັດທະນາຫົວໜ່ວຍທຸລະກິດເອກະຊົນ ແລະລຶບລ້າງຄວາມທຸກຍາກ. ໂດຍປະຕິບັດຕາມແນວທາງດັ່ງກ່າວ, ໃນປີ 1986 ລັດຖະບານໄດ້ນຳໃຊ້ກົນໄກເສດຖະກິດໃໝ່ (NEM) ເຊິ່ງມີຈຸດປະສົງເພື່ອຫັນປ່ຽນແຜນເສດຖະກິດແບບລັດເກື້ອກູນມາເປັນ ເສດຖະກິດຕະຫຼາດ. ໃນນັ້ນລັດຖະບານໄດ້ພະຍາຍາມປັບປຸງຫລາຍຢ່າງເຊັ່ນ: ນຳໃຊ້ນະໂຍບາຍລາຄາສິນຄ້າແບບເສລີ, ກຳຈັດການຖືມຊຸມຈາກລັດຖະບານ, ປັບປຸງອັດຕາແລກປ່ຽນໃຫ້ໄປຕາມກົນໄກຕະຫຼາດ ແລະ ປັບປຸງທຸລະກິດການຄ້າພາກເອກະຊົນ ແລະ ຕ່າງປະເທດ ແລະ ເພີ່ມທະວີການຮ່ວມມືກັບສາກົນພາຍໃນພາກພື້ນ.

ໃນກົນໄກເສດຖະກິດໃໝ່, ສປປ ລາວ ໄດ້ລິເລີ່ມປັບປຸງວຽກງານເສດຖະກິດ, ພື້ນຖານໂຄງລ່າງເພື່ອພັດທະນາເສດຖະກິດ ແລະ ສັງຄົມ, ໂດຍສະເພາະ ແມ່ນການຄົມມະນາຄົມຂົນສົ່ງ. ໃນກົນໄກດັ່ງກ່າວ ໄດ້ເຮັດໃຫ້ລວມຍອດຜະລິດຕະພັນພາຍໃນ ມີການຂະຫຍາຍຕົວເພີ່ມຂື້ນເທົ່າກັບ 6,7 % (ປີ 1991 ຫາ 1996) , ຊຶ່ງຜະລິດຕະພັນດັ່ງກ່າວແມ່ນໄດ້ມາຈາກຂະແໜງກະສິກຳ ແລະ ປ່າໄມ້, ການເພີ່ມຂື້ນຂອງການສົ່ງອອກຜະລິດຕະພັນໄມ້ ແລະ ໄມ້ທ່ອນ, ໂຮງງານຕັດຫຍິບ, ໂຮງງານປະກອບລົດຈັກ ແລະ ພະລັງງານໄຟຟ້າ ຕະຫຼອດຮອດ ການໄຫຼເຂົ້າຂອງເງິນຕາຕ່າງປະເທດ ລວມທັງການການຊ່ວຍເຫລືອໂດຍກົງຂອງຕ່າງປະເທດ (ODA) ແລະ ການລົງທຶນໂດຍກົງຂອງຊາວຕ່າງຊາດ(FDI).

ນັບຈາກນັ້ນມາ, ລວມຍອດຜະລິດຕະພັນພາຍໃນ (GDP) ສືບຕໍ່ເພີ່ມຂື້ນ ຍົກເວັ້ນ ປີ 1998 ເນື່ອງຈາກເກີດມີວິກິດການທາງດ້ານການເງິນຂອງປະເທດອາຊີ. ໃນລະຫວ່າງວິກິດການດັ່ງກ່າວ ລາຍຮັບຂອງ ລັດຖະບານຫຼຸດລົງ ແລະ ພົບບັນຫາການຂາດແຄນງົບປະມານ. ເຖິງຢ່າງໃດກໍ່ຕາມ, ລັດຖະບານກໍ່

ໄດ້ອອກມາດຕະການຕ່າງໆເພື່ອເຮັດໃຫ້ມີສະເຖຍລະພາບທາງເສດຖະກິດ ເຊັ່ນ: ປັບປຸງການເກັບພາສີ ແລະ ການຄຸ້ມຄອງດ້ານການເງິນ ເພື່ອຫຼຸດຜ່ອນໄພເງິນເຟີ້ ແລະ ປັບປຸງອັດຕາແລກປ່ຽນ. ນອກນັ້ນຍັງໃຊ້ມາດຕາການອື່ນໆເຊັ່ນ: ຫລຸດຜ່ອນການໃຊ້ຈ່າຍຂອງລັດໃນວຽກງານສາທາລະນະຕ່າງໆ ເຊັ່ນ: ດ້ານສາທາລະນະສຸກ, ການສຶກສາ ແລະ ພື້ນຖານໂຄງລ່າງ ຈາກ 17% ລົງມາເປັນ 11 %, ຊຶ່ງມັນໄດ້ເຮັດໃຫ້ເກີດມີຜົນກະທົບຕໍ່ຫຼາຍຄອບຄົວ ໃນນັ້ນແມ່ນແມ່ຍິງ ແລະ ເດັກນ້ອຍ.

### *ຄວາມທຸກຍາກສືບຕໍ່ຫຼຸດລົງຢ່າງຕໍ່ເນື່ອງ ແຕ່ວ່າຍັງມີຄວາມບໍ່ເທົ່າທຽມກັນໃນການດຳລົງຊີວິດຢູ່ໃນສັງຄົມ*

ເນື່ອງຈາກເສດຖະກິດຂອງລາວມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊຶ່ງສະແດງໃຫ້ເຫັນວ່າອັດຕາສ່ວນ ຄວາມທຸກຍາກຫຼຸດລົງຈາກ 46 % ໃນປີ 1992 -93 ເປັນ 39 % ໃນປີ 1997-98 ແລະ 33 % ໃນປີ 2002-03. ໃນຊ່ວງເວລາດຽວກັນນີ້, ຄວາມທຸກຍາກໄດ້ຫຼຸດລົງຢ່າງຈະແຈ້ງຈາກ 56% ເປັນ 51 % ແລະ 41 % ຂອງບັນດາເມືອງຕ່າງໆໃນເຂດພູດອຍ ຊຶ່ງເປັນເຂດຊົນເຜົ່າອາໃສຢູ່ຢ່າງຫຼວງຫຼາຍ ແລະສາມາດສະຫລຸບໄດ້ວ່າ ຄວາມທຸກຍາກຂອງປະຊາຊົນບັນດາເຜົ່າຫລຸດລົງ. ເຖິງວ່າຄວາມທຸກຍາກຈະມີທ່າອ່ຽງຫຼຸດລົງ, ແຕ່ຄວາມແຕກຕ່າງທາງດ້ານ ມາດຕະຖານການດຳລົງຊີວິດຍັງຄົງມີຢູ່ລະຫວ່າງຊົນເຜົ່າສ່ວນໃຫຍ່ ແລະ ສ່ວນນ້ອຍ. ໃນຊົນເຜົ່າລາວ-ໄຕ, ອັດຕາຄວາມທຸກຍາກຍັງເຫຼືອພຽງ 25 % ເມື່ອທຽບກັບຊົນເຜົ່າມອນ-ຂະແມມີ 53 % , ມົ້ງ-ມ້ຽນ 47 % ແລະ ຈີນ-ຕິເບດແມ່ນ 40 % (ການສຳຫຼວດຂໍ້ມູນການຊົມໃຊ້ ແລະ ບໍລິໂພກໃນຄົວເຮືອນ ລາວຄັ້ງທີ 3). ນອກນັ້ນ, ຄວາມບໍ່ສະເໝີພາບກັນຍັງສະແດງອອກໃນການບໍລິໂພກ, ການສຶກສາ ແລະ ລະດັບການຮັກສາສຸຂະພາບ ພ້ອມທັງການເຂົ້າເຖິງພື້ນຖານໂຄງລ່າງ ແລະ ການບໍລິການອື່ນ ໆ.

### *ຄວາມທຸກຍາກໃນ ສປປ ລາວ*

ໃນປະເທດລາວ, ປະຊາຊົນອາໃສເຮັດການປູກພືດ ແລະ ລ້ຽງສັດເພື່ອທຳມາຫາກິນ ແລະ ຮັບໃຊ້ຊີວິດການເປັນຢູ່ຂອງເຂົາເຈົ້າ ແລະ ໃນນັ້ນ ລາຍຮັບຂອງຄົນສ່ວນໃຫຍ່ໃນຊຸມຊົນແມ່ນມາຈາກການກະສິກຳ[2]. ດັ່ງນັ້ນ,ຄວາມທຸກຍາກໃນລາວມີຄວາມໝາຍເຖິງການຂາດແຄນຜົນຜະລິດພືດ ຫຼື ຂາດເຂີນເຂົ້າກິນ ແລະ ສັດລ້ຽງ. ສາເຫດພາໃຫ້ທຸກຍາກ ແມ່ນມາຈາກຂາດແຄນ ຫຼື ຈຳກັດດ້ານພື້ນທີ່ ແລະແຫຼ່ງນ້ຳທີ່ເໝາະສົມ, ສັດຕູພືດທຳລາຍ, ພະຍາດສັດ, ຄວາມເຈັບປ່ວຍ ແລະ ຂາດແຄນດ້ານສາທາລະນະສຸກ. ສາເຫດອື່ນໆ ແມ່ນຂາດແຄນ ຫຼື ຈຳກັດ ຈຳນວນເສັ້ນທາງທີ່ເຂົ້າເຖິງເຂດຫ່າງໄກສອກຫຼີກ ແລະເຂດພູຜາສູງຊັນ, ຂາດແຄນ ຫຼື ຈຳກັດນ້ຳດື່ມສະອາດ ປອດໄພ ແລະ ຫຼ້າຫຼັງດ້ານສຸຂາພິບານ, ເກີດເປັນພະຍາດ ເຊັ່ນ: ມາລະເລຍ, ຖອກທ້ອງ ແລະ ຂາດແຄນ ຫຼື ຈຳກັດດ້ານສາທາລະນະສຸກ ແລະ ການສຶກສາ.

---

[2] ອີງຕາມຂໍ້ມູນສຳພາດລະດັບບ້ານຈາກ LECS 3 (2002-2003)

ຄວາມທຸກຍາກແມ່ນພົບເຫັນຢູ່ໃນເຂດຊົນນະບົດ ແລະ ຊົນເຜົ່າ, ໂດຍສະເພາະແມ່ນແມ່ຍິງ. ຈາກຂໍ້ມູນຂອງປີ 2002-03 ສະແດງໃຫ້ເຫັນວ່າແຂວງ ສາລະວັນ (ພາກໃຕ້) ເປັນແຂວງທີ່ມີຄວາມທຸກຍາກຫລາຍທີ່ສຸດ, ເຊິ່ງມີຫຼາຍກ່ວາ 54 % ຂອງປະຊາຊົນທີ່ດຳລົງຊີວິດຕ່ຳກ່ວາເສັ້ນຄວາມທຸກຍາກ, ຕໍ່ມາແມ່ນແຂວງ ຫົວພັນ ແລະ ຜົ້ງສາລີ (ພາກເໜືອ) ແລະ ແຂວງສະຫວັນນະເຂດ (ພາກກາງ) ທີ່ມີອັດຕາຄວາມທຸກຍາກສູງກ່ວາ 43 % ຂອງປະຊາກອນທີ່ດຳລົງຊີວິດຢູ່ຕ່ຳກ່ວາເສັ້ນຄວາມທຸກຍາກ (ລາຍຮັບສະເລ່ຍ 1 ໂດລາ/ມື້) (ການສຳຫຼວດການໃຊ້ຈ່າຍ ແລະ ຊົມໃຊ້ຂອງຄົວເຮືອນລາວຄັ້ງທີ 3). ຍິ່ງໄປກ່ວານັ້ນ, ຍັງໄດ້ຄາດຄະເນວ່າ 28% ຂອງພົນລະເມືອງລາວ ປະສົບກັບຄວາມຂາດແຄນດ້ານສະບຽງອາຫານໃນລະຫວ່າງປີ 1997-99, ຍົກຕົວຢ່າງ: ການກິນອາຫານບໍ່ພຽງພໍກັບຄວາມຕ້ອງການຂອງພະລັງງານໃນຮ່າງກາຍປະຈຳວັນ (FAO, 2001). ພົນລະເມືອງຢູ່ທາງພາກເໜືອໄດ້ຂາດແຄນອາຫານບາງລະດູການ ແລະ ບໍ່ສາມາດຄ້ຳປະກັນດ້ານສະບຽງອາຫານໄດ້ອັນເນື່ອງມາຈາກໄພນ້ຳຖ້ວມ.

### *ຄວາມທຸກຍາກສ່ວນຫລາຍເກີດຂຶ້ນຢູ່ເຂດຊົນນະບົດ ແລະ ຊົນເຜົ່າ, ໂດຍສະເພາະແມ່ຍິງ*

ດັ່ງທີ່ສະແດງໃຫ້ເຫັນໃນຕາຕະລາງທີ 2 ສະພາບຄວາມທຸກຍາກໃນລາວ ສະແດງອອກຢູ່ໃນຫຼາຍຊົນເຜົ່າ. ໃນຈຳນວນ 4 ກຸ່ມພາສາຊົນເຜົ່າ, ຊົນເຜົ່າມອນ-ຂະແມ ເປັນຊົນເຜົ່າທີ່ມີຄວາມທຸກຍາກຫລາຍກ່ວາໝູ່ ເຊິ່ງຫຼາຍກ່ວາເຄິ່ງຫນຶ່ງຂອງກຸ່ມຄົນເຫຼົ່ານີ້ ແມ່ນດຳລົງຊີວິດຢູ່ໃຕ້ເສັ້ນຄວາມທຸກຍາກ. ແຕ່ກົງກັນຂ້າມຊົນເຜົ່າລາວ-ໄຕມີພຽງແຕ່ 25% ເທົ່ານັ້ນທີ່ຍັງທຸກຍາກ. ບັນດາຕົວເລກເຫຼົ່ານີ້ສະແດງໃຫ້ເຫັນເຖິງສະພາບຄວາມແຕກຕ່າງການດຳລົງຊີວິດໃນແຕ່ລະພູມີພາກຂອງປະເທດ. ພົນລະເມືອງທີ່ດຳລົງຊີວິດຢູ່ເຂດຫ່າງໄກຈາກຕົວເມືອງເທົ່າໃດ, ຍິ່ງເຮັດໃຫ້ເຂົາເຈົ້າດ້ອຍໂອກາດຫລາຍເທົ່ານັ້ນ, ເປັນຕົ້ນແມ່ນຂາດການເຂົ້າເຖິງພື້ນຖານໂຄງລ່າງ ແລະ ການບໍລິການ, ລາຍໄດ້ ແລະ ທາງເລືອກໃນການປະກອບອາຊີບຕ່າງໆ. ຍົກຕົວຢ່າງ, ຄົວເຮືອນຂອງ ຊົນເຜົ່າມອນ-ຂະແມມີລາຍໄດ້ຕ່ຳຈາກການຈ້າງງານ.

ສ່ວນຫລາຍຊົນເຜົ່າຕ່າງໆ ຈະດຳລົງຊີວິດຢູ່ໃນເຂດຫ່າງໄກສອກຫຼີກ ແລະ ພູຜາສູງຊັນ, ດັ່ງນັ້ນພວກເຂົາເຈົ້າບໍ່ສາມາດເຂົ້າເຖິງແຫຼ່ງຊັບພະຍາກອນຕ່າງໆ, ໂດຍສະເພາະແມ່ນການເງິນ. ຕໍ່ກັບສະພາບການດັ່ງກ່າວນີ້, ແມ່ຍິງຈະປະສົບກັບຄວາມທຸກຍາກແຕກຕ່າງກັນອອກໄປ, ເຊິ່ງແມ່ຍິງໃຊ້ເວລາເຮັດວຽກຫຼາຍຊົ່ວໂມງຍ້ອນວ່າ ພວກເຂົາມີໜ້າທີ່ອັນພື້ນຖານໃນການຮັບປະກັນດ້ານສະບຽງອາຫານ ຢູ່ພາຍໃນຄອບຄົວຂອງເຂົາເຈົ້າ. ເພື່ອຫຼຸດຜ່ອນການທຳລາຍປ່າໄມ້ ຈາກການຖາງປ່າເຮັດໄຮ່, ລັດຖະບານໄດ້ຍົກຍ້າຍປະຊາຊົນທີ່ດຳລົງຊີວິດໃນເຂດພູສູງ ໃຫ້ລົງມາຢູ່ໃນເຂດທົ່ງພຽງ. ດັ່ງນັ້ນເຂົາເຈົ້າຈຶ່ງມີຄວາມຫຍຸ້ງຍາກໃນການດຳລົງຊີວິດໃນການຕັ້ງຖິ່ນຖານໃຫ່ມ. ຖ້າຫາກຄອບຄົວດັ່ງກ່າວນັ້ນບໍ່ສາມາດປູກເຂົ້າກຸ້ມກິນໃນສະຖານທີ່ໃໝ່, ພວກເຂົາອາດຈະກັບຄືນໄປຖາງປ່າເຮັດໄຮ່ໃນຂອບເຂດທີ່ເຂົາເຈົ້າເຄີຍເຮັດ, ເຊິ່ງຈະເຮັດໃຫ້ເນື້ອທີ່ຖາງປ່າ ເຮັດໄຮ່ ມີການແຜ່ກວ້າງອອກໄປເລື້ອຍໆ.

### ຕາຕະລາງ 2: ຂໍ້ມູນຄວາມທຸກຍາກຂອງບັນດາຊົນເຜົ່າ ໃນ ສປປ ລາວ ປີ 2002-03

| | ຈຳນວນສ່ວນຮ້ອຍຂອງ ພົນລະເມືອງທັງໝົດ (%) | ຈຳນວນສ່ວນຮ້ອຍຂອງ ພົນລະເມືອງທຸກຍາກ |
|---|---|---|
| ພົນລະເມືອງທັງໝົດ | 100 | |
| ແບ່ງຕາມເຂດ | | |
| ຕົວເມືອງ | 23 | 19,7 |
| ຊົນນະບົດ | 77 | 37,6 |
| ຖະໜົນສາມາດນຳໃຊ້ໄດ້ຕະຫຼອດປີ | - | 31,4 |
| ຖະໜົນບໍ່ສາມາດນຳໃຊ້ໄດ້ຕະຫຼອດປີ | - | 46,2 |
| ແຍກຕາມຊົນເຜົ່າ | | |
| ລາວ-ໄຕ | 66,6 | 25 |
| ມອນ-ຂະແມ | 20,6 | 54,3 |
| ມົ້ງ-ມ້ຽນ | 8,4 | 40,3 |
| ຈີນ-ຕີເບດ | 3,3 | 45,8 |
| ອື່ນ ໆ | 1,1 | 48,4 |

*ແຫຼ່ງຂໍ້ມູນ: ທະນາຄານໂລກ, 2005, ອີງຕາມການສຳຫຼວດໃຊ້ຈ່າຍ ແລະການຊົມໃຊ້ຂອງຄົວເຮືອນຄັ້ງທີ 3*

### *ພິທີການທາງດ້ານວັດທະນາທຳມີຜົນຕໍ່ຮູບແບບການຜະລິດໃນລາວ*

ອີງຕາມການປະເມີນຄວາມທຸກຍາກແບບມີສ່ວນຮ່ວມ ປີ 2001, ລະບົບການດຳລົງຊີວິດໃນ ສປປ ລາວ ປະກອບມີຄວາມເຊື່ອຖືທາງດ້ານວັດທະນະທຳ (ໄສຍະສາດ), ດິນ (ອານາເຂດ), ການປູກເຂົ້າ, ການລ້ຽງສັດ, ການປູກສາລີ, ການປູກມັນ ແລະ ພືດຜັກ ແລະ ແຫຼ່ງຊັບພະຍາກອນທຳມະຊາດຕ່າງໆ ເຊັ່ນ: (ປາ, ສັດປ່າ ແລະ ຜະລິດຕະພັນຈາກປ່າໄມ້ອື່ນໆ) (NSC, 2001). ຍ້ອນພິທີການທາງສາສະໜາ, ງານລ້ຽງ ແລະ ງານສະຫຼອງຕ່າງໆແມ່ນສ່ວນໜຶ່ງໃນຊີວິດປະຈຳວັນຂອງເຂົາເຈົ້າ, ພິທີການດັ່ງກ່າວ ມີຜົນຕໍ່ຮູບແບບການຜະລິດສ່ວນໃຫຍ່ຢູ່ໃນລາວ. ສຳລັບຊາວບ້ານທີ່ດຳລົງຊີວິດໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ “ເຂົ້າ ແລະ ສັດລ້ຽງມີຈິດວິນຍານ ແລະ ໃນເມື່ອບໍ່ມີຄວາມສົມດຸນກັນລະຫວ່າງມະນຸດ ແລະ ຈິດວິນຍານກໍ່ໝາຍວ່າ ຄວາມໂຊກຮ້າຍ ແລະ ຄວາມທຸກຍາກໄດ້ມາເຖິງແລ້ວ” (PPA, 2001). ປະຊາຊົນແຂ່ງຂັນກັນເພື່ອໃຫ້ມີຖານະດີໃນສັງຄົມ. ຍັງມີປະຊາຊົນຫລາຍທ່ານເຊື່ອວ່າ ຄວາມທຸກຍາກໃນ ສປປ ລາວ ເປັນເລື່ອງໃໝ່ ແລະ ມາຈາກປັດໃຈທາງນອກທີ່ບໍ່ສາມາດຄວບຄຸມໄດ້ ເຊັ່ນ: ອາກາດບໍ່ດີ, ນ້ຳຖ້ວມ, ພະຍາດສັດລ້ຽງ, ຂາດຄວາມສາມາດໃນການຈັດຕັ້ງປະຕິບັດແຜນການພັດທະນາຕ່າງໆ, ຂາດການບໍລິການ ແລະ ຄວາມຊຳນິຊຳນານດ້ານເຕັກໂນໂລຢີ, ແລະ ອື່ນໆ (PPA, 2001).

ຍັງບໍ່ທັນມີກໍລະນີໃດທີ່ຕາຍຍ້ອນຄວາມອຶດຫິວ, ແຕ່ຍັງມີເດັກນ້ອຍຈຳນວນຫລວງຫລາຍເປັນໂລກຂາດອາຫານແບບຮຸນແຮງ, ໂດຍສະເພາະແມ່ນເດັກນ້ອຍໃນເຂດຊົນນະບົດ.

*ໂອກາດ ແລະ ຄວາມສ່ຽງໃນອະນາຄົດ*

ໃນຊຸມປີຕໍ່ໜ້າ ສປປ ລາວ ຈະປະເຊີນກັບສິ່ງທ້າທ້າຍຕ່າງໆ ໃນທ່າມກາງການເຕີບໃຫຍ່ຂະຫຍາຍຕົວ ແລະ ການພັດທະນາຢ່າງວ່ອງໄວດ້ານອຸດສາຫະກຳ ແລະ ການຄ້າ. ການປ່ຽນແປງຢ່າງວ່ອງໄວນີ້ຈະສ້າງໂອກາດ ແລະ ປະກົດການຫຍໍ້ທໍ້ຢູ່ໃນສັງຄົມລາວ. ຕົວຢ່າງ: ການເພີ່ມຂຶ້ນຂອງໂຮງຈັກໂຮງງານ ແລະ ການບໍລິການຕ່າງໆຈະສ້າງໂອກາດໃຫ້ແມ່ຍິງມີວຽກເຮັດງານທຳ, ແຕ່ສິ່ງເຫຼົ່ານີ້ຈະຕິດຕາມດ້ວຍຄວາມບໍ່ໝັ້ນຄົງອັນໃໝ່ ເຊັ່ນ: ເງື່ອນໄຂ ແລະ ສະພາບການເຮັດວຽກບໍ່ດີ. ການເປີດການຮ່ວມມືກັບພາກພື້ນຈະເຮັດໃຫ້ມີການເຄື່ອນຍ້າຍແຮງງານ ແລະ ມີລາຍຮັບເພີ່ມຂຶ້ນ, ແຕ່ຈະພົບບັນຫາການຄ້າຂາຍມະນຸດ. ການສົ່ງເສີມການຜະລິດສິນຄ້າກະສິກຳຈະເຮັດໃຫ້ມີການສ້າງອາຊີບ ແລະ ປ່ຽນແປງການນຳໃຊ້ທີ່ດິນ ແລະ ບົດບາດຍິງ-ຊາຍໃນການຜະລິດແບບພື້ນເມືອງ. ສິ່ງສຳຄັນພວກເຮົາຕ້ອງສາມາດນຳໃຊ້ໂອກາດດັ່ງກ່າວໃຫ້ມີປະໂຫຍດ ແລະ ຄວບຄຸມບໍ່ໃຫ້ເກີດມີຄວາມສ່ຽງໃນສັງຄົມ. ດັ່ງນັ້ນຈຶ່ງຈຳເປັນຕ້ອງໄດ້ຍົກສູງຈິດສຳນຶກກ່ຽວກັບບົດບາດຍິງ-ຊາຍເພື່ອເຮັດໃຫ້ມີຄວາມສະເໝີພາບລະຫວ່າງຍິງ-ຊາຍຢູ່ໃນສັງຄົມ.

# ບົດທີ 2

## ສະພາບແວດລ້ອມທີ່ເອື້ອອຳນວຍໃນການສົ່ງເສີມ ຄວາມສະເໝີພາບ ລະຫວ່າງຍິງ-ຊາຍ: ດ້ານກົດໝາຍ, ການຈັດຕັ້ງ ແລະ ແຜນນະໂຍບາຍ

### 2.1. ສະພາບລວມ

ສະພາບແວດລ້ອມທີ່ເອື້ອອຳນວຍ ໃນການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍໃນ ສປປ ລາວ ປະກອບດ້ວຍລະບຽບກົດໝາຍຕ່າງໆ, ສົນທິສັນຍາສາກົນ, ນະໂຍບາຍ ແລະ ອົງການຈັດຕັ້ງຕ່າງໆ ທີ່ຊ່ວຍຊຸກຍູ້ ສົ່ງເສີມສະຖານະພາບຂອງແມ່ຍິງ. ລັດຖະທຳມະນູນ ແລະ ກົດໝາຍຕ່າງໆຂອງລາວໄດ້ຮັບປະກັນຄວາມສະເໝີພາບທາງດ້ານບົດບາດຍິງ-ຊາຍ, ລັດຖະບານໄດ້ມີສອງອົງການຈັດຕັ້ງຫລັກ, ຊຶ່ງມີໜ້າທີ່ ສ້າງນະໂຍບາຍແລະແຜນງານຕ່າງໆເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ. ແຜນຍຸດທະສາດແຫ່ງຊາດໃນການເຕີບໂຕ ແລະ ຫລຸດຜ່ອນຄວາມທຸກຍາກ ໄດ້ກຳນົດເອົາວຽກງານບົດບາດຍິງ-ຊາຍເປັນບູລິມະສິດເພື່ອເຊື່ອມເຂົ້າໃນຂົງເຂດວຽກງານຕ່າງໆ.

ເຖິງວ່າຈະມີປັດໃຈເອື້ອອຳນວຍດັ່ງກ່າວ ແລະ ໄດ້ຮັບຜົນສຳເລັດໃນໄລຍະຜ່ານມາກໍ່ຕາມ, ລະດັບຄວາມຮັບຮູ້ທາງດ້ານກົດໝາຍຂອງແມ່ຍິງ ແລະ ຜູ້ຊາຍລາວກໍ່ຍັງຄົງຕໍ່າຢູ່, ໂດຍສະເພາະ ກົດໝາຍທີ່ພົວພັນເຖິງແມ່ຍິງ. ການຈັດຕັ້ງປະຕິບັດກົດໝາຍຕ່າງໆ ກໍ່ຍັງບໍ່ທັນເຂັ້ມແຂງ ໂດຍສະເພາະໃນລະດັບເມືອງ ແລະ ແຂວງ, ແລະ ຍັງຕ້ອງໄດ້ສ້າງຄວາມເຂັ້ມແຂງໃຫ້ບັນດາກະຊວງໄດ້ມີຄວາມສາມາດຕິດຕາມກວດກາ ນະໂຍບາຍຕ່າງໆ, ໂດຍສະເພາະ ຕ້ອງໄດ້ເອົາໃຈໃສ່ລົບລ້າງປະກົດການຫຍໍ້ທໍ້ຕ່າງໆ ເຊັ່ນ: ຕ້ານການຄ້າມະນຸດ ແລະ ຄວາມຮຸນແຮງຕໍ່ແມ່ຍິງ. ສະຫະພັນແມ່ຍິງລາວ ແລະ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ໄດ້ມີຄວາມພະຍາຍາມສູງເພື່ອຍົກລະດັບຄວາມຮັບຮູ້ ແລະ ໃຫ້ການຊ່ວຍເຫລືອແກ່ແມ່ຍິງ, ແຕ່ເຖິງແນວໃດກໍ່ຕາມ, ມັນກໍ່ຍັງມີຄວາມຈຳເປັນເພື່ອສືບຕໍ່ວຽກງານດັ່ງກ່າວ.

### 2.2. ດ້ານກົດໝາຍ

*ລັດຖະທຳມະນູນລາວ ແລະ ກົດໝາຍຕ່າງໆຮັບປະກັນຄວາມສະເໝີພາບລະຫວ່າງຍິງ-ຊາຍ.*

**ລັດຖະທຳມະນູນລາວ.**

- ນັບແຕ່ປີ 1991 ເປັນຕົ້ນມາ ສປປ ລາວ ມີລັດຖະທຳມະນູນ ເຊິ່ງເປັນກົດໝາຍສູງສຸດຂອງປະເທດ ໄດ້ຮັບປະກັນໃຫ້ມີສິດສະເໝີພາບກັນລະຫວ່າງຍິງ-ຊາຍ (ມາດຕາ 22 ແລະ 24), ຊຶ່ງໄດ້ລະບຸໄວ້ວ່າ

“ພົນລະເມືອງລາວທັງສອງເພດ ມີສິດສະເໝີພາບກັນ ທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ ແລະຄອບຄົວ”. ໃນມາດຕາ 22 ໄດ້ຮວບຮວມເອົາຫລັກການຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ເຂົ້າໃນເອກະສານແລະລະບຽບກົດໝາຍຕ່າງໆ. ລັດຖະທຳມະນູນສະບັບດັ່ງກ່າວໄດ້ມອບພາລະບົດບາດໃຫ້ແກ່ສະຫະພັນແມ່ຍິງລາວ ໃນການສົ່ງເສີມຄວາມກ້າວໜ້າໃຫ້ແກ່ແມ່ຍິງ (ມາດຕາ 7).

**ກົດໝາຍວ່າດ້ວຍກຳມະສິດ, ທີ່ດິນ ແລະ ຄອບຄົວ.**

- ກົດໝາຍຄອບຄົວ ສະບັບ ເດືອນພະຈິກ ປີ 1990 ໄດ້ລະບຸໄວ້ວ່າ: “ແມ່ຍິງແລະຜູ້ຊາຍມີສິດສະເໝີພາບເທົ່າທຽມກັນໃນທຸກດ້ານທີ່ກ່ຽວຂ້ອງກັບສາຍພົວພັນຄອບຄົວ” (ມາດຕາ 2). ມາດຕາ 9 ໄດ້ລະບຸວ່າ: ”ແມ່ຍິງແລະຜູ້ຊາຍມີສິດໃນການສ້າງຄອບຄົວ ເລີ່ມແຕ່ອາຍຸໄດ້ 18 ປີ ຂຶ້ນໄປ. ໃນກໍລະນີພິເສດແລະມີຄວາມຈຳເປັນ, ຂໍ້ກຳນົດນີ້ອາດຈະໄດ້ຫລຸດລົງໃຫ້ຕ່ຳກວ່າ 18 ປີ ແຕ່ວ່າບໍ່ໃຫ້ຫລຸດ 15 ປີ. ການແຕ່ງງານຈະຕ້ອງໄດ້ອີງໃສ່ການຍິນຍອມຂອງທັງສອງຝ່າຍ ແລະຈະຕ້ອງມາຈາກທັງສອງຝ່າຍ ໂດຍບໍ່ໄດ້ຖືກບັງຄັບຈາກຝ່າຍໃດຝ່າຍໜຶ່ງ ຫລື ບຸກຄົນໃດໜຶ່ງ.”
- ກົດໝາຍຄອບຄົວລະບຸວ່າ ຜົວ ຫລື ເມຍ ສາມາດຂໍຢ່າຮ້າງໄດ້, ເຖິງວ່າແມ່ຍິງຈະໄດ້ຮັບການປົກປ້ອງເພື່ອບໍ່ໃຫ້ຖືກຜົວປະຖິ້ມກໍ່ຕາມ. ມາດຕາ 22 (ກົດໝາຍຄອບຄົວ ປີ 1990) ຫ້າມບໍ່ໃຫ້ຜູ້ຊາຍຢ່າຮ້າງເມຍໃນໄລຍະຖືພາ, ຫລືເວລາຫາກໍ່ເກີດລູກໃໝ່ໄດ້ປະມານໜຶ່ງປີ. ການຈ່າຍເງິນອຸດໜູນອາດຈະໄດ້ຈ່າຍ- ຮັບຈາກຜົວ ຫລື ເມຍຈະບໍ່ເກີນໄລຍະ 1 ປີ.
- ພາຍໄຕ້ມາດຕາ 26, ຈະບໍ່ຖືວ່າເປັນສິນສົມສ້າງສຳລັບຊັບສົມບັດທີ່ເປັນຂອງຜົວ ຫລື ເມຍທີ່ໄດ້ມາກ່ອນການແຕ່ງດອງ ຫລື ທີ່ໄດ້ຮັບຈາກການສືບທອດມູນມໍລະດົກ ຫລື ຈາກການມອບຊັບທີ່ໄດ້ບົ່ງໄວ້ໃຫ້ເປັນຂອງຜົວ ຫລື ເມຍສະເພະໃນເວລາເປັນຜົວເມຍກັນນັ້ນ.ແລະການມີຮູບແບບເດີມ ຫລື ປ່ຽນຮູບເປັນຊັບສິນອື່ນໆ. ສິນສົມສ້າງຂອງຄູ່ຜົວເມຍແມ່ນຊັບສົມບັດທີ່ຄູ່ຜົວເມຍນັ້ນສ້າງສາ ແລະ ຫາມາໄດ້ໃນເວລາເປັນຜົວເມຍນຳກັນ, ຍົກເວັ້ນ ຊັບສິນທີ່ມີມູນຄ່າຕ່ຳ.
- ກົດໝາຍສືບທອດມໍລະດົກແມ່ນເປັນກາງ. ເຊິ່ງມັນມີການຂັດແຍ່ງກັບລະບົບການສືບທອດທີ່ດິນແບບຮີດຄອງປະເພນີ, ມັນໄດ້ຮັບຮອງເອົາສິດທິຄືກັນໃນການສືບທອດມໍລະດົກຄືກັນຂອງແມ່ຍິງແລະຜູ້ຊາຍ, ແລະ ເດັກຍິງ ແລະເດັກຊາຍ. ລະບົບການສືບທອດທີ່ດິນແບບຄອງເດີມມີຄວາມແຕກຕ່າງກັນລະຫວ່າງຊົນເຜົ່າຕ່າງໆ ແລະ ມັນພົວພັນກັບການຍົກຍ້າຍທີ່ຢູ່ອາໄສ ຫລັງຈາກການແຕ່ງງານ-ລະບົບມານດາສິດທິລາດ ຫລື ລະບົບບິດາສິດທິລາດ ຫລື ທັງສອງຢ່າງ. ຊົນເຜົ່າໄຕ-ກະໄດ(ລາວລຸ່ມ) ເຊິ່ງກວມເອົາຫລາຍກວ່າ 60% ຂອງຈຳນວນພົນລະເມືອງ, ສ່ວນໃຫຍ່ແມ່ນປະຕິບັດຕາມລະບອບມານດາສິດທິລາດ ເຊິ່ງທີ່ດິນ (ປຸກສ້າງເຮືອນ ແລະທົ່ງນາ) ແມ່ນຈະໄດ້ຮັບການສືບມູນມໍລະດົກຈາກພໍ່ແມ່ໃຫ້ລູກສາວ. ສ່ວນກຸ່ມຊົນເຜົ່າພະມ້າ-ຕິເບດແລະມອນ-ຂະແມ,

ໄດ້ກວມເອົາ 10 % ແລະ 22% ຕາມລຳດັບຂອງພົນລະເມືອງ, ສ່ວນຫລາຍທີ່ດິນ ແລະ ຊັບສິນອື່ນໆຈະໂອນໃຫ້ລູກຊາຍ.

- ໃນ ສປປ ລາວ, ທີ່ດິນແມ່ນກຳມະສິດຂອງລັດ ແຕ່ວ່າພົນລະເມືອງລາວທຸກຄົນ ມີສິດເທົ່າທຽມກັນໃນການນຳໃຊ້. ກົດໝາຍທີ່ດິນແລະຊັບສິນ ໄດ້ລະບຸເປັນໝວດໄວ້ວ່າ: " ຊັບສິນທີ່ໄດ້ຮັບກ່ອນການແຕ່ງງານ ດ້ວຍການສືບທອດມໍລະດົກ, ຫລື ອາດຈະແມ່ນຂອງຝ່າຍໃດຝ່າຍໜຶ່ງ ບໍ່ໄດ້ຖືວ່າເປັນສິນສົມສ້າງ." "ທີ່ດິນທີ່ໄດ້ມາໂດຍຄູ່ຜົວເມຍ ຄວນຈະໄດ້ໄປແຈ້ງຊື່ອອກໃບຕາດິນຮ່ວມກັນ" (ກົດໝາຍກ່ຽວກັບທີ່ດິນ, ມາດຕາ 43; ກົດໝາຍຄອບຄົວ; ແລະກົດໝາຍຊັບສິນ).
- "ການລົງທະບຽນທີ່ດິນຈະຕ້ອງມີປື້ມບັນທຶກລາຍລະອຽດກ່ຽວກັບທີ່ດິນ, ເຊັ່ນ: ຊື່ ແລະນາມສະກຸນຂອງຜົວ ແລະ ເມຍທີ່ໄດ້ຮັບສິດນຳໃຊ້ທີ່ດິນ, ປະເພດທີ່ດິນ, ຂອບເຂດເນື້ອທີ່ດິນ, ການໄດ້ມາຂອງດິນ ແລະ ທີ່ຕັ້ງຂອງດິນ ແມ່ນໄດ້ບັນທຶກໄວ້ໃນປື້ມທະບຽນທີ່ດິນ." (ມາດຕາ 43, ກົດໝາຍທີ່ດິນ).

**ກົດໝາຍແຮງງານ.**

- ພາຍໃຕ້ກົດໝາຍແຮງງານ (ປີ 1994), "ນາຍຈ້າງຈະບໍ່ຈ້າງແມ່ຍິງເພື່ອເຮັດວຽກໜັກ ທີ່ມີຄວາມອັນຕະລາຍຕໍ່ສຸຂະພາບຂອງເຂົາເຈົ້າ ດັ່ງທີ່ໄດ້ລະບຸໄວ້ໃນລະບຽບກົດໝາຍ ແລະ ບໍ່ໃຫ້ເຮັດວຽກໃນເວລາກາງຄືນນັບແຕ່ 10 ໂມງແລງ ຮອດ 5 ໂມງເຊົ້າ ໃນຂະແໜງອຸດສາຫະກຳຕ່າງໆ. ໄລຍະເວລາພັກຜ່ອນສຳລັບແມ່ຍິງຈະແມ່ນ 11 ຊົ່ວໂມງກ່ອນການເລີ່ມຕົ້ນເຮັດວຽກໃນມື້ຕໍ່ໄປ." (ພາກທີ 5, ມາດຕາ 33). ມາດຕາ 54 ກ່ຽວກັບເງິນເບ້ຍບຳນານ ໄດ້ກຳນົດ ອາຍຸຂອງການອອກກິນເບ້ຍບຳນານ, ຜູ້ຊາຍແມ່ນ 60 ປີ ແລະ ແມ່ຍິງແມ່ນ 55 ປີ.

**ກົດໝາຍເລືອກຕັ້ງ.**

- ອີງຕາມລັດຖະທຳມະນູນ, ພົນລະເມືອງລາວທຸກຄົນນັບແຕ່ອາຍຸ 18 ປີຂຶ້ນໄປ ແມ່ນມີສິດລົງຄະແນນສຽງ. ສຳລັບພົນລະເມືອງທີ່ມີອາຍຸເກີນ 21 ປີ ແມ່ນມີສິດລົງສະໝັກຮັບເລືອກຕັ້ງກັບສະພາແຫ່ງຊາດ, ໂດຍບໍ່ຈຳແນກເພດ, ຊົນເຜົ່າ, ຖານະທາງສັງຄົມ ແລະ ອາຊີບ. ໃນພາກປະຕິບັດຕົວຈິງ, ຜູ້ລົງຄະແນນສຽງໃນການເລືອກຕັ້ງມີຫລາຍກວ່າ 90% ( ຜູ້ຊາຍ ແລະ ແມ່ຍິງ ) ເຂົ້າຮ່ວມການເລືອກຕັ້ງ.

**ກົດໝາຍກ່ຽວກັບ ການພັດທະນາ ແລະ ການປົກປ້ອງແມ່ຍິງ.**

- ໃນປີ 2004, ສະພາແຫ່ງຊາດໄດ້ຮັບຮອງເອົາຂໍ້ບັນຍັດ ເພື່ອປົກປ້ອງສິດທິແລະຜົນປະໂຫຍດຂອງແມ່ຍິງ ແລະ ເພື່ອຮັບປະກັນໃຫ້ມີຄວາມເທົ່າທຽມກັນລະຫວ່າງຍິງ-ຊາຍ. ກົດໝາຍກ່ຽວກັບ ການ

ພັດທະນາ ແລະການປົກປ້ອງແມ່ຍິງໄດ້ກຳນົດຫລັກການ, ລະບຽບກົດໝາຍ ແລະ ມາດຕະການທີ່ ກ່ຽວຂ້ອງກັບການພັດທະນາ ແລະ ການປົກປ້ອງແມ່ຍິງ; ເພື່ອສົ່ງເສີມຄວາມຮູ້ແລະຄວາມສາມາດ ຂອງເຂົາເຈົ້າ; ເພື່ອສົ່ງເສີມຄວາມສະເໝີພາບດ້ານບົດບາດຍິງ-ຊາຍ; ເພື່ອຕ້ານການຄ້າມະນຸດ, ແມ່ຍິງ ແລະ ເດັກນ້ອຍ; ເພື່ອຕ້ານຄວາມຮຸນແຮງພາຍໃນຄອບຄົວ; ເພື່ອຍົກຖານະຂອງແມ່ຍິງ ໃນສັງຄົມໃຫ້ສູງຂຶ້ນ; ແລະເພື່ອຊຸກຍູ້ໃຫ້ແມ່ຍິງໄດ້ມີສ່ວນຮ່ວມເຂົ້າໃນວຽກງານສ້າງສາ ແລະ ພັດ ທະນາປະເທດຊາດ (ມາດຕາ 1). ກົດໝາຍດັ່ງກ່າວໄດ້ຕອບສະໜອງວຽກງານກວດກາແລະ ຄຸ້ມ ຄອງການພັດທະນາແລະປົກປ້ອງສິດທິແລະຄວາມສົນໃຈຂອງແມ່ຍິງ.

**ກົດໝາຍອາຍາ.**

- ການຂົ່ມຂືນກະທຳສຳເລົາ ແມ່ນຖືເປັນການກະທຳຜິດຢ່າງຮ້າຍແຮງ ແລະ ກົດໝາຍອາຍາ (ປີ1992) ໄດ້ມີຫລາຍມາດຕາ ກ່ຽວກັບການລົງໂທດບຸກຄົນທີ່ພະຍາຍາມ ຫລື ຂົ່ມຂືນແມ່ຍິງ. ລະດັບຂອງການລົງໂທດແມ່ນພົວພັນກັບຫລາຍກໍລະນີ.
  - o ບຸກຄົນຜູ້ໃດຫາກໄດ້ໃຊ້ກຳລັງ, ໃຊ້ອາວຸດນາບຂູ່, ໃຊ້ຢາສະຫລົບ, ໃຊ້ສິ່ງມຶນເມົາ ຫລື ໃຊ້ວິທີການອື່ນໆທີ່ເຮັດໃຫ້ຜູ້ຍິງຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫລືອຕົນເອງໄດ້ເພື່ອທຳ ຊຳເລົາດ້ວຍການຂືນໃຈຂອງຜູ້ຍິງທີ່ບໍ່ເມຍຂອງຕົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ສາມປີ ຫາ ຫ້າປີ (ມາດຕາ 119)
  - o ຖ້າຫາກແມ່ຍິງມີອາຍຸຕ່ຳກວ່າ 15 ປີ, ຖືກຂົ່ມຂືນເປັນກຸ່ມ ຫລື ຖືກຂົ່ມຂືນດ້ວຍການບັງ ຄັບ, ຖ້າຫາກຮ່າງກາຍຂອງຜູ້ຖືກເຄາະຮ້າຍ ໄດ້ຮັບຄວາມເສຍຫາຍໃນເວລາຂົ່ມຂືນ, ຖ້າ ຫາກຜູ້ຖືກເຄາະຮ້າຍພິການຕະຫລອດຊີວິດ ຫລື ເສຍຊີວິດ, ຜູ້ກະທຳຜິດຈະຖືກຈຳຄຸກແຕ່ 7 ປີ ຫາ 15 ປີ.
  - o ຖ້າຜູ້ກະທຳຜິດໄດ້ຂົ່ມຂືນທຳສຳເລົາແລ້ວໄດ້ຂ້າຜູ້ຍິງນັ້ນຖິ້ມ, ຜູ້ກະທຳຜິດຈະຖືກຈຳຄຸກ ແຕ່ 15 ປີ ຫາ 20 ປີ, ຫລື ຕະຫລອດຊີວິດ, ຫລື ໄດ້ຮັບການລົງໂທດ ດ້ວຍການປະຫານ ຊີວິດ.
  - o "ບຸກຄົນໃດກໍ່ຕາມທີ່ມີເພດສຳພັນຮ່ວມກັບ ເດັກຍິງ ຫລື ເດັກຊາຍທີ່ມີອາຍຸຕ່ຳກວ່າ 15 ປີ ຈະຖືກລົງໂທດດ້ວຍການຈຳຄຸກແຕ່ 1 ປີ ຫາ 5 ປີ." (ມາດຕາ 120).

**ສົນທິສັນຍາສາກົນ.**

ສປປ ລາວ ໄດ້ຮ່ວມລົງນາມໃນສົນທິສັນຍາສາກົນ, ຊຶ່ງຕ້ອງມີພັນທະໃນການຈັດຕັ້ງປະຕິບັດສົນທິສັນຍາ ດັ່ງກ່າວ. ພ້ອມນັ້ນ ສປປ ລາວ ຍັງເຊັນຮັບຮອງເອົາສົນທິສັນຍາ ກ່ຽວກັບ ສິດທິທາງດ້ານການເມືອງຂອງ ແມ່ຍິງໃນປີ 1969, ແລະ ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (CEDAW) ແລະ ສົນທິສັນຍາກ່ຽວກັບສິດທິຂອງເດັກ (CRC) ໃນປີ 1981 ແລະ ປີ 1990 ຕາມລຳດັບ. CEDAW

ໄດ້ຫ້າມການຈຳແນກຕໍ່ແມ່ຍິງ ແລະ ປົກປ້ອງສິດຂອງເຂົາເຈົ້າ; ແລະ CRC ຊຸກຍູ້ໃຫ້ລັດຖະບານຕ່າງໆ ອອກມາດຕະການ ເພື່ອປົກປ້ອງສິດທິ ແລະ ຕອບສະໜອງຄວາມຕ້ອງການພື້ນຖານຂອງເດັກນ້ອຍ-ເດັກຍິງແລະເດັກຊາຍ. ໃນສົນທິສັນຍາ CRC ໄດ້ລະບຸແຈ້ງມາດຕະການປົກປ້ອງສິດທິຂອງແມ່ໃນເວລາລ້ຽງລູກ(ມາດຕາ 22 ແລະ 24). ນອກຈາກນັ້ນຄວາມສະເໝີພາບດ້ານບົດບາດ ຍິງ-ຊາຍກໍ່ຍັງໄດ້ອະທິບາຍແຈ້ງຢູ່ໃນນະໂຍບາຍ ແລະ ເອກະສານຕ່າງໆ, ລວມທັງ ເອກະສານກ່ຽວກັບພົນລະເມືອງ, ສຸຂະພາບ ແລະ ຊັບພະຍາກອນມະນຸດ.

ສປປ ລາວ ນຳເອົາເນື້ອໃນຈິດໃຈ ຂອງສົນທິສັນຍາສາກົນສະບັບຕ່າງໆ ເຂົ້າໃນລັດຖະທຳມະນູນ. ແຕ່ວ່າຍັງມີຄວາມຕ້ອງການທີ່ຈະພັດທະນາກົດໝາຍຕ່າງໆ ເພື່ອສ້າງຄວາມເຂັ້ມແຂງດ້ານກົດໝາຍຂອງລາວໃຫ້ມີຄວາມໝັ້ນຄົງ, ແຕ່ຍັງພົບພໍ້ກັບບັນຫາການຂາດປະສົບການ ແລະ ຄວາມສາມາດຂອງມະນຸດ, ແລະມີການຈຳກັດຄວາມຮັບຮູ້ຂອງປະຊາຊົນ. ກະຊວງຍຸດຕິທຳກຳລັງພະຍາຍາມຍົກສູງຄວາມຮັບຮູ້ກ່ຽວກັບຄວາມລຳບາກຂອງແມ່ຍິງ ແລະ ສິດທິຂອງເຂົາເຈົ້າ. ກະຊວງດັ່ງກ່າວໄດ້ວາງແຜນທີ່ຈະລວມເອົາການຝຶກອົບຮົມບົດບາດຍິງ-ຊາຍ ເຂົ້າໃນການສຶກສາກ່ຽວກັບກົດໝາຍ (ຫລັກສູດສຳລັບນັກ ຮຽນກົດໝາຍ) ຢູ່ທີ່ຄະນະນິຕິສາດ ແລະ ລັດຖະສາດຂອງມະຫາວິທະຍາໄລແຫ່ງຊາດ. ນອກນັ້ນຍັງໄດ້ຈັດຝຶກອົບຮົມບົດບາດຍິງ-ຊາຍໃຫ້ແກ່ຜູ້ສືບສວນຄະດີ ແລະ ຜູ້ພິພາກສາຂອງສານປະຊາຊົນສູງສຸດ, ແລະ ຍົກລະດັບຄວາມຮັບຮູ້ກ່ຽວກັບສິດທິມະນຸດໃຫ້ແກ່ປະຊາຊົນ, ໂດຍສະເພາະໃຫ້ແມ່ຍິງ, ຊົນເຜົ່າຕ່າງໆ, ເດັກນ້ອຍ ແລະ ປະຊາຊົນທີ່ດ້ອຍໂອກາດອື່ນໆ.

## 2.2 ກົນໄກເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງລາວ

ສະຫະພັນແມ່ຍິງລາວ (ສ.ຍ.ລ) ແລະ ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ລາວແມ່ນກົນໄກຂອງຊາດໃນການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ.

## ສະຫະພັນແມ່ຍິງລາວ

ສ ຍ ລ ແມ່ນໜຶ່ງໃນບັນດາອົງການຈັດຕັ້ງມະຫາຊົນ ທີ່ມີພາລະບົດບາດ ທາງດ້ານການເມືອງແລະລັດຖະທຳມະນູນໃຫ້ເປັນຕົວແທນຂອງແມ່ຍິງລາວບັນດາເຜົ່າ ແລະ ເພື່ອປົກປ້ອງສິດ ແລະຜົນປະໂຫຍດຂອງແມ່ຍິງ. ສ ຍ ລ ສ້າງຕັ້ງຂຶ້ນໃນປີ 1955, ຊຶ່ງໃນເບື້ອງຕົ້ນມີຊື່ວ່າ: “ສະມາຄົມແມ່ຍິງລາວຮັກຊາດ” ທີ່ມີມູນເຊື້ອໃນການປຸກລະດົມແມ່ຍິງເຂົ້າຮ່ວມການຕໍ່ສູ້ເພື່ອປົດປ່ອຍປະເທດຊາດ. ສ ຍ ລ ມີສາຍໄຍການຈັດຕັ້ງແຕ່ຂັ້ນສູນກາງ (ຂັ້ນກະຊວງ) ຈົນເຖິງ ຂັ້ນເມືອງ, ຂັ້ນບ້ານ ແລະ ໄດ້ປະຕິບັດຕາມຄຳຂວັນ 3 ດີ: “ເປັນພົນລະເມືອງດີ, ພັດທະນາດີ ແລະ ມີຄອບຄົວວັດທະນະທຳດີ ”. ສ ຍ ລ ເປັນຂົວຕໍ່ລະຫ່ວາງພັກ, ລັດຖະບານ ແລະ ແມ່ຍິງລາວບັນດາເຜົ່າ. ໜ້າທີ່ຮັບຜິດຊອບຕົ້ນຕໍ ແມ່ນຍົກລະດັບຊີວິດການເປັນຢູ່ ແລະ

ສະຖານະພາບຂອງແມ່ຍິງລາວ. ຈຳນວນສະມາຊິກຂອງສະຫະພັນແມ່ຍິງລາວມີຈຳນວນເພີ່ມຂຶ້ນເຖິງ 970,650 ຄົນ, ກວມເອົາຈຳນວນເຄິ່ງໜຶ່ງຂອງຈຳນວນແມ່ຍິງທັງໝົດ (ຂໍ້ມູນທ້າຍປີ 2005).

ສ ຍ ລ ມີໜ້າທີ່ສົ່ງເສີມ ແລະ ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍຂອງພັກ ແລະ ລັດຖະບານ ລັດຖະທຳມະນູນ ແລະ ກົດໝາຍທີ່ພົວພັນ ເຖິງການຮັບປະກັນສິດ ແລະ ຄວາມສະເໝີພາບລະຫ່ວາງຍິງ ຊາຍ. ປະຈຸບັນ ສ ຍ ລ ໄດ້ມີຄວາມພະຍາຍາມທີ່ຈະເຊື່ອມປະເດັນບົດບາດຍິງ-ຊາຍເຂົ້າໃນແຜນງານພັດທະນາຂອງແຕ່ລະຂະແໜງການຂອງລັດ ແລະ ພະຍາຍາມສົ່ງເສີມແມ່ຍິງເຂົ້າຮ່ວມໃນການຕັດສິນບັນຫາຂັ້ນຕ່າງໆ. ພ້ອມກັນນັ້ນ, ສ ຍ ລ ກໍຍັງໄດ້ເອົາໃຈໃສ່ພັດທະນາ ເສດຖະກິດ-ສັງຄົມໃນຂັ້ນຮາກຖານແນໃສ່ຍົກລະດັບຊີວິດການເປັນຢູ່ຂອງແມ່ຍິງ ແລະ ຄອບຄົວຂອງເຂົາເຈົ້າ.

ສ ຍ ລ ໄດ້ຈັດຕັ້ງປະຕິບັດ 20 ໂຄງການທີ່ເລັ່ງໃສ່ການສ້າງລາຍຮັບ, ສິນເຊື່ອກອງທຶນປະຫຍັດ, ການສຶກສາ, ໂພຊະນາການ ຊຶ່ງສ່ວນຫຼາຍໄດ້ຮັບທຶນສະໜັບສະໜູນຈາກບັນດາອົງການຈັດຕັ້ງຜູ້ໃຫ້ທຶນ. ຄຽງຄູ່ໄປກັບການຈັດຕັ້ງປະຕິບັດໂຄງການດັ່ງກ່າວ, ສ ຍ ລ ກໍ່ໄດ້ຮ່ວມມືກັບ ແຕ່ລະພາກສ່ວນຕ່າງໆຂອງລັດຖະບານ, ເປັນຕົ້ນ ກະຊວງສາທາລະນະສຸກ, ສຶກສາ, ການເງິນ ( ກົມທີ່ດິນ ), ຍຸຕິທຳ, ວັດທະນະທຳ ແລະ ຂ່າວສານ, ວິທະຍາສາດ ເຕັກໂນໂລຢີ ແລະ ສິ່ງແວດລ້ອມ ແລະ ກຳລັງຮ່ວມມືກັບອົງການຈັດຕັ້ງສາກົນທີ່ບໍ່ແມ່ນລັດຖະບານ. ສ ຍ ລ ຮ່ວມມືຢ່າງໃກ້ສິດກັບສູນສະຖິຕິແຫ່ງຊາດ ໃນການສົ່ງເສີມການເກັບກຳ ແລະນຳໃຊ້ສະຖິຕິແຍກເພດຍິງ- ຊາຍ ແລະ ຍັງໄດ້ເຮັດວຽກຮ່ວມກັບຄະນະກຳມະການແຜນການ ແລະ ການລົງທຶນ ເພື່ອຊອກຫາວິທີການເຊື່ອມບົດບາດຍິງ-ຊາຍ ເຂົ້າໃນຂະບວນການວາງແຜນຂອງຂັ້ນເມືອງ ແລະ ຂັ້ນບ້ານ.

ເລີ່ມແຕ່ປີ 1997 ເປັນຕົ້ນມາ, ສູນຂໍ້ມູນຂ່າວສານ ບົດບາດຍິງ-ຊາຍ ເພື່ອການພັດທະນາ (ສຂບພ) ຂອງ ສ ຍ ລ ໄດ້ມີບົດບາດສຳຄັນໃນການສຶກສາອົບຮົມກ່ຽວກັບບົດບາດຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ, ໂດຍໄດ້ສ້າງຈິດສຳນຶກກ່ຽວກັບບົດບາດຍິງ-ຊາຍ, ສົ່ງເສີມຄວາມຮູ້ໃນການວິເຄາະ ບົດບາດຍິງ-ຊາຍໃຫ້ພະນັກງານຂອງລັດໃນທຸກລະດັບ ເພື່ອສ້າງຂີດຄວາມສາມາດໃນການເຊື່ອມບົດບາດ ຍິງ-ຊາຍ. ໃນຖານະທີ່ເປັນໜ່ວຍງານວິຊາການ, ສຂບພ ໄດ້ສ້າງທີມງານຄູຝຶກບົດບາດຍິງ-ຊາຍ ແລະ ນັກຄົ້ນຄ້ວາຂັ້ນສູນກາງ ແລະ ຂັ້ນແຂວງ . ພ້ອມກັນນັ້ນກໍໄດ້ສ້າງອຸປະກອນສຳລັບຝຶກອົບຮົມ, ໄດ້ດຳເນີນ ການຄົ້ນຄ້ວາ ແລະ ການວິເຄາະບົດບາດຍິງ-ຊາຍໃນຫຼາຍຫົວຂໍ້, ພ້ອມທັງໄດ້ເຜີຍແຜ່ຜົນສຳເລັດດັ່ງກ່າວຢ່າງກ້ວາງຂວາງ, ໂດຍສະເພາະ ໄດ້ສັງລວມຂໍ້ມູນບົດບາດຍິງ-ຊາຍບັນຈຸໄວ້ໃນຫ້ອງສະໝຸດຂອງສູນຂໍ້ມູນຂ່າວສານຢູ່ 5 ແຫ່ງ, ສະເພາະໃນຂັ້ນສູນກາງ ໄດ້ບັນຈຸຢູ່ຫໍສະໝຸດມະຫາວິທະຍາໄລແຫ່ງຊາດ. ສຂບພ ຊອກຫາວິທີທາງ ເພື່ອສ້າງຄວາມສາມາດ ໃຫ້ແກ່ພະນັກງານຂອງລັດຢູ່ແຕ່ລະກະຊວງ ເພື່ອເຊື່ອມບົດບາດຍິງ-ຊາຍ ເຂົ້າໃນແຜນງານ ແລະ ໂຄງການຂອງແຕ່ລະພາກສ່ວນ. ໃນຕົ້ນປີ 2000, ພາຍຫຼັງທີ່ໄດ້ຮັບການສະເໜີຈາກ ສ ຍ ລ , ຫ້ອງການສຳນັກງານນາຍົກ

ລັດຖະມົນຕີ ໄດ້ອອກແຈ້ງການສະບັບ ເລກທີ່ 0009/ ຫສນຍ, ລົງວັນທີ່ 5 ມັງກອນ 2000 ວ່າດ້ວຍການເຫັນດີໃຫ້ນຳໃຊ້ສະຖິຕິແຍກເພດຍິງ-ຊາຍເຂົ້າໃນລະບົບລວມຂອງສູນສະຖິຕິແຫ່ງຊາດ ແລະ ການວາງແຜນທາງດ້ານເສດຖະກິດ-ສັງຄົມ ຕັ້ງແຕ່ນັ້ນມາ, ສຂບພ ແລະ ສູນສະຖິຕິ ແຫ່ງຊາດໄດ້ຮ່ວມມືກັນ ໃນການເຜີຍແຜ່ເນື້ອໃນແຈ້ງການ ແລະ ຄວາມສຳຄັນ ຂອງສະຖິຕິແຍກເພດ, ໄດ້ແນະນຳກ່ຽວກັບດັດສະນີຫມາຍ ແລະ ບົດບາດຍິງ-ຊາຍ ພ້ອມທັງສຶກສາອົບຮົມໃຫ້ມີການຈັດຕັ້ງປະຕິບັດຕົວຈິງກ່ຽວກັບແຈ້ງການດັ່ງກ່າວ.

ແຕ່ລະກະຊວງກໍ່ມີ ສະຫະພັນແມ່ຍິງ, ຊຶ່ງມີໜ້າທີ່ສົ່ງເສີມສະຖານະພາບຂອງແມ່ຍິງໃນຂົງເຂດການເມືອງ ແລະ ຂະແໜງການຕ່າງໆ, ເຖິງຢ່າງໃດກໍຕາມ ສ ຍ ລ ຍັງພົບຄວາມຫຍຸ້ງຍາກໃນການເຊື່ອມບົດບາດຍິງ-ຊາຍເຂົ້າໃນວຽກງານຂອງລັດຖະບານ ດັ່ງລຸ່ມນີ້:

ກ. ຍັງຂາດບຸກຄະລາກອນທີ່ມີຄວາມຮູ້ຄວາມສາມາດໃນການເຊື່ອມບົດບາດຍິງຊາຍຢ່າງມີປະສິດທິພາບເຂົ້າໃນແຜນງານພັດທະນາ ແລະ ມີອຸປະສັກໃນການຝຶກອົບຮົມໃຫ້ພະນັກງານຂັ້ນກະຊວງ.

ຂ. ຍັງຂາດຂໍ້ມູນຂ່າວສານກ່ຽວກັບບົດບາດຍິງ-ຊາຍ ແລະ ຂາດສະຖິຕິແຍກເພດເພື່ອສະໜອງໃຫ້ແກ່ການ ວາງນະໂຍບາຍ.

ຄ. ຍັງຂາດງົບປະມານ ແລະ ຊັບພະຍາກອນເພື່ອສະໜັບສະໜູນໃຫ້ແກ່ຂະບວນການເຊື່ອມບົດບາດຍິງ-ຊາຍ.

ງ. ການປະສານງານກ່ຽວກັບການເຊື່ອມບົດບາດ ຍິງ-ຊາຍ ລະຫ່ວາງກະຊວງຕ່າງໆ, ອົງການໃຫ້ທຶນ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານຍັງເຮັດບໍ່ທັນໄດ້ດີ.

### *ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງລາວ*

ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງລາວ (ຄຊກມ) ໄດ້ຖືກສ້າງຕັ້ງຂຶ້ນໃນປີ 2003. ເປົ້າໝາຍຂອງການສ້າງຕັ້ງຄະນະດັ່ງກ່າວແມ່ນເພື່ອນຳພາຂະບວນການເຊື່ອມບົດບາດຍິງ-ຊາຍໃນຂັ້ນສູນກາງ, ຂັ້ນແຂວງ, ເມືອງ ແລະ ຂັ້ນບ້ານ. ຄະນະກຳມາທິການດັ່ງກ່າວປະກອບດ້ວຍບັນດາທ່ານ ທີ່ເປັນການນຳຈາກລັດຖະບານ. ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 37/ນຍ ໄດ້ກຳນົດໜ້າທີ່, ບົດບາດ, ສິດ, ໂຄງປະກອບ ແລະ ໂຄງຮ່າງການຈັດຕັ້ງຂອງ ຄຊກມ ດັ່ງນີ້ :

1. ຊ່ວຍລັດຖະບານໃນການສຶກສາຄົ້ນຄ້ວາກຳນົດນະໂຍບາຍ ແລະ ແຜນຍຸດທະສາດໃນການສົ່ງເສີມຄວາມກ້າວໜ້າໃນທຸກດ້ານໃຫ້ແກ່ແມ່ຍິງ ແລະ ຄວາມສະເໝີພາບບົດບາດຍິງ-ຊາຍໃນທຸກຂົງເຂດວຽກງານຢູ່ໃນແຕ່ລະໆດັບຂອງສັງຄົມ.
2. ເປັນຈຸດປະສານງານ ແລະ ພົວພັນຢ່າງໃກ້ຊິດກັບອຳນາດການປົກຄອງທ້ອງຖິ່ນ ແລະ ບັນດາອົງການຈັດຕັ້ງສາກົນໃນການຈັດຕັ້ງປະຕິບັດນະໂຍບາຍຂອງພັກ ແລະລັດຖະບານກ່ຽວກັບການສົ່ງເສີມຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ.

ໃນປະຈຸບັນ ຄຊກມ ກຳລັງສ້າງຕັ້ງຄະນະຮັບຜິດຊອບສົ່ງເສີມບົດບາດຍິງ-ຊາຍຢູ່ແຕ່ລະກະຊວງ ເພື່ອສົ່ງເສີມຄວາມກ້າວໜ້າໃຫ້ແກ່ແມ່ຍິງໃນແຕ່ລະຂະແໜງການ.

## 2.3 ດ້ານນະໂຍບາຍ

*ລັດຖະບານລາວໄດ້ເອົາໃຈໃສ່ຕໍ່ການສົ່ງເສີມຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ການເຊື່ອມບົດບາດຍິງ-ຊາຍ.*

ລັດຖະບານລາວໄດ້ເອົາໃຈໃສ່ຕໍ່ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ, ຊຶ່ງສະແດງອອກໃນຫລາຍໆດ້ານ, ເຊັ່ນ: ໃນເດືອນພຶດສະພາ ປີ 2000, ຫ້ອງການສຳນັກງານນາຍົກລັດຖະມົນຕີໄດ້ອອກແຈ້ງການໃຫ້ນຳໃຊ້ສະຖິຕິແຍກເພດເຂົ້າໃນການວາງນະໂຍບາຍ ແລະ ແຜນງານພັດທະນາຕ່າງໆທີ່ເອົາໃຈໃສ່ບົດບາດຍິງ-ຊາຍ. ປີ 2003, ລັດຖະບານໄດ້ສ້າງຕັ້ງຄະນະກຳມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງ. ນອກນັ້ນ, ລັດຖະບານຍັງໃຫ້ຄວາມສຳຄັນຕໍ່ຄວາມສະເໝີພາບບົດບາດຍິງ-ຊາຍ, ຊຶ່ງໄດ້ເວົ້າແຈ້ງຢູ່ໃນເອກະສານນະໂຍບາຍຕ່າງໆ ລວມທັງເອກະສານກ່ຽວກັບການພັດທະນາດ້ານປະຊາກອນ, ດ້ານສາທາລະນະສຸກ ແລະ ການພັດທະນາຊັບພະຍາກອນມະນຸດ.

ຍິ່ງໄປກ່ວານັ້ນ, ລັດຖະບານຍັງແນະນຳໃຫ້ກະຊວງຕ່າງໆສ້າງແຜນຍຸດທະສາດ ແລະ ແຜນປະຕິບັດງານເພື່ອສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍໃນຂັ້ນສູນກາງ, ແຂວງ, ເມືອງ ແລະ ຂັ້ນບ້ານ. ພາຍໃຕ້ການນຳພາຂອງ ຄຊກມ, ບັນດາກະຊວງໄດ້ເລີ່ມຕົ້ນເຊື່ອມບົດບາດຍິງ-ຊາຍເຂົ້າໃນກິດຈະກຳຕ່າງໆ. ບາງກະຊວງກຳລັງສ້າງຕັ້ງທີມງານເພື່ອຮັບຜິດຊອບວຽກງານບົດບາດຍິງ-ຊາຍ, ແລະ ກຳລັງມີການເກັບກຳຂໍ້ມູນສະຖິຕິແຍກເພດ ທີ່ກ່ຽວຂ້ອງກັບການລຶບລ້າງຄວາມທຸກຍາກ ແລະ ບາງຂະແໜງການກໍ່ໄດ້ຮວບຮວມຂໍ້ມູນ, ເອກະສານ ແລະ ດຳເນີນການປະເມີນສະພາບກ່ຽວກັບບົດບາດຍິງ-ຊາຍພາຍໃນຂະແໜງການຂອງເຂົາເຈົ້າ. ບາງຂະແໜງການກຳລັງສ້າງຄວາມສາມາດດ້ານບົດບາດຍິງ-ຊາຍໃຫ້ແກ່ພະນັກງານ. ບາງໜ່ວຍງານກໍ່ໄດ້ຄົ້ນຄ້ວາຊອກຫາບັນຫາໃນການມີສ່ວນຮ່ວມຂອງແມ່ຍິງ ແລະ ການສ້າງຍຸດທະສາດ ແລະ ແຜນປະຕິບັດເພື່ອແກ້ໄຂບັນຫາດັ່ງກ່າວ.

ກະຊວງຕ່າງໆກໍ່ໄດ້ປັບປຸງວຽກງານກໍ່ສ້າງພະນັກງານໃຫ້ມີຄວາມສະເໝີພາບດ້ານບົດບາດຍິງ -ຊາຍ ແລະ ເອົາໃຈໃສ່ພະນັກງານຊົນເຜົ່າໃນທຸກຂັ້ນ, ພ້ອມກັນນັ້ນກໍໄດ້ປັບປຸງບັນດານະໂຍບາຍ, ແຜນງານ ແລະ ໂຄງການຕ່າງໆທີ່ຄຳນຶງເຖິງບົດບາດຍິງ-ຊາຍ ແລະ ໃຫ້ການປຶກສາແກ່ແມ່ຍິງຂັ້ນທ້ອງຖິ່ນໃນການອອກແບບໂຄງການລຶບລ້າງຄວາມທຸກຍາກ, ທັງນີ້ກໍເພື່ອຮັບປະກັນໃຫ້ເຂົາເຈົ້າໄດ້ເຂົ້າຮ່ວມບັນດາກິດຈະກຳຂອງໂຄງການ, ລວມທັງການຂະຫຍາຍການບໍລິການ ແລະ ການຝຶກອົບຮົມ.

*ການສ້າງຈິດສຳນຶກ ແລະ ການເຊື່ອມບົດບາດຍິງ-ຊາຍຢູ່ແຕ່ລະກະຊວງຍັງບໍ່ທັນເປັນເອກະພາບ*

ການສ້າງແຜນງານ ແລະນະໂຍບາຍແຫ່ງຊາດດ້ານບົດບາດຍິງ-ຊາຍຍັງມີບັນຫາ ແລະສິ່ງທີ່ທ້າທາຍຈຳນວນໜຶ່ງ. ບັນຫາ ແລະ ອຸປະສັກດັ່ງກ່າວປະກອບດ້ວຍການຂາດຊັບພະຍາກອນມະນຸດ ແລະ ງົບປະມານ, ການປະສານງານຍັງມີໜ້ອຍ, ຂາດຂໍ້ມູນທີ່ເຊື່ອຖືໄດ້ໂດຍສະເພາະສະຖິຕິແຍກເພດຍິງ-ຊາຍ ແລະ ຂໍ້ມູນທີ່ກ່ຽວຂ້ອງກັບບົດບາດຍິງ-ຊາຍສຳຫຼັບການວາງແຜນ, ການຂາດການປະສານງານທີ່ມີປະສິດທິພາບລະຫ່ວາງອົງການຈັດຕັ້ງຕ່າງໆຂອງລັດຖະບານ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທີ່ບໍ່ແມ່ນລັດຖະບານເພື່ອເຊື່ອມບົດບາດຍິງ-ຊາຍ ແລະ ຂາດເງື່ອນໄຂຊຸກຍູ້ ແລະ ງົບປະມານ ເພື່ອສະໜັບສະໜູນການເຊື່ອມບົດບາດຍິງ-ຊາຍ.

*ແຜນຍຸດທະສາດແຫ່ງການເຕີບໂຕແລະຫຼຸດຜ່ອນຄວາມທຸກຍາກແຫ່ງຊາດ (NGPES) ໄດ້ເອົາໃຈໃສ່ວຽກງານສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ*

ວຽກງານສົ່ງເສີມບົດບາດຍິງ-ຊາຍແມ່ນເປັນບູລິມະສິດທີ່ຕິດພັນກັບທຸກວຽກງານຢູ່ໃນແຜນ NGPES, ຊຶ່ງແມ່ນແຜນຍຸດທະສາດຂອງ ສປປ ລາວ ເພື່ອລຶບລ້າງຄວາມທຸກຍາກ. ແຜນຍຸດທະສາດດັ່ງກ່າວໄດ້ກຳນົດຈຸດປະສົງ, ເປົ້າໝາຍ ແລະ ນະໂຍບາຍ ແລະ ແຜນໃຊ້ຈ່າຍເພື່ອຢາກບັນລຸເປົ້າໝາຍດັ່ງກ່າວ. ເປົ້າໝາຍຂອງ NGPES ແມ່ນ ກຳນົດຍຸດທະສາດຂອງປະເທດໃຫ້ຫຼຸດພົ້ນອອກຈາກກຸ່ມປະເທດດ້ອຍພັດທະນາ ໃນປີ 2020. ໃນແຜນຍຸດທະສາດແມ່ນແຜນພັດທະນາໃນໄລຍະຍາວເພື່ອພັດທະນາເສດຖະກິດ-ສັງຄົມໃຫ້ຂະຫຍາຍຕົວ, ໝັ້ນຄົງ ແລະ ຮັບປະກັນສະຖຽນລະພາບທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມຂອງຊາດ. ເພື່ອຈະບັນລຸຈຸດປະສົງດັ່ງກ່າວ, ລັດຖະບານໄດ້ ເນັ້ນໜັກບັນດາຍຸດທະສາດ ທີ່ເປັນ ບູລິມະສິດ ດັ່ງຕໍ່ໄປນີ້:

- ຮັກສາລະດັບການຂະຫຍາຍຕົວທາງດ້ານເສດຖະກິດໃນໄລຍະກາງ ແລະ ໄລຍະຍາວໃຫ້ເໝາະສົມກັບລະດັບຂະຫຍາຍຕົວ ແລະ ຄວາມຕ້ອງການຂອງປະຊາກອນ.
- ສົ່ງເສີມການພັດທະນາບຸກຄະລາກອນໂດຍການປັບປຸງວຽກງານສຶກສາ, ໂດຍສະເພາະການສຶກສາຂັ້ນພື້ນຖານໃນທຸກລະດັບ. ປັບປຸງການສຶກສາໃນລະບົບ ແລະ ນອກລະບົບໂຮງຮຽນ ແລະ ວຽກງານຝຶກອົບຮົມວິຊາຊີບ.
- ພັດທະນາພື້ນຖານໂຄງລ່າງ ທາງດ້ານເສດຖະກິດ ແລະ ສັງຄົມໃຫ້ໄດ້ໃນລະດັບແນ່ນອນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການພັດທະນາເສດຖະກິດໃນແຕ່ລະເຂດແຄວ້ນ, ແນໃສ່ຫັນເສດຖະກິດຂອງຊາດ ໃຫ້ເຊື່ອມຕົວເຂົ້າກັບເສດຖະກິດສາກົນ.
- ສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ປະຊາຊົນໃນທົ່ວປະເທດໄດ້ຊົມໃຊ້ໄຟຟ້າຢ່າງທົ່ວເຖິງເພື່ອເຮັດໃຫ້ການພັດທະນາເສດຖະກິດແບບປະສົມປະສານດຳເນີນໄປຢ່າງວ່ອງໄວ.

- ສົ່ງເສີມຂະແໜງອຸດສາຫະກຳທີ່ນຳໃຊ້ແຫຼ່ງຊັບພະຍາກອນທຳມະຊາດພາຍໃນປະເທດ ແລະ ສົ່ງເສີມທຸລະກິດຂະໜາດນ້ອຍ, ຂະໜາດກາງ ແລະການຜະລິດຫັດຖະກຳ.
- ສ້າງ ແລະສົ່ງເສີມຂະແໜງເສດຖະກິດຕ່າງໆ ໂດຍສະເພາະໃນຂົງເຂດເອກະຊົນ ລວມທັງການລົງທຶນໂດຍກົງຂອງຕ່າງປະເທດ ແນໃສ່ສ້າງເງື່ອນໄຂໃນການເຮັດທຸລະກິດ.
- ປັບປຸງລະບຽບການ ແລະ ກົດໝາຍທີ່ມີຢູ່ແລ້ວ.
- ສ້າງເງື່ອນໄຂ ແລະ ວິທີການອັນເໝາະສົມສຳຫຼັບການສົ່ງເສີມສະຖາບັນການເງິນ ແລະ ພັດທະນາຕະຫຼາດ ແລະ ສ້າງເງື່ອນໄຂໃນການເຮັດທຸລະກິດ.
- ສົ່ງເສີມການຮ່ວມມືທາງດ້ານເສດຖະກິດກັບທຸກພາກສ່ວນ ແລະ ທຸກປະເທດ.

*ການສົ່ງເສີມຄວາມສະເໝີພາບບົດບາດ ຍິງ-ຊາຍ ແມ່ນຈຸດໃຈກາງຂອງການລຶບລ້າງຄວາມທຸກຍາກ*

ລັດຖະບານຮັບຮູ້ບົດບາດຂອງແມ່ຍິງລາວໃນການຜະລິດທາງດ້ານເສດຖະກິດ ແລະ ກະສິກຳເພື່ອຮັບປະກັນດ້ານສະບຽງອາຫານ ແລະ ການຮັກສາສຸຂະພາບໃນຄອບຄົວ. ຖ້າແມ່ຍິງ, ໂດຍສະເພາະແມ່ຍິງຊົນເຜົ່າທີ່ທຸກຍາກບໍ່ເຂົ້າຮ່ວມກິດຈະກຳການພັດທະນາຈະເຮັດໃຫ້ເປົ້າໝາຍຫຼຸດຜ່ອນຄວາມທຸກຍາກບໍ່ໄດ້ຮັບຜົນສຳເລັດ ແລະ ບໍ່ສາມາດປັບປຸງການສຶກສາ, ສາທາລະນະສຸກ ແລະ ນະໂຍບາຍດ້ານປະຊາກອນ. ດ້ວຍເຫດນັ້ນ, ລັດຖະບານຈຶ່ງໄດ້ສ້າງແຜນຍຸດທະສາດໂດຍລະບຸມາດຕະການ ແລະ ຂັ້ນຕອນອັນລະອຽດເພື່ອສົ່ງເສີມການມີສ່ວນຮ່ວມຂອງແມ່ຍິງໃນທຸກຂະແໜງເສດຖະກິດ, ໂດຍການປັບປຸງການເຂົ້າເຖິງການບໍລິການພື້ນຖານຕ່າງໆ (ການສຶກສາ, ສາທາລະນະສຸກ ແລະ ອື່ນໆ), ຊັບພະຍາກອນ (ຂະຫຍາຍການບໍລິການ, ສິນເຊື່ອ ແລະ ອື່ນໆ), ທັງນີ້ກໍ່ເພື່ອເຮັດໃຫ້ເຂົາເຈົ້າມີສ່ວນຮ່ວມໃນການຕັດສິນບັນຫາ ແລະ ພິຈາລະນາເຖິງຄວາມຕ້ອງການຂອງເຂົາເຈົ້າໃນເວລາສ້າງແຜນຍຸດທະສາດແຫ່ງຊາດ.

ຢູ່ໃນແຜນງານ NGPES, ລັດຖະບານໄດ້ສຸມໃສ່ວຽກງານສົ່ງເສີມບົດບາດ ຍິງ-ຊາຍໃນຂະແໜງກະສິກຳ, ສຶກສາ, ສາທາລະນະສຸກ, ພົນລະເມືອງ, ກໍ່ສ້າງໂຄງລ່າງພື້ນຖານ, ຄົມມະນາຄົມ, ສະພາບແວດລ້ອມ ແລະ ຂະແໜງການອື່ນໆ. ໄດ້ສ້າງຂໍ້ແນະນຳ ແລະ ແຜນປະຕິບັດງານລະດັບຊາດເພື່ອ ເຊື່ອມທັດສະນະບົດບາດຍິງ-ຊາຍ. ໂດຍການຊີ້ນຳ ຂອງຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ບັນດາກະຊວງຕ່າງໆ, ອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງມະຫາຊົນຕ້ອງມີແຜນການໃນການເຊື່ອມບົດບາດຍິງ-ຊາຍດັ່ງລຸ່ມນີ້:

## ກ . ກະສິກຳ

ຢູ່ໃນຂະແໜງການກະສິກຳ, ຈະຕ້ອງໄດ້ເອົາໃຈໃສ່ປະເດັນບົດບາດຍິງ-ຊາຍລຸ່ມນີ້:

- ຜະລິດຂໍ້ມູນກ່ຽວກັບບົດບາດ ຍິງ-ຊາຍ ແລະ ການປະເມີນຄວາມຕ້ອງການ.
- ບັນຈຸແມ່ຍິງເຂົ້າໃນກິດຈະກຳຕ່າງໆຂອງໂຄງການ.
- ປັບປຸງວຽກງານຝຶກອົບຮົມ ແລະ ວຽກງານສົ່ງເສີມພາກສະໜາມທີ່ເອົາໃຈໃສ່ບົດບາດຍິງ-ຊາຍ.

- ນຳໃຊ້ຕົວຊີ້ບອກດ້ານບົດບາດຍິງ-ຊາຍ ເພື່ອຕິດຕາມໂຄງການຕ່າງໆ.
- ນຳໃຊ້ມາດຕະການທີ່ເໝາະສົມໃນການກໍ່ສ້າງພະນັກງານຢູ່ຂັ້ນເມືອງ ແລະ ຂັ້ນແຂວງ ລວມທັງອາສາສະໝັກຕ່າງໆ.
- ສ້າງຕັ້ງຈຸດປະສານງານບົດບາດ ຍິງ-ຊາຍ ຢູ່ຂັ້ນບ້ານ ເພື່ອສົ່ງເສີມວຽກງານຕົວຈິງທາງດ້ານກະສິກຳໃຫ້ດີຂຶ້ນ.
- ເອົາໃຈໃສ່ສິດທິດ້ານຕ່າງໆຂອງແມ່ຍິງ ເປັນຕົ້ນການແບ່ງປັນທີ່ດິນ , ການອອກຊື່ໃນໃບຕາດິນ ແລະ ການແກ້ໄຂຂໍ້ຂັດແຍ້ງຕ່າງໆກ່ຽວກັບທີ່ດິນ.
- ຊ່ວຍເຫຼືອໃຫ້ແມ່ຍິງໃນການເຂົ້າເຖິງກອງທຶນສິນເຊື່ອ ແລະ ກອງທຶນປະຫຍັດໃນຊົນນະບົດ.

## ຂ . ການສຶກສາ

ຢູ່ໃນຂະແໜງການສຶກສາ, ຈະຕ້ອງໄດ້ເອົາໃຈໃສ່ປະເດັນບົດບາດຍິງ-ຊາຍລຸ່ມນີ້ :

- ຫລຸດຊ່ອງຫ່ວາງອັດຕາການຮູ້ໜັງສື, ການເຂົ້າໂຮງຮຽນ ແລະ ອັດຕາການຮຽນຈົບຂອງຍິງ-ຊາຍ, ໂດຍສະເພາະຢູ່ໃນກຸ່ມຊົນເຜົ່າຕ່າງໆ.
- ຍົກລະດັບຄຸນນະພາບການສຶກສາຂອງເດັກຍິງໃນຊັ້ນປະຖົມ ແລະ ມັດທະຍົມໂດຍສະເພາະເດັກຍິງຊົນເຜົ່າຜູ້ທຸກຍາກ.
- ຮັບປະກັນການເຂົ້າຮຽນດ້ານເຕັກນິກ ແລະວິຊາຊີບຂອງແມ່ຍິງ, ໂດຍສະເພາະ ແມ່ຍິງຊົນເຜົ່າທີ່ທຸກຍາກ
- ປັບປຸງການສຶກສານອກລະບົບໃຫ້ມີຜົນປະໂຫຍດສູງສຸດສຳຫຼັບແມ່ຍິງ. ສະຫລຸບຖອດຖອນບົດຮຽນໃນການຈັດຕັ້ງປະຕິບັດບັນດາໂຄງການຜ່ານມາ ແລະ ໂຄງການທີ່ກຳລັງປະຕິບັດເພື່ອເພີ່ມຈຳນວນນາຍຄູທີ່ເປັນຊົນເຜົ່າ. ປັບປຸງອຸປະກອນຕ່າງໆສຳລັບໂຮງຮຽນປະຖົມ ແລະການສະໜອງສິ່ງກະຕຸກຊຸກຍູ້ ເພື່ອໃຫ້ເດັກຍິງໄດ້ເຂົ້າໂຮງຮຽນ, ການຊຸກຍູ້ໃຫ້ບັນດາແຂວງ ແລະ ເມືອງພັດທະນາອຸປະກອນການຮຽນແບບທ້ອງຖິ່ນທີ່ເໝາະສົມ ເພື່ອເພີ່ມເຕີມໃຫ້ແກ່ຫຼັກສູດ; ພ້ອມທັງຈັດວາງຕາຕະລາງການຮຽນຊັ້ນປະຖົມ ແລະ ຊັ້ນມັດທະຍົມໃຫ້ເໝາະສົມ ເພື່ອຊຸກຍູ້ການເຂົ້າຮຽນຂອງນັກຮຽນທຸກຄົນ. ນອກນັ້ນຕ້ອງໄດ້ປັບປຸງວິທີການຮຽນຕ່າງໆ, ເປັນຕົ້ນ ການສຶກສາທາງໄກ ແລະ ຫຼັກສູດແບບເລັ່ງລັດ ເພື່ອໃຫ້ນັກຮຽນ ( ໂດຍສະເພາະແມ່ຍິງ ) ເຂົ້າໄປຮຽນຢູ່ ໂຮງຮຽນເຕັກນິກ ແລະ ວິຊາຊີບຕ່າງໆ.

## ຄ . ສາທາລະນະສຸກ.

ໃນຂະແໜງການສາທາລະນະສຸກ, ຈະຕ້ອງໄດ້ເອົາໃຈໃສ່ປະເດັນບົດບາດຍິງ-ຊາຍລຸ່ມນີ້:

- ຫຼຸດຜ່ອນອັດຕາການຕາຍຂອງແມ່ ແລະ ເດັກ.
- ເຮັດໃຫ້ແມ່ຍິງໄດ້ເຂົ້າເຖິງການບໍລິການດ້ານການຮັກສາສຸຂະພາບຂັ້ນຕົ້ນເພີ່ມຂຶ້ນ,ໂດຍສະເພາະການບໍລິການທາງດ້ານສຸຂະພາບຈະເລີນພັນ.

- ເຮັດໃຫ້ແມ່ຍິງມີສ່ວນຮ່ວມໃນໂຄງການດ້ານສາທາລະນະສຸກ, ໂດຍສະເພາະ ແມ່ຍິງທີ່ທຸກຍາກຢູ່ຂັ້ນບ້ານ ແລະ ຂັ້ນເມືອງ ແນໃສ່ຮັບປະກັນໃນການຈັດຕັ້ງ ປະຕິບັດແຜນງານສັກຢາກັນພະຍາດ, ໂຄງການນ້ຳສະອາດ ແລະ ການຮັກສາສຸຂະພາບຂອງຊຸມຊົນໃຫ້ມີຜົນສຳເລັດ .
- ເອົາໃຈໃສ່ປະເດັນບົດບາດ ຍິງ-ຊາຍໃນວຽກງານການຮັກສາສຸຂະພາບຂັ້ນຕົ້ນ, ການຝຶກອົບຮົມການບໍລິການທາງດ້ານສຸຂະພາບໃຫ້ແກ່ແມ່ຍິງຊົນເຜົ່າ. ການສ້າງຕັ້ງຈຸດປະສານງານບົດບາດຍິງ-ຊາຍ ຢູ່ສູນປິ່ນປົວສຸຂະພາບຂັ້ນຕົ້ນຢູ່ ຂັ້ນເມືອງ ແລະ ແຂວງ, ສ້າງຕັ້ງຄະນະກຳມະການຮັກສາສຸຂະພາບປະຈຳບ້ານ ໂດຍໃຫ້ມີຕົວແທນເພດຍິງ-ຊາຍ ແລະ ຊົນເຜົ່າເຂົ້າຮ່ວມເທົ່າທຽມກັນຢູ່ທຸກລະດັບ. ຄວນສະໜອງການຝຶກອົບຮົມວິຊາສະເພາະໃຫ້ແກ່ພະນັກງານ ແລະ ອາສາສະໝັກການແພດ. ພ້ອມທັງຕອບສະໜອງສິ່ງອຳນວຍຄວາມສະດວກໃຫ້ພະນັກງານແພດທີ່ໄປປະຈຳຢູ່ຕາມບ້ານ ແລະ ເມືອງທີ່ຢູ່ເຂດຫ່າງໄກ.
- ນຳໃຊ້ວິທະຍຸ ແລະ ຕາໜ່າງຂ່າວສານ ເພື່ອສົ່ງເສີມວຽກງານສຸຂະສຶກສາກ່ຽວກັບການເກີດລູກຫ່າງ ແລະ ການປ້ອງກັນພະຍາດ STD/ HIV/AIDS ໃຫ້ແກ່ຜູ້ຊາຍແລະຊາວໜຸ່ມ.
- ຂະຫຍາຍການເຂົ້າເຖິງການບໍລິການດ້ານສຸຂະພາບຈະເລີນພັນ, ໂດຍສະເພາະໃຫ້ແກ່ແມ່ຍິງຊົນເຜົ່າ.

## ໆ . ການຄົມມະນາຄົມ

ໃນຂະແໜງຄົມມະນາຄົມຕ້ອງໄດ້ເອົາໃຈໃສ່ບາງປະເດັນບົດບາດ ຍິງ-ຊາຍດັ່ງນີ້:

- ເອົາໃຈໃສ່ເຖິງຄວາມຕ້ອງການຂອງແມ່ຍິງໃນເວລາວາງແຜນ ແລະ ເວລາກໍ່ສ້າງທາງຕະຫຼອດຮອດການຂົນສົ່ງຕ່າງໆທີ່ພົວພັນເຖິງການກໍ່ສ້າງພື້ນຖານໂຄງລ່າງ, ຊຶ່ງໄລຍະຜ່ານມາ ແມ່ຍິງຜູ້ທຸກຍາກໄດ້ຮັບຜົນກະທົບຈາກສັງຄົມ ແລະຄວາມ ກົດດັນຂອງສະພາບແວດລ້ອມ.
- ປຶກສາຫາລືກັບຊຸມຊົນຂັ້ນບ້ານ ລວມທັງແມ່ຍິງໃນການອອກແບບໂຄງການກໍ່ສ້າງພື້ນຖານໂຄງລ່າງ ແລະ ການຂົນສົ່ງຕ່າງໆ.
- ວິໄຈກ່ຽວກັບການໄດ້ຮັບຜົນປະໂຫຍດທັງຍິງ ແລະ ຊາຍ ຕະຫລອດຮອດຜົນກະທົບຂອງການກໍ່ສ້າງເສັ້ນທາງໃໝ່ ແລະ ໂຄງການກໍ່ສ້າງພື້ນຖານໂຄງລ່າງ ແລະ ອື່ນໆ.
- ຮັບປະກັນວ່າຊຸມຊົນໃນເຂດຊົນນະບົດໄດ້ຮັບຜົນປະໂຫຍດຈາກໂຄງການກໍ່ສ້າງເສັ້ນທາງ ແລະໂຄງການກໍ່ສ້າງພື້ນຖານໂຄງລ່າງຕ່າງໆ.
- ເກັບກຳຂໍ້ມູນບົດບາດຍິງ-ຊາຍເພື່ອຕິດຕາມຜົນກະທົບຈາກບັນດາໂຄງການເຫຼົ່ານີ້ ແລະ ຮັບປະກັນໃຫ້ມີຕົວແທນແມ່ຍິງຢູ່ໃນກອງທຶນປັບປຸງເສັ້ນທາງຂອງຊຸມຊົນ.

*ການຈັດຕັ້ງປະຕິບັດ ເປົ້າໝາຍສະຫັດສະຫັວດດ້ານການພັດທະນາ ( MDG ) ໃນ ສປປ ລາວແມ່ນໄດ້ຮັບຜົນສຳເລັດສູງ, ແຕ່ຕ້ອງໄດ້ໃຊ້ເວລາຍາວນານເພື່ອສືບຕໍ່ວຽກງານດັ່ງກ່າວ.*

ສປປ ລາວ ມີຊັບພະຍາກອນເພື່ອຫລຸດຜ່ອນຄວາມທຸກຍາກ. ບົດລາຍງານການພັດທະນາຊັບພະຍາກອນມະນຸດຫວ່າງມໍ່ໆນີ້ ໄດ້ຍົກໃຫ້ເຫັນວ່າດັດສະນີໝາຍການພັດທະນາຊັບພະຍາກອນມະນຸດໄດ້ປັບປຸງຂຶ້ນໃນທົດສະຫວັດຜ່ານມາຈາກລະດັບຕໍ່າມາຢູ່ໃນລະດັບກາງ, ຊຶ່ງການພັດທະນາດັ່ງກ່າວສະແດງເຖິງຄວາມກ້າວໜ້າໃນການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະຫວັດດ້ານການພັດທະນາ. ດັດສະນີໝາຍໄດ້ຍົກໃຫ້ເຫັນທ່າແຮງທີ່ເພີ່ມຂຶ້ນ ນັບແຕ່ປີ 1993 ໃນເວລານັ້ນລາວຢູ່ໃນລະດັບທີ 141 ໃນຈຳນວນ 173 ປະເທດ. ປີ 2000 ໄດ້ຖືກຈັດຢູ່ໃນລະດັບທີ 140 ໃນຈຳນວນ 174 ປະເທດ ແລະ ປີ 2003 ຢູ່ ໃນລະດັບທີ135 ໃນຈຳນວນ 175 ປະເທດ. ແຕ່ເຖິງຢ່າງໃດກໍຕາມ ສປປ ລາວ ກໍຍັງຫຼ້າຫຼັງກ່ອນປະເທດໄທ (ລະດັບທີ 74 ), ຈີນ (ລະດັບທີ 104 ) , ຫວຽດນາມ (ລະດັບທີ 109 ) , ກຳປູເຈຍ ( ລະດັບທີ 130 ) ແລະ ພະມ້າ ( ລະດັບທີ 131 ).

ສປປ ລາວ ໄດ້ບັນລຸຜົນສຳເລັດໃນການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະຫວັດ ດ້ານການພັດທະນາ (ເບິ່ງ Box 2). ອັດຕາການເຂົ້າຮຽນສຸດທິຊັ້ນປະຖົມຢູ່ທົ່ວໂລກເພີ່ມຂຶ້ນ 20% ໃນຊ່ວງທົດສະວັດທີ່ຜ່ານມາ. ອັດຕາການຕາຍຂອງເດັກອາຍຸຕໍ່າກ່ວາ 5 ປີ ແມ່ນ 100 ຄົນຕໍ່ເດັກເກີດມີຊີວິດ1000 ຄົນ ໃນ ປີ 2000 ທຽບໃສ່ປີ 1990 ແມ່ນ 163 ຄົນ ຕໍ່ເດັກເກີດມີຊີວິດ 1000 ຄົນ, ຊຶ່ງແມ່ນຜົນສຳເລັດໃນໄລຍະຜ່ານມາ. ປີ 1990 ປະເທດລາວໄດ້ຈັດຢູ່ອັນດັບທີ 23 ໃນບັນດາອາຊີຕາເວັນອອກ ແລະ ປາຊີຟິກ ( EAP ), ຊຶ່ງປະຈຸບັນມັນໄດ້ລື່ນປະເທດພະມ້າ ແລະ ກຳປູເຈຍ. ຈຳນວນສ່ວນຮ້ອຍຂອງພົນລະເມືອງທີ່ຂາດສານອາຫານໄດ້ຫຼຸດລົງຈາກ 30 % ມາເປັນ 25 % ( ຕາມເປົ້າໝາຍຂອງ MDG ແມ່ນໃຫ້ເຫຼືອພຽງ 15 % ໃນປີ 2015 ) ແລະ ຈຳນວນແມ່ຍິງ ເປັນສະມາຊິກສະພາແຫ່ງຊາດເພີ່ມຂຶ້ນ ( ຈາກ 6 % ໃນປີ 1990 ມາເປັນ 23 % ໃນປີ 2003 ).

ເຖິງວ່າມີຜົນສຳເລັດຫຼາຍໆດ້ານກໍຕາມ ແຕ່ປະເທດກໍຍັງປະເຊີນໜ້າກັບສິ່ງທ້າທາຍໃນການລົບລ້າງຄວາມບໍ່ສະເໝີພາບດ້ານບົດບາດຍິງ-ຊາຍ. ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍໃນປະເທດເຮົາຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ ແລະ ຖືກຈັດຢູ່ໃນອັນດັບທ້າຍໆ ຖ້າທຽບໃສ່ບັນດາປະເທດທີ່ຢູ່ຂົງເຂດອາຊີຕາເວັນອອກ (ຈັດໃນອັນດັບທີ 16 ໃນຈຳນວນ 28 ປະເທດທີ່ມີຂໍ້ມູນ ), ແລະ ຍັງໄດ້ຈັດຢູ່ໃນກຸ່ມປະເທດທີ່ຈະຕ້ອງຖືເອົາວຽກງານສົ່ງເສີມບົດບາດຍິງ-ຊາຍເປັນບູລິມະສິດເພື່ອຢາກບັນລຸເປົ້າໝາຍດັ່ງກ່າວ.

**BOX 2: ການຈັດຕັ້ງປະຕິບັດ MDG ໃນ ສປປ ລາວ .**

**ເປົ້າໝາຍ 1: ລຶບລ້າງຄວາມທຸກຍາກ ແລະໄພອຶດຫິວ.**

ປະມານ 39 ສ່ວນຮ້ອຍ (1,9 ລ້ານຄົນ ) ຂອງຈຳນວນພົນລະເມືອງທັງໝົດ 5,6 ລ້ານຄົນ ດຳລົງຊີວິດຢູ່ໃນສະພາບຕ່ຳກ່ວາລະດັບເສັ້ນຄວາມທຸກຍາກແຫ່ງຊາດ ( ຂໍ້ມູນປີ 1997 ) , ສ່ວນຫຼາຍແມ່ນ ຢູ່ໃນກຸ່ມຊົນເຜົ່າ. ເປົ້າໝາຍທີ 1 ແມ່ນເພື່ອຫຼຸດຜ່ອນຈຳນວນປະຊາຊົນຜູ້ທຸກຍາກໃຫ້ຢູ່ໃນລະດັບ 24 % ພາຍໃນປີ 2015. ເຖິງວ່າໄລຍະຜ່ານມາເສດຖະກິດຂອງ ສປປ ລາວ ໄດ້ເຕີບໂຕ ແລະ ປະສົບຄວາມສຳເລັດກໍ່ຕາມ, ແຕ່ບັນຫາຄວາມບໍ່ສະເໝີພາບຍັງກໍ່ໃຫ້ເກີດມີຄວາມທຸກຍາກ. ມີບາງກໍລະນີຄວາມທຸກຍາກກໍ່ຍັງແຜ່ຫລາຍ ແລະ ການຫລຸດໂຕນກັນຂອງຄົນໃນສັງຄົມເພີ່ມຂຶ້ນ. ໃນຊຸມປີ 1997-1999 ໄດ້ຄາດຄະເນວ່າມີປະຊາຊົນລາວ 28% ທີ່ໄດ້ຮັບສານອາຫານຕ່ຳ, ຊຶ່ງບໍ່ສາມາດຕອບສະໜອງພະລັງງານທີ່ຕ້ອງການໃນແຕ່ລະວັນໄດ້ (FAO, 2001). ປະຊາຊົນທີ່ອາໃສຢູ່ທາງພາກເໜືອປະສົບບັນຫາຂາດແຄນສະບຽງອາຫານບາງລະດູການ ແລະ ບໍ່ມີຄວາມປອດໄພດ້ານສະບຽງອາຫານອັນເນື່ອງມາຈາກໄພນ້ຳຖ້ວມ.

**ເປົ້າໝາຍ 2: ໃຫ້ທຸກຄົນໄດ້ຮັບການສຶກສາຢ່າງທົ່ວເຖິງ.**

ເຖິງວ່າມີຜົນຄືບໜ້າທາງດ້ານປະລິມານ ແລະ ຄຸນນະພາບ ໃນຂະແໜງສຶກສາໃນຊຸມປີຜ່ານມາ, ແຕ່ເດັກນ້ອຍຈຳນວນຫຼາຍໂດຍສະເພາະເດັກຍິງ ແລະ ເດັກນ້ອຍຊົນເຜົ່າຢູ່ເຂດຫ່າງໄກສອກຫຼີກ ຍັງບໍ່ມີໂອກາດໄດ້ຮັບການສຶກສາຢ່າງເທົ່າທຽມກັນ. ການເຂົ້າເຖິງການສຶກສາຂັ້ນມັດທະຍົມ ແລະ ວິຊາຊີບຍັງຈຳກັດ ແລະ ປະຊາຊົນຈຳນວນຫຼາຍຍັງກືກໜັງສື. ເປົ້າໝາຍທີ 2 ແມ່ນເພື່ອຮັບປະກັນວ່າພາຍໃນປີ 2015 ເດັກນ້ອຍທັງຍິງ ແລະ ຊາຍ ທີ່ຢູ່ໃນໄວເຂົ້າຮຽນໃນຊັ້ນປະຖົມໄດ້ເຂົ້າໂຮງຮຽນຢ່າງທົ່ວເຖິງກັນ. ນອກນັ້ນຍັງຕ້ອງໄດ້ສຸມທຸກຄວາມພະຍາຍາມເພື່ອປັບປຸງທາງດ້ານຄຸນນະພາບ ແລະປະລິມານຂອງອຸປະກອນການສຶກສາ, ລວມທັງປັບປຸງຄຸນນະພາບຂອງຄູອາຈານ .

**ເປົ້າໝາຍ 3: ສົ່ງເສີມບົດບາດຍິງ-ຊາຍ .**

ເວົ້າລວມແມ່ຍິງຢູ່ ສປປ ລາວ ຍັງມີຖານະທາງສັງຄົມ ແລະ ມາດຕະຖານການດຳລົງຊີວິດຕ່ຳກ່ວາເພດຊາຍ, ໂດຍສະເພາະຢູ່ເຂດຊົນນະບົດ ແລະ ເຂດຊົນເຜົ່າ. ແມ່ຍິງ ແລະ ເດັກຍິງຍັງໄດ້ຮັບໂອກາດດ້ານການສຶກສາໜ້ອຍກ່ວາເພດຊາຍ. ມີຈຳນວນເດັກຍິງໜ້ອຍກ່ວາເດັກຊາຍທີ່ໄດ້ເຂົ້າໂຮງຮຽນ ແລະອັດຕາສ່ວນແມ່ນຫຼຸດລົງໃນຊັ້ນຮຽນທີ່ສູງຂຶ້ນ. ເປົ້າໝາຍທີ 3 ແມ່ນຮຽກຮ້ອງໃຫ້ທຸກປະເທດຕ້ອງຮັບປະກັນວ່າເດັກຍິງສາມາດເຂົ້າເຖິງການສຶກສາໃນລະດັບເທົ່າທຽມກັບເພດຊາຍພາຍໃນປີ 2015 ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ.

**ເປົ້າໝາຍ 4: ຫຼຸດຜ່ອນອັດຕາການຕາຍຂອງເດັກ.**

ໃນປີ 1999 ອັດຕາການຕາຍຂອງເດັກນ້ອຍອາຍຸຕ່ຳກ່ວາ 5 ປີ ຢູ່ ສປປ ລາວ ແມ່ນມີເຖິງ 106 ຄົນ ຕໍ່ເດັກເກີດມີຊີວິດ 1000 ຄົນ. ເປົ້າໝາຍທີ 4 ແມ່ນເພື່ອຫຼຸດຜ່ອນທ່າອ່ຽງການຕາຍຂອງເດັກ ດັ່ງກ່າວລົງໃຫ້ຍັງເຫຼືອພຽງແຕ່ 55 ຄົນ ຕໍ່ເດັກ

ເກີດມີຊີວິດ 1000 ຄົນ ພາຍໃນປີ 2015. ເປົ້າໝາຍນີ້ ແມ່ນຕິດພັນກັບການຕໍ່ສູ້ຕ້ານຄວາມທຸກຍາກ ເພາະວ່າປະຊາຊົນຜູ້ທຸກຍາກມີໂອກາດໜ້ອຍທີ່ສຸດ ທີ່ຈະໄດ້ຮັບການບໍລິການປິ່ນປົວສຸຂະພາບ, ທັງນີ້ກໍ່ແນໃສ່ປົກປ້ອງເດັກນ້ອຍໃຫ້ມີຊີວິດຢູ່ລອດ. ໃນປະຈຸບັນ ມີພຽງແຕ່ເຄິ່ງໜຶ່ງຂອງປະຊາຊົນເຂົ້າເຖິງນ້ຳດື່ມທີ່ສະອາດ ແລະ ປອດໄພ ແລະ ຈຳນວນບໍ່ເຖິງເຄິ່ງໜຶ່ງສາມາດເຂົ້າເຖິງສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ. ດັ່ງນັ້ນ ຈຶ່ງຮຽກຮ້ອງໃຫ້ມີຍຸດທະສາດອັນເໝາະສົມເພື່ອຮັບປະກັນວ່າເປົ້າໝາຍ MDG ດັ່ງກ່າວໄດ້ຮັບຜົນສຳເລັດສາມາດເຮັດໃຫ້ປະຊາຊົນຢູ່ເຂດຊົນນະບົດໄດ້ເຂົ້າເຖິງການບໍລິການ ແລະ ຕ້ອງຮັບປະກັນວ່າ ບັນຫາຊົນເຜົ່າ ແລະ ຄວາມແຕກຕ່າງດ້ານພາສາໄດ້ຮັບການເອົາໃຈໃສ່.

**ເປົ້າໝາຍ 5: ປັບປຸງສຸຂະພາບຂອງແມ່.**

ເຖິງວ່າມີການປັບປຸງຕະຫຼອດໄລຍະ 2 ທົດສະວັດຜ່ານມາ, ແມ່ຍິງຍັງບໍ່ທັນໄດ້ຮັບການບໍລິການດ້ານສຸຂະພາບຈະເລີນພັນຢ່າງພຽງພໍ, ຊຶ່ງອັດຕາການຕາຍຂອງແມ່ມີສູງເຖິງ 530 ຄົນຕໍ່ເດັກເກີດມີຊີວິດ 100.000 ຄົນ ໃນປີ 2000. ເປົ້າໝາຍ 5 ມີຈຸດປະສົງເພື່ອຫລຸດຜ່ອນອັດຕາການຕາຍຂອງແມ່ໃຫ້ເຫລືອພຽງແຕ່ 185 ຄົນຕໍ່ເດັກເກີດມີຊີວິດ 100.000 ຄົນ ໃນປີ 2015. ປະຈຸບັນມີຈຳນວນເຖິງ 89 % ຂອງແມ່ຍິງຢູ່ເຂດຊົນນະບົດເກີດລູກ ໂດຍປາສະຈາກການຊ່ວຍເຫຼືອຂອງແພດທີ່ໄດ້ຮັບການຝຶກອົບຮົມ ແລະ ສ່ວນຫຼາຍແມ່ນອາໄສຢູ່ຫ່າງຈາກສະຖານທີ່ບໍລິການສຸຂະພາບ. ການຕາຍຂອງແມ່ສ່ວນຫຼາຍແມ່ນມາຈາກສາເຫດທຳມະດາ ແລະ ສາມາດໄດ້ຮັບການແກ້ໄຂໄດ້ຢ່າງງ່າຍດາຍ ຖ້າໄດ້ຮັບການເອົາໃຈໃສ່ເບິ່ງແຍງ. ດັ່ງນັ້ນມັນຮຽກຮ້ອງໃຫ້ຕ້ອງເພີ່ມການລົງທຶນ ໂດຍສະເພາະ ເພື່ອປັບປຸງຄຸນນະພາບຂອງການບໍລິການ ແລະ ຄຸ້ມຄອງລະບົບສາທາລະນະສຸກ.

**ເປົ້າໝາຍ 6: ຕ້ານກັບເຊື້ອພະຍາດ HIV/AIDS, ມາລາເລຍ ແລະ ເຊື້ອພະຍາດອື່ນໆ.**

ຢູ່ ສປປ ລາວ ການປ້ອງກັນພະຍາດ HIV/AIDS ຍັງຢູ່ໃນລະດັບຕ່ຳ, ຊຶ່ງການຄາດຄະເນອັດຕາການຕິດເຊື້ອຂອງຜູ້ໃຫ່ຍເທົ່າກັບ 0,06% ເຖິງຢ່າງໃດກໍຕາມ ຍັງມີບັນດາປັດໃຈທີ່ພາໃຫ້ປະເທດມີຄວາມສ່ຽງຕໍ່ຜົນກະທົບ ຊຶ່ງລວມທັງທີ່ຕັ້ງຢູ່ໃກ້ກັບບັນດາປະເທດ ທີ່ມີອາການຕິດເຊື້ອ HIV/AIDS ສູງ, ມີອັດຕາການນຳໃຊ້ຢາເສບຕິດທີ່ສູງຂຶ້ນ, ຂາດການກວດກາຫາເຊື້ອ HIV/AIDS ຕາມມາດຕະຖານສາກົນ ແລະ ລະດັບການໂຄສະນາໃຫ້ການສຸຂະສຶກສາກ່ຽວກັບສາເຫດ ແລະ ວິທີປ້ອງກັນພະຍາດ HIV/AIDS ຍັງຢູ່ໃນລະດັບຕ່ຳ. ຍຸດທະສາດແຫ່ງຊາດ ແລະ ແຜນດຳເນີນງານເພື່ອຕ້ານກັບພະຍາດ HIV/AIDS ຂອງລັດຖະບານສຸມໃສ່ເພື່ອໃຫ້ການສະໜັບສະໜູນແກ່ທຸກຂົງເຂດວຽກງານ ເພື່ອແນໃສ່ຮັບປະກັນຮັກສາລະດັບຂອງການຕິດເຊື້ອໃນລະດັບຕ່ຳ. ເຊື້ອພະຍາດຕິດແປດອື່ນໆ ຍັງເປັນໄພຂົ່ມຂູ່ຕໍ່ກັບບູລິມະສິດດ້ານການພັດທະນາ, ລວມທັງມາລາເລຍ ຊຶ່ງໄດ້ກາຍເປັນໜຶ່ງໃນສາມສາເຫດຕົ້ນຕໍທີ່ພາໃຫ້ເກີດການເຈັບເປັນ, ການຕາຍ ແລະ ວັນນະໂລກ.

**ເປົ້າໝາຍ 7: ຮັບປະກັນຄວາມຍືນຍົງດ້ານສິ່ງແວດລ້ອມ.**

ເປົ້າໝາຍ ທີ 7 ແນໃສ່ເພື່ອການຈັດຕັ້ງປະຕິບັດບັນດາຫຼັກການພື້ນຖານຂອງການພັດທະນາແບບຍືນຍົງ ແລະ ປົກປັກຮັກສາຊັບພະຍາກອນທຳມະຊາດ. ສປປ ລາວ ມີປ່າໄມ້ອັນອຸດົມຮັ່ງມີ, ມີຄວາມຫຼາກຫຼາຍ ດ້ານຊີວະນາໆພັນ, ຊຶ່ງເປັນແຫຼ່ງ

ຊັບພະຍາກອນທາງເສດຖະກິດອັນສຳຄັນຕໍ່ລວມຍອດຜະລິດຕະພັນພາຍໃນ (GDP) ແລະ ລວມຍອດຜະລິດຕະພັນທີ່ບໍ່ແມ່ນກະສິກຳ. ຈຳນວນຫຼາຍກ່ວາ 60% ຂອງ GDP ແມ່ນໄດ້ມາຈາກຊັບພະຍາກອນທຳມະຊາດ, ຊຶ່ງຜູ້ທຸກຍາກຢູ່ຊົນນະບົດສ່ວນໃຫ່ຍອີງໃສ່ປ່າໄມ້, ເຄື່ອງປ່າຂອງດົງ, ປາ ແລະ ຊັບພະຍາກອນທຳມະຊາດ ເພື່ອເປັນພື້ນຖານໃນການດຳລົງຊີວິດ, ການຖາງປ່າເຮັດໄຮ່, ການຈັດຕັ້ງປະຕິບັດນະໂຍບາຍດ້ານສິ່ງແວດລ້ອມທີ່ຂາດປະສິດທິຜົນ, ບໍ່ມີຄວາມສະເໝີພາບໃນການນຳໃຊ້ທີ່ດິນປູກຝັງທີ່ອຸດົມສົມບູນ ແລະ ການນຳໃຊ້ທີ່ດິນມີຈຳນວນເພີ່ມຫຼາຍຂຶ້ນ ພາໃຫ້ເກີດອັນຕະລາຍຕໍ່ຄວາມຍືນຍົງດ້ານສິ່ງແວດລ້ອມ.

**ເປົ້າໝາຍ 8: ສ້າງຄູ່ຮ່ວມມືແຫ່ງການພັດທະນາທົ່ວໂລກ.**

ເສດຖະກິດຂອງລາວ ຍັງອີງໃສ່ການຊ່ວຍເຫຼືອຈາກຕ່າງປະເທດ (ODA), ບັນດາຜູ້ໃຫ້ທຶນ 2 ຝ່າຍ ແລະ ຫຼາຍຝ່າຍໄດ້ໃຫ້ການຊ່ວຍເຫຼືອເປັນຈຳນວນເກືອບເຖິງ 389,62 ລ້ານໂດລາ ໃນປີ 2001-2002. ປະຈຸບັນແມ່ນມີຄວາມຈຳເປັນຕ້ອງເພີ່ມລາຍຈ່າຍຈາກແຫລ່ງຊັບພະຍາກອນພາຍໃນ ແລະ ການຊ່ວຍເຫຼືອຈາກຕ່າງປະເທດເຂົ້າໃນການປັບປຸງການບໍລິການທາງສັງຄົມ ແລະ ຄວາມໝັ້ນຄົງໃຫ້ແກ່ຊຸມຊົນ, ຄົວເຮືອນ ແລະ ບຸກຄົນ, ພ້ອມກັນນັ້ນ ກໍເປັນການສ້າງທຶນທາງສັງຄົມທີ່ຈຳເປັນສຳລັບການພັດທະນາແຫ່ງຊາດ. ອີງໃສ່ການຂາດແຄນງົບປະມານ ພາຍໃນປະເທດ, ລັດຖະບານຕ້ອງໄດ້ສືບຕໍ່ຍາດແຍ່ງການຊ່ວຍເຫຼືອຈາກສາກົນ ເພື່ອສາມາດບັນລຸເປົ້າໝາຍ MDG ທັງໝົດ.

## *ໂດຍທົ່ວໄປແລ້ວ, ຜູ້ໃຫ້ທຶນ 2 ຝ່າຍ ແລະ ຫຼາຍຝ່າຍ ຢູ່ ສປປ ລາວ ມີນະໂຍບາຍພາຍໃນຂອງເຂົາເຈົ້າກ່ຽວກັບການເຊື່ອມບົດບາດຍິງ-ຊາຍເຂົ້າໃນກິດຈະກຳພັດທະນາຕ່າງໆ.*

ໂດຍທົ່ວໄປ ຜູ້ໃຫ້ທຶນ 2 ຝ່າຍ ແລະ ຫຼາຍຝ່າຍ ຢູ່ ສປປ ລາວ ມີນະໂຍບາຍພາຍໃນກ່ຽວກັບການເຊື່ອມບົດບາດຍິງ-ຊາຍເຂົ້າໃນກິດຈະກຳພັດທະນາຕ່າງໆ. ສ່ວນຫຼາຍຜູ້ໃຫ້ທຶນຈະຊຸກຍູ້ການຝຶກອົບຮົມໂດຍການໃຫ້ຄວາມຮູ້ກ່ຽວກັບບົດບາດຍິງ-ຊາຍ, ລວມທັງການສ້າງສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍ ເພື່ອການພັດທະນາ (ໂຄງການ UNDP). ອົງການຈັດຕັ້ງສາກົນທີ່ບໍ່ສັງກັດໃນລັດຖະບານ ກໍມີບົດບາດຄ້າຍຄືກັນໃນການເຊື່ອມບົດບາດຍິງ-ຊາຍເຂົ້າໃນບັນດາໂຄງການ ຫຼື ກິດຈະກຳຕ່າງໆ ເພື່ອຕອບສະໜອງຄວາມຕ້ອງການຂອງແມ່ຍິງ, ເປັນຕົ້ນ ກິດຈະກຳຫາລາຍໄດ້, (ຊຶ່ງສ່ວນຫຼາຍແມ່ນຄວາມຊຳນານດ້ານຫັດຖະກຳ ແລະ ຕ່ຳຫູກ), ໂຄງການຕ້ານການຄ້າມະນຸດ ແລະ ໂຄງການສຸຂະສຶກສາໃນຊຸມຊົນ. ເນື່ອງຈາກວ່າແມ່ຍິງມີບົດບາດສຳຄັນ ໃນການຮັບປະກັນດ້ານສະບຽງອາຫານແກ່ຄົວເຮືອນ, ດັ່ງນັ້ນ ໂຄງການພັດທະນາຊົນນະບົດຕ່າງໆ ຈຶ່ງໄດ້ສະໜອງການຝຶກອົບຮົມວຽກງານກະສິກຳ ເພື່ອຕອບສະໜອງຄວາມຕ້ອງການຂອງແມ່ຍິງ.

# ບົດທີ 3

## ບົດບາດຍິງ-ຊາຍ, ກະສິກຳ ແລະ ຊັບພະຍາກອນຊົນນະບົດ

### 3.1. ສະພາບລວມ

ສປປ ລາວ ແມ່ນປະເທດທີ່ມີພື້ນຖານການຜະລິດກະສິກຳເປັນຕົ້ນຕໍ, ເຊິ່ງປະຊາຊົນສ່ວນຫລາຍ ແມ່ນເຮັດກະສິກຳເພື່ອການດຳລົງຊີວິດ ແລະ ສ້າງລາຍໄດ້. ແມ່ຍິງ ແລະ ຜູ້ຊາຍໄດ້ໃຊ້ເວລາເກືອບເທົ່າກັນເຂົ້າໃນການຜະລິດກະສິກຳ, ແຕ່ຜູ້ຊາຍໃຊ້ເວລາຫລາຍກວ່າແມ່ຍິງ ເພື່ອເຮັດກິດຈະກຳຫາລາຍໄດ້ (ລວມທັງວຽກກະສິກຳ). ແມ່ຍິງມີບົດບາດສຳຄັນຫລາຍໃນການກະສິກຳ ແລະ ນຳໃຊ້ແຫລ່ງຊັບພະຍາກອນທຳມະຊາດ ແລະ ມີໜ້າທີ່ພື້ນຖານໃນການຮັບປະກັນຄວາມປອດໄພດ້ານສະບຽງອາຫານໃນຄອບຄົວ. ເຂົາເຈົ້າມີບົດບາດໃນການປູກພືດ ແລະ ເກັບກ່ຽວຜະລິດຕະພັນເພື່ອຂາຍຢູ່ຕະຫລາດ (ເຊິ່ງປະກອບສ່ວນໂດຍສະເລ່ຍ ແມ່ນ 40% ຫາ 60% ຂອງລາຍໄດ້ຂອງຄອບຄົວຊົນນະບົດ, ແລະ ອາດມີເຖິງ 80% ໃນຂົງເຂດທີ່ທຸກຍາກຫຼາຍ). ນອກນັ້ນແມ່ຍິງຍັງມີສ່ວນຮ່ວມເພື່ອເຮັດກິດຈະກຳການສ້າງລາຍໄດ້ໂດຍການເຮັດທຸລະກິດຂະໜາດນ້ອຍ ແລະ ຜະລິດຫັດຖະກຳເພື່ອເພີ່ມລາຍໄດ້ໃຫ້ຄອບຄົວ. ເຖິງວ່າແມ່ຍິງມີບົດບາດໃນການປະກອບສ່ວນທາງດ້ານເສດຖະກິດ ເພື່ອຫາລ້ຽງຊີບກໍ່ຕາມ, ແຕ່ເຂົາເຈົ້າຍັງບໍ່ຖືກຍອມຮັບ ແລະ ບໍ່ມີບົດບາດໃນການຕັດສິນບັນຫາໃນວຽກງານຕ່າງໆ ເຊັ່ນວ່າ: ວຽກງານຊົນລະປະທານ ຫລື ການໃຫ້ບໍລິການດ້ານສິນເຊື່ອ ແລະ ອື່ນໆ. ມີພຽງແຕ່ແມ່ຍິງຊົນເຜົ່າລາວ-ໄຕທີ່ໄດ້ຄວບຄຸມງົບປະມານ ແລະ ມີບົດບາດໃນການຕັດສິນໃຈດ້ານການເງິນຂອງຄອບຄົວ.

### 3.2. ວຽກກະສິກຳ ແລະ ກິດຈະກຳສ້າງລາຍໄດ້

***ແມ່ຍິງຫລາຍກວ່າເຄິ່ງໜຶ່ງຂອງການຈ້າງງານໃນວຽກກະສິກຳ, ແມ່ຍິງແລະຜູ້ຊາຍໄດ້ປະກອບສ່ວນໃນການຊອກຫາສະບຽງອາຫານ ແລະ ຫາລາຍໄດ້ຂອງຄົວເຮືອນແຕກຕ່າງກັນ.***

ວຽກງານກະສິກຳ ແມ່ນໝາກຫົວໃຈຂອງເສດຖະກິດລາວ, ຊຶ່ງກວມເອົາ 48% ຂອງລວມຍອດຜະລິດພາຍໃນ(GDP) ແລະ ກວມເອົາ 85% ຂອງກຳລັງແຮງງານທັງໝົດ 2,4 ລ້ານຄົນ (NSC, 2004). ໃນຄວາມເປັນຈິງແລ້ວຄົວເຮືອນສ່ວນໃຫຍ່ໃນ ສປປ ລາວ ອາໃສການຜະລິດກະສິກຳ, ການລ້ຽງສັດ, ການຫາປາ ແລະ ຜະລິດຕະພັນຈາກປ່າໄມ້ເພື່ອດຳລົງຊີວິດ. ຄອບຄົວໃນຊົນນະບົດຈະອີງໃສ່ລາຍໄດ້ຈາກການຜະລິດກະສິກຳເປັນຕົ້ນຕໍ.ນອກນັ້ນໃນໄລຍະສົງ ຄາມແມ່ຍິງຍັງໄດ້ຮັບຜິດຊອບວຽກຜູ້ຊາຍ ເຊັ່ນ: ໄຖນາ. ຊຶ່ງໃນບາງຂົງເຂດການປະຕິບັດດັ່ງກ່າວ ຍັງສືບ ຕໍ່ຈົນເຖິງປະຈຸບັນນີ້.

ໂດຍທົ່ວໄປແລ້ວ ການຜະລິດກະສິກຳໃນລາວແມ່ນຂະໜາດນ້ອຍ, ບໍ່ໄດ້ໃຊ້ເຕັກນິກສູງ ແລະ ເປັນການຜະລິດແບບປະຖົມປະຖານ, ມີຄວາມສ່ຽງໜ້ອຍ ແລະ ໄດ້ຮັບຜົນຜະລິດຕໍ່າ. ຊາວກະສິກອນສ່ວນຫລາຍຍັງຂາດຂໍ້ມູນຂ່າວສານ ແລະ ຄວາມຮູ້ອັນຈຳເປັນເພື່ອປັບປຸງການຜະລິດກະສິກຳ ແລະ ລ້ຽງສັດ. ເຂົ້າແມ່ນພືນລະປູກຕົ້ນຕໍ, ຊຶ່ງມີຫລາຍແນວພັນ ແລະ ນຳໃຊ້ເຕັກນິກໃນການປູກແຕກຕ່າງກັນໃນເຂດເນີນສູງ ແລະ ເຂດທົ່ງພຽງ. ໃນປີ 2002, ປະມານ 50% ຂອງລາຍຮັບກະສິກຳແມ່ນມາຈາກການປູກເຂົ້າ.

ອີງຕາມການສຳຫລວດກ່ຽວກັບການໃຊ້ຈ່າຍ ແລະ ການຊົມໃຊ້ຂອງຄົວເຮືອນ ຄັ້ງທີ 3 ໃນປີ 2002-2003 (LECS 3), ທັງແມ່ຍິງ ແລະ ຜູ້ຊາຍໃຊ້ເວລາໃນການເຮັດກະສິກຳເກືອບເທົ່າກັນ, ໂດຍແມ່ຍິງໃຊ້ 2,3 ຊົ່ວໂມງ ແລະ ຊາຍໃຊ້ 2,5 ຊົ່ວໂມງ. ໂດຍລວມແລ້ວ ຜູ້ຊາຍໃຊ້ເວລາ 5,2 ຊົ່ວໂມງເຂົ້າໃນການສ້າງລາຍຮັບ (IGA) ແລະ ແມ່ຍິງ 4,5 ຊົ່ວໂມງ (ລວມທັງວຽກກະສິກຳ) (ເບິ່ງຕາຕະລາງ 3). ເຖິງຢ່າງໃດກໍ່ຕາມ ຕົວເລກເຫລົ່ານີ້ອາດບໍ່ສາມາດວັດແທກຄຸນຄ່າໃນການສ້າງລາຍໄດ້ ຂອງແມ່ຍິງໄດ້ເຕັມທີ່. ຍົກຕົວຢ່າງ, ຂໍ້ມູນຂອງ LECS 3 ສະແດງໃຫ້ເຫັນວ່າ ແມ່ຍິງໄດ້ໃຊ້ເວລາ 0,5 ຊົ່ວໂມງຕໍ່ມື້ ເຂົ້າໃນການຕຳຫູກ, ການຫຍິບແສ່ວ ແລະ ເຮັດຫັດຖະກຳອື່ນໆທຽບກັບຜູ້ຊາຍ 0,1 ຊົ່ວໂມງ. ວຽກງານຫັດຖະກຳໄດ້ປະກອບສ່ວນສຳຄັນເຂົ້າໃນລາຍຮັບຂອງຄອບຄົວໃນເຂດຊົນນະບົດໄດ້ເປັນຢ່າງດີ. ແມ່ຍິງຍັງໄດ້ໃຊ້ເວລາຫລາຍກວ່າຜູ້ຊາຍໃນການເຮັດທຸລະກິດຂອງຕົວເອງ 0,8 ຊົ່ວໂມງ ສົມທຽບກັບຜູ້ຊາຍ 0,6 ຊົ່ວໂມງ, ຖ້າລວມທັງວຽກຫັດຖະກຳແມ່ຍິງຈະໃຊ້ເວລາເກືອບ 1/3 ຂອງຈຳນວນຊົ່ວໂມງທັງໝົດຂອງເຂົາເຈົ້າໃນການສ້າງລາຍຮັບ. ຜູ້ຊາຍໄດ້ນຳໃຊ້ເວລາປະມານ 17% ຂອງເວລາໃນການເຮັດກິດຈະກຳສ້າງລາຍຮັບເຂົ້າໃນການລ່າເນື້ອ ແລະ ຫາປາ, ຊຶ່ງທຽບກັບແມ່ຍິງແມ່ນ 4%. ແຕ່ວ່າແມ່ຍິງໃຊ້ເວລາປະມານ 11% ຂອງເວລາເຮັດກິດຈະກຳສ້າງລາຍໄດ້ເຂົ້າໃນການຕັກນ້ຳ ແລະ ຫາໄມ້ຟືນ, ຊຶ່ງຜູ້ຊາຍໃຊ້ເວລາພຽງແຕ່ 4% ເຂົ້າໃນການເຮັດວຽກດັ່ງກ່າວ.

**ຕາຕະລາງ 3: ການນຳໃຊ້ເວລາໃນກິດຈະກຳຕົ້ນຕໍແບ່ງຕາມເພດ, ຊົ່ວໂມງ ຕໍ່ ມື້**

| ກິດຈະກຳ | ເພດຊາຍ | ເພດຍິງ | ລວມ |
|---|---|---|---|
| ກິດຈະກຳສ້າງລາຍຮັບ | 5.2 | 4.5 | 4.8 |
| ເຮັດວຽກເປັນລູກຈ້າງ | 0.8 | 0.3 | 0.5 |
| ເຮັດທຸລະກິດຂອງຕົວເອງ | 0.6 | 0.8 | 0.7 |
| ເຮັດວຽກກະສິກຳ | 2.5 | 2.3 | 2.4 |
| ໄປຫາໄມ້ຟືນ/ຕັກນ້ຳ | 0.2 | 0.5 | 0.3 |
| ລ່າເນື້ອ/ຫາປາ | 0.9 | 0.2 | 0.5 |
| ວຽກກໍ່ສ້າງ | 0.1 | 0 | 0.1 |
| ຫັດຖະກຳ | 0.2 | 0.5 | 0.3 |
| ວຽກເຮືອນ | 0.6 | 2.5 | 1.6 |
| ເຂົ້າໂຮງຮຽນ | 1.3 | 0.9 | 1.1 |
| ນອນ, ກິນ, ເວລາພັກຜ່ອນ | 15.4 | 14.8 | 15.1 |
| ເດີນທາງ, ແລະອື່ນໆ | 1.6 | 1.2 | 1.4 |

*ຂໍ້ມູນມາຈາກ: LECS 3*

### *ແມ່ຍິງໄດ້ປະກອບສ່ວນສຳຄັນໃນການຜະລິດເຂົ້າ*

ເຂົ້າ (ເຂົ້າໜຽວ) ແມ່ນອາຫານຫລັກສຳລັບຄົນລາວ. ເນື້ອທີ່ປູກເຂົ້າໜຽວກວມເອົາ 78% ຂອງເນື້ອທີ່ປູກຝັງທັງໝົດ; ປະມານ 1/4 ແມ່ນປູກຢູ່ເຂດໂນນສູງດ້ວຍການຖາງປ່າ-ເຮັດໄຮ່ (ກະຊວງ ກະສິກຳ, 2002). ສ່ວນຫລາຍການເຮັດນາຈະຢູ່ເຂດທົ່ງພຽງ, ສ່ວນການເຮັດໄຮ່ຈະຢູ່ເຂດພູສູງ.

ຕາມຮີດຄອງເດີມແລ້ວ ຜູ້ຊາຍເປັນຜູ້ໄຖນາ, ຄາດ ແລະ ຫວ່ານກ້າ; ແລະ ສ່ວນວຽກທີ່ແມ່ຍິງເຮັດຫລາຍແມ່ນ: ດຳນາ, ເສຍຫຍ້າ, ກ່ຽວເຂົ້າ, ຟາດເຂົ້າ ແລະ ວຽກອື່ນໆຫລັງຈາກເກັບກ່ຽວ. ໃນບາງທ້ອງຖິ່ນການແບ່ງວຽກມີການປ່ຽນແປງຈາກຮູບແບບຄອງເດີມ ເນື່ອງຈາກຂາດແຮງງານຜູ້ຊາຍ; ແມ່ຍິງໄດ້ມີສ່ວນຮ່ວມເພີ່ມຂຶ້ນໃນຂັ້ນຕອນການກະກຽມດິນ, ຊົນລະປະທານ, ການຄາດ, ແລະ ຫວ່ານກ້າ. ຍິ່ງໄປກວ່ານັ້ນ, ແມ່ຍິງຍັງໄດ້ສ້າງເຄືອຂ່າຍໃນການແລກປ່ຽນ ແນວພັນເຂົ້າປູກຢູ່ໝູ່ບ້ານຕ່າງໆ ແລະ ຫລົກກ້າໄປດຳນາ. ໂດຍທົ່ວໄປ, ຜູ້ຊາຍຈະເປັນຜູ້ກະກຽມດິນ, ໄຖ ແລະ ເຮັດຮົ້ວອ້ອມ, ແລະ ສ່ວນແມ່ຍິງຈະເສຍຫຍ້າ ແລະ ເອົາເຂົ້າໄປຂາຍ. ເຖິງວ່າຜູ້ຊາຍແມ່ນຜູ້ໄປກູ້ຢືມເງິນເພື່ອຊື້ປຸ໋ຍເຄມີ, ແຕ່ສ່ວນຫລາຍແມ່ນແມ່ຍິງເປັນຜູ້ຕັດສິນໃຈໃນການໃຊ້ຈ່າຍເງິນໃນຄອບຄົວ. ແມ່ຍິງຍັງມີໜ້າທີ່ຮັບຜິດຊອບໃນການເອົາຜົນຜະລິດ(ເຂົ້າ)ໄປຂາຍ. ໂດຍທົ່ວໄປແລ້ວ, ແມ່ຍິງເປັນຜູ້ດຳນາ, ແຕ່ເຂົາເຈົ້າພັດໄດ້ຮັບຂໍ້ມູນຂ່າວສານດ້ານການປູກເຂົ້າໜ້ອຍ.

ການເຮັດໄຮ່ຕ້ອງການແຮງງານແມ່ຍິງຫລາຍທີ່ສຸດ; ເຂົາເຈົ້າຕ້ອງຍ່າງໄປໄຮ່ເປັນໄລຍະທາງໄກ ເພື່ອ ຂົນເຂົ້າ ແລະ ເຄື່ອງປູກອື່ນໆເພື່ອມາບໍລິໂພກໃນຄອບຄົວ. ການເສຍຫຍ້າໄຮ່ແມ່ນວຽກຂອງແມ່ຍິງ. ເນື່ອງຈາກຄະນະກຳມະການແບ່ງປັນທີ່ດິນໄດ້ຈຳກັດຈຳນວນທີ່ດິນເພື່ອເຮັດໄຮ່, ມັນເຮັດໃຫ້ແມ່ຍິງພົບບັນຫາເພີ່ມຂຶ້ນໃນການເຮັດໄຮ່ແບບໝູນວຽນ. ທັງສອງກໍລະນີນັ້ນ, ແມ່ຍິງເປັນຜູ້ໃຊ້ແຮງງານໜັກເພື່ອເສຍຫຍ້າ. ຍ້ອນມີການຈຳກັດແລະຈັດສັນເນື້ອທີ່ເຮັດໄຮ່ດັ່ງກ່າວ, ມັນໄດ້ເຮັດໃຫ້ສະມັດຕະພາບຂອງດິນເຊື່ອມໂຊມລົງ ແລະ ເກີດມີຫຍ້າຫລາຍ, ດັ່ງນັ້ນມັນຈຶ່ງເປັນການເພີ່ມວຽກໃຫ້ແມ່ຍິງຫລາຍຂຶ້ນ (ADB 2001).

### *ແມ່ຍິງມີບົດບາດສຳຄັນຫລາຍໃນການເກັບ ແລະ ທ້ອນໂຮມເຄື່ອງປ່າຂອງດົງ*

ເຄື່ອງປ່າຂອງດົງແມ່ນແຫລ່ງຊັບພະຍາກອນອັນສຳຄັນ ເພື່ອການດຳລົງຊີວິດຂອງຊາວບ້ານ, ບາງຈຳນວນກໍ່ຖືເປັນແຫຼ່ງລາຍຮັບທີ່ສຳຄັນ. ມີຫລາຍຄອບຄົວອາໄສການເກັບເຄື່ອງປ່າຂອງດົງຈາກປ່າໄມ້ ແລະ ຫາອາຫານໃນເຂດບໍລິເວນອ້ອມແອ້ມບ້ານ ເພື່ອມາບໍລິໂພກປະຈຳວັນ. ໂດຍສະເພາະແມ່ຍິງໄດ້ມີບົດບາດສຳຄັນໃນການເກັບ ແລະ ທ້ອນໂຮມເຄື່ອງປ່າເຫລົ່ານີ້, ຊຶ່ງລວມມີຫວາຍ ແລະ ໜໍ່ໄມ້, ເຫັດ ແລະ ຢາພື້ນເມືອງຈຳນວນໜຶ່ງ. ຜູ້ຊາຍມັກເຂົ້າໄປປ່າເພື່ອລ່າສັດ ເຊັ່ນ : ກະຮອກ, ນົກ/ສັດປີກປ່າ, ປາ, ງູ ແລະ ໝູ. ເຖິງວ່າມີຜະລິດຕະພັນຈາກປ່າໄມ້ຈຳນວນຫລວງຫລາຍກໍ່ຕາມ (ເຊັ່ນ: ຢາງໄມ້, ເປືອກໄມ້ ແລະ ໝາກໄມ້, ແມງໄມ້ ແລະ ສັດນ້ອຍຕ່າງໆ), ແຕ່ມີພຽງຜະລິດຕະພັນເຄື່ອງປ່າຂອງດົງເທົ່ານັ້ນ (NTFPs) ທີ່ມີຄຸນຄ່າທາງເສດຖະກິດ ແລະ ສາມາດເກັບກ່ຽວໄດ້ຢ່າງຕໍ່ເນື່ອງ.

NTFPs ແມ່ນແຫລ່ງສຳຄັນຂອງອາຫານເສີມ ແລະ ໄດ້ຖືກນຳໃຊ້ເປັນຢາປົວພະຍາດ, ແລະ ເປັນລາຍຮັບ ທີ່ດີໃນເຂດຊົນນະບົດ. ແມ່ຍິງມີໜ້າທີ່ຮັບຜິດຊອບເກັບເຄື່ອງປ່າທີ່ເປັນອາຫານ ເຊັ່ນ : ໜໍ່ໄມ້, ຫົວມັນ, ຜັກປ່າ ເພື່ອຮັບປະກັນບໍ່ໃຫ້ຂາດແຄນສະບຽງອາຫານໃນລະດູການຕ່າງໆ. ໂດຍສະເລ່ຍ NTFPs ໄດ້ປະກອບສ່ວນ 40% ຫາ 60% ຂອງລາຍຮັບໃນຄອບຄົວເຂດພູສູງ, ແລະ ອາດເຖິງ 80% ໃນເຂດທີ່ມີຄວາມທຸກຍາກທີ່ສຸດ ເຊິ່ງເປັນບ່ອນທີ່ມີໂອກາດໜ້ອຍໃນການສ້າງລາຍຮັບ (UNDP, 2001). ໂດຍທົ່ວໄປ, ແມ່ຍິງໄດ້ເກັບເອົາຜະລິດຕະພັນເຄື່ອງປ່າຂອງດົງປະເພດຕ່າງໆ ເພື່ອໄປຂາຍໃນຕະຫລາດທ້ອງຖິ່ນ ແລະ ແຄມທາງ.

### *ແມ່ຍິງມີສ່ວນຮ່ວມໃນການສ້າງລະບົບຊົນລະປະທານ,ແລະ ໂຄງການພັດທະນາຊຸມຊົນ, ແຕ່ຍັງບໍ່ມີສ່ວນຮ່ວມໃນການຕັດສິນໃຈ.*

ຍ້ອນວ່າຊົນລະປະທານມີຄວາມໝາຍສຳຄັນໃນການຮັບປະກັນການຜະລິດອາຫານ, ດັ່ງນັ້ນການມີສ່ວນຮ່ວມຂອງແມ່ຍິງຈຶ່ງມີຄວາມສຳຄັນໃນການກໍ່ສ້າງໂຄງການຊົນລະປະທານ ແລະເຮັດໃຫ້ລະບົບຊົນລະປະທານມີຄວາມຍືນຍົງເພາະວ່າເຂົາເຈົ້າມີບົດບາດສຳຄັນໃນການປະກອບສ່ວນເຮັດນາ ແລະ ປູກຜັກ;

ດັ່ງນັ້ນ ເຂົາເຈົ້າຈຶ່ງຕິດພັນໂດຍກົງກັບການຈັດການນ້ຳ. ພ້ອມກັນນັ້ນ, ຍ້ອນວ່າແມ່ຍິງຍັງມີໜ້າທີ່ຕ້ອງໄປຕັກນ້ຳ ເພື່ອມານຳໃຊ້ໃນຄົວເຮືອນອີກ, ເຂົາເຈົ້າຈຶ່ງສົນໃຈໃນການຊອກຫາວິທີທີ່ສະດວກກວ່າໃນການຕັກນ້ຳ. ເວົ້າລວມ, ແມ່ຍິງໄດ້ປະກອບສ່ວນຢ່າງເທົ່າທຽມກັນ ບໍ່ວ່າດ້ານແຮງງານເຂົ້າໃນການກໍ່ສ້າງ, ການປະຕິບັດວຽກງານ ແລະ ການບຳລຸງຮັກສາລະບົບຕ່າງໆ. ເຂົາເຈົ້າຍັງໄດ້ໃຫ້ການຊ່ວຍເຫລືອດ້ວຍການແຕ່ງກິນ ແລະ ການສົ່ງອາຫານໃຫ້ອາສາສະໝັກ ແລະ ມີສ່ວນຮ່ວມໃນການຂຸດ, ສ້ອມແປງ, ແລະ ອະນາໄມລະບົບທົ່ວງານ ແລະ ຄອງຊົນລະປະທານ. ເຖິງຢ່າງໃດກໍ່ຕາມ, ຈາກບົດລາຍງານການຄົ້ນຄ້ວາວິໄຈສະແດງໃຫ້ເຫັນວ່າຍັງມີແມ່ຍິງຈຳນວນໜ້ອຍໜຶ່ງໄດ້ເຂົ້າຮ່ວມໃນການບໍລິຫານ ແລະ ຕັດສິນບັນຫາໃນຂະແໜງຊົນລະປະທານ ແລະ ໂຄງການພັດທະນາຊຸມຊົນ (ເບິ່ງ Box 3). ເຫດຜົນທີ່ແມ່ຍິງບໍ່ໄດ້ເຂົ້າຮ່ວມຍ້ອນວ່າແມ່ຍິງຄາເຮັດວຽກເຮືອນ, ບົດບາດດ້ານຮີດຄອງປະເພນີ ແລະ ໜ້າທີ່ໃນການເບິ່ງແຍງດູແລຄອບຄົວ; ຂາດເວລາ ແລະ ໂອກາດ ເຂົ້າຮ່ວມໃນກອງປະຊຸມ. ໂດຍຄວາມເປັນຈິງແລ້ວແມ່ຍິງບໍ່ຖືກຄາດຫວັງໃຫ້ເປັນຜູ້ນຳ ຫລື ຫົວໜ້າຄອບ ຄົວ.

Box 3 : ບົດບາດຍິງ-ຊາຍ ແລະ ໂຄງການອະນຸລັກ ແລະ ຈັດການປ່າໄມ້ (FOMACOP).

ໂດຍການສະໜັບສະໜູນຈາກທະນາຄານໂລກ, ລັດຖະບານໄດ້ຈັດຕັ້ງປະຕິບັດ ໂຄງການ FOMACOP ລະຫວ່າງປີ 1996 ແລະ 2000. ກິດຈະກໍາໂຄງການລວມມີ ການກໍ່ສ້າງ ແລະ ບູລະນະໂຮງຮຽນ, ໜອງປາ, ເຂື່ອນ, ນ້ຳສ້າງ, ແລະ ການປັບປຸງຖະໜົນຫົນທາງ. ໂຄງການດັ່ງກ່າວ ໄດ້ສ້າງພະນັກງານປ່າໄມ້ປະຈໍາບ້ານ (VFAs). ສໍາລັບວຽກງານຈັດການປ່າໄມ້, ເລີ່ມຈາກການເກັບກູ້ໄມ້ທ່ອນ ແລະ ຈົນຮອດກິດຈະກໍາສ້າງລາຍຮັບ. ປະຈຸບັນນີ້ ບ້ານເປົ້າໝາຍຂອງໂຄງການມີກອງທຶນຂອງຕົວເອງສໍາລັບກິດຈະກໍາພັດທະນາບ້ານ, ໂດຍສະເພາະແມ່ນໄດ້ນໍາໃຊ້ກອງທຶນດັ່ງກ່າວ ເຂົ້າໃນການກໍ່ສ້າງໂຄງລ່າງພື້ນຖານ. ຕາມຮີດຄອງເດີມແລ້ວແມ່ຍິງ ແລະ ເດັກຍິງເປັນຜູ້ຮັບຜິດຊອບໄປຕັກນ້ຳເພື່ອມານໍາໃຊ້ໃນຄອບຄົວ, ປັດຈຸບັນ ເຂົາເຈົ້າໄດ້ມີການເຂົ້າເຖິງແຫລ່ງນ້ຳຕ່າງໆຫລາຍຂຶ້ນ. ການລົງທຶນໃສ່ຖະໜົນຫົນທາງ ແລະ ໂຄງລ່າງພື້ນຖານເຫລົ່ານີ້ ຈະອໍານວຍຄວາມສະດວກໃຫ້ຊີວິດເຂົາເຈົ້າ, ປັບປຸງວຽກງານ ແລະ ໃຫ້ແສງສະຫວ່າງແກ່ການເດີນທາງຕາມທ້ອງຖະໜົນ. ການປັບປຸງຖະໜົນຫົນທາງໄດ້ເຮັດໃຫ້ແມ່ຍິງໄດ້ມີໂອກາດເຂົ້າ ເຖິງການຈ້າງງານຫລາຍຂຶ້ນ, ສາມາດເຂົ້າເຖິງການໃຫ້ບໍລິການດ້ານສຸຂະພາບ, ດ້ານການສຶກສາ ແລະ ການບໍລິການພື້ນຖານອື່ນໆໄດ້ດີກວ່າແຕ່ກ່ອນ. ແມ່ຍິງຍັງໄດ້ນໍາໃຊ້ກອງທຶນພັດທະນາບ້ານເຂົ້າໃນການສ້າງລາຍໄດ້ຂອງເຂົາເຈົ້າ.

ເຖິງຢ່າງໃດກໍ່ຕາມ, ຖ້າເບິ່ງໃນແງ່ບົດບາດຍິງ-ຊາຍກໍ່ຍັງມີບາງບັນຫາທີ່ເປັນດ້ານລົບທີ່ເກີດຈາກໂຄງການ. ຕັ້ງແຕ່ໄດ້ມີໂຄງການດັ່ງກ່າວເຂົ້າມາ, ກໍ່ມີການຈໍາແນກຕໍ່ແມ່ຍິງໃນການຈ້າງງານ, ເຮັດໃຫ້ ຜູ້ຊາຍມີວຽກເຮັດງານທໍາຫລາຍກວ່າແມ່ຍິງ ເຊັ່ນ: ແມ່ຍິງຈະມີສ່ວນຮ່ວມໃນວຽກງານອະນາໄມຫົນທາງ ຊຶ່ງເປັນວຽກທີ່ໄດ້ຮັບຄ່າຈ້າງອັດຕາຕໍ່າ ຖ້າທຽບໃສ່ວຽກອື່ນໆຂອງຜູ້ຊາຍເຮັດ. ຍິ່ງໄປກວ່ານັ້ນ, ໃນລະດັບ ໂຄງການ, ຕົວແທນຂອງແມ່ຍິງໃນຂັ້ນການຕັດສິນໃຈແມ່ນມີຈໍານວນໜ້ອຍຫຼາຍ ແລະ ຍັງຂາດນັກວິຊາການທີ່ເປັນເພດຍິງເຮັດວຽກໃນອົງການຕ່າງໆ, ໂດຍສະເພາະໃນລະດັບເມືອງ, ແມ່ນ ມີພະນັກງານສົ່ງເສີມພາກສະໜາມທີ່ເປັນເພດຍິງໜ້ອຍກວ່າຜູ້ຊາຍ. ສິ່ງດັ່ງກ່າວ ໄດ້ເຮັດໃຫ້ມີການກະທົບຕໍ່ວຽກຕົວຈິງ, ໂດຍສະເພາະໃນເຂດບ້ານຊົນເຜົ່າສ່ວນນ້ອຍຫ່າງໄກສອກຫລີກ ຊຶ່ງເປັນບ່ອນທີ່ມີຄວາມຫຍຸ້ງຍາກສໍາລັບພະນັກງານເພດຊາຍທີ່ຈະເຮັດວຽກຮ່ວມກັບຊາວບ້ານທີ່ເປັນເພດຍິງ. ແຕ່ຍັງໂຊກດີທີ່ມີບາງອົງການສາກົນທີ່ບໍ່ຂຶ້ນກັບລັດຖະບານ (INGOs) ໄດ້ຄໍານຶງເຖິງຄວາມສໍາຄັນ ແມ່ຍິງໃນວຽກງານກະສິກໍາ, ໄດ້ໃຫ້ການຝຶກອົບຮົມ ແລະ ນໍາເອົາແມ່ຍິງເຂົ້າຮ່ວມໃນວຽກງານສົ່ງເສີມກະສິກໍາ ໃນລະດັບບ້ານ.

### *ແມ່ຍິງ ແລະ ຜູ້ຊາຍໄດ້ແບ່ງໜ້າທີ່ ແລະ ຄວາມຮັບຜິດຊອບໃນກິດຈະກໍາລ້ຽງປາຢູ່ເຂດຊົນນະບົດ*

ໃນ ສປປ ລາວ, ການລ້ຽງປາຍັງເປັນກິດຈະກໍາທີ່ໃຫມ່ສໍາລັບບາງແຂວງ, ຊຶ່ງແມ່ຍິງ ແລະ ຜູ້ຊາຍໄດ້ແບ່ງໜ້າທີ່ ແລະ ຄວາມຮັບຜິດຊອບ. ໂດຍທົ່ວໄປ, ຜູ້ຊາຍຈະຮັບຜິດຊອບວຽກກະກຽມໜອງ, ເສຍຫຍ້າໜອງ, ດູດນ້ຳອອກ ແລະ ປ່ອຍນ້ຳເຂົ້າໜອງກ່ອນຈະປ່ອຍປາລົງ, ຊຶ່ງວຽກດັ່ງກ່າວ ແມ່ຍິງກໍ່ຍັງໄດ້ຊ່ວຍອີກ. ການເອົາປູນໃສ່ເພື່ອຂ້າເຊື້ອຢູ່ໃນໜອງກໍ່ແມ່ນໜ້າທີ່ຂອງຜູ້ຊາຍ. ໂດຍທົ່ວໄປຜູ້ຊາຍຈະໂປ້ມ

ເອົານ້ຳເຂົ້າ ຫຼື ດູດນ້ຳອອກເພື່ອປຸ່ງນນ້ຳຢູ່ໃນໜອງ. ປົກກະຕິແມ່ຍິງຈະກະກຽມອາຫານປາ ເຊັ່ນ: ໄປຊອກຮຳ, ຫຍ້າ ແລະ ເສດຜັກອື່ນໆທີ່ມີ ເພື່ອເອົາໄວ້ເກືອປາ. ໂດຍປົກກະຕິແລ້ວຈະຕ້ອງໃຫ້ອາຫານປາຢ່າງສະໝ່ຳສະເໝີ. ເຖິງວ່າແມ່ຍິງສ່ວນຫລາຍຈະເປັນຜູ້ເອົາປາມາປຸງແຕ່ງ ເພື່ອບໍລິໂພກໃນຄອບຄົວ, ແຕ່ວຽກດັ່ງກ່າວຍັງຢູ່ພາຍໃຕ້ການຄວບຄຸມຂອງຜູ້ຊາຍ. ຜູ້ຊາຍຈະມີໜ້າທີ່ຈັບປາຂຶ້ນມາຈາກໜອງດ້ວຍ ການໃຊ້ແຫ ຫລື ມອງ. ແມ່ຍິງ ຈະເປັນຜູ້ຂາຍ, ຜູ້ຊື້, ຜູ້ຄ້າ ແລະ ເປັນແມ່ຄ້າຄົນກາງ. ຕາມຮີດຄອງແລ້ວ, ແມ່ຍິງຊົນເຜົ່າລາວລຸ່ມ, ຈະເປັນຜູ້ເກັບທ້ອນເງິນທັງໝົດຂອງຄອບຄົວ. ໃນຄອບຄົວຂອງຊົນເຜົ່າລາວລຸ່ມ, ແມ່ຍິງຈະຄວບຄຸມລາຍໄດ້ທີ່ມາຈາກການຂາຍປາ, ຊຶ່ງຈະໄດ້ນຳໃຊ້ເພື່ອຊື້ສິ່ງຂອງອື່ນໆສຳລັບຄອບຄົວ. ສຳລັບບ້ານລາວລຸ່ມ, ແມ່ຍິງໄດ້ເລີ່ມຕົ້ນເຮັດການລ້ຽງປາເພື່ອໄວ້ຂາຍໃນອະນາຄົດ, ຍ້ອນວ່າ ແມ່ຍິງເປັນຜູ້ມີບົດບາດໃນການຊື້ຂາຍຜົນຜະລິດ ກະສິກຳຕ່າງໆ ແລະ ສັດລ້ຽງໃນບ້ານມາກ່ອນແລ້ວ (FAO, 2004).

### 3.3. ການເຂົ້າເຖິງທີ່ດິນ

***ແມ່ຍິງ ແລະ ຜູ້ຊາຍ ມີສິດເທົ່າທຽມກັນໃນການເຂົ້າເຖິງທີ່ດິນ ພາຍໃຕ້ກົດໝາຍ, ແຕ່ໃນພາກປະຕິບັດຕົວຈິງຍັງມີອຸປະສັກດ້ານຮີດຄອງປະເພນີ***

ພາຍໃຕ້ກົດໝາຍຂອງ ສປປ ລາວ, ທັງແມ່ຍິງ ແລະ ຜູ້ຊາຍມີສິດເທົ່າທຽມກັນໃນການນຳໃຊ້ທີ່ດິນ (ເບິ່ງພາກ 2). ແຕ່ວ່າ, ໃນການປະຕິບັດຕົວຈິງແລ້ວ ການສືບທອດມໍລະດົກຕາມຮີດຄອງປະເພນີຈະຄອບງຳການບັງຄັບໃຊ້ກົດໝາຍ. ສະພາບດັ່ງກ່າວນີ້ ຈະຂຶ້ນກັບການລັກສະນະການສືບມູນມັງມໍລະດົກຂອງລັດທິມານດາສິດທິລາດ ແລະ ບິດາສິດທິລາດ ແລະ ອີງຕາມລັກສະນະຂອງແຕ່ລະຊົນເຜົ່າ.

ລັດທິມານດາສິດທິລາດ(ການສືບຕະກຸນຕາມສາຍແມ່)ຂອງເຜົ່າລາວ-ໄຕ (ລາວລຸ່ມ) ໝາຍຄວາມວ່າ ແມ່ຍິງສ່ວນຫລາຍມັກຈະໄດ້ຄວບຄຸມທີ່ດິນໃນເຂດທີ່ມີຄົນກຸ່ມນີ້ອາໄສຢູ່. ລູກສາວ ແລະ ລູກຊາຍຈະໄດ້ຮັບການສືບທອດທີ່ດິນດ້ວຍການຕັດສິນໃຈຂອງພໍ່ແມ່. ແຕ່ວ່າຕາມຮີດຄອງແລ້ວສຳລັບ ລູກສາວຫລ້າແມ່ນຈະໄດ້ຮັບມໍລະດົກເປັນທີ່ດິນແລະເຮືອນຖ້າຫາກລາວແຕ່ງງານ ແລະ ເບິ່ງແຍງ ລ້ຽງດູພໍ່ແມ່.

ໃນບັນດາຊົນເຜົ່າ, ເປັນຕົ້ນແມ່ນ ເຜົ່າມົ້ງລູມ້ຽນ ແລະ ຂະມຸ (ມອນ ຂະແມ), ການສືບມູນທີ່ດິນແມ່ນຂຶ້ນກັບສາຍພໍ່. ການໃຊ້ນາມສະກຸນ ແລະ ຊັບສິມບັດ ແມ່ນຈະໄດ້ໂອນຈາກພໍ່ໃຫ້ລູກຊາຍ, ແລະຜູ້ເປັນເມຍຈະຕ້ອງຂຶ້ນກັບສາຍຜົວ ຕົວຢ່າງ ລາວຕ້ອງໄປອາໄສຢູ່ເຮືອນຂອງຜົວ. ຜູ້ຊາຍແມ່ນຖືເປັນ "ເຈົ້າຂອງ ແລະ ຜູ້ບໍລິຫານທີ່ດິນ", ສຳລັບແມ່ຍິງ "ໂດຍທົ່ວໄປຈະບໍ່ໄດ້ຮັບມໍລະດົກເປັນທີ່ດິນຈາກພໍ່ແມ່ " (GRID, 1997).

### *ເອກະສານກ່ຽວກັບທີ່ດິນສ່ວນຫລາຍຈະໃສ່ຊື່ຂອງຜູ້ຊາຍ*

ໃນປີ 1998, GRID ໄດ້ຮ່ວມມືກັບ NSC ເຮັດການສຳຫລວດກ່ຽວກັບການເຂົ້າເຖິງທີ່ດິນຂອງແມ່ຍິງລາວ. ຜົນສຳຫລວດໄດ້ສະແດງໃຫ້ເຫັນເຖິງຄວາມແຕກຕ່າງກ່ຽວກັບການໃສ່ຊື່ໃນເອກະສານທີ່ດິນ ແລະ ແຫລ່ງທີ່ມາຂອງດິນ. ຕາມທີ່ໄດ້ເຫັນຈາກຮູບສະແດງ 1 ແລະ 2, ແມ່ນມີພຽງ 16% ຂອງທີ່ດິນໄດ້ໃສ່ຊື່ຂອງເມຍ, ແຕ່ວ່າ 40% ຂອງດິນແມ່ນໄດ້ມາຈາກພໍ່ແມ່ຂອງເມຍ. 58% ຂອງດິນໄດ້ໃສ່ເປັນຊື່ຂອງຜົວ, ເຊິ່ງມີພຽງ 18% ຂອງດິນແມ່ນໄດ້ມາຈາກພໍ່ແມ່ຂອງຜົວ.

**ແຫຼ່ງທີ່ມາຂອງດິນ**




ຮູບສະແດງ 1

**ຊື່ໃນເອກະສານ**




ຮູບສະແດງ 2

ສາເຫດສ່ວນໜຶ່ງຂອງສະພາບດັ່ງກ່າວນີ້ ອາດຈະສືບເນື່ອງມາຈາກແມ່ຍິງຂາດຄວາມຮູ້ ແລະ ບໍ່ໄດ້ເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບສິດທິດ້ານທີ່ດິນ. ນອກນັ້ນກໍຍັງມີເຫດຜົນອື່ນໆອີກ ເຊັ່ນວ່າ ແມ່ຍິງຊົນເຜົ່າສ່ວນນ້ອຍກືກໜັງສື, ບໍ່ສາມາດເວົ້າ ແລະ ອ່ານພາສາລາວ, ຄວາມແຕກຕ່າງດ້ານບົດບາດຍິງ-ຊາຍກ່ຽວກັບສິດທິຄອບຄອງທີ່ດິນແບບຄອງເດີມ ແລະ ຂາດຄວາມໝັ້ນໃຈຕົວເອງ. ສາເຫດໜຶ່ງແມ່ນມາຈາກທັດສະນະທົ່ວໄປຂອງສັງຄົມທີ່ຖືວ່າ ຜູ້ຊາຍເປັນຫົວໜ້າຄອບຄົວດັ່ງນັ້ນຈຶ່ງຄວນໃສ່ຊື່ໃນເອກະສານຕ່າງໆ.

Box 4. ໂຄງການອອກໃບຕາດິນ ໃນ ສປປ ລາວ.

ຕັ້ງແຕ່ກາງປີ 1990 ເປັນຕົ້ນມາ, ລັດຖະບານລາວໄດ້ຈັດຕັ້ງປະຕິບັດແຜນງານອອກໃບຕາດິນ ໂດຍມີສອງໄລຍະ ຄື (LTP 1 ແລະLTP 2), ຊຶ່ງແນໃສ່ອອກໃບຕາດິນຖາວອນໃນເຂດຕົວເມືອງ, ຊານເມືອງ ແລະ ເຂດຊົນ ນະບົດ/ເຂດກະສິກຳ. ສູນກາງສະຫະພັນແມ່ຍິງລາວ (LWU) ມີບົດບາດສຳຄັນຫລາຍໃນການຈັດ ຕັ້ງປະບັດໂຄງການດັ່ງກ່າວ, ຊຶ່ງມີສ່ວນຮ່ວມໃນການຈັດຕັ້ງປະຕິບັດກິດຈະກຳຕ່າງໆ ເຊັ່ນ: ນຳພາຈັດກອງປະຊຸມໃນໝູ່ບ້ານ, ໂຄສະນາຂໍ້ມູນຂ່າວສານ ແລະ ຍົກລະດັບຄວາມຮັບຮູ້ກ່ຽວກັບຜົນດີຂອງໃບຕາດິນ ແລະ ຈິດສຳນຶກກ່ຽວກັບສິດທິໃນການນຳໃຊ້ທີ່ດິນຂອງຍິງ-ຊາຍ. ພ້ອມກັນນັ້ນ, ສະຫະພັນແມ່ຍິງເມືອງ ແລະ ລະດັບບ້ານ ກໍ່ໄດ້ມີບົດບາດສຳຄັນໃນການເພີ່ມຕົວເລກຂອງການອອກຊື່ແມ່ຍິງໃນໃບຕາດິນ. ອີງຕາມການສຶກສາພື້ນຖານເສດຖະກິດ-ສັງຄົມ ໃນປີ 2004 (SEBS), ໂຄງການອອກໃບຕາດິນໄລຍະໜຶ່ງໄດ້ຮັບຜົນສຳເລັດອັນຍິ່ງໃຫຍ່ໃນແຜນງານທີ່ດິນ, ໂດຍການອອກໃບຕາດິນຖາວອນໃຫ້ແມ່ຍິງມີຈຳນວນເພີ່ມຂື້ນ. ໃນໂຄງການ LTP 2, ສະຫະພັນແມ່ຍິງລາວ ກໍສືບຕໍ່ເປັນຕົວແທນໃຫ້ແມ່ຍິງ ໃນການພິຈາລະນານະໂຍບາຍກ່ຽວກັບທີ່ດິນ ກໍຄືໃຫ້ໄດ້ເຂົ້າຮ່ວມຢ່າງຕັ້ງໜ້າ ໃນການຕິດຕາມກວດກາການປະຕິບັດງານໂຄງການອອກໃບຕາດິນ.

*ແຫລ່ງຂໍ້ມູນ. ບົດສຳຫລວດພື້ນຖານເສດຖະກິດ-ສັງຄົມຂອງໂຄງການອອກໃບຕາດິນ ປີ 2003.*

## 3.4. ການເຂົ້າເຖິງໂຄງລ່າງພື້ນຖານ ແລະ ຕະຫລາດ

***ໃນເຂດຊົນນະບົດ ການເຂົ້າເຖິງຖະໜົນຫົນທາງ, ນ້ຳປະປາ ແລະ ຕະຫລາດແມ່ນຍັງຈຳກັດ, ໂດຍສະເພາະແມ່ຍິງຊົນເຜົ່າສ່ວນນ້ອຍ***

ໃນ ສປປ ລາວ ການເຂົ້າເຖິງຖະໜົນຫົນທາງ ແລະ ໂຄງລ່າງພື້ນຖານແຕກຕ່າງກັນໃນແຕ່ລະພື້ນທີ່. ໂດຍທົ່ວໄປແລ້ວ ຢູ່ຊົນນະບົດຈະມີຂໍ້ຈຳກັດຫລາຍກວ່າໃນເມືອງໃນດ້ານການເຂົ້າເຖິງຕະຫລາດ, ໂຮງຮຽນ ແລະ ສາທາລະນະສຸກ. ໃນການສຳຫລວດພົນລະເມືອງທົ່ວປະເທດ ປີ 2005 ຊີ້ໃຫ້ເຫັນວ່າປະມານ 66.4% ຂອງໝູ່ບ້ານທັງໝົດມີຫົນທາງເຂົ້າເຖິງ, ຊຶ່ງເປັນເງື່ອນໄຂພື້ນຖານໃນການພັດທະນາເສດຖະກິດສັງຄົມ. ເສັ້ນທາງປູຢາງກວມປະມານ 50% ຂອງເສັ້ນທາງຫລວງ ແລະ ໜ້ອຍກວ່າ 2% ຂອງເສັ້ນທາງໃນເຫດສະບານແຂວງ, ດັ່ງນັ້ນຈຶ່ງມີຄວາມຫຍຸ້ງຍາກໃນການສັນຈອນໃນລະດູຝົນ, ເຮັດໃຫ້ຄ່າຂົນສົ່ງສູງ. ໃນລະດູແລ້ງກໍ່ຍັງມີຂໍ້ຈຳກັດດ້ານຖະໜົນ, ປະມານ 65% ຂອງບ້ານທີ່ລົດບັນທຸກບໍ່ສາມາດເຂົ້າໄປໄດ້ (LECS 3). ໂດຍສະເລ່ຍແລ້ວ ຄອບຄົວໃນເຂດຊົນນະບົດທີ່ຢູ່ໃກ້ຫົນທາງທີ່ສຸດ ແມ່ນ 4.3 ກມ (LECS 3). ຖ້າບ້ານໃດມີຫົນທາງເຂົ້າເຖິງກໍ່ມີເງື່ອນໄຂສະດວກ ໃນການມີນ້ຳ ແລະ ໄຟຟ້າ. ຈຳນວນບ້ານທີ່ມີໄຟຟ້າໃຊ້ຍັງມີໜ້ອຍ. ປະມານ 35% ຂອງບ້ານທັງໝົດທີ່ມີໄຟຟ້າໃຊ້ (ຜົນການສຳຫລວດ ພົນລະເມືອງທົ່ວປະເທດ ປີ 2005). ເຖິງຢ່າງໃດກໍ່ຕາມ ເກືອບທຸກບ້ານໃນຕົວເມືອງແມ່ນມີໄຟຟ້າໃຊ້, ມີພຽງແຕ່ 13% ເທົ່ານັ້ນທີ່ບໍ່ມີຫົນທາງເຂົ້າເຖິງ.

ນ້ຳ ແລະ ສຸຂະອະນາໄມ ຍັງເປັນບັນຫາໃຫຍ່ໃນ ສປປ ລາວ. ສຳລັບດ້ານດີ, ນັບແຕ່ປີ 1995 ເປັນຕົ້ນມາ ການເຂົ້າເຖິງນ້ຳປະປາຫລືແຫລ່ງນ້ຳທີ່ສະອາດແມ່ນເພີ່ມຂຶ້ນສອງເທົ່າ. ຢ່າງໃດກໍ່ຕາມ, ການມີນ້ຳດື່ມສະອາດ ແລະ ສຸຂະອະນາໄມຍັງຈຳກັດຫຼາຍ, ຊຶ່ງມີ 53% ແລະ 42% ຂອງຈຳນວນບ້ານຕາມລຳດັບ. ໂດຍອີງຕາມການສຳຫລວດພົນລະເມືອງທົ່ວປະເທດ ປີ 2005, ຕົວເລກຂອງບ້ານທີ່ນຳໃຊ້ນ້ຳປະປາ ມີພຽງ 6% ຂອງຈຳນວນບ້ານທັງໝົດໃນ ສປປ ລາວ. ໃນນະຄອນຫລວງວຽງຈັນ ກໍ່ມີພຽງ 41% ຂອງບ້ານທັງໝົດທີ່ໄດ້ນຳໃຊ້ນ້ຳປະປາ. ໃນເຂດຊົນນະບົດຍິ່ງມີບັນຫາກ່ຽວກັບນ້ຳປະປາຫລາຍ, ມີພຽງແຕ່ 40% ຂອງຄອບຄົວໃນຊົນນະບົດທີ່ໄດ້ນຳໃຊ້ນ້ຳປະປາ ເມື່ອທຽບໃສ່ຕົວເມືອງແລ້ວ ແມ່ນມີເຖິງ 80% (ທະນາຄານໂລກ, 2005). ຈາກສະພາບການນີ້ ມັນໄດ້ສົ່ງຜົນກະທົບຕໍ່ເຂດຊົນນະບົດທີ່ທຸກຍາກ, ໃນນັ້ນມີພຽງ 32% ທີ່ໄດ້ນຳໃຊ້ ນ້ຳປະປາ ແລະ ໃນເຂດຊົນເຜົ່າຍິ່ງພົບບັນຫາຫລາຍ. ບ້ານລາວໄຕໄດ້ຊົມໃຊ້ນ້ຳປະປາຫລາຍກວ່າໝູ່, ຊຶ່ງມີເຖິງ58% ຂອງຈຳນວນບ້ານທັງໝົດ, ໃນຂະນະທີ່ບ້ານ ຈີນ-ຕິເບດ ແມ່ນຕ່ຳກວ່າຫລາຍ, ປະມານ 25%. ສ່ວນສອງກຸ່ມຊົນເຜົ່າທີ່ຍັງເຫລືອແມ່ນປະມານ 30% ເຊິ່ງຢູ່ລະຫວ່າງກາງຂອງຊົນເຜົ່າທີ່ກ່າວມາຂ້າງເທິງນັ້ນ (ທະນາຄານໂລກ 2006).

ຍ້ອນໂຄງລ່າງພື້ນຖານບໍ່ສະດວກ, ດັ່ງນັ້ນ ຈຶ່ງເຮັດໃຫ້ການລົງທຶນເຮັດທຸລະກິດຂະໜາດນ້ອຍນັ້ນສູງຂຶ້ນ ເຊັ່ນ: ຜະລິດຕະພັນຫັດຖະກຳທີ່ແມ່ຍິງເປັນຜູ້ເຮັດ. ຍ້ອນຮີດຄອງປະເພນີເຮັດໃຫ້ແມ່ຍິງມີຂໍ້ຈຳກັດໃນການເດີນທາງຫລາຍກວ່າຜູ້ຊາຍ ແລະ ດັ່ງນັ້ນພວກເຂົາບໍ່ສາມາດເຂົ້າເຖິງການຕະຫລາດ. ຍ້ອນຜູ້ຍິງຖືກຈຳກັດໃນການເຄື່ອນໄຫວ ແລະ ຮີດຄອງປະເພນີບໍ່ຍອມຮັບໃຫ້ແມ່ຍິງອອກໄປຊອກເຮັດວຽກຢູ່ຫ່າງໄກຈາກບ້ານ, ດັ່ງນັ້ນການໄປຕະຫລາດຢູ່ຕົວເມືອງໃນຕອນກາງຄືນແມ່ນເປັນໜ້າທີ່ຂອງຜູ້ຊາຍ.

ຍັງບໍ່ທັນມີລະບົບຂໍ້ມູນດ້ານການຕະຫລາດ ເພື່ອຕອບສະໜອງໃຫ້ຜູ້ຜະລິດ. ໜັງສືພິມ, ວິທະຍຸຫລືໂທລະທັດ ຍັງບໍ່ທັນເຜີຍແຜ່ຂໍ້ມູນດ້ານຕະຫລາດ. ລາຄາໃນທ້ອງຕະຫລາດສ່ວນຫລາຍແມ່ນຂຶ້ນກັບ "ພໍ່ຄ້າຄົນກາງ", ເຮັດໃຫ້ຜູ້ຜະລິດສ່ວນບຸກຄົນ/ຊາວນາມີອຳນາດໃນການຕໍ່ລອງໜ້ອຍລົງ. ມີຫລາຍຊົນເຜົ່າສ່ວນນ້ອຍທີ່ອາໄສຢູ່ເຂດຫ່າງໄກສອກຫລີກ ບາງເທື່ອພວກເຂົາຖືກຕັດອອກຈາກໂລກພາຍນອກ. ການຢູ່ໂດດດ່ຽວຂອງພວກເຂົາເຮັດໃຫ້ເຂົາເຈົ້າບໍ່ເຂົ້າໃຈ ຫລື ບໍ່ສາມາດເວົ້າພາສາລາວໄດ້.

### 3.5. ການເຂົ້າເຖິງແຫລ່ງທຶນ ຫລື ສິນເຊື່ອ

*ກຸ່ມຊົນເຜົ່າຕ່າງໆບໍ່ວ່າຍິງ ຫຼື ຊາຍ ແມ່ນ ເປັນຜູ້ຈັດການດ້ານການເງິນຄອບຄົວ*

ການສຳຫຼວດການເງິນຂອງຄອບຄົວຊີ້ໃຫ້ເຫັນວ່າ, ປະຊາຊົນໃນເຂດຊົນນະບົດມີການປະຢັດເງິນຢ່າງກ້ວາງຂວາງ. ການປະຢັດຈະມີໃນຮູບການເງິນ ແລະ ບໍ່ແມ່ນເງິນ. ປະມານ 91% ຂອງຄອບຄົວທັງໝົດແມ່ນມີການປະຢັດເງິນ ແລະ ປະມານ 92% ແມ່ນເກັບຮັກສາທີ່ບໍ່ແມ່ນເງິນ (ສ່ວນໃຫ່ຍແມ່ນຢູ່ໃນຮູບແບບສັດລ້ຽງ ແລະ ວັດຖຸມີຄ່າ). ການຝາກເງິນຢູ່ທະນາຄານຍັງມີໜ້ອຍຫລາຍ. ຈາກການສຳຫຼວດເຫັນວ່າ

ມີຈຳນວນໜ້ອຍກ່ວາ 1% ຂອງຄົວເຮືອນ ຊົນນະບົດເອົາເງິນໄປຝາກທະນາຄານ, 1% ມີການທ້ອນເງິນໃນຮູບແບບເປັນກຸ່ມທີ່ບໍ່ເປັນທາງການ, 11% ໄດ້ຮັກສາເງິນສົດ, 14% ໃນຮູບເງິນ/ທອງ ແລະ 74% ແມ່ນການອອມໃນຮູບແບບສັດລ້ຽງ.

ແຫຼ່ງສິນເຊື່ອຂອງຄອບຄົວຢູ່ເຂດຊົນນະບົດ, ໂດຍສະເພາະ ຢູ່ເຂດຫ່າງໄກຈາກເສັ້ນທາງ ແລະ ເຂດຫ່າງໄກສອກຫຼີກ, ແມ່ນມາຈາກຄອບຄົວ, ເພື່ອນ ແລະ ຜູ້ໃຫ້ກູ້ເງິນ (ກວມເຖິງ 33%), ຈຳນວນເງິນທີ່ໃຫ້ກູ້ຢືມຈະແມ່ນຂະໜາດນ້ອຍ ແລະ ຢືມເພື່ອໃຊ້ຈ່າຍຂອງຄອບຄົວໃນລະຫວ່າງລະດູປູກຝັງ ແລະ ລະດູເກັບກ່ຽວ ແລະ ມີຈຳນວນເຄິ່ງໜຶ່ງຂອງຄອບຄົວເປັນໜີ້ກູ້ຢືມເງິນໂດຍບໍ່ມີອັດຕາດອກເບ້ຍທີ່ແນ່ນອນ ແລະ ບໍ່ມີຫຼັກຊັບຄ້ຳປະກັນໃນການກູ້ຢືມໄລຍະສັ້ນ. ສະຖາບັນທີ່ບໍ່ເປັນທາງການໄດ້ໃຫ້ການກູ້ຢືມພຽງແຕ່ 15% ເທົ່ານັ້ນ. ຜູ້ສະໜອງວັດຖຸ ແລະ ໃຫ້ຢືມເງິນຍັງແມ່ນແຫລ່ງສຳຄັນທີ່ໃຫ້ການກູ້ຢືມແກ່ຊາວນາ, ຊຶ່ງມີອັດຕາດອກເບ້ຍ ແຕ່ 42-73% ຕໍ່ປີ. ຊາວນາໄດ້ເຂົ້າເຖິງແຫຼ່ງທຶນເຫຼົ່ານີ້ ສ່ວນຫຼາຍແມ່ນຄອບຄົວທີ່ຕ້ອງການເງິນດ່ວນ ແລະ ມີຄວາມຈຳເປັນເພື່ອຫາລ້ຽງຊີບໃນແຕ່ລະວັນ.

ໃນພື້ນທີ່ຂອງລາວໄຕ (ລາວລຸ່ມ) ຊຶ່ງກວມ (ເຂດໃກ້ຕົວເມືອງ ແລະ ຊົນນະບົດລຽບຕາມແຄມແມ່ນ້ຳຂອງ), ສ່ວນໃຫ່ຍແມ່ນແມ່ຍິງກວມເອົາ 61-64% ເປັນຜູ້ບໍລິຫານການເງິນໃນຄອບຄົວ (UNDP/UNDCF 1997). ສ່ວນຜູ້ຊາຍມີ 61% ເປັນຜູ້ບໍລິຫານດ້ານການເງິນຂອງຄົວເຮືອນໃນຕົວເມືອງ ແລະ 63% ໃນຄົວເຮືອນຊົນນະບົດ. ສາເຫດທີ່ພາໃຫ້ແຕກຕ່າງກັນກໍ່ຍ້ອນວ່າແມ່ຍິງທີ່ຢູ່ໃນເຂດຊານເມືອງ ແລະ ຊົນນະບົດລຽບຕາມແຄມແມ່ນ້ຳຂອງ, ແລະ ໃນກຸ່ມຊົນເຜົ່າທີ່ສືບມູນມັງຕາມສາຍພໍ່ທີ່ດຳລົງຊີວິດໃນເຂດໂນນສູງ. ຈາກການສຳຫຼວດພົບວ່າເຫດຜົນຕົ້ນຕໍຂອງການກູ້ຢືມ ແມ່ນເພື່ອເອົາໄວ້ໃຊ້ໃນຍາມ ຈຳເປັນ ແລະ ເງິນແຮຕ່າງໆ, ສ່ວນຢືມເພື່ອເຮັດທຸລະກິດແມ່ນສຳຮອງລົງມາ.

*ຕາມຮີດຄອງປະເພນີແມ່ຍິງບໍ່ມັກຢືມເງິນຈາກທະນາຄານ*

ໃນຕະຫລາດໃຫຍ່ໃນນະຄອນຫລວງວຽງຈັນພົບວ່າແມ່ຍິງບໍ່ຄ່ອຍມັກຢືມເງິນຈາກສະຖາບັນການເງິນທີ່ເປັນທາງການ ແລະ ເຂົາເຈົ້າອາຍທີ່ຈະເຂົ້າໄປທະນາຄານ (ສຂບພ 2003). ຕາມຮີດຄອງປະເພນີ ພວກເຂົາຮູ້ສຶກອາຍທີ່ຈະຢືມເງິນ. ພວກເຂົາອາຍທີ່ຈະໄປທະນາຄານເພື່ອຢືມເງິນ ແລະ ບໍ່ຄຸ້ນເຄີຍ ກັບລະບຽບການຂອງທະນາຄານ,ໃນທີ່ສຸດກໍ່ຕ້ອງເປັນໜ້າທີ່ຂອງຜົວຂອງເຂົາເຈົ້າ. ຍິ່ງໄປກວ່ານັ້ນ, ແມ່ຍິງສ່ວນຫລາຍບໍ່ຮູ້ວ່າ ພວກເຂົາສາມາດໃຊ້ທີ່ດິນຂອງເຂົາເຈົ້າ ເພື່ອຄ້ຳປະກັນໃນການກູ້ຢືມເງິນຈາກທະນາຄານ.

ດັ່ງນັ້ນແມ່ຍິງຫລາຍຄົນໃສ່ຊື່ຜົວໃນການກູ້ຢືມເງິນ, ຍ້ອນວ່າຜົວຂອງເຂົາເຈົ້າສ່ວນຫລາຍຈະຮູ້ໜັງສື ແລະ ສາມາດເຂົ້າໃຈຂໍ້ກຳນົດຕ່າງໆ ຊຶ່ງລວມເຖິງການຈ່າຍເງິນຄືນ. ຕາມຮີດຄອງປະເພນີແລ້ວ ແມ່ຍິງຮູ້ສຶກອາຍກ່ຽວກັບການຂໍຢືມ ແລະ ພວກເຂົາຢ້ານວ່າຄົນເຫລົ່ານັ້ນຈະເປີດເຜີຍເລື່ອງໜີ້ສິນຂອງເຂົາເຈົ້າ.

ສະນັ້ນພວກເຂົາຈຶ່ງມັກຈະໄປຢືມເງິນຈາກຜູ້ໃຫ້ເງິນກູ້ ຊຶ່ງມັນບໍ່ຫຍຸ້ງຍາກ ແລະ ຊັບຊ້ອນດັ່ງທີ່ຢືມແບບ ມີລະບົບ ຫລື ກຸ່ມທ້ອນເງິນ ແລະ ກຸ່ມສິນເຊື່ອ.

> **Box 5: ວຽກງານສິນເຊື່ອຈຸລະພາກສຳລັບແມ່ຍິງໃນລາວ - ສະຫະພັນແມ່ຍິງລາວໄດ້ເຮັດຫຍັງແດ່?**
>
> ໂດຍການຮ່ວມມືກັບຜູ້ໃຫ້ທຶນ ແລະ ອົງການສາກົນທີ່ບໍ່ແມ່ນລັດຖະບານ, ສູນກາງສະຫະພັນແມ່ຍິງລາວໄດ້ສົ່ງເສີມວຽກງານສິນເຊື່ອຈຸລະພາກໃນຂະແໜງການກະສິກຳ, ການລ້ຽງສັດ ແລະ ໂຄງການຮັກສາສຸຂະພາບຂັ້ນພື້ນຖານ. ໂຄງການເຫລົ່ານີ້ໄດ້ສ້າງທ່າແຮງໃນການພັດທະນາວິສາຫະກິດ ແລະ ໃນຫລາຍກໍລະນີກໍ່ເປັນການຍົກສູງບົດບາດຂອງແມ່ຍິງໃຫ້ເຂົາເຈົ້າມີສ່ວນຮ່ວມໃນວຽກງານສ່ວນລວມເພີ່ມຂຶ້ນ. ມີບາງກໍລະນີກໍ່ໄດ້ໃຊ້ສິນເຊື່ອເພື່ອເປັນກອງທຶນສຳລັບກິດຈະກຳສ້າງລາຍໄດ້, ເຮັດໃຫ້ແມ່ຍິງມີລາຍໄດ້ເພີ່ມຂຶ້ນ. ການບໍລິການສິນເຊື່ອແມ່ນມີສອງຈຸດປະສົງຄື :ດ້ານເສດຖະກິດ ແລະ ສັງຄົມ, ຊຶ່ງໂດຍທົ່ວໄປແລ້ວຍັງບໍ່ທັນຕອບສະໜອງກັບຈຸດປະສົງດັ່ງກ່າວ. ອັດຕາເງິນເຟີ້ທີ່ສູງຍ້ອນສາເຫດມາຈາກຄ່າເງິນຫລຸດລົງຈະເຮັດໃຫ້ຂາດແຄນເງິນສົດ, ຈະເຮັດການຈັດຕັ້ງກອງທຶນໝູນວຽນບໍ່ໄດ້ຮັບຜົນສຳເລັດ. ເປັນທີ່ເຫັນໄດ້ຢ່າງຈະແຈ້ງວ່າມີຫລາຍໂຄງການ ຕ້ອງຫຼົ້ມເຫລວໃນການສົ່ງເສີມສະຖານະພາບຂອງແມ່ຍິງ, ໂດຍສະເພາະປັບປຸງບົດບາດສຳຄັນທາງເສດຖະກິດເພາະເຂົາເຈົ້າບໍ່ໃຫ້ແມ່ຍິງເຂົ້າມາມີສ່ວນຮ່ວມໃນການຕັດສິນໃຈ (ສຍລ 2003).

## *ສິນເຊື່ອທີ່ບໍ່ເປັນທາງການ ແມ່ນ ແຫລ່ງການເງິນທີ່ສຳຄັນສຳລັບຊາວບ້ານໃນຊົນນະບົດ*

ກອງທຶນໝູນວຽນຂອງບ້ານ (VRFs) ແມ່ນ ສະຖາບັນຂັ້ນທ້ອງຖິ່ນທີ່ໃຫ້ການບໍລິການເງິນພາຍໃນບ້ານໄປຄຽງຄູ່ກັບຂະແໜງການເງິນໃນລະບົບ ແລະ ແມ່ນກອງທຶນທີ່ບໍ່ມີການເສຍອາກອນ ຫລື ບໍ່ມີຂໍ້ກຳນົດ (ລະບຽບ). ກອງທຶນໝູນວຽນບ້ານແມ່ນບໍລິຫານໂດຍກຸ່ມຄົນໃນທ້ອງຖິ່ນ ແລະ ດຳເນີນການຈັດຕັ້ງປະຕິບັດ ໂດຍການປະສານສົມທົບລະຫວ່າງອົງການຈັດຕັ້ງທາງສັງຄົມ ແລະ ການເງິນ. ໂດຍທົ່ວໄປກອງທຶນໝູນວຽນບ້ານແມ່ນຮັບທຶນຊ່ວຍເຫຼືອຈາກຜູ້ໃຫ້ທຶນ ຫຼື ອົງການຈັດຕັ້ງທີ່ບໍ່ແມ່ນລັດຖະບານ, ຊຶ່ງສ້າງທະນາຄານເຂົ້າໄດ້ຫຼາຍກວ່າ 1000 ແຫ່ງ. ເງິນກູ້ຢືມຂອງກອງທຶນໝູນວຽນບ້ານສາມາດໃຫ້ການກູ້ຢືມເງິນແກ່ຊາວບ້ານກວມ ເອົາປະມານ 15% ຂອງບ້ານຊົນນະບົດ ແລະ ໄດ້ເພີ່ມຂຶ້ນຢ່າງໄວວາໃນໄລຍະ 10 ປີຜ່ານມາ. ໃນທົ່ວສປປ ລາວ, ມີຈຳນວນ1,640 ກອງທຶນໝູນວຽນບ້ານທີ່ໃຫ້ການກູ້ຢືມໃນຮູບແບບເງິນ ແລະ ສິນຄ້າ (ວັດຖຸທີ່ບໍ່ມີເງິນ). ກອງທຶນເຫຼົ່ານີ້ແມ່ນເພື່ອສະໜັບສະໜຸນກິດຈະກຳສ້າງລາຍໄດ້ ຫລື ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ປັບປຸງຜົນຜະລິດເພື່ອບໍລິໂພກ ແລະ ຂາຍ, ດັ່ງນັ້ນຈຶ່ງເໝາະສົມກັບການເຮັດກິດຈະກຳທາງເສດຖະກິດໃນຊົນນະບົດ.

ນອກຈາກນັ້ນ ໂຄງການພັດທະນາຊົນນະບົດກໍຍັງໄດ້ຈັດຕັ້ງທະນາຄານສັດລ້ຽງ ແລະ ກອງທຶນສິນເຊື່ອເພື່ອໃຫ້ການກູ້ຢືມໃນຊຸມຊົນ. ຍົກຕົວຢ່າງ, ສູນກາງສະຫະພັນແມ່ຍິງລາວ ໄດ້ຮ່ວມມືກັບອົງການຈັດຕັ້ງສາກົນ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ (ເບິ່ງ Box 5). ເງື່ອນໄຂ ແລະ ລະບຽບການໃນການຊຳລະ (ກູ້ຢືມ) ຂອງແຕ່ລະອົງການຈັດຕັ້ງຜູ້ໃຫ້ທຶນ ແລະ ອົງການສາກົນທີ່ບໍ່ຂຶ້ນກັບລັດຖະບານ ແມ່ນແຕກຕ່າງກັນອອກໄປ. ການຊຳລະຄືນແມ່ນໃນຮູບວັດຖຸ ຫຼື ເງິນສົດ, ມີດອກເບ້ຍ ຫຼື ບໍ່ມີດອກເບ້ຍ, ຊຳລະຄືນທັງໝົດ ຫຼື ເປັນບາງສ່ວນ ແລະ ອື່ນໆ.

*ໂດຍທົ່ວໄປຜູ້ຊາຍຈະຕາງໜ້າຄອບຄົວເຂົ້າຮ່ວມກອງປະຊຸມກ່ຽວກັບສິນເຊື່ອທີ່ບໍ່ເປັນທາງການ*

ຍ້ອນວ່າຜູ້ຊາຍເປັນຫົວໜ້າຄອບຄົວ ສະນັ້ນ ຜູ້ຊາຍຈຶ່ງເປັນຕົວແທນໃຫ້ຄອບຄົວຂອງເຂົາເຈົ້າໃນທີ່ປະຊຸມຕ່າງໆທີ່ກ່ຽວຂ້ອງກັບສິນເຊື່ອ ແລະ ຖືເປັນທຳມະດາທີ່ຜູ້ຊາຍເປັນຜູ້ຕັດສິນໃຈສຳລັບກິດຈະກຳທີ່ແມ່ຍິງເຮັດ (ຕົວຢ່າງ: ລ້ຽງໝູ, ໄກ່ ແລະ ທຍິບແສ່ວ). ທຸກຝ່າຍຮູ້ສຶກວ່າແມ່ຍິງເຮັດກິດຈະກຳສ້າງລາຍໄດ້ແມ່ນເພື່ອຜົນປະໂຫຍດໃນຄອບຄົວ ແລະ ຜູ້ຊາຍເປັນຜູ້ກູ້ຢືມ ກໍເພື່ອຜົນປະໂຫຍດຂອງຄອບຄົວ. ຜູ້ຊາຍເຮັດໜ້າທີ່ເປັນຫົວໜ້າຄອບຄົວ ແລະ ແມ່ຍິງເປັນຮອງ. ນອກຈາກນັ້ນ ແມ່ຍິງໃນຊົນເຜົ່າສ່ວນນ້ອຍບໍ່ສາມາດອອກຄຳຄິດຄຳເຫັນໄດ້ ຍ້ອນວ່າພວກເຂົາສ່ວນຫລາຍບໍ່ຮູ້ໜັງສື (ກືກໜັງສື) ແລະ ມີຄວາມຈຳກັດດ້ານທັກສະໃນການມີສ່ວນຮ່ວມໃນກອງປະຊຸມຂອງບ້ານ. ຜົນທີ່ຕາມມາ ແມ່ຍິງຊົນເຜົ່າສ່ວນນ້ອຍບໍ່ສາມາດເຂົ້າຮ່ວມຢ່າງເຕັມສ່ວນໃນການຈັດຕັ້ງກອງທຶນໝູນວຽນບ້ານ (Cocern Worldwide, 1999).

*ສະມາຊິກຄະນະກຳມະການເພດຍິງມີບົດບາດໜ້ອຍຫຼາຍໃນການຕັດສິນໃຈກ່ຽວກັບທະນາຄານເຂົ້າ ແລະ ກອງທຶນໝູນວຽນສຳລັບລ້ຽງສັດນ້ອຍ*

ມີຫລາຍອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານທີ່ສົ່ງເສີມທະນາຄານເຂົ້າ ໂດຍແມ່ນກິດຈະກຳໜຶ່ງຂອງໂຄງການພັດທະນາຊົນນະບົດໃນ ສປປລາວ. ສ່ວນຫລາຍເຂົາເຈົ້າໄດ້ສ້າງທະນາຄານເຂົ້າ, ຝຶກອົບຮົມໃຫ້ຄະນະກຳມະການທ້ອງຖິ່ນ (ໃນຊຸມຊົນ), ຊ່ວຍເຫລືອເຂົ້າແລະ ສ້າງໂຮງເກັບມ້ຽນເຂົ້າ. ເມື່ອຄອບຄົວໃດຂາດແຄນເຂົ້າກິນ ພວກເຂົາກໍສາມາດມາຢືມເຂົ້າຈາກທະນາຄານເຂົ້າໄດ້. ໂດຍອີງຕາມເງື່ອນໄຂຂອງອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານແລ້ວ ທະນາຄານເຫລົ່ານີ້ຈະກຳນົດໃຫ້ມີຄະນະກຳມະການ 3 ຄົນ, ໃນນັ້ນມີແມ່ຍິງໜຶ່ງຄົນທີ່ມາຈາກສະຫະພັນແມ່ຍິງບ້ານໃຫ້ຮັບຜິດຊອບວຽກງານບັນຊີ.

ສ່ວນຫລາຍຄະນະກຳມະການທະນາຄານເຂົ້າ ບໍ່ສາມາດຈັດຕັ້ງປະຕິບັດໜ້າທີ່ໃຫ້ຖືກຕ້ອງຕາມເງື່ອນໄຂ ແລະ ຂໍ້ກຳນົດຂອງ ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ. ຍົກຕົວຢ່າງ ຄະນະກຳມະການເພດຍິງຍັງມີບົດບາດໃນການຕັດສິນໃຈໜ້ອຍ. ດັ່ງນັ້ນ, ນາຍບ້ານ (ສ່ວນຫລາຍແມ່ນຜູ້ຊາຍ) ເປັນຜູ້ຄວບຄຸມວຽກງານທັງໝົດຂອງທະນະຄານເຂົ້າ. ຍ້ອນວ່າທະນາຄານເຂົ້າມີຈຳນວນຈຳກັດ ແລະ ບໍ່ສາມາດຕອບ

ສະໜອງການກູ້ຢືມໃຫ້ທຸກຄອບຄົວ, ດັ່ງນັ້ນ ຈຶ່ງມີຄວາມຈຳເປັນຕ້ອງໄດ້ສ້າງຂໍ້ກຳນົດກົດລະບຽບໃນການຢືມ, ຊຶ່ງເລັ່ງໃສ່ແກ້ໄຂໃຫ້ຜູ້ມີຄວາມຈຳເປັນກ່ອນ. ຍົກຕົວຢ່າງ: ທຸກໆຄົນສາມາດຢືມໄດ້ຍົກເວັ້ນຜູ້ທີ່ມີເຂົ້າກຸ້ມກິນແລ້ວ. ນອກນັ້ນກົດລະບຽບການຢືມຍັງອີງໃສ່ຈຳນວນພົນຂອງຄອບຄົວ, ຕົວຢ່າງ: ຄອບຄົວທີ່ມີຊາວໜຸ່ມ ແລະ ເດັກນ້ອຍຫລາຍຄົນກໍ່ມີຄວາມຈຳເປັນຫລາຍກວ່າຄອບຄົວທີ່ມີຜູ້ເຖົ້າຫຼາຍ. ຄອບຄົວທີ່ບໍ່ມີຜົວ (ແມ່ໝ້າຍ, ແມ່ຮ້າງ ຫລື ແມ່ຍິງເຖົ້າ) ກໍ່ຢູ່ໃນກຸ່ມເປົ້າໝາຍໃຫ້ກູ້ຢືມ.

ເນື່ອງຈາກແມ່ຍິງເປັນແຮງງານຕົ້ນຕໍໃນການລ້ຽງສັດນ້ອຍເຊັ່ນ: ໄກ່, ເປັດ ແລະ ໝູ, ດັ່ງນັ້ນຈຶ່ງສົມຄວນໄດ້ຮັບເງິນສິນເຊື່ອເພື່ອກຳເນີນກິດຈະກຳຕ່າງໆຂອງເຂົາເຈົ້າ. ເຖິງຢ່າງໃດກໍ່ຕາມ, ເວລາອີງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານເຂົ້າໄປສົ່ງເສີມວຽກງານດັ່ງກ່າວ, ມັນໄດ້ເຮັດໃຫ້ກິດຈະກຳຂອງແມ່ຍິງກາຍເປັນ "ວຽກທາງການ" ດັ່ງນັ້ນເມື່ອກາຍເປັນວຽກທາງການຈຶ່ງມີຄວາມຈຳເປັນໃຫ້ຜູ້ຊາຍຮັບຜິດຊອບວຽກດັ່ງກ່າວນຳອີກ. ນອກນັ້ນແມ່ຍິງມີສ່ວນຮ່ວມໃນການຈັດການບໍລິຫານກອງທຶນໝູນວຽນລ້ຽງສັດນ້ອຍຍັງມີໜ້ອຍ. ດັ່ງນັ້ນຈຶ່ງມີຄວາມຈຳເປັນຕ້ອງໄດ້ເອົາໃຈໃສ່ການມີສ່ວນຮ່ວມຂອງແມ່ຍິງໃນການຈັດຕັ້ງ ປະຕິບັດ ໂຄງການການເງິນຈຸລະພາກໃນເຂດພູສູງ, ໂດຍສະເພາະໃນເຂດຊົນເຜົ່າ ເພາະວ່າແມ່ຍິງມີບົດບາດໃນການລ້ຽງສັດ, ໂດຍສະເພາະແມ່ນການກຽມ ແລະ ໃຫ້ອາຫານສັດ ເຖິງແມ່ນວ່າ ແມ່ຍິງເປັນຜູ້ລ້ຽງສັດນ້ອຍ, ແຕ່ສ່ວນຫລາຍແມ່ນຜູ້ຊາຍເປັນຜູ້ຕາງໜ້າໃຫ້ຄອບຄົວໄປກູ້ຢືມເງິນ. ດັ່ງນັ້ນ ຜູ້ຊາຍໃນຖານະເປັນຫົວໜ້າຄອບຄົວເປັນຜູ້ຕາງໜ້າຄອບຄົວໃນກອງປະຊຸມຕ່າງໆ.

### 3.6. ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ສປປລາວ ຈັດຢູ່ໃນປະເທດທີ່ມີຄວາມຫລາກຫລາຍດ້ານຊີວະນາໆພັນໃນຂົງເຂດນີ້, ຖືກຈັດຢູ່ໃນອັນດັບສອງຮອງຈາກກຳປູເຈຍ ເລື່ອງ ຄວາມໜາແໜ້ນຂອງປ່າໄມ້ໃນເຂດອາຊີຕາເວັນອອກສຽງໃຕ້. ຄວາມອຸດົມສົມບູນທາງດ້ານຊີວະພາບນາໆພັນດັ່ງກ່າວໄດ້ຖືກໄພຄຸກຄາມອັນເນື່ອງມາຈາກການຫລຸດລົງຢ່າງໄວວາຂອງປ່າໄມ້. ສປປ ລາວ ແມ່ນປະເທດໜຶ່ງໃນຈຳນວນ 2-3 ປະເທດອາຊຽນ ທີ່ຍັງບໍ່ທັນມີລະບົບປົກປ້ອງ ແລະ ຂາດການຈັດຕັ້ງປະຕິບັດກົດໝາຍປ່າໄມ້ຢ່າງມີປະສິດທິພາບ.

*ແມ່ຍິງບໍ່ພຽງແຕ່ເປັນຜູ້ນຳໃຊ້ປ່າໄມ້, ແຕ່ຍັງເປັນຜູ້ຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ທີ່ມີປະສິດທິຜົນ*

ຄຽງຄູ່ກັບບົດບາດຂອງເຂົາເຈົ້າໃນການຮັບປະກັນຊີວິດການເປັນຢູ່ ແລະ ການເບິ່ງແຍງຄອບຄົວ, ແມ່ຍິງມີບົດບາດໃນການຈັດການ ແລະ ການປົກປັກຮັກສາຊັບພະຍາກອນທຳມະຊາດ. ແມ່ຍິງແມ່ນຜູ້ທີ່ນຳໃຊ້ປ່າໄມ້ຕົ້ນຕໍໃນການໄປເອົາໄມ້ຟືນ ແລະ ຜະລິດຕະພັນເຄື່ອງປ່າຂອງດົງ. ໃນຫລາຍຂົງເຂດ, ໄດ້ສະແດງໃຫ້ເຫັນວ່າແມ່ຍິງບໍ່ພຽງແຕ່ເປັນຄົນທີ່ນຳໃຊ້ປ່າໄມ້ຕົ້ນຕໍເທົ່ານັ້ນ ແຕ່ມັນຍັງເປັນຜູ້ທີ່ຄຸ້ມຄອງ ແລະ

ປົກປັກຮັກສາປ່າໄມ້. ຈາກຜົນຂອງການສຶກສາສະແດງໃຫ້ເຫັນວ່າແມ່ຍິງ ແລະ ເດັກຍິງ ໄດ້ເດີນທາງເປັນເວລາຫລາຍຄັ້ງໃນແຕ່ລະວັນເພື່ອຊອກຫາເຄື່ອງປ່າຂອງດົງເຊັ່ນ: ໜໍ່ໄມ້, ເຫັດ, ໜໍ່ຫວາຍ, ໄມ້ຟືນ ແລະ ອື່ນໆ. ການຂະຫຍາຍຕົວດ້ານການຄ້າກ່ຽວກັບຜະລິດຕະພັນເຄື່ອງປ່າຂອງດົງ ສາມາດສ້າງລາຍຮັບເພີ່ມໃຫ້ແກ່ຄອບຄົວໃນຊົນນະບົດ, ແຕ່ວ່າການຫລຸດລົງຢ່າງໄວວາຂອງເຄື່ອງປ່າຂອງດົງໃນເຂດຊົນນະບົດຍັງເຮັດໃຫ້ຄອບຄົວທີ່ທຸກຍາກພົບຂໍ້ຫຍຸ້ງຍາກໃນການຊອກຫາແຫຼ່ງອາຫານ ແລະ ຢາພື້ນເມືອງ. ໃນທີ່ສຸດແມ່ຍິງທີ່ທຸກຍາກຈະຕ້ອງໄດ້ເດີນທາງໄກກວ່າເກົ່າ ເພື່ອຊອກຫາເຄື່ອງປ່າຂອງດົງມາສູ່ຄອບຄົວຂອງເຂົາເຈົ້າ, ໂດຍສະເພາະແມ່ນ ອາຫານ ແລະ ຢາປິ່ນປົວສຸຂະພາບ. ການປັບປຸງກິດຈະກຳທີ່ເປັນການປະຢັດເວລາ ເຊັ່ນ: ຈັດຫາໂຮງສີເຂົ້າ, ນ້ຳສະອາດທີ່ຢູ່ໃກ້ໝູ່ບ້ານ ແລະ ການເກັບໄມ້ຟືນ ແລະ ຜະລິດຕະພັນເຄື່ອງປ່າຂອງດົງແບບຍືນຍົງ ສາມາດຫລຸດຜ່ອນຜົນກະທົບດ້ານລົບເຫລົ່ານີ້ (ADB, 2004). ແຕ່ວ່າໂຄງການການພັດທະນາການອະນຸລັກ ແລະ ປັບປຸງຊີວິດການເປັນຢູ່ຕ່າງໆຍັງບໍ່ທັນເອົາໃຈໃສ່ແມ່ຍິງ ແລະຍັງບໍ່ທັນເອົາໃຈໃສ່ເທົ່າທີ່ຄວນກ່ຽວກັບປະເດັນບົດບາດຍິງ-ຊາຍ/ຊົນເຜົ່າໃນການອອກແບບໂຄງການພັດທະນາ.

### *ແມ່ຍິງທຸກຍາກໄດ້ຮັບຜົນສະທ້ອນຈາກສິ່ງແວດລ້ອມທີ່ອັນຕະລາຍ ແລະ ເຊື່ອມໂຊມ*

ການປົກປັກຮັກສາສິ່ງແວດລ້ອມ ແລະ ການອະນຸລັກຮັກສາຊັບພະຍາກອນທຳມະຊາດເປັນສິ່ງຈຳເປັນໃນການສະໜັບສະໜູນການພັດທະນາແບບຍືນຍົງ. ຄົນທຸກຍາກເປັນຜູ້ໄດ້ຮັບຜົນກະທົບຫລາຍກວ່າໝູ່ຈາກສິ່ງແວດລ້ອມທີ່ເຊື່ອມໂຊມ ແລະ ຂາດການເຂົ້າເຖິງການບໍລິການພະລັງງານທີ່ສະອາດ. ແມ່ຍິງ ແລະ ເດັກຍິງທີ່ທຸກຍາກແມ່ນໄດ້ຮັບຜົນກະທົບຈາກສິ່ງແວດລ້ອມທີ່ອັນຕະລາຍ ແລະ ເຊື່ອມໂຊມຫລາຍກວ່າກຸ່ມຄົນອື່ນໆ (UNDP 2002); ພວກເຂົາໄດ້ຮັບຜົນກະທົບຈາກການບໍລິການດ້ານພະລັງງານທີ່ບໍ່ມີປະສິດທິຜົນ. ບັນຫາທາງດ້ານສຸຂະພາບມີສາເຫດມາຈາກມົນລະພິດພາຍໃນ ແລະ ນອກຄົວເຮືອນ, ຂາດໄຟຟ້າໃຊ້ ແລະ ລວມທັງການໃຊ້ເວລາດົນໃນການຊອກຫາໄມ້ຟືນ ແລະ ຕັກນ້ຳ.

### *ໄມ້ຟືນ ແມ່ນ ຕິດພັນກັບການດຳລົງຊີວິດປະຈຳວັນຂອງແມ່ຍິງ*

ໄມ້ຟືນແມ່ນສຳຄັນທີ່ສຸດສຳລັບການດຳລົງຊີວິດປະຈຳວັນຂອງຄົນລາວຫຼາຍຄົນ, ໂດຍສະເພາະປະຊາຊົນທີ່ອາໃສຢູ່ໃນເຂດຊົນນະບົດ ແລະ ນອກຕົວເມືອງ. ຂໍ້ມູນຈາກການສຳຫຼວດຂອງສູນສະຖິຕິແຫ່ງຊາດ (ສສຊ) ສະແດງໃຫ້ເຫັນວ່າ 97% ຂອງຄອບຄົວໃນ ສປປລາວ ນຳໃຊ້ໄມ້ຟືນ ແລະ ຖ່ານເຂົ້າໃນການແຕ່ງກິນ. ປະເພນີ ແລະ ຂະນົບທຳນຽມ ໄດ້ກຳນົດ ແລະ ມອບໜ້າທີ່ໃຫ້ແມ່ຍິງ, ໂດຍສະເພາະແມ່ຍິງຊົນເຜົ່າ ສ່ວນນ້ອຍ ເປັນຕົ້ນ ຊົນເຜົ່າລາວເທິງ (ມອນ-ຂະແມ), ລາວລຸ່ມ (ໄຕ-ກະໄດ) ແລະ ລາວສູງ (ມົ້ງ-ຢ້າວ), ເຖິງແມ່ນວ່າໃນໄລຍະກຳລັງຖືພາ ແລະ ເກີດລູກໃໝ່ ແມ່ຍິງກໍ່ຕ້ອງເປັນຜູ້ຮັບຜິດຊອບໄປຊອກຫາໄມ້ຟືນມາຮັບໃຊ້ໃນຄອບຄົວ (1999 ສຂບພ).

ນອກຈາກຕ້ອງໃຊ້ເວລາດົນແລ້ວ, ການຊອກຫາໄມ້ຟືນຍັງແມ່ນວຽກທີ່ໜັກສຳລັບແມ່ຍິງ, ກໍ່ໃຫ້ເກີດບັນຫາຕາມມາສຳລັບແມ່ຍິງຖືພາ, ແມ່ຍິງທີ່ລ້ຽງລູກນ້ອຍ ແລະ ຜູ້ທີ່ເຈັບເປັນ ຫລື ພິການ. ສຳລັບແມ່ຍິງຄົນໜຶ່ງທີ່ຊອກຫາໄມ້ຟືນ ເພື່ອຮັບໃຊ້ຄອບຄົວທີ່ມີຈຳນວນພົນ 5-6 ຄົນ ຕ້ອງແບກຫາບໄມ້ຟືນປະມານ 120-150 ຫາບຕໍ່ປີ. ແຕ່ລະຫາບຈະແບກໃສ່ຫລັງ ຫລື ບ່າ ໂດຍມີນ້ຳໜັກປະມານ 15-20 ກລ ແລະ ໃຊ້ເວລາ 1-3 ຊົ່ວໂມງໃນການຍ່າງ ແລະ ຕັດໄມ້ຟືນ. ອີງຕາມການປະເມີນຂອງພວກເຮົາໂດຍອີງໃສ່ການລາຍງານການນຳໃຊ້ໄມ້ຟືນປະຈຳວັນ, ຊຶ່ງສອດຄ່ອງກັບຂໍ້ມູນຂອງກະຊວງກະສິກຳ ແລະ ປ່າໄມ້ ສາມາດຄາດກະວ່າ ຊາວບ້ານໃຊ້ ໄມ້ຟືນ 1 ມ$^3$ ຕໍ່ຄົນຕໍ່ປີ.

# ບົດທີ 4

## ການມີສ່ວນຮ່ວມທາງດ້ານເສດຖະກິດ

### 4.1. ສະພາບລວມ

ການມີສ່ວນຮ່ວມທາງດ້ານເສດຖະກິດຂອງແມ່ຍິງລາວ ແມ່ນ ມີຫລາຍທີ່ສຸດຖ້າທຽບໃສ່ບັນດາປະເທດໃນພາກພື້ນ, ແຕ່ວ່າເຂົາເຈົ້າຍັງບໍ່ຖືກຍອມຮັບເທົ່າທີ່ຄວນ. ເຖິງວ່າແມ່ຍິງເປັນຜູ້ທີ່ຮັບພາລະໜັກໜ່ວງໃນການຜະລິດກະສິກຳ ແລະ ຮັບປະກັນຊີວິດການເປັນຢູ່ຂອງຄອບຄົວ, ຊຶ່ງທັງສອງຢ່າງນີ້ກໍ່ລ້ວນແລ້ວແຕ່ແມ່ນຄຸນຄ່າທາງດ້ານເສດຖະກິດ, ເຂົາເຈົ້າບໍ່ຄ່ອຍຖືກຍອມຮັບວ່າເປັນຜູ້ຜະລິດ (ຊາວນາ). ຍິ່ງໄປກວ່ານັ້ນ, ແມ່ຍິງສ່ວນຫລາຍຍັງເຮັດວຽກໃນຄອບຄົວທີ່ບໍ່ໄດ້ຮັບຄ່າຈ້າງຢູ່ຫຼາຍໆຂະແໜງການ, ຊຶ່ງ ເຮັດໃຫ້ເຂົາເຈົ້າຕ້ອງເປັນຜູ້ເພິ່ງພາເສດຖະກິດກັບຄົນອື່ນ, ເຮັດໃຫ້ມີຂໍ້ຈຳກັດດ້ານການສຶກສາ ແລະ ໂອກາດອື່ນໆ ແລະ ເປັນການກີດຂວາງທ່າແຮງໃນການສ້າງຄວາມສາມາດ ແລະ ສ້າງລາຍຮັບໃຫ້ຄອບຄົວຂອງເຂົາເຈົ້າ.

ແມ່ຍິງຈະມີບົດບາດຫລາຍໃນຂະແໜງເສດຖະກິດນອກລະບົບ, ຊຶ່ງແມ່ຍິງສ່ວນຫລາຍເປັນເຈົ້າຂອງທຸລະກິດຂະໜາດນ້ອຍ ເຊັ່ນ: ຄ້າຂາຍ ແລະ ຕຳຫູກ. ເຖິງວ່າແມ່ຍິງປະກອບສ່ວນຢ່າງໃຫຍ່ຫລວງໃນທຸລະກິດຂະໜາດນ້ອຍກໍ່ຕາມ, ແຕ່ການເຮັດທຸລະກິດຂອງແມ່ຍິງ ແມ່ນ ປະເຊີນໜ້າກັບອຸປະສັກຫຼາຍໆດ້ານ ເປັນຕົ້ນ ທາງດ້ານວັດທະນະທຳທີ່ຈຳກັດການເຄື່ອນໄຫວຂອງແມ່ຍິງ. ດ້ານຮີດຄອງວັດທະນະທຳຍັງເປັນອຸປະສັກຕໍ່ການຂະຫຍາຍທຸລະກິດຂອງແມ່ຍິງ ເຊັ່ນ: ມີຄວາມຫຍຸ້ງຍາກໃນການກູ້ຢືມເງິນ (ດັ່ງທີ່ໄດ້ກ່າວໃນບົດຜ່ານມາ). ຢູ່ໃນຂະແໜງເສດຖະກິດໃນລະບົບ (ທີ່ເປັນທາງການ) ກໍຍັງບໍ່ທັນໄດ້ຮັບການພັດທະນາເທົ່າທີ່ຄວນ ແລະ ການຈ້າງງານທັງໝົດສ່ວນຫລາຍມີຢູ່ແຕ່ໃນເຂດຕົວເມືອງ. ຄວາມຈິງແມ່ນເນື່ອງມາຈາກແຮງງານສ່ວນໃຫຍ່ເຮັດວຽກໃນຂະແໜງກະສິກຳ. ເຖິງວ່າຈະມີແມ່ຍິງຈຳນວນຫລາຍກວ່າຜູ້ຊາຍເຮັດວຽກຢູ່ໃນຂະແໜງການທີ່ເປັນທາງການ, ແຕ່ແມ່ຍິງເຮັດວຽກໃນຕຳແໜ່ງທີ່ໃຊ້ທັກສະຕ່ຳ, ແລະ ບໍ່ຄ່ອຍມີຕຳແໜ່ງສູງ. ສຸດທ້າຍເຂົາເຈົ້າຕ້ອງໄດ້ເຄື່ອນຍ້າຍແຮງງານຊຶ່ງເປັນທາງເລືອກສຳລັບແມ່ຍິງ ແລະ ຜູ້ຊາຍລາວ, ເຮັດໃຫ້ແມ່ຍິງ ແລະ ເດັກນ້ອຍມີຄວາມສ່ຽງເພີ່ມຂຶ້ນໃນສັງຄົມ.

## 4.2. ການມີສ່ວນຮ່ວມດ້ານກຳລັງແຮງງານ







ຮູບສະແດງ 3 ແລະ 4: ລວມຈຳນວນຊົ່ວໂມງເຮັດວຽກໃນຂະແໜງການຕ່າງໆ, ເປັນເປີເຊັນ, ແບ່ງຕາມເພດ *(ແຫລ່ງຂໍ້ມູນ: LECS 3)*

*ການມີສ່ວນຮ່ວມດ້ານກຳລັງແຮງງານຂອງແມ່ຍິງໃນ ສປປ ລາວ ແມ່ນ ຈັດຢູ່ໃນບັນດາປະເທດທີ່ມີກຳລັງແຮງງານແມ່ຍິງສູງທີ່ສຸດໃນພາກພື້ນ*

ການມີສ່ວນຮ່ວມດ້ານກຳລັງແຮງງານຂອງແມ່ຍິງໃນ ສປປ ລາວ ແມ່ນ ຫລາຍກວ່າ 70%, ຊຶ່ງຈັດຢູ່ໃນບັນດາປະເທດທີ່ມີກຳລັງແຮງງານແມ່ຍິງສູງທີ່ສຸດໃນພາກພື້ນ, ໂດຍມີອັດຕາສ່ວນເທົ່າກັບປະເທດກຳປູເຈຍ ທີ່ຄອບຄົວສ່ວນໃຫຍ່ອາໃສການຜະລິດກະສິກຳເພື່ອລ້ຽງຊີບ (ຄະນະກຳມະການແມ່ນ້ຳຂອງ 2003). ອັດຕາສ່ວນການມີສ່ວນຮ່ວມຂອງແມ່ຍິງຕ່ຳ ແລະ ແຕກຕ່າງກັນຫລາຍລະຫວ່າງແມ່ຍິງ ແລະ ຜູ້ຊາຍແມ່ນຢູ່ໃນພາກຕາເວັນອອກສຽງເໜືອຂອງປະເທດໄທ (ຕ່ຳກວ່າ 50% ໃນບາງແຂວງ) ແລະ ສາມຫລ່ຽມແມ່ນ້ຳຂອງ (ຕ່ຳກວ່າ 65% ໃນເກືອບທຸກແຂວງ) ແລະ ໃນ ພະນົມເປັນ ແລະ ໄພລິນ.

ການຜະລິດກະສິກຳໄດ້ຈ້າງແຮງງານປະມານ 85% ຂອງກຳລັງແຮງງານທັງໝົດ 2.4 ລ້ານ ຄົນ, ໃນນັ້ນ 54% ແມ່ນແຮງງານແມ່ຍິງ ເມື່ອທຽບກັບຜູ້ຊາຍ ມີພຽງແຕ່ 48%. ປະມານ 38% ໃນຂະແໜງອຸດສາຫະກຳແມ່ນແຮງງານແມ່ຍິງ, 41% ໃນຂະແໜງການຄ້າ, ແລະ 57% ໃນຂະແໜງບໍລິການ (UNIDO 2001). ເຖິງວ່າອັດຕາສ່ວນກຳລັງແຮງງານຂອງຍິງມີສູງກໍ່ຕາມ, ແຕ່ກໍ່ຍັງບໍ່ທັນໄດ້ຄິດໄລ່ການປະກອບສ່ວນຂອງແຮງງານດັ່ງກ່າວເຂົ້າໃນວຽກງານເສດຖະກິດ. ຂໍ້ມູນສະຖິຕິທີ່ເປັນທາງການສ່ວນຫລາຍຈະສະແດງກ່ຽວກັບອາຊີບອັນພື້ນຖານ ແລະ ໃນຂະແໜງການທີ່ເປັນທາງການທີ່ສາມາດສະແດງອອກເປັນຕົວເງິນເທົ່ານັ້ນ. ແຕ່ແມ່ຍິງສ່ວນຫລາຍເຮັດວຽກໃນຄອບຄົວທີ່ບໍ່ມີຄ່າຈ້າງ, ໂດຍທົ່ວໄປແມ່ຍິງເປັນຜູ້ຮັບຜິດຊອບວຽກໃນຄົວເຮືອນ ເປັນຕົ້ນແມ່ນ ໄປເອົາໄມ້ຟືນ ແລະ ຕັກນ້ຳ, ປັດກວດເຮືອນ, ແຕ່ງກິນ ແລະ ເບິ່ງແຍງເດັກນ້ອຍ, ຜູ້ເຖົ້າ ແລະ ຄົນເຈັບ. ນອກຈາກນັ້ນ ແມ່ຍິງຍັງຮັບຜິດຊອບໃນການຄ້າຂາຍ ແລະ ເຮັດທຸລະກິດຂະໜາດນ້ອຍ, ຊຶ່ງຖືວ່າເປັນວຽກທີ່ບໍ່ເປັນທາງການໃນຂົງເຂດພາກພື້ນລຸ່ມແມ່ນ້ຳຂອງ. ວຽກເຫລົ່ານີ້ຖືວ່າເປັນວຽກສຳຮອງ (ທີ່ສອງ) ສຳລັບແມ່ຍິງ.

## 4.3. ຂະແໜງເສດຖະກິດນອກລະບົບ (ບໍ່ເປັນທາງການ)

*ສ່ວນຫຼາຍແມ່ຍິງໃນ ສປປ ລາວ ເປັນຜູ້ເຮັດວຽກໃນຂະແໜງທີ່ບໍ່ເປັນທາງການ*

ການຂາດການສຶກສາ ແລະ ໂອກາດທາງດ້ານເສດຖະກິດເຮັດໃຫ້ແມ່ຍິງ ເຂົ້າມາເຮັດວຽກງານທີ່ບໍ່ເປັນທາງການ ແລະ ເຮັດທຸລະກິດຂະໜາດນ້ອຍ, ແມ່ຍິງສ່ວນຫຼາຍໃນ ສປປ ລາວ ເຮັດວຽກໃນຂະແໜງທີ່ບໍ່ເປັນທາງການ. ອີງຕາມການສຳຫຼວດແຫ່ງຊາດໃນປີ 1996 ກ່ຽວກັບທຸລະກິດຂະໜາດນ້ອຍ ແລະ ກາງ ເຫັນວ່າ 63% ຂອງທຸລະກິດຂະໜາດນ້ອຍ ແລະ ກາງ ແມ່ນແມ່ຍິງເປັນເຈົ້າຂອງ, ເມື່ອສົມທຽບກັບຜູ້ຊາຍມີພຽງແຕ່ 1/3 (35%) ຂອງແມ່ຍິງເທົ່ານັ້ນ, ຊຶ່ງຜູ້ຊາຍສ່ວນຫລາຍຈະເປັນເຈົ້າຂອງທຸລະກິດຂະໜາດໃຫ່ຍ (MIH-GTZ 1996). ນັກທຸລະກິດຍິງ ແມ່ນມີລະດັບການສຶກສາຕ່ຳກວ່ານັກທຸລະກິດຊາຍ; ອັດຕາສ່ວນ

ຂອງແມ່ຍິງທີ່ເປັນເຈົ້າຂອງທຸລະກິດທີ່ບໍ່ໄດ້ເຂົ້າໂຮງຮຽນແມ່ນ 22%, ຊຶ່ງນັກທຸລະກິດຜູ້ຊາຍມີພຽງແຕ່ 12%.

### *ສ່ວນຫລາຍແມ່ຍິງແມ່ນເຮັດທຸລະກິດຂະໜາດນ້ອຍ*

ທຸລະກິດທີ່ມີແມ່ຍິງເຮັດຫລາຍ ແມ່ນ ການຄ້າຂາຍຍ່ອຍ, ຄ້າຂາຍ, ບ້ານພັກ/ຮ້ານອາຫານ (ເບິ່ງພາບສະແດງ 5). ໃນຂະແໜງອຸດສາຫະກຳ, ຕັດຫຍິບ ແມ່ນວຽກສະເພາະຂອງແມ່ຍິງ (24%), ແລະ ຜູ້ຊາຍມີພຽງ 1% ເທົ່ານັ້ນ (MIH - GTZ 1996). ເກືອບ 95% ຂອງທຸລະກິດແມ່ຍິງແມ່ນເຮັດດ້ວຍມື ຊຶ່ງກົງກັນຂ້າມກັບທຸລະກິດຂອງຜູ້ຊາຍມີ 52%. ການປະກອບທຸລະກິດຂອງແມ່ຍິງສ່ວນຫລາຍ ແມ່ນເຮັດຢູ່ກັບເຮືອນ ແລະ ຢູ່ກັບຕະຫລາດ, ຊຶ່ງທຸລະກິດຂອງຜູ້ຊາຍສ່ວນຫລາຍຈະເຄື່ອນທີ່ຫລາຍກວ່າ.




ພາບສະແດງ 5: ປະເພດຂອງທຸລະກິດຂອງແມ່ຍິງ ( ແຫລ່ງຂໍ້ມູນ: ສຂບພ 2004 )

### *ກິດຈະກຳນອກຈາກພາກກະສິກຳສ້າງໂອກາດໃຫ້ແມ່ຍິງໄດ້ສ້າງລາຍຮັບ*

ນອກຈາກວຽກກະສິກຳແລ້ວ, ຍິງ-ຊາຍກໍມີໂອກາດເຮັດທຸກໆກິດຈະກຳ ເພື່ອສ້າງລາຍໄດ້ຕ່າງໆ. ໂດຍສະເພາະຢູ່ໃນເຂດຊົນນະບົດແມ່ຍິງມີໂອກາດສ້າງລາຍໄດ້ຫຼາຍກ່ວາຜູ້ຊາຍຈາກການຕ່ຳຫູກ (ຝ້າຍ ແລະ ໄໝ) ແລະ ຖັກແສ່ວ. ແມ່ຍິງຫຼາຍຄົນປູກຕົ້ນຄາມ ແລະ ຕົ້ນມອນເພື່ອລ້ຽງໝ້ອນສຳລັບຕ່ຳຫູກ (ເບິ່ງ Box 6) ສຳລັບໃຊ້ໃນຄອບຄົວ ແລະ ຂາຍໃນຕະຫຼາດທ້ອງຖິ່ນ ແລະ ເປັນສິນຄ້າສົ່ງອອກຕ່າງປະເທດ (ລາຍໄດ້ປະມານ 5 ລ້ານ ໂດລາສະຫະລັດຕໍ່ປີ).

**Box 6: ແມ່ຍິງລາວ ແລະ ວຽກງານສິລະປະຕໍ່າຫູກດ້ວຍມື**

ນັບຕັ້ງແຕ່ອະດີດ, ແມ່ຍິງລາວຕໍ່າຫູກດ້ວຍມື, ແລະ ເຄື່ອງນຸ່ງຂອງລາວສະທ້ອນໃຫ້ເຫັນເຖິງວັດທະນະທໍາ, ສາສະໜາ ແລະ ເປັນເອກະລັກທາງສາສະໜາຂອງບັນດາເຜົ່າ, ເຂດ ແລະ ບ້ານ. ຈົນເຖິງປະຈຸບັນ, ຊາວບ້ານມີມູນເຊື້ອໃນການຕໍ່າຫູກຝ້າຍ ຫລື ໄໝ, ມີການຍ້ອມໄໝ ແລະ ຕໍ່າຫູກເພື່ອຊົມໃຊ້ໃນເຮືອນຫລາຍກວ່າເພື່ອທຸລະກິດຄ້າຂາຍ. ພາຍຫລັງທີ່ປະເທດເປີດຕະຫຼາດເສດຖະກິດໃນທ້າຍປີ 1980, ເຮັດໃຫ້ອຸດສາຫະກໍາຕໍ່າຫູກດ້ວຍມືເຕີບໃຫ່ຍຂະຫຍາຍຕົວຂື້ນ. ຮ້ານຄ້າຂາຍຜະລິດຕະພັນຕໍ່າຫູກໃນບ້ານມີຈໍານວນເພີ່ມຂື້ນເພື່ອຂາຍຜົນຜະລິດສົ່ງໃຫ້ຕະຫລາດໃນເມືອງ ແລະ ສົ່ງອອກຕ່າງປະເທດ. ກົນໄກເສດຖະກິດໃໝ່ ໄດ້ສົ່ງຜົນກະທົບຕໍ່ອຸດສາຫະກໍາຕໍ່າຫູກດ້ວຍມືໃນສອງດ້ານຄື: ດ້ານທີໜຶ່ງ, ນັກທ່ອງທ່ຽວຊາວລາວ, ຊາວຕ່າງປະເທດ ແລະ ຄົນໄທ ມີໂອກາດໄດ້ພັດທະນາຕະຫລາດໃຫ່ມເພື່ອຂາຍຜົນຜະລິດຕໍ່າຫູກ ແລະ ດ້ານທີສອງ, ການນໍາເຂົ້າເສັ້ນໃຫມທີ່ຜະລິດຈາກໂຮງງານຊ່ວຍໃຫ້ຜູ້ຕໍ່າຫູກສາມາດຜະລິດສິນຄ້າມີຄຸນນະພາບສູງ. ເຖິງຢ່າງໃດກໍ່ຕາມມັນກໍ່ຍັງມີຈໍາກັດຈໍານວນໜຶ່ງ ຄື: ຍ້ອນຂຶ້ນກັບວັດຖຸດິບນໍາເຂົ້າເກີນໄປ (ໄໝ ແລະ ເສັ້ນຝ້າຍ), ເຮັດໃຫ້ການສົ່ງອອກແຜ່ນແພລາວບໍ່ຂະຫຍາຍໂຕເທົ່າທີ່ຄວນ ແລະ ບໍ່ດູນດ່ຽງທາງການຄ້າ. ເສັ້ນໄໝຂອງລາວແມ່ນແບບພື້ນເມືອງ ແລະ ເຕັກໂນໂລຢີໃນການປັ່ນດ້າຍຍັງໃຊ້ອຸປະກອນແບບພື້ນບ້ານ. ດ້ວຍເຫດຜົນນີ້ ເຮັດໃຫ້ການຜະລິດໄໝ-ດ້າຍທີ່ມີຄຸນນະພາບດີ ບໍ່ສາມາດຜະລິດໄດ້ພາຍໃນປະເທດ. ອີກດ້ານໜຶ່ງ, ຍ້ອນມີແຜ່ນແພຈາກທາງຕາເວັນຕົກເຂົ້າມາສູ່ຕະຫຼາດຂອງລາວພາຍຫຼັງເປີດເສດຖະກິດເສລີ, ປະເພນີການຕໍ່າສິ້ນໄດ້ຄ່ອຍຈືດຈາງໄປເທື່ອລະໜ້ອຍ.

## *ອຸປະສັກທີ່ສົ່ງຜົນກະທົບຕໍ່ທຸລະກິດຂອງແມ່ຍິງ ແລະ ກໍາມະກອນທີ່ເຮັດວຽກໃນຂະແໜງນອກລະບົບ*

ສິ່ງທ້າທາຍຕໍ່ກໍາມະກອນຍິງທີ່ເຮັດວຽກໃນຂະແໜງນອກລະບົບ ແມ່ນເຂົາເຈົ້າມີຄວາມຮັບຜິດຊອບຫຼາຍຢ່າງ, ມີລະດັບການສຶກສາຕໍ່າ, ມີປະສົບການໜ້ອຍ, ແລະ ການເຂົ້າເຖິງຊັບພະຍາກອນກໍ່ຍັງຈໍາກັດ. ນອກຈາກນັ້ນ ຜູ້ປະກອບການເພດຍິງທີ່ເຮັດທຸລະກິດຫາລາຍໄດ້ເຂົ້າຄອບຄົວຍັງມີເງິນລົງທຶນໜ້ອຍ ບໍ່ພຽງພໍທີ່ຈະຂະຫຍາຍທຸລະກິດ. ແມ່ຍິງຍັງມີຂໍ້ຈໍາກັດດ້ານການຕະຫຼາດ, ຂາດຈິດສໍານຶກ ແລະ ຄວາມຮູ້, ແລະ ທັກສະໃນການພັດທະນາອາຊີບ, ຊອກຫາໂອກາດໃນການພັດທະນາທຸລະກິດ, ການປັບປຸງບັນຊີຂັ້ນຕົ້ນ ແລະ ການປັບປຸງວິສາຫະກິດ. ສິ່ງທີ່ທ້າທາຍອີກຢ່າງໜຶ່ງ ແມ່ນຂໍ້ຈໍາກັດດ້ານການເຄື່ອນຍ້າຍ ແລະ ມີຈໍານວນລູກຄ້າ ແລະ ກໍາລັງຊື້ຢູ່ຕະຫຼາດພາຍໃນມີໜ້ອຍ. ຍ້ອນລະດັບການສຶກສາຂອງເຂົາເຈົ້າຕໍ່າ ແລະ ບໍ່ມີເວລາຈຶ່ງເຮັດໃຫ້ຜູ້ປະກອບການເພດຍິງພົບບັນຫາໃນເວລາໄປຂຶ້ນທະບຽນວິສາຫະກິດທີ່ມີຫລາຍຂັ້ນຕອນ, ເຂົາເຈົ້າຂາດຄວາມເຊື່ອໝັ້ນໃນການປະກອບເອກະສານທາງກົດໝາຍ ແລະ ຕິດຕໍ່ພົວພັນກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງ. ນອກຈາກນີ້ ຍັງມີສິ່ງທ້າທາຍຫຼາຍຢ່າງລວມມີ: ຂໍ້ຈໍາກັດທາງດ້ານສິນເຊື່ອ, ຂັ້ນຕອນການກູ້ຢືມເງິນທີ່ສັບສົນ, ຊາວບ້ານບໍ່ກ້າກູ້ຢືມ ແລະ ຜູ້ຢືມບໍ່ມີສັບສິນມາຄໍ້າປະກັນ.

## 4.4. ຂະແໜງເສດຖະກິດໃນລະບົບ

*ໃນຂະແໜງເສດຖະກິດໃນລະບົບມີການຈ້າງກຳມະກອນເພດຍິງຫລາຍກວ່າເພດຊາຍ, ແຕ່ວ່າ ເຂົາເຈົ້າບໍ່ມີຄວາມຊຳນານເທົ່າກັບຜູ້ຊາຍ ແລະ ສ່ວນຫລາຍເຮັດວຽກດ້ວຍມື*

ໃນ ສປປ ລາວ, ຍິງ-ຊາຍມີຄວາມສະເໝີພາບກັນໃນການເຮັດວຽກ, ຊຶ່ງໄດ້ລະບຸໄວ້ໃນກົດໝາຍແຮງງານ. ໃນປີ 1999 ມີກຳມະກອນປະມານ 37,075 ຄົນ ທີ່ເຮັດວຽກໃນຂະແໜງບໍ່ແຮ່, ຫັດຖະກຳ, ໄຟຟ້າ ແລະ ນ້ຳປະປາ. ໃນນັ້ນ 54% ແມ່ນແມ່ຍິງ ແລະ 46% ແມ່ນຜູ້ຊາຍ. ປະມານ 70% ແມ່ນກຳມະກອນຝ່າຍຜະລິດ, 13% ແມ່ນວິຊາການເຕັກນິກ, 10% ແມ່ນຜູ້ບໍລິຫານ ແລະ 7% ແມ່ນຜູ້ທີ່ເຮັດວຽກເປັນບາງລະດູການ ແລະ ຊົ່ວຄາວ. ຈຳນວນພະນັກງານຝ່າຍຜະລິດທີ່ມີຫລາຍກວ່າໝູ່ ແມ່ນໃນອຸດສາຫະກຳຕັດຫຍິບ ຊຶ່ງ 85% ແມ່ນແມ່ຍິງ. ຖ້າພວກເຮົາບໍ່ນັບດ້ານອຸດສະຫະກຳຕັດຫຍິບ,ຈຳນວນຜູ້ໃຊ້ແຮງງານເພດຍິງໃນດ້ານອຸດສະຫະກຳການຜະລິດແມ່ນປະມານ 33% ແລະ ຜູ້ຊາຍແມ່ນ 67%.

**ຕາຕະລາງ 4: ເປີເຊັນຂອງພະນັກງານໂດຍແບ່ງຕາມເພດ ແລະ ປະເພດຂອງວຽກ**

| | ກຳມະກອນຜູ້ຜະລິດ | ວິຊາການ | ຜູ້ບໍລິຫານ | ກຳມະກອນທີ່ເຮັດວຽກຊົ່ວຄາວ ແລະ ບາງລະດູການ | ລວມ |
|---|---|---|---|---|---|
| **ຊາຍ** | 37 | 86 | 62 | 28 | 45 |
| **ຍິງ** | 63 | 14 | 38 | 72 | 55 |
| **ລວມ** | 100 | 100 | 100 | 100 | 100 |

*ແຫລ່ງຂໍ້ມູນ: MIH, 1999*

ເຖິງວ່າມີຈຳນວນແມ່ຍິງຫຼາຍໃນຂະແໜງອຸດສະຫະກຳ, ແຕ່ສ່ວນໃຫ່ຍແລ້ວເຂົາເຈົ້າເຮັດວຽກໃນລະດັບຕ່ຳ ແລະ ບໍ່ມີຕຳແໜ່ງເປັນຜູ້ຈັດການ ຫຼື ຜູ້ຕັດສິນບັນຫາ, ເຖິງວ່າເຂົາເຈົ້າຈະມີການສຶກສາ ແລະ ຄຸນວຸດທິເທົ່າກັບຜູ້ຊາຍກໍ່ຕາມ. ອີງຕາມການສຳຫຼວດດຽວກັນ, ຈຳນວນຕົວເລກພະນັກງານຍິງແມ່ນມີຫລາຍໃນຕຳແໜ່ງກຳມະກອນຝ່າຍຜະລິດ, ຕຳແໜ່ງເຮັດວຽກຊົ່ວຄາວ ແລະ ເປັນບາງລະດູການ. ໃນຂະແໜງຜະລິດຕະພັນທີ່ບໍ່ແມ່ນໂລຫະ (ອຸດສາຫະກຳດິນຈີ່ ແລະ ກະເບື້ອງ) ແລະ ອຸດສາຫະກຳຜະລິດໂລຫະຂັ້ນພື້ນຖານມີຜູ້ໃຊ້ແຮງງານຕາມລະດູການ ແລະ ຊົ່ວຄາວຫຼາຍກ່ວາອຸດສາຫະກຳອື່ນໆ. ໃນຈຳນວນກຳມະ ກອນທັງໝົດ 1.559 ຄົນ ມີແຮງງານແມ່ຍິງຈຳນວນ 800 ຄົນໃນວິສາຫະກິດເຫຼົ່ານີ້.

*ເງິນເດືອນຂອງແມ່ຍິງຕ່ຳກວ່າຜູ້ຊາຍ*

ຄວາມແຕກຕ່າງທາງດ້ານເງິນເດືອນ, ຄ່າແຮງງານ ແລະ ລາຍຮັບອື່ນໆແມ່ນເປັນເລື້ອງທຳມະດາສຳລັບພະນັກງານຍິງ ແລະ ຊາຍ. ສະເລ່ຍເງິນເດືອນ ແລະ ຄ່າແຮງງານຂອງພະນັກງານຍິງ ໃນຂະແໜງອຸດສາຫະກຳຕັດຫຍິບ ແລະ ຕ່ຳແຜ່ນ ແມ່ນຕ່ຳກວ່າພະນັກງານຊາຍ. ໂດຍສະເລ່ຍແລ້ວຄ່າຈ້າງແຮງງານໃນຂະແໜງບໍ່ແຮ່ຈະສູງກວ່າໃນຂະແໜງອຸດສາຫະກຳອື່ນໆ. ໃນປີ 1999 ພະນັກງານຊາຍມີລາຍຮັບສະເລ່ຍເຖິງ 2,66 ລ້ານກີບ ແລະ ພະນັກງານຍິງແມ່ນ 1,41 ລ້ານກີບ ຕໍ່ປີ. ສາເຫດແມ່ນມາຈາກລາຍຮັບ ແລະ ເງິນເດືອນຂອງແມ່ຍິງໃນຂະແໜງອຸດສາຫະກຳຕັດຫຍິບຊຶ່ງມີກຳມະກອນແມ່ຍິງເຮັດວຽກຫລາຍຕ່ຳກວ່າເງິນເດືອນຂອງພະນັກງານຊາຍທີ່ເຮັດວຽກໃນຂະແໜງການອຸດສະຫະກຳອື່ນໆ.

*ໂອກາດທີ່ໄດ້ຮັບການສົ່ງເສີມຂອງແມ່ຍິງຍັງຈຳກັດຍ້ອນຖືກຈຳແນກ ແລະ ຂາດການສຶກສາ*

ການຂາດການສຶກສາຂອງແມ່ຍິງ ເປັນຂໍ້ຈຳກັດຕໍ່ການເຂົ້າເຖິງການເຮັດວຽກງານໃນຂະແໜງການທີ່ເປັນທາງການ. ຖ້າຖືກຈ້າງງານກໍ່ເປັນການຍາກສຳລັບແມ່ຍິງທີ່ຈະກ້າວຂຶ້ນໄປສູ່ລະດັບຜູ້ຈັດການ. ຍ້ອນຕະຫລາດແຮງງານມີຈຳນວນຈຳກັດ ແລະ ມີການແຂ່ງຂັນກັນສູງ, ສິ່ງເຫຼົ່ານີ້ຍິ່ງເປັນອຸປະສັກຕໍ່ແມ່ຍິງໃນການພັດທະນາຄວາມຮູ້ ແລະ ປະສົບການເພື່ອໃຫ້ສາມາດເຮັດວຽກໃນຕຳແໜ່ງຜູ້ຈັດການຍິ່ງມີຂໍ້ຈຳກັດ. ນອກຈາກນັ້ນ ນະໂຍບາຍການຈ້າງງານ ແລະ ຮັບພະນັກງານຍັງຈຳແນກແມ່ຍິງ, ຍິ່ງໄປກວ່ານັ້ນການຮັບພະນັກງານໃໝ່ ແລະ ການເລື່ອນຕຳແໜ່ງງານໃນອົງການຈັດຕັ້ງໃດໜຶ່ງກໍ່ເຂົ້າຂ້າງຝ່າຍຊາຍ. ຂໍ້ຈຳກັດອື່ນໃນການຈ້າງງານຂອງແມ່ຍິງລວມມີການຂາດຂໍ້ມູນ ແລະ ມີຂໍ້ຈຳກັດໃນການເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບອາຊີບ ແລະ ແມ່ຍິງແບກຫາບຫລາຍວຽກ.

**4.5. ການເຄື່ອນຍ້າຍແຮງງານ**

*ການເຄື່ອນຍ້າຍແຮງງານຂອງກຳມະກອນລາວ ແມ່ນ ທາງເລືອກໜຶ່ງທີ່ມີແນວໂນ້ມເພີ່ມຂຶ້ນ*

ຍ້ອນການຂະຫຍາຍຕົວຂອງເສດຖະກິດໃນເຂດຊົນນະບົດ ແລະ ການຄົມມະນາຄົມທີ່ດີຂຶ້ນ, ການເຄື່ອນຍ້າຍແຮງງານແບບຊົ່ວຄາວ ແລະ ຖາວອນ, ພາຍໃນປະເທດ ແລະ ຂ້າມແດນແມ່ນທາງເລືອກໜຶ່ງທີ່ມີແນວໂນ້ມເພີ່ມຂຶ້ນ. ຢູ່ພາຍໃນປະເທດການເຄື່ອນຍ້າຍແຮງງານແບບຊົ່ວຄາວຈະແມ່ນເລື້ອງປົກກະຕິສຳລັບແມ່ຍິງ ແລະ ຊາຍເພື່ອມາຮັບຈ້າງເຮັດວຽກແບບລາຍວັນຕາມສະຖານທີ່ຕ່າງໆໃນບໍລິເວນບ້ານໃກ້ຄຽງ. ຄ່າຈ້າງແຮງງານຈະໄດ້ຮັບເປັນເງິນສົດ ຫຼື ເປັນເຂົ້າ. ການເຄື່ອຍຍ້າຍແຮງງານຈາກຊົນນະບົດສູ່ຕົວເມືອງພາຍໃນປະເທດ ແມ່ນຍັງບໍ່ທັນມີຫລາຍຍ້ອນລັດຖະບານໄດ້ເຄັ່ງຄັດ, ແຕ່ວ່າການຄ້າມະນຸດແມ່ນມີປະກົດການເພີ່ມຂຶ້ນທີ່ຈະຕ້ອງໄດ້ເອົາໃຈໃສ່ເປັນພິເສດ. ຜູ້ຊາຍ, ໂດຍສະເພາະແມ່ຍິງ ແລະ ເດັກຍິງຖືກ

ນຳມາຈາກຊົນນະບົດສູ່ຕົວເມືອງວຽງຈັນ ແລະ ແຂວງສະຫວັນນະເຂດທາງພາກໃຕ້, ຫລັງຈາກນັ້ນຈະຖືກຂາຍຂ້າມຝັ່ງໄປປະເທດໄທ.

ການເຄື່ອນຍ້າຍແຮງງານແບບຊົ່ວຄາວ ແລະ ໄລຍະຍາວໄປປະເທດໄທ ແມ່ນເພື່ອຊອກຫາວຽກເຮັດງານທຳເພື່ອສ້າງຖານະໃຫ້ຄອບຄົວ, ໂດຍສະເພາະ ປະຊາຊົນທີ່ດຳລົງຊີວິດຢູ່ຕາມເຂດຊາຍແດນ, ເພື່ອແລກປ່ຽນກັບລາຍໄດ້ທີ່ມີຄວາມສ່ຽງ. ນັບຕັ້ງແຕ່ປີ 2002 ເປັນຕົ້ນມາ, ເຖິງວ່າ ລັດຖະບານລາວ ແລະ ໄທ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈເພື່ອອະນຸຍາດໃຫ້ຄົນລາວທີ່ມີຈຸດປະສົງໄປເຮັດວຽກຢູ່ປະເທດໄທຖືກຕ້ອງຕາມກົດໝາຍກໍ່ຕາມ, ຈົນເຖິງປະຈຸບັນນີ້ ຍັງມີແຮງງານອົບພະຍົບ ຈາກ ສປປລາວ ໄປເຮັດວຽກຢູ່ໄທແບບຜິດກົດໝາຍ. ສະພາບເຊັ່ນນີ້ມີແນວໂນ້ມເພີ່ມຂຶ້ນຍ້ອນວ່າພົນລະເມືອງຂອງລາວມີເປີເຊັນຈຳນວນຊາວໜຸ່ມສູງ (ປະມານ 40% ຫລື ຫລາຍກວ່າ ແມ່ນມີອາຍຸ ຕ່ຳກວ່າ 15 ປີ), ພ້ອມກັບ ການຂາດໂອກາດໃນການຈ້າງງານພາຍໃນປະເທດ ແລະ ຄວາມຕ້ອງການແຮງງານ ລາຄາຖືກໃນປະເທດໄທ. ຢູ່ໃນເຂດຕົວເມືອງຂອງ ສປປລາວມີລາຍຮັບຈາກການເຄື່ອນຍ້າຍແຮງງານສູງທີ່ສຸດ (LECS II data) ເພາະວ່າມີໂອກາດໃນການຈ້າງຫຼາຍກວ່າເຂດອື່ນ.

### *ຈຳນວນແມ່ຍິງ ແລະ ເດັກຍິງເຄື່ອນຍ້າຍແຮງງານຫຼາຍກວ່າຜູ້ຊາຍ ແລະ ເດັກຊາຍ*

ອີງຕາມບົດລາຍງານ “ການສຳຫລວດການເຄື່ອນຍ້າຍແຮງງານໃນແຂວງຄຳມ່ວນ, ສະຫວັນນະເຂດ ແລະ ຈຳປາສັກ” ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການແຮງງານສາກົນ, ຈຳນວນພົນລະເມືອງທີ່ເຄື່ອນຍ້າຍແຮງງານມີຈຳນວນເຖິງ 7% ຂອງຈຳນວນທັງໝົດ, ໃນນັ້ນ 56% ແມ່ນແມ່ຍິງ ແລະ 44% ແມ່ນຜູ້ຊາຍ. ໃນກຸ່ມອາຍຸ 10-17 ປີ, ມີ ເດັກຍິງເຄື່ອນຍ້າຍແຮງງານຫລາຍກວ່າເດັກຊາຍ, ເດັກຍິງມີຄວາມສ່ຽງສູງທີ່ຈະຕົກເປັນເຫຍື່ອຂອງການຄ້າມະນຸດ ແລະ ຖືກສວຍໃຊ້ແຮງງານ. ການເຄື່ອນຍ້າຍແຮງງານສ່ວນຫລາຍແມ່ນໃນກຸ່ມຊາວໜຸ່ມ (18-35 ປີ) ມີສູງເຖິງ 74% ຂອງພົນລະເມືອງທີ່ເຄື່ອນຍ້າຍແຮງງານ.

### *ການເຄື່ອນຍ້າຍແຮງງານສ່ວນຫຼາຍແມ່ນໄປປະເທດໄທ*

ໃນບັນດາປະຊາກອນທີ່ເຄື່ອນຍ້າຍແຮງງານ, ຈຳນວນ 80% ແມ່ນໄປຕ່າງປະເທດ ສ່ວນທີ່ຫລາຍແມ່ນຢູ່ພາຍໃນປະເທດ. ແຂວງສະຫວັນນະເຂດ ມີຈຳນວນຜູ້ເຄື່ອນຍ້າຍແຮງງານໄປຕ່າງປະເທດສູງທີ່ສຸດ (87.8%), ຕໍ່ມາແມ່ນແຂວງຈຳປາສັກ (71.5%) ແລະ ແຂວງຄຳມ່ວນ (44.7%). ໃນຈຳນວນຂອງປະຊາກອນເຄື່ອນຍ້າຍແຮງງານໄປຕ່າງປະເທດ ສ່ວນຫຼາຍ (81%)ແມ່ນ ໄປປະເທດໄທ, 9% ໄປສະຫະລັດອາເມລິກາ, 8% ໄປບັນດາປະເທດທີ່ໃກ້ຄຽງ, 0.5% ໄປທະວີບຢູໂລບ. ແຂວງຈຳປາສັກ ມີເປີເຊັນສູງທີ່ສຸດທີ່ເຄື່ອນຍ້າຍແຮງງານໄປປະເທດໄທ (84%). ມີຫລາຍກວ່າ 87% ຂອງຈຳນວນຜູ້ເຄື່ອນຍ້າຍແຮງ

ງານໄປໄທແມ່ນມາຈາກຄອບຄົວທີ່ທຸກຍາກ, ຊຶ່ງກວມເອົາ 20% ຂອງຄົວເຮືອນຕົວຢ່າງທັງໝົດ ແລະ 84% ແມ່ນເຄື່ອນຍ້າຍແຮງງານມາຈາກເຂດຕົວເມືອງ.

ນອກຈາກນັ້ນ, 74% ຂອງແຮງງານທີ່ອົບພະຍົບໄປປະເທດໄທແມ່ນໄປໃນໄລຍະ 3 ປີຜ່ານມາ (2000-2003), ຊຶ່ງ ມີ ປະມານ 5% ອົບພະຍົບໄປກ່ອນຈະມີການສໍາຫລວດແຮງງານທີ່ໄປເຮັດວຽກຢູ່ໄທ. ໂດຍລວມແລ້ວ ມີຫລາຍກວ່າເຄິ່ງໜຶ່ງຂອງຜູ້ເຄື່ອນຍ້າຍແຮງງານ (54%) ໄດ້ສົ່ງເງິນມາໃຫ້ຄອບຄົວ, ປະມານ 46% ບໍ່ສົ່ງມາເລີຍ, 42% ໃນກຸ່ມອາຍຸ 18-25 ປີ ບໍ່ໄດ້ສົ່ງເງິນມາໃຫ້ຄອບຄົວເລີຍ.

ຫົວໜ້າຄອບຄົວໄດ້ຖືກຖາມວ່າ ເຂົາເຈົ້າໄດ້ຮັບຂໍ້ມູນຂ່າວສານກ່ຽວກັບຊີວິດການເປັນຢູ່ ແລະ ສາມາດຕິດຕໍ່ກັບສະມາຊິກຄອບຄົວທີ່ໄປເຮັດວຽກຢູ່ໄທ ຫລື ບໍ່. ຈໍານວນ 67% ຂອງຜູ້ທີ່ເຄື່ອນຍ້າຍໄປເຮັດວຽກຢູ່ປະເທດໄທ ຕອບວ່າບໍ່ມີ ບັນຫາຫຍັງຫຍຸ້ງຍາກ ແລະ ພໍໃຈກັບເງື່ອນໄຂການເຮັດວຽກຂອງເຂົາເຈົ້າ, 3% ພົບກັບບັນຫາ ແລະ ຄວາມຫຍຸ້ງຍາກ, ແຕ່ວ່າມີເຖິງ 29% ບໍ່ໄດ້ສົ່ງຂ່າວກັບບ້ານເລີຍຕັ້ງແຕ່ອອກຈາກບ້ານໄປ.

# ບົດທີ 5

## ການເຂົ້າເຖິງການສຶກສາ

### 5.1. ສະພາບລວມ

ເຖິງວ່າ ສປປລາວ ໄດ້ປັບປຸງການສຶກສາທາງດ້ານປະລິມານ ແລະ ຄຸນນະພາບ ໃນສອງສາມທົດສະວັດທີ່ຜ່ານມາ, ແຕ່ສະພາບການສຶກສາຍັງຕໍ່າກວ່າໝູ່ ຖ້າສົມທຽບກັບບັນດາປະເທດ ໃນເຂດອາຊີຕາເວັນອອກ ແລະ ການບໍລິການດ້ານການສຶກສາຍັງບໍ່ທັນກະຈາຍໄປທົ່ວເຖິງປະຊາກອນ ແລະ ທົ່ວທຸກຂົງເຂດຂອງປະເທດ. ການເຂົ້າເຖິງການສຶກສາຍັງມີຄວາມແຕກຕ່າງກັນຢ່າງຊັດເຈນລະຫວ່າງ ເຂດຕົວເມືອງ ແລະ ຊົນນະບົດ, ແລະ ລະຫວ່າງເຂດທີ່ມີຖະໜົນຫົນທາງໄປເຖິງ ແລະ ເຂດບໍ່ມີຫົນທາງໃນເຂດຊົນນະບົດ. ສ່ວນຫລາຍແມ່ນຄອບຄົວຊົນເຜົ່າທີ່ມີພົນລະເມືອງໜ້ອຍ ແມ່ນກຸ່ມທີ່ດ້ອຍໂອກາດກວ່າໝູ່ ທີ່ບໍ່ໄດ້ເຂົ້າໂຮງຮຽນ ແລະ ບໍ່ໄດ້ຮັບການບໍລິການດ້ານການສຶກສາເທົ່າທີ່ຄວນ.

ເປັນທີ່ສັງເກດເຫັນໄດ້ຢ່າງຊັດເຈນວ່າ ເດັກນ້ອຍຍິງ ແລະ ເດັກຊົນເຜົ່າ ອາໃສໃນເຂດຫ່າງໄກສອກຫລີກບໍ່ໄດ້ເຂົ້າໂຮງຮຽນ. ປົກກະຕິແລ້ວ ໃນເຂດຫ່າງໄກສອກຫຼີກ ເດັກນ້ອຍໄດ້ເຂົ້າໂຮງຮຽນປະຖົມຊ້າກວ່າເກນອາຍຸ. ໃນ ບັນດາ 47 ເມືອງທຸກຍາກທີ່ສຸດຂອງປະເທດ ມີ 60% ຂອງເດັກນ້ອຍ ອາຍຸ 6 ປີ ບໍ່ໄດ້ ເຂົ້າໂຮງຮຽນ (NGPES, 2004). ຍັງມີຊ່ອງຫວ່າງທີ່ແຕກໂຕນກັນລະຫວ່າງການສຶກສາເດັກຍິງ ແລະ ເດັກຊາຍທີ່ຮຽນຢູ່ຊັ້ນມັດທະຍົມ ແລະ ມະຫາວິທະຍາໄລ. ເຖິງຢ່າງໃດກໍ່ຕາມ ລັດຖະບານກໍ່ມີບາດກ້າວປັບປຸງເພື່ອຫຼຸດຊ່ອງຫວ່າງດັ່ງກ່າວໄດ້ລະດັບໃດໜຶ່ງໃນຕົວເມືອງ, ແຕ່ຍັງບໍ່ສາມາດປັບປຸງການສຶກສາຂອງເດັກຍິງໃນເຂດຊົນນະບົດໄດ້ເທົ່າທີ່ຄວນ. ການສຶກສາຂອງແມ່ຍິງໃນເຂດຕົວເມືອງ ແລະ ຊົນນະບົດຍັງແຕກຕ່າງກັນຫລາຍ. ອັດຕາການກືກໜັງສືທັງເດັກຍິງ ແລະ ເດັກຊາຍຍັງສູງ, ການເຂົ້າເຖິງການສຶກສາຊັ້ນມັດທະຍົມ ແລະ ມະຫາວິທະຍາໄລຍັງມີຈຳກັດ. ປະມານ 70% ຂອງນັກຮຽນທີ່ເຂົ້າຊັ້ນປະຖົມ 1 ຮຽນຮອດ ປີທີ 5, ຊຶ່ງໃນນັ້ນມີເປີເຊັນຂອງເດັກຍິງສູງກວ່າເດັກຊາຍ. ໃນຈຳນວນ 35% ຂອງນັກຮຽນທີ່ລົງທະບຽນຮຽນໃນຊັ້ນມັດທະຍົມແຕ່ມີພຽງ 5% ເທົ່ານັ້ນ ທີ່ສາມາດຮຽນຈົບຊັ້ນມັດທະຍົມຕາມຫລັກສູດ 6 ປີ (Ibid). ໂອກາດໃນການຝຶກອົບຮົມວິຊາຊີບຍັງຈຳກັດ ແລະ ມີເດັກນ້ອຍລາວບໍ່ເຖິງ 2% ທີ່ໄດ້ຮຽນຕໍ່ໃນລະດັບມະຫາວິທະຍາໄລ.

ມີຫຼາຍຄອບຄົວທີ່ທຸກຍາກບໍ່ເຫັນຄວາມສຳຄັນຂອງການສຶກສາຕໍ່ການປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າ, ແລະ ພໍ່ແມ່ຂາດຄວາມສົນໃຈທີ່ຈະໃຫ້ລູກໄປເຂົ້າໂຮງຮຽນ. ອຸປະສັກດ້ານພາສາ ແລະ ວັດທະນະທຳທີ່ມີຕໍ່ກັບການສຶກສາ ຊຶ່ງສິ່ງຜົນໃຫ້ການພັດທະນາມະນຸດຍັງຢູ່ໃນລະດັບຕໍ່າ ແລະ ເຮັດໃຫ້ຫຼາຍໆຊົນເຜົ່າທີ່ມີພົນລະເມືອງໜ້ອຍ ຍັງຕົກຢູ່ໃນວົງຈອນຂອງຄວາມທຸກຍາກ.

## 5.2. ການຮູ້ໜັງສື

### *ມີແມ່ຍິງລາວຫລາຍກວ່າຜູ້ຊາຍທີ່ບໍ່ສາມາດອ່ານອອກຂຽນໄດ້*

ໂດຍທົ່ວໄປແລ້ວໃນ ສປປ ລາວ ມີຜູ້ໃຫຍ່ກືກໜັງສື ປະມານ 34%, ຊຶ່ງໃນນັ້ນ ແມ່ຍິງມີອັດຕາການກືກໜັງສືສູງກວ່າຜູ້ຊາຍ (45% ແມ່ຍິງ ແລະ 23% ຜູ້ຊາຍ) (ທະນາຄານໂລກ EdStats 2002). ເວົ້າລວມແລ້ວ ຊ່ອງຫວ່າງດ້ານການສຶກສາລະຫວ່າງຍິງ-ຊາຍ ຍັງເຫັນໄດ້ຢ່າງຊັດເຈນຢູ່ໃນຄອບຄົວຊົນນະບົດ, ຄອບຄົວທີ່ທຸກຍາກ ແລະ ກຸ່ມຊົນເຜົ່າສ່ວນນ້ອຍ. ຮູບສະແດງທີ 6 ສະແດງໃຫ້ເຫັນອັດຕາສ່ວນຂອງແມ່ຍິງ ທີ່ຮູ້ໜັງສື ໃນເຂດຕົວເມືອງ ແລະ ຊົນນະບົດ. ໃນ 2 ທົດສະວັດທີ່ຜ່ານມາແມ່ນສາມາດເຮັດໃຫ້ຊ່ອງຫວ່າງການຮູ້ໜັງສືຂອງແມ່ຍິງ ແລະ ຜູ້ຊາຍແຄບລົງຢ່າງໄວວາ. ໃນ 2-3 ປີທີ່ຜ່ານມານີ້ ໄດ້ປັບປຸງການສຶກສາໃຫ້ຜູ້ທຸກຍາກ, ໂດຍສະເພາະແມ່ຍິງທີ່ທຸກຍາກໃນຕົວເມືອງໄດ້ຮັບການສຶກສາຫລາຍກວ່າເດັກຊາຍ ( King and Van de Walle 2005).




ຮູບສະແດງທີ 6:ອັດຕາການຮູ້ໜັງສືຂອງພົນລະເມືອງແຕ່ອາຍຸ 15 ປີຂຶ້ນໄປ

ແຫລ່ງຂໍ້ມູນ: ການສຳຫລວດການໃຊ້ຈ່າຍ ແລະ ຊົມໃຊ້ຂອງຄົວເຮືອນຄັ້ງທີ 3, 2002/03

ຢ່າງໃດກໍ່ຕາມ, ແມ່ນແຕ່ກຸ່ມທີ່ດຳລົງຊີວິດຢູ່ໃນຕົວເມືອງກໍ່ຍັງມີຄວາມແຕກຕ່າງກັນ; ອັດຕາສ່ວນຂອງຊົນເຜົ່າລາວ-ໄຕ ໄດ້ເຂົ້າໂຮງຮຽນຫຼາຍກວ່າຊົນເຜົ່າອື່ນໆ. ຢູ່ໃນແຕ່ລະຊົນເຜົ່າມີຜູ້ຊາຍເຂົ້າໂຮງຮຽນຫລາຍກວ່າແມ່ຍິງ, ເຖິງແມ່ນວ່າລະດັບການສຶກສາຂອງຄອບຄົວທຸກຍາກຢູ່ໃນຕົວເມືອງໄດ້ຮັບການປັບປຸງກໍ່ຕາມ, ແຕ່ຖ້າທຽບໃສ່ກຸ່ມຄົນຮັ່ງມີເຂົາເຈົ້າກໍ່ຍັງຫຼ້າຫຼັງຢູ່.

ຄວາມແຕກໂຕນດ້ານການຮູ້ໜັງສືລະຫວ່າງຍິງ-ຊາຍ ຍັງມີສູງກວ່າໝູ່ຢູ່ໃນເຂດເນີນສູງບ່ອນທີ່ມີຊົນເຜົ່າສ່ວນນ້ອຍອາໃສຢູ່ຫລາຍ. ອັດຕາການຮູ້ໜັງສືຂອງແມ່ຍິງທຸກຍາກທີ່ບໍ່ແມ່ນຊົນເຜົ່າລາວ-ໄຕໃນເຂດຊົນນະບົດແມ່ນ 29%, ຊຶ່ງແຕກຕ່າງກັນຫລາຍເມື່ອສົມທຽບກັບອັດຕາການຮູ້ໜັງສື ຂອງແມ່ຍິງຊົນເຜົ່າລາວ-ໄຕທີ່ທຸກຍາກໃນເຂດຊົນນະບົດແມ່ນ 66% (World Bank 2006). ຕົວຊີ້ບອກດ້ານການຮູ້ໜັງສືຂອງຊົນເຜົ່າຕ່າງໆແມ່ນແຕກຕ່າງກັນ, ມີພຽງແຕ່ 20% ຂອງແມ່ຍິງຊົນເຜົ່າຈີນ-ຕີເບດ ທີ່ສາມາດອ່ານອອກຂຽນໄດ້. ສຳລັບອັດຕາການຮູ້ໜັງສືຂອງແມ່ຍິງທຸກຍາກທີ່ບໍ່ແມ່ນຊົນເຜົ່າລາວ-ໄຕໃນເຂດຊົນນະບົດແມ່ນຕ່ຳກວ່າ 29%. (ເບິ່ງຮູບສະແດງທີ 7)




ຮູບສະແດງ 7: ອັດຕາການກືກໜັງສືຂອງແມ່ຍິງອາຍຸແຕ່ 14 ປີຂື້ນໄປ ແຍກຕາມ ກຸ່ມຊົນເຜົ່າ

*ແຫລ່ງທີ່ມາ: ທະນາຄານໂລກ 2005*

***ການກືກໜັງສື ແມ່ນ ມາຈາກຫລາຍສາເຫດ***

ສາເຫດຂອງການກືກໜັງສືຂອງເດັກຍິງ ແລະ ແມ່ຍິງ ມີຄວາມແຕກຕ່າງກັນໄປຕາມແຕ່ລະແຂວງ ແລະ ຕາມແຕ່ລະຊົນເຜົ່າ. ຄວາມທຸກຍາກ, ຄວາມເຊື່ອທາງດ້ານຮີດຄອງປະເພນີ, ການໃຫ້ຄຸນຄ່າແກ່ລູກຊາຍ, ພາສາ ແລະ ການຕັ້ງຖິ່ນຖານຢູ່ເຂດຫ່າງໄກເປັນປັດໃຈທີ່ສຳຄັນ. ສາເຫດອື່ນໆ ແມ່ນເດັກຍິງອອກໂຮງຮຽນຕັ້ງແຕ່ອາຍຸຍັງນ້ອຍເພື່ອຊ່ວຍວຽກຄອບຄົວ, ແຕ່ງງານແຕ່ອາຍຸຍັງນ້ອຍ ຫລື ຖືພາກ່ອນໄວອັນຄວນ. ອັດຕາການຮູ້ໜັງສືຂອງຊົນເຜົ່າຕ່ຳຄືແນວນີ້ ມັນໄດ້ສະທ້ອນໃຫ້ເຫັນວ່າ ເຂົາເຈົ້າກຳລັງປະເຊີນກັບຫລາຍບັນຫາໃນການເຂົ້າເຖິງການສຶກສາ.

## 5.3. ການເຂົ້າໂຮງຮຽນ[3]

***ອັດຕາການເຂົ້າຮຽນໃນຊັ້ນປະຖົມສຶກສາໃນ ສປປລາວ ຍັງຕໍ່າທີ່ສຸດໃນບັນດາປະເທດ ອາຊີຕາເວັນອອກ, ຊຶ່ງອັດຕາການຮູ້ໜັງສືຂອງເດັກຍິງຊົນເຜົ່າທີ່ດໍາລົງຊີວິດຢູ່ໃນເຂດຊົນນະບົດແມ່ນຕໍ່າທີ່ສຸດ***

ຕາຕະລາງທີ 5: ອັດຕາການເຂົ້າຮຽນສຸດທິຂອງຊັ້ນປະຖົມສຶກສາໃນບັນດາປະເທດອາຊີຕາເວັນອອກ, ປີ 1990-2001

| ປະເທດ | ລວມ | | ຊາຍ | | ຍິງ | |
|---|---|---|---|---|---|---|
| | 1990 | 2001 | 1990 | 2001 | 1990 | **2001** |
| ສປປລາວ | 63 | 83 | 67 | 86 | 58 | **74** |
| ກໍາປູເຈັຍ | 67 | 86 | 73 | 89 | 61 | **83** |
| ມາເລເຊຍ | 94 | 95 | 94 | 95 | 93 | **95** |
| ໄທ | 76 | 86 | 77 | 87 | 75 | **85** |
| ຫວຽດນາມ | 90 | 94 | 94 | 98 | 86 | **92** |

*ແຫລ່ງທີ່ມາ: UNESCO 2003*

ເຖິງວ່າ ໃນໄລຍະ 15 ປີຜ່ານມາ ການສຶກສາໄດ້ຮັບການປັບປຸງກໍ່ຕາມ (ຕາຕະລາງທີ 5), ແຕ່ອັດຕາການເຂົ້າຮຽນໃນຊັ້ນປະຖົມສຶກສາຢູ່ໃນ ສປປ ລາວ ແມ່ນຢູ່ໃນອັດຕາທີ່ຕໍ່າທີ່ສຸດເມື່ອທຽບໃສ່ບັນດາປະເທດໃນອາຊີຕາເວັນອອກ. ໃນທົດສະວັດທີ່ຜ່ານມາ ສປປ ລາວ ຍັງເປັນປະເທດທີ່ຍັງບໍ່ທັນສາມາດຫລຸດຜ່ອນຄວາມແຕກໂຕນລະຫວ່າງຍິງ-ຊາຍໄດ້ຢ່າງເປັນຮູບປະທໍາ. ຄວາມເປັນຈິງແລ້ວ, ອັດຕາຊ່ອງຫວ່າງລະຫວ່າງຍິງ-ຊາຍໃນການເຂົ້າຮຽນໄດ້ເພີ່ມຂຶ້ນໃນໄລຍະນີ້. ເມື່ອເວົ້າເຖິງການຮູ້ໜັງສືແລ້ວຍັງມີຄວາມແຕກຕ່າງກັນລະຫວ່າງຄົນໃນຊົນນະບົດ ແລະ ຕົວເມືອງ, ຂົງເຂດ, ຊົນເຜົ່າ ແລະ ລະຫວ່າງເພດ (ຕາຕະລາງທີ 6). ປະມານ 80% ຂອງບ້ານມີໂຮງຮຽນຊັ້ນປະຖົມ, ແຕ່ວ່າ ມີພຽງ 36% ເທົ່ານັ້ນ ທີ່ມີໂຮງຮຽນປະຖົມສົມບູນ (ມີ ຊັ້ນປໍ 1 ຮອດຊັ້ນ ປໍ 5) (ການສໍາຫລວດພົນລະເມືອງແຫ່ງຊາດ ປີ 2005). ສະຖານະການໃນເຂດພາກເໜືອຕ້ອງໄດ້ເອົາໃຈໃສ່ເປັນພິເສດ. ໃນທົ່ວປະເທດ, ມີ 90% ຂອງໂຮງຮຽນຢູ່ໃນເມືອງທຸກຍາກທີ່ສຸດແມ່ນມູນລະປະຖົມ ແລະ ນັກຮຽນຫລາຍກວ່າ 40% ເຂົ້າໂຮງຮຽນ ມູນລະປະຖົມ.

[3] ໃນປະເທດລາວລະບົບການສຶກສາແມ່ນເລີ່ມຈາກຮຽນໃນຊັ້ນປະຖົມ 5 ປີ, ຕາມດ້ວຍ 3 ປີຮຽນໃນມັດທະຍົມຕົ້ນ ແລະ 3 ປີຮຽນໃນມັດທະຍົມປາຍ.

ອັດຕາການເຂົ້າຮຽນຂັ້ນປະຖົມສຶກສາທີ່ຕ່ຳທີ່ສຸດແມ່ນເດັກຍິງ ຊົນເຜົ່າລາວ-ໄຕທີ່ອາໃສຢູ່ເຂດຊົນນະບົດ, ກົງກັນຂ້າມອັດຕາການເຂົ້າຮຽນຂອງຜູ້ຊາຍເຜົ່າລາວ-ໄຕ ແມ່ນສູງທີ່ສຸດໃນເຂດຕົວເມືອງ. ເຖິງຢ່າງໃດກໍ່ຕາມ ຍັງມີຄວາມແຕກຕ່າງກັນລະຫວ່າງຊົນເຜົ່າຕ່າງໆ ຕົວຢ່າງ: ຊົນເຜົ່າມົ້ງ-ລູມ້ຽນ ມີເດັກຍິງຊົນນະບົດພຽງແຕ່ 48% ໄດ້ເຂົ້າຮຽນໃນຂັ້ນປະຖົມ ເມື່ອທຽບໃສ່ເດັກຊາຍ ມີເຖິງ 66%. ສຳລັບຊົນເຜົ່າມອນ-ຂະແມ ມີເດັກຍິງ 57% ແລະ ເດັກຊາຍ 61% ຢູ່ໃນຊົນນະບົດໄດ້ເຂົ້າໂຮງຮຽນຂັ້ນປະຖົມສຶກສາ. ຊ່ອງຫວ່າງລະຫວ່າງຍິງ-ຊາຍ ແມ່ນໜ້ອຍກວ່າໃນຊົນເຜົ່າຈີນ-ຕິເບດ ຄື ມີເດັກຍິງພຽງແຕ່ 33% ແລະເດັກຊາຍ 39% ທີ່ອາໄສຢູ່ໃນເຂດຊົນນະບົດ ໄດ້ເຂົ້າຮຽນໃນຂັ້ນປະຖົມສຶກສາ. ໂດຍລວມແລ້ວ ທັງ 3 ຊົນເຜົ່າທີ່ບໍ່ແມ່ນຊົນເຜົ່າລາວ-ໄຕ, ຊ່ອງຫວ່າງລະຫວ່າງຍິງ-ຊາຍໃນການເຂົ້າຮຽນຂັ້ນປະຖົມໃນຕົວເມືອງຕ່ຳກວ່າໃນເຂດຊົນນະບົດ.

**ຕາຕະລາງທີ 6 : ສະເລ່ຍອັດຕາການເຂົ້າຮຽນໃນຂັ້ນປະຖົມ (ເປັນ %) ສຳລັບເດັກນ້ອຍ ອາຍຸ 6 ຫາ 12 ປີ (2002/2003)**

| ອັດຕາການເຂົ້າຮຽນ | ຕົວເມືອງ | | ຊົນນະບົດ | |
|---|---|---|---|---|
| | ຊາຍ | ຍິງ | ຊາຍ | ຍິງ |
| ລາວ-ໄຕ | 90,4 | 91,9 | 82,1 | 80,7 |
| ມອນ-ຂະແມ | 80,1 | 75,0 | 61,4 | 57,4 |
| ມົ້ງ-ລູມ້ຽນ | 87,8 | 84,5 | 66,0 | 48,3 |
| ຈີນ-ຕິເບດ | 86,5 | 100,0 | 38,7 | 32,7 |

*ແຫລ່ງທີ່ມາ: King and Van de Walle 2005, ອີງໃສ່ ການສຳຫລວດການໃຊ້ຈ່າຍ ແລະ ຊົມໃຊ້ຂອງຄົວເຮືອນ ຄັ້ງທີ 3*

ໝາຍເຫດ: ການຄາດຄະເນຕົວເລກທັງໝົດໄດ້ອີງໃສ່ນ້ຳໜັກຂອງປະຊາກອນ

### *ການຮຽນຕໍ່ຂັ້ນມັດທະຍົມແມ່ນຍັງພົບຄວາມຫຍຸ້ງຍາກ*

ໃນ ສປປ ລາວ ຍັງມີເດັກນ້ອຍຫລາຍຄົນພາຍຫລັງທີ່ຮຽນຈົບຂັ້ນປະຖົມສຶກສາແລ້ວ ບໍ່ຮຽນຕໍ່ຂັ້ນມັດທະຍົມ, ແລະມີພຽງເຄິ່ງໜຶ່ງຂອງຈຳນວນນັກຮຽນທີ່ຮຽນຈົບຂັ້ນປະຖົມ ໄດ້ສືບຕໍ່ຮຽນມັດທະຍົມຕອນຕົ້ນ. ໜ້ອຍກວ່າເຄິ່ງໜຶ່ງຂອງນັກຮຽນມັດທະຍົມຕອນຕົ້ນທີ່ ສືບຕໍ່ຮຽນໃນຂັ້ນມັດທະຍົມຕອນປາຍ ແລະມີພຽງໜຶ່ງສ່ວນສາມເທົ່ານັ້ນທີ່ຮຽນຈົບມັດທະຍົມຕອນປາຍ. ເມື່ອຮຽນຈົບຂັ້ນປະຖົມປີທີ 5 ມີຈຳນວນເດັກນ້ອຍຫຼາຍຄົນທີ່ມີອາຍຸຕ່ຳກວ່າ 12 ປີ ໄດ້ຢຸດຮຽນໃນຂັ້ນປະຖົມ (King and Van de Walle 2005). ໃນເຂດຊົນນະບົດ ມີຫລາຍກວ່າ 40 % ຂອງເດັກຍິງ ແລະ ຫລາຍກວ່າ 30% ຂອງເດັກຊາຍໄດ້ອອກໂຮງຮຽນກ່ອນບໍ່ທັນຮອດປະຖົມປີທີ 5. ສຳລັບນັກຮຽນຊົນເຜົ່າທີ່ບໍ່ແມ່ນເຜົ່າລາວ-ໄຕ ໃນເຂດຊົນນະບົດເກືອບ 50% ໄດ້ຢຸດຮຽນພາຍຫຼັງຈົບໃນຂັ້ນປະຖົມ.

**ຮູບສະແດງ ທີ 8**: ອັດຕາການເລື່ອນຊັ້ນ, ການຮຽນຄືນ ແລະການອອກໂຮງຮຽນ ສົກປີ 2003-2004




ໃນທົ່ວປະເທດ ເດັກຍິງເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນຍັງມີອັດຕາສ່ວນທີ່ຕ່ຳ. ຕົວເລກໄດ້ຊີ້ສະແດງໃຫ້ເຫັນວ່າອັດຕາການເຂົ້າຮຽນສຸດທິໃນຊັ້ນມັດທະຍົມຂອງເດັກນ້ອຍ ອາຍຸ ແຕ່ 11-16 ປີ ແມ່ນ 38% ສຳລັບເດັກຊາຍ ແລະ 32% ສຳລັບເດັກຍິງ (UNESCO 2002/2003), ແລະ ເດັກຊາຍຢຸດຮຽນໃນຊັ້ນມັດທະຍົມແມ່ນ 48% ແລະ ເດັກຍິງ 42%. ອັດຕາການເຂົ້າຮຽນສຸດທິໃນຊັ້ນມັດທະຍົມຕອນຕົ້ນໃນຕົວເມືອງແມ່ນ 48%, ຊຶ່ງເດັກນ້ອຍໃນຊົນນະບົດມີພຽງ 25% ເທົ່ານັ້ນ.

## 5.4. ອຸປະສັກໃນການເຂົ້າໂຮງຮຽນ

### *ມີຫລາຍເຫດຜົນທີ່ເປັນອຸປະສັກຕໍ່ການເຂົ້າໂຮງຮຽນຂອງເດັກນ້ອຍລາວບໍ່ວ່າໃນລະດັບຊັ້ນປະຖົມ ກໍຄື ຊັ້ນມັດທະຍົມ*

ອີງຕາມຂໍ້ມູນ LECS 3 ເຫັນວ່າ ມີຫລາຍສາເຫດທີ່ເຮັດໃຫ້ເດັກນ້ອຍບໍ່ໄປເຂົ້າໂຮງຮຽນ, ຊຶ່ງລວມມີທັງສອງດ້ານ ຄື: ດ້ານຄວາມຕ້ອງການ ແລະ ດ້ານຕອບສະໜອງ. ຄວາມທຸກຍາກ ແລະ ຂາດເຂີນຊັບພະຍາກອນ, ຈຳນວນໂຮງຮຽນມີຈຳກັດ ແລະ ຄຸນນະພາບຂອງໂຮງຮຽນບໍ່ດີ ເຮັດໃຫ້ການສືບຕໍ່ຮຽນຈາກຊັ້ນປະຖົມ ຫາມັດທະຍົມປະສົບກັບຄວາມຫຍຸ້ງຍາກ. ສິ່ງທີ່ພົບເລື້ອຍໆກໍຄື ຄອບຄົວຂາດເງິນທີ່ຈະຊື້ອຸປະກອນການສຶກສາ ແລະ ເຄື່ອງນຸ່ງ. ຕົວຢ່າງ: ເຄິ່ງໜຶ່ງຂອງຄ່າໃຊ້ຈ່າຍທັງໝົດໃນການຮຽນຊັ້ນປະຖົມແມ່ນໃຊ້ເພື່ອຊື້ເຄື່ອງນຸ່ງນັກຮຽນ, ສຳລັບຄອບຄົວທີ່ທຸກຍາກແລ້ວ (ຄອບຄົວຊົນເຜົ່າ) ເກືອບ 56% ຂອງຄ່າໃຊ້ຈ່າຍໃນຄົວເຮືອນທັງໝົດ ແມ່ນ ເພື່ອການສຶກສາຂອງລູກ. ການໃຊ້ຈ່າຍ ເພື່ອ ການສຶກສາທີ່ຫລາຍເປັນອັນດັບສອງໃນເຂດຊົນນະບົດແມ່ນຈ່າຍເພື່ອຊື້ປຶ້ມແບບຮຽນ. ນອກຈາກນັ້ນຍັງມີຄ່າໃຊ້ຈ່າຍໃນການເດີນທາງ ແລະ ຄ່າອາຫານ, ການບໍ່ມີວຽກເຮັດງານທຳຂອງອ້າຍ, ເອື້ອຍ ແລະ ບວກກັບຄ່າໃຊ້ຈ່າຍທີ່ມີລາຄາແພງເຮັດໃຫ້ພໍ່ແມ່ບໍ່ສາມາດສົ່ງໃຫ້ລູກຂອງຕົນເອງໄປຮຽນໜັງສືໄດ້.

ໃນຄວາມຈິງແລ້ວ, ຄວາມຈຳເປັນໃນການເຮັດວຽກກໍ່ເປັນເຫດຜົນສຳຄັນອັນໜຶ່ງເຮັດໃຫ້ເດັກນ້ອຍບໍ່ເຂົ້າໂຮງຮຽນ/ອອກໂຮງຮຽນ, ຊຶ່ງມີປະມານ 35-40% ຂອງເວລາໄດ້ນຳໃຊ້ເຂົ້າໃນການເຮັດວຽກບໍ່ວ່າ

ໃນຊົນນະບົດ, ຕົວເມືອງ ແລະ ທົ່ວປະເທດ (LECS 3). ເດັກຍິງໃຊ້ເວລາໃນການເຮັດວຽກຍາວກວ່າເດັກຊາຍ (42% ແລະ 36%). ເດັກບໍ່ສົນໃຈຮຽນໜັງສື ເນື່ອງຈາກເຂົ້າໃຈວ່າການສຶກສາບໍ່ມີຄວາມສຳຄັນ ແລະ ຈຳເປັນຕໍ່ຊີວິດຂອງເຂົາເຈົ້າໃນອະນາຄົດ, ຊຶ່ງມີເດັກຊາຍປະມານ 31% ແລະ ເດັກຍິງ 24% ອ້າງວ່າ ເຂົາເຈົ້າອອກໂຮງຮຽນຍ້ອນເຫດຜົນນີ້.

ເມື່ອເວົ້າເຖິງດ້ານການຕອບສະໜອງການສຶກສາແລ້ວ, ໄລຍະຫ່າງຈາກບ້ານຫາໂຮງຮຽນໄກແມ່ນເຫດຜົນຕົ້ນຕໍ, ເດັກນ້ອຍໃນຊົນນະບົດຈຳນວນຫລາຍກວ່າ 20% ແລະ ເດັກນ້ອຍໃນເມືອງຫລາຍກວ່າ 7% ກ່າວເຖິງບັນຫານີ້. ຈາກຂໍ້ມູນສະແດງໃຫ້ເຫັນວ່າ ສາມເທົ່າຂອງເດັກນ້ອຍໃນຊົນນະບົດຫຼາຍກວ່າເດັກນ້ອຍໃນຕົວເມືອງໄດ້ກ່າວວ່າໂຮງຮຽນຢູ່ຫ່າງໄກໂພດທີ່ຈະໄປໂຮງຮຽນໄດ້ (King and van de Walle 2005). ເດັກຍິງຫລາຍກວ່າເດັກຊາຍບອກວ່າ ເຂົາເຈົ້າອອກໂຮງຮຽນພາຍຫລັງຮຽນຈົບປະຖົມແລ້ວ ຍ້ອນວ່າໂຮງຮຽນໄກຫລາຍ (20% ເດັກຍິງ ແລະ 16% ເດັກຊາຍ). ໃນເຂດຊົນນະບົດເດັກນ້ອຍຊົນເຜົ່າພົບກັບບັນຫາໂຮງຮຽນໄກບ້ານ; ມີພຽງແຕ່ 4% ຂອງຊົນເຜົ່າໃນເຂດຊົນນະບົດ ໄດ້ເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນ, ຊົນເຜົ່າລາວ-ໄຕ ໃນເຂດຊົນນະບົດໄດ້ເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນ ມີ 17% ແລະ 29% ຂອງຊົນເຜົ່າລາວ-ໄຕທີ່ຢູ່ໃນຕົວເມືອງ. ມີພຽງ 1% ຂອງຊົນເຜົ່າສ່ວນໜ້ອຍໄດ້ເຂົ້າຮຽນຊັ້ນມັດທະຍົມຕອນປາຍ. ໂດຍສະເລັ່ຍໄລຍະທາງໄປໂຮງຮຽນມັດທະຍົມຕອນຕົ້ນຂອງບ້ານຊົນເຜົ່າລາວ-ໄຕ ທັງໝົດແມ່ນ 7,3 ກິໂລແມັດ, ສ່ວນບ້ານຂອງຊົນເຜົ່າອື່ນແມ່ນ 20,6 ກິໂລແມັດ. ໄລຍະທາງໄປໂຮງຮຽນສຳລັບຊົນເຜົ່າສ່ວນໜ້ອຍທີ່ຢູ່ໃນເມືອງ ແລະ ຊົນນະບົດແມ່ນໄກເທົ່າກັນ, ໃນຂະນະທີ່ຊົນເຜົ່າລາວ-ໄຕ ຢູ່ໃນຊົນນະບົດເດີນທາງໄປໂຮງຮຽນມັດທະຍົມຕອນຕົ້ນ, ປະມານ 2 ກິໂລແມັດ ຊຶ່ງໄກກວ່າຜູ້ທີ່ຢູ່ໃນຕົວເມືອງ.

ເຖິງວ່າເຂົາເຈົ້າມີໂຮງຮຽນ, ແຕ່ສິ່ງອຳນວຍຄວາມສະດວກຕ່າງໆໃນໂຮງຮຽນແມ່ນຍັງບໍ່ພຽງພໍ (ຮູບສະແດງ 9). ຍົກຕົວຢ່າງ: ມີພຽງ 25% ຂອງໂຮງຮຽນໃນຊົນນະບົດທີ່ທຸກຍາກ ມີນ້ຳດື່ມສະອາດ ແລະ ມີພຽງ 13% ເທົ່ານັ້ນທີ່ມີຫ້ອງນ້ຳ (ທະນາຄານໂລກ, 2005). ສິ່ງດັ່ງກ່າວນີ້ເປັນເຫດຜົນໜຶ່ງທີ່ພໍ່-ແມ່ບໍ່ຢາກໃຫ້ລູກຍິງໄປຮຽນໜັງສື.




**ຮູບສະແດງ 9: ສິ່ງອຳນວຍຄວາມສະດວກໃນໂຮງຮຽນໃນ ສປປລາວ**

*ແຫລ່ງທີ່ມາ: ທະນາຄານໂລກ, 2005*

ຍິ່ງໄປກວ່ານັ້ນ ຈຳນວນ 2/3 ຂອງຄູສອນໃນໂຮງຮຽນປະຖົມໃນຊົນນະບົດແມ່ນຜູ້ຊາຍ, ສິ່ງດັ່ງກ່າວນີ້ອາດຈະເປັນເຫດຜົນໜຶ່ງທີ່ພໍ່ແມ່ບໍ່ສົ່ງລູກຍິງໄປຮຽນໜັງສື. ໂຮງຮຽນປະຖົມຫລາຍແຫ່ງບໍ່ມີຫໍພັກ ຊຶ່ງສ້າງຂໍ້ຫຍຸ້ງຍາກໃຫ້ແກ່ເດັກນ້ອຍຍິງທີ່ຈະເດີນທາງໄກໄປຮຽນໜັງສືທຸກໆວັນ.

### *ຄວາມທຸກຍາກແມ່ນຕົວກຳນົດວ່າຄວນຈະເອົາໃຜໄປຮຽນໜັງສື, ຮຽນດົນປານໃດ ແລະ ຄວາມສຳເລັດຂອງການສຶກສາ*

ພົນລະເມືອງລາວປະມານ 40% ດຳລົງຊີວິດຢູ່ລຸ່ມເສັ້ນຄວາມທຸກຍາກ ແລະ ຄວາມທຸກຍາກເປັນຕົວກຳນົດຕໍ່ຜູ້ທີ່ຈະໄປເຂົ້າໂຮງຮຽນປະຖົມ, ຈະຮຽນດົນປານໃດ ແລະ ຈະໄດ້ຮັບຜົນຫຍັງແດ່. ຍ້ອນສະພາບທາງເສດຖະກິດ ແລະ ພູມມີປະເທດແຕກຕ່າງກັນ ຈຶ່ງເຮັດໃຫ້ປະຊາຊົນເຂົ້າເຖິງການສຶກສາແຕກຕ່າງກັນອອກໄປ. ກຸ່ມຄົນເຫລົ່ານີ້ລວມມີຄອບຄົວທີ່ມີລາຍຮັບຕ່ຳ, ຄອບຄົວທີ່ເວົ້າພາສາຊົນເຜົ່າ ແລະ ປະຊາຊົນຢູ່ໃນເຂດຫ່າງໄກສອກຫລີກ. ປັດໃຈເຫຼົ່ານີ້ມັກເກີດຂຶ້ນຫລາຍຢູ່ໃນເມືອງທີ່ມີຊົນເຜົ່າຫຼາຍ, ຊຶ່ງ 3 ໃນ 5 ຂອງເດັກນ້ອຍອາຍຸ 6 ປີ ບໍ່ໄດ້ເຂົ້າໂຮງຮຽນ.

ໃນຄວາມຈິງແລ້ວ, ເດັກນ້ອຍທຸກຍາກໄດ້ເຂົ້າໂຮງຮຽນໜ້ອຍກວ່າເດັກນ້ອຍຮັ່ງມີ, ຈາກການສຶກສາຄົ້ນຄວ້າພົບວ່າ ອັດຕາການເຂົ້າຮຽນແມ່ນມີຄວາມກ່ຽວພັນກັບການຊົມໃຊ້ຂອງຄອບຄົວ (King and van de Walle 2005). ໃນອີກແງ່ໜຶ່ງເດັກນ້ອຍທີ່ຢູ່ໃນຕົວເມືອງມີໂອກາດໄດ້ເຂົ້າໂຮງຮຽນຫລາຍກວ່າເດັກນ້ອຍ ທີ່ຢູ່ໃນຊົນນະບົດ (ຮູບສະແດງທີ 10). ເດັກຍິງອາດຈະອອກໂຮງຮຽນຫລາຍກວ່າເດັກຊາຍພາຍຫລັງທີ່ຮຽນຈົບຊັ້ນ ປ5 ແລ້ວ, ເດັກນ້ອຍໃນຄອບຄົວທີ່ທຸກຍາກ ອາດຈະອອກໂຮງຮຽນຫລາຍກວ່າເດັກນ້ອຍໃນຄອບຄົວທີ່ບໍ່ທຸກຍາກ ແລະ ເດັກນ້ອຍທີ່ບໍ່ແມ່ນຊົນເຜົ່າລາວ-ໄຕ ທັງຢູ່ໃນຕົວເມືອງ ແລະ ຊົນນະບົດ ( King and van de Walle 2005).

**ຮູບສະແດງທີ 10:   ພົນລະເມືອງອາຍຸແຕ່ 18 ຫາ 60 ປີ ທີ່ບໍ່ເຄີຍໄດ້ເຂົ້າໂຮງຮຽນ 2002/03**

*ແຫລ່ງຂໍ້ມູນ: King and Van de Walle 2005*




***ການເຂົ້າເຖິງການສຶກສາລະຫວ່າງເມືອງທຸກຍາກທີ່ສຸດ ແລະ ເມືອງທຸກຍາກ ອາດບໍ່ແຕກຕ່າງກັນຫລາຍທາງດ້ານປະລິມານ, ແຕ່ມີຄວາມແຕກຕ່າງທາງດ້ານຄຸນນະພາບ.***

ໂດຍອີງຕາມຕົວເລກຂອງການສຳຫຼວດໂຮງຮຽນທົ່ວປະເທດໃນ 5 ປີຜ່ານມາ ເຫັນວ່າຄວາມແຕກຕ່າງໃນການເຂົ້າເຖິງລະຫວ່າງເມືອງທຸກຍາກທີ່ສຸດ ແລະ ເມືອງທຸກຍາກໜ້ອຍແມ່ນກຳລັງຫຼຸດລົງ. ແຕ່ວ່າ, ຄວາມແຕກຕ່າງທາງດ້ານຄຸນນະພາບແມ່ນເພີ່ມສູງຂຶ້ນ. ໃນຂະນະທີ່ອັດຕາສ່ວນຂອງຈຳນວນຄູທີ່ໄດ້ຜ່ານຝຶກອົບຮົມແມ່ນເພີ່ມຂຶ້ນໃນເມືອງທຸກຍາກ, ແຕ່ພັດຕ່ຳລົງໃນເມືອງທຸກຍາກທີ່ສຸດ. ຄວາມຂາດແຄນຄູທີ່ມີຄຸນນະພາບແມ່ນຍັງສູງໃນຫຼາຍເມືອງ, ມີປະມານ 20% ຂອງຄູຊັ້ນປະຖົມ ແມ່ນບໍ່ໄດ້ຕາມມາດຕະຖານຄຸນນະພາບ. ຄວາມຂາດແຄນດັ່ງກ່າວນັ້ນ ສະແດງໃຫ້ເຫັນເຖິງການເຂົ້າເຖິງອຸປະກອນການສອນ,

ເຊັ່ນ: ປຶ້ມອ່ານຄູ່ມື ຊຶ່ງມີອັດຕາສ່ວນປຶ້ມອ່ານຫົວໜຶ່ງ ຕໍ່ ນັກຮຽນ 2.3 ຄົນ ໃນ 47 ເມືອງທຸກຍາກທີ່ສຸດ ສົມທຽບກັບປຶ້ມອ່ານ 1 ຫົວ ຕໍ່ ນັກຮຽນ 1.5 ຄົນ ໃນບັນດາຕົວເມືອງທຸກຍາກ. ຂໍ້ຈຳກັດດ້ານພາສາກໍເປັນອຸປະສັກໜຶ່ງຕໍ່ການເຂົ້າຮຽນຂອງເດັກ, ຊຶ່ງຜົນສຳຫຼວດເຫັນວ່າ ຊົນເຜົ່າສ່ວນນ້ອຍມີຈຳນວນໜ້ອຍທີ່ເຂົ້າຮຽນ ແລະ ມີອັດຕາການອອກໂຮງຮຽນ ແລະ ຮຽນຄືນແມ່ນສູງຫຼາຍ.

**Box 7: ນະໂຍບາຍການສຶກສາຂອງລັດຖະບານແຫ່ງ ສປປ ລາວ**

ລັດຖະທຳມະນູນຂອງລາວ (2003) ແລະ ກົດໝາຍວ່າດ້ວຍການສຶກສາ (2000) ໄດ້ລະບຸເຖິງສິດທິຂອງພົນລະເມືອງລາວທຸກຄົນຕໍ່ການສຶກສາ. ການສົ່ງເສີມການສຶກສາພາກບັງຄັບຂັ້ນປະຖົມ ແລະ ການພັດທະນາການສຶກສາ ທີ່ເອົາໃຈໃສ່ຊົນເຜົ່າຕ່າງໆ, ແມ່ຍິງ, ຜູ້ທຸກຍາກທີ່ສຸດ, ຄົນພິການ ແລະ ເດັກນ້ອຍຜູ້ມີພອນສະຫວັນ. ກົດໝາຍວ່າດ້ວຍການສຶກສາໄດ້ໃຫ້ທິດທາງຍຸດທະສາດການສຶກສາ 20 ປີ ແຕ່ປີ 2001 ເຖິງ ປີ 2020. ລັດຖະບານໄດ້ໃຫ້ສັດຕະຍະບັນສົນທິສັນຍາສາກົນກ່ຽວກັບການສຶກສາ ແລະ ດ້ານອື່ນໆທີ່ມີສ່ວນພົວພັນກັບການສຶກສາລວມທັງຖະແຫຼງການສາກົນວ່າດ້ວຍສິດທິມະນຸດ, ສົນທິສັນຍາຊີດໍ (CEDAW), ສົນທິສັນຍາເດັກ ແລະ ຕົກລົງຮັບຮອງເອົາ 8 ເປົ້າໝາຍສະຫັດສະຫວັດ ດ້ານການພັດທະນາ (MDGs).

ປະຈຸບັນໄດ້ສ້າງຄູ່ມືເພື່ອສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ຊົນເຜົ່າ ແລະ ສົ່ງເສີມການພັດທະນາຢ່າງມີຄວາມຍຸຕິທຳ. ບົນພື້ນຖານແນວຄວາມຄິດທີ່ວ່າການສຶກສາແມ່ນຕົວກຳນົດຕົ້ນຕໍໃນການຫຼຸດຜ່ອນຄວາມທຸກຍາກ ແລະ ໃນສົມມຸດຖານທີ່ວ່າປະຊາຊົນລາວຕ້ອງຮູ້ໜັງສື ແລະ ມີຄວາມຮູ້ເພື່ອນຳໃຊ້ເຄື່ອງມືການກະສິກຳທີ່ທັນສະໄໝ ແລະ ມີທັກສະ, ມີຄວາມສາມາດໄດ້ຕາມມາດຕະຖານເພື່ອແຂ່ງຂັນກັບສາກົນ, ແລະ ພິເສດຈະເຮັດໃຫ້ວັດທະນະທຳສັງຄົມຂອງບັນດາເຜົ່າໄດ້ຮັບການສຶກສາທີ່ເທົ່າທຽມກັນ. ການປັບປຸງລະບົບການສຶກສາຕ້ອງຮັບປະກັນວ່າເດັກຍິງ ແລະ ເດັກຊາຍມີໂອກາດເທົ່າທຽມກັນໃນດ້ານການສຶກສາ. ເປົ້າໝາຍຂອງລັດຖະບານດ້ານການສຶກສາ ແລະ ຝຶກອົບຮົມລວມມີດັ່ງລຸ່ມນີ້:

- ປັບປຸງຄຸນນະພາບຂອງການສຶກສາໃນຂັ້ນປະຖົມສຶກສາ ແລະ ສາມາດສືບຕໍ່ຮຽນໃນຂັ້ນມັດທະຍົມຕົ້ນ, ທັງນີ້ກໍ່ເພື່ອຮັບປະກັນວ່າປະຊາຊົນທຸກຄົນມີໂອກາດໄດ້ນຳໃຊ້ຄວາມຮູ້ເຂົ້າໃນໂຄງການການພັດທະນາເສດຖະກິດ-ສັງຄົມ.
- ກຳຈັດການກົກໜັງສື, ຊຶ່ງເປັນການຈັດຫາມາດຕະການໃຫ້ປະຊາຊົນທີ່ທຸກຍາກໄດ້ປັບປຸງຄຸນນະພາບຊີວິດຂອງເຂົາເຈົ້າ.
- ການຂະຫຍາຍໂຮງຮຽນວິຊາຊີບ, ເຕັກນິກ ແລະ ການສຶກສາ ຊັ້ນສູງ ເພື່ອໃຫ້ສາມາດຮອງຮັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ເພື່ອປັບປຸງອັດຕາສ່ວນທາງເສດຖະກິດ ໃສ່ການລົງທຶນພັດທະນາຊັບພະຍາກອນມະນຸດ.
- ການຝຶກອົບຮົມທັກສະຂອງກຳມະກອນ, ພະນັກງານເຕັກນິກ, ນັກວິຊາຊີບ ແລະ ປັນຍາຊົນ ໃຫ້ມີຄວາມສາມາດນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີ ທີ່ທັນສະໄໝ ເພື່ອບໍລິການຄວາມຕ້ອງການດ້ານການພັດທະນາ, ແລະ ເອົາໃຈໃສ່ປັບປຸງຄຸນນະພາບຂອງການສຶກສາແຫ່ງຊາດໄປສູ່ມາດຕະຖານສາກົນ.

## 5.5. ແຜນປະຕິບັດງານຂອງລັດຖະບານ

### *ການສຶກສາຂັ້ນພື້ນຖານເພື່ອໝົດທຸກຄົນແມ່ນເປົ້າໝາຍຂອງລັດຖະບານລາວ*

ລັດຖະບານກຳລັງສຸມໃສ່ບັນຫາການກືກໜັງສື ແລະ ຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ ທີ່ຍັງມີຢູ່ໃນຂະແໜງສຶກສາໂດຍຜ່ານແຜນປະຕິບັດງານດ້ານການສຶກສາ ເພື່ອໝົດທຸກຄົນ(Box7). ນະໂຍບາຍຂອງລັດຖະບານແມ່ນເພື່ອ "ຫຼຸດຜ່ອນການກືກໜັງສືຂອງປະຊາຊົນບັນດາເຜົ່າໃນທົ່ວປະເທດ", ໂດຍສະເພາະແມ່ນເນັ້ນໜັກໃສ່ເພື່ອປັບປຸງການສຶກສາຂອງແມ່ຍິງ ແລະ ກຸ່ມທີ່ດ້ອຍໂອກາດດ້ານການສຶກສາທີ່ອາໄສຢູ່ໃນເຂດຫ່າງໄກສອກຫຼີກເພື່ອແກ້ໄຂບັນຫາຄວາມທຸກຍາກຂອງເຂົາເຈົ້າ. ເຖິງຢ່າງໃດກໍ່ຕາມ ການສຶກສານອກລະບົບຍັງມີຂໍ້ຈຳກັດ, ເປັນຕົ້ນວ່າບຸກຄະລະກອນບໍ່ພຽງພໍ, ຂາດແຄນອຸປະກອນການຮຽນການສອນ ແລະ ຄູ່ມືຄູສຳລັບການສຶກສາຂັ້ນພື້ນຖານ ແລະ ຝຶກອົບຮົມວິຊາຊີບ. ນອກຈາກນັ້ນ ປະຊາຊົນບໍ່ຢາກຮຽນເພາະວ່າບໍ່ເຫັນຄຸນປະໂຫຍດ ແລະ ຄວາມສຳຄັນຂອງການສຶກສາຕໍ່ການແກ້ໄຂຄວາມທຸກຍາກ ແລະ ຄວາມຕ້ອງການຝຶກວິຊາຊີບໃຫ້ເດັກນ້ອຍເພື່ອສາມາດສ້າງລາຍໄດ້ໃຫ້ຄອບຄົວ.

### *ກະຊວງສຶກສາໄດ້ພະຍາຍາມເຊື່ອມບົດບາດ ຍິງ-ຊາຍ ເຂົ້າໃນແຜນງານໂຄງການ*

ໃນບັນດາກະຊວງຕ່າງໆ, ກະຊວງສຶກສາທິການ ມີຄວາມກ້າວໜ້າກວ່າໝູ່ໝົດໃນການເຊື່ອມທັດສະນະບົດບາດຍິງ-ຊາຍເຂົ້າໃນແຜນງານຂອງກະຊວງ. ແຜນງານຕົ້ນຕໍແມ່ນແຜນງານປັບປຸງການສຶກສາຂັ້ນພື້ນຖານສຳລັບເດັກຍິງທີ່ມີເປົ້າໝາຍເພື່ອປັບປຸງການສຶກສາຊັ້ນປະຖົມຂອງເດັກຍິງຊົນເຜົ່າສ່ວນນ້ອຍ ໂດຍໄດ້ຮັບການສະໜັບສະໜູນຈາກທະນາຄານພັດທະນາອາຊີ (ADB). ກະຊວງສຶກສາມີເປົ້າໝາຍແມ່ນແນໃສ່ແມ່ຍິງໃນການຈັດຕັ້ງປະຕິບັດໂຄງການການຝຶກອົບຮົມວິຊາຊີບນອກລະບົບໂດຍການສະໜັບສະໜູນຂອງອົງການ GTZ (BAFIS project). ແມ່ຍິງຊຶ່ງມີຈຳນວນສ່ວນຫຼາຍຂອງພົນລະເມືອງ ແຕ່ມີລະດັບການສຶກສາຕໍ່າ, ດັ່ງນັ້ນ, ການສຶກສານອກລະບົບ (ໃນໄລຍະ ທີໜຶ່ງຂອງໂຄງການ ໃນປີ 1998 ແມ່ນເປັນໂຄງການໃໝ່ຢູ່ໃນ ສປປ ລາວ) ຈຶ່ງເປັນບາດກ້າວທີ່ສຳຄັນຕໍ່ຄວາມສະເໝີພາບ ລະຫວ່າງຍິງ-ຊາຍ ຢູ່ໃນການສຶກສາດ້ານວິຊາຊີບ ແລະ ການຝຶກອົບຮົມ.

ມີ 51% ຂອງນັກຮຽນຍິງໃນທຸກແຜນງານຝຶກອົບຮົມ, ໂຄງການໄດ້ຮັບຜົນສຳເລັດຕາມເປົ້າໝາຍ 40% ຂອງຜູ້ເຂົ້າຮ່ວມແມ່ນແມ່ຍິງ. BAFIS ໄດ້ເປີດຝຶກອົບຮົມວິຊາຊີບທີ່ເໜັ້ນໃສ່ແບບພື້ນເມືອງໃຫ້ທັງເພດຍິງ ແລະ ຊາຍ. ມາຮອດປະຈຸບັນ, ຢ່າງໜ້ອຍ 10% ຂອງຜູ້ເຂົ້າຮ່ວມໃນການຝຶກອົບຮົມຕັດຫຍິບ ແລະ ການປຸງແຕ່ງອາຫານແມ່ນຜູ້ຊາຍ, ແລະ ແມ່ຍິງມີເຖິງ 10% ໄດ້ເຂົ້າຮ່ວມຫຼັກສູດຊ່າງໄມ້ ແລະ ການກໍ່ສ້າງ. ຄູຝຶກແມ່ຍິງມີເຖິງ 61% ໃນການສຶກສານອກລະບົບ. ເຖິງວ່າເຂົາເຈົ້າຈະຄອບງຳຢູ່ໃນກິດຈະກຳທີ່ຖືວ່າເປັນວຽກແມ່ຍິງ ເຊັ່ນ: ການຫຍິບແສ່ວ, ຕໍ່າຫູກ, ປຸງແຕ່ງອາຫານ,ການບໍລິການຫ້ອງທ່ຽວ ແລະ ອື່ນໆ, ແຕ່ຄູຝຶກແມ່ຍິງຍັງສາມາດເຮັດວຽກໃນການລ້ຽງສັດ, ກະສິກຳປູກຝັງ ໃນຂະນະດຽວກັນຄູຝຶກເພດຊາຍ ກໍ່ມີຄວາມຊຳນານດ້ານການຕັດເຄື່ອງ.

# ບົດທີ 6

## ການເຂົ້າເຖິງການປິ່ນປົວສຸຂະພາບ

### 6.1. ສະພາບລວມ

ໃນຂະແໜງສາທາລະນະສຸກ, ສປປ ລາວ ໄດ້ເຮັດສຳເລັດຜົນພໍສົມຄວນໃນຊ່ວງ10-15 ປີທີ່ຜ່ານມາ ເປັນຕົ້ນແມ່ນຫຼຸດຜ່ອນອັດຕາການຕາຍຂອງແມ່ແລະເດັກ, ຫລຸດຜ່ອນຈຳນວນເດັກທີ່ມີນ້ຳໜັກບໍ່ໄດ້ມາດຕະຖານ ແລະ ເຮັດໃຫ້ເດັກນ້ອຍໄດ້ຮັບການສັກຢາກັນພະຍາດເພີ່ມຂຶ້ນ. ເຖິງວ່າຈຳນວນພົນລະເມືອງທີ່ມີນ້ຳໃຊ້ສະອາດ ແລະ ສຸຂະອະນາໄມເພີ່ມຂຶ້ນ, ແຕ່ວ່າກໍ່ຍັງມີຄວາມແຕກຕ່າງກັນຫລາຍລະຫວ່າງຕົວເມືອງ ແລະ ຊົນນະບົດ. ເຖິງວ່າອັດຕາການຕາຍຂອງແມ່ຫຼຸດລົງ ແຕ່ກໍ່ຍັງເປັນຕົວເລກສູງສຸດທີ່ສຸດໃນຂົງເຂດ, ໂດຍມີຄ່າສະເລ່ຍແມ່ນ 530, ຊຶ່ງຍັງມີຄວາມແຕກໂຕນກັນລະຫວ່າງຊົນນະບົດ ແລະ ຕົວເມືອງ. ເຊັ່ນດຽວກັນກັບການສຶກສາ, ຍິ່ງຫ່າງໄກອອກຈາກຕົວເມືອງເທົ່າໃດຍິ່ງເຮັດໃຫ້ການເຂົ້າເຖິງການບໍລິການຮັກສາສຸຂະພາບຫຼຸດລົງເທົ່ານັ້ນ ແລະ ຄວາມແຕກໂຕນກັນລະຫວ່າງຊົນນະບົດ ແລະ ເຂດທີ່ເຂົ້າເຖິງຍາກໃນຊົນນະບົດແມ່ນນັບມື້ນັບກວ້າງອອກ. ອີກເທື່ອໜຶ່ງ, ເຊັ່ນດຽວກັນກັບວຽກງານສຶກສາ, ການເຂົ້າເຖິງການບໍລິການດ້ານສາທາລະນະສຸກຂອງຊົນເຜົ່າໃນເຂດຫ່າງໄກສອກຫຼີກຍິ່ງມີຂໍ້ຈຳກັດ, ໂດຍສະເພາະບັນຫາທີ່ເປັນຜົນກະທົບຕໍ່ແມ່ຍິງທີ່ຮັບຜິດຊອບເບິ່ງແຍງສຸຂະພາບຂອງສະມາຊິກໃນຄອບຄົວ ແລະ ສຸຂະພາບຈະເລີນພັນ.

### 6.2. ສຸຂະພາບຈະເລີນພັນ ແລະ ສຸຂະພາບເດັກ

*ອັດຕາການຕາຍຂອງແມ່ໃນເຂດຊົນນະບົດ ແລະ ຕົວເມືອງມີຄວາມແຕກຕ່າງກັນຫຼາຍ*

ສະເລ່ຍອັດຕາການຕາຍຂອງແມ່ແມ່ນ 530 ຄົນ ຕໍ່ເດັກເກີດທີ່ມີຊີວິດ 100.000 ຄົນ, ຊຶ່ງເປັນອັດຕາທີ່ສູງໃນ ສປປ ລາວ (UN, 2004). ຍິ່ງໄປກວ່ານັ້ນ ອັດຕາການຕາຍຂອງແມ່ໃນເຂດຕົວເມືອງ ແລະ ຊົນນະບົດຍັງແຕກຕ່າງກັນຫລາຍຢູ່ລະດັບ 170 ຄົນ ແລະ 580 ຕາມລຳດັບ. ສາເຫດແມ່ນມາຈາກການເກີດລູກຢູ່ໃນເຮືອນທີ່ປາສະຈາກການຊ່ວຍເຫຼືອຂອງແພດໃນເຂດຊົນນະບົດ ແລະ ຍັງເປັນສາເຫດເຮັດໃຫ້ ເດັກເກີດໃໝ່ຕາຍ (ຕາຕະ ລາງ 9). ອີງຕາມຂໍ້ມູນ, ເກືອບ 90% ຂອງແມ່ຍິງຊົນນະບົດເກີດລູກຢູ່ເຮືອນ, ຊຶ່ງແມ່ຍິງໃນຕົວເມືອງມີພຽງແຕ່ 25 ສ່ວນຮ້ອຍເທົ່ານັ້ນ. ເຖິງວ່າອັດຕາການເກີດລູກໃນເຮືອນທັງ 3 ເຂດ ຄື: ພູສູງ, ພູພຽງ ແລະ ທົ່ງພຽງຈະສູງກໍ່ຕາມ, ແຕ່ສູງກວ່າໝູ່ແມ່ນໃນບັນດາແມ່ຍິງໃນເຂດພູສູງ, ຊຶ່ງມີຈຳນວນເຖິງ 87%.

ຕາຕະລາງ 9: ສະຖານທີ່ເກີດລູກແຍກຕາມເຜົ່າ (%)

| ສະຖານທີ່ເກີດລູກ | ລາວ-ໄຕ | ຊົນເຜົ່າອື່ນໆ |
|---|---|---|
| ໂຮງໝໍເມືອງ ຫຼື ແຂວງ | 10.78 | 3.94 |
| ສຸກສາລາ | 0.61 | 0.38 |
| ຫ້ອງກວດພະຍາດເອກະຊົນ | 0.20 | 0.07 |
| ຢູ່ເຮືອນມີພະນັກງານແພດດູແລ | 10.21 | 3.42 |
| ຢູ່ເຮືອນມີໝໍຕຳແຍດູແລ | 16.8 | 8.44 |
| ຢູ່ເຮືອນມີເພື່ອນດູແລ | 54.98 | 70.90 |
| ຢູ່ເຮືອນບໍ່ມີການຊ່ວຍເຫຼືອຈາກຜູ້ໃດ | 6.02 | 9.73 |
| ອື່ນໆ | 1.02 | 3.11 |

*ແຫ່ງຂໍ້ມູນ:ການສຳຫຼວດການຮັກສາສຸຂະພາບຂັ້ນພື້ນຖານ, 1999*

***ສະຖານທີ່ເກີດລູກຂອງແມ່ຍິງຊົນເຜົ່າ ລາວ-ໄຕ ແລະ ຊົນເຜົ່າອື່ນໆມີຄວາມແຕກຕ່າງກັນຫລາຍ, ລວມທັງຄວາມແຕກຕ່າງດ້ານວັດທະນະທຳ ແລະ ເສດຖະກິດ***

ເຖິງວ່າອັດຕາການເກີດລູກຢູ່ເຮືອນຂອງຊົນເຜົ່າມອນ-ຂະແມ ແລະ ຈີນ-ຕິເບດ ສູງເຖິງ 90%, ການເກີດລູກຢູ່ກັບເຮືອນຍັງເປັນເລື່ອງທຳມະດາໃນບັນດາ 4 ກຸ່ມພາສາຊົນເຜົ່າ. ໂດຍອີງຕາມຂໍ້ມູນກ່ຽວກັບແມ່ຍິງອາຍຸລະຫວ່າງ 15-49 ປີ ສະແດງໃຫ້ເຫັນວ່າ ແມ່ຍິງຊົນເຜົ່າລາວລຸ່ມເກີດລູກຢູ່ໂຮງໝໍເມືອງ ແລະ ແຂວງຫລາຍກວ່າຊົນເຜົ່າອື່ນໆ. ຊົນເຜົ່າສ່ວນນ້ອຍມັກເກີດລູກຢູ່ເຮືອນໂດຍການຊ່ວຍເຫຼືອຈາກຄອບຄົວ ແລະ ເພື່ອນ ຫຼື ບໍ່ມີຜູ້ໃດຊ່ວຍເຫຼືອເລີຍ. 85% ຂອງແມ່ຍິງຊົນເຜົ່ານີ້ງແມ່ນເກີດລູກຢູ່ເຮືອນ ທຽບກັບ 63% ຂອງແມ່ຍິງ ລາວ-ໄຕ.

ວັດທະນະທຳ ແລະ ຮີດຄອງປະເພນີ ມີບົດບາດສຳຄັນຕໍ່ການປະຕິບັດດ້ານສາທາລະນະສຸກ ເຊັ່ນ: ສະຖານທີ່ເກີດລູກ, ການໃຊ້ໝໍຕຳແຍ ແລະ ເຮັດໝັນ. ຍົກຕົວຢ່າງ: ຕາມຮີດຄອງປະເພນີແລ້ວ, ແມ່ຍິງຊົນເຜົ່າມອນ-ຂະແມ ຈະບໍ່ເກີດຢູ່ເຮືອນ ຫຼື ສຸກສາລາ ແຕ່ໄປເກີດຢູ່ປ່າ (ADB 2001). ອີງຕາມການສຳຫລວດກ່ຽວກັບຄວາມທຸກຍາກກໍ່ມີຂໍ້ມູນແຕກຕ່າງກັນ ເຊັ່ນວ່າ. ມີລາຍງານວ່າ 35% ຂອງແມ່ຍິງທີ່ດຳລົງຊີວິດຢູ່ບ້ານທີ່ບໍ່ທຸກຍາກເກີດລູກຢູ່ໂຮງໝໍ, ທຽບໃສ່ 15% ຂອງແມ່ຍິງທີ່ດຳລົງຊີວິດຢູ່ບ້ານທຸກຍາກ ເກີດລູກຢູ່ເຮືອນຫຼືບ່ອນອື່ນທີ່ບໍ່ແມ່ນໂຮງໝໍ[4].

[4] ຕົວເລກດັ່ງກ່າວແມ່ນ ອີງຕາມຂໍ້ມູນພື້ນຖານ ທີ່ລາຍງານໂດຍ ນາຍບ້ານ (ປົກກະຕິແລ້ວແມ່ນ ຜູ້ຊາຍ) ສຳລັບ 2002/3 LECS. ໃນພາກສາທາລະນະສຸກ ຂອງ ບົດສອບຖາມ ບ້ານ LECS III ຖາມວ່າ" ບ່ອນໃດທີ່ແມ່ຍິງມັກເກີດລູກຫຼາຍທີ່ສຸດໃນບ້ານນີ້".

ແມ່ຍິງຊົນນະບົດທີ່ທຸກຍາກສ່ວນຫລາຍຈະເກີດລູກຢູ່ເຮືອນຍ້ອນວ່າເຂົາເຈົ້າບໍ່ມີສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມທີ່ຈຳເປັນເພື່ອຮັບປະກັນການເກີດລູກທີ່ປອດໄພ. ດັ່ງນັ້ນ, ແມ່ຍິງຈີນ-ຕີເບດຈຶ່ງມີຄວາມສ່ຽງຫຼາຍທີ່ສຸດໃນລະຫວ່າງເກີດລູກ ເພາະວ່າເຂົາເຈົ້າບໍ່ມັກເກີດລູກຢູ່ໂຮງໝໍ ແລະ ສ່ວນຫຼາຍບ້ານຈີນ-ຕີເບດ (76%) ແມ່ນ ບໍ່ມີນ້ຳສະອາດໃຊ້, ປະໃຫ້ໄປໂດດດ່ຽວເພື່ອໄປອອກລູກ. ການເຂົ້າເຖິງສິ່ງອຳນວຍຄວາມສະດວກກ່ອນ ແລະ ຫລັງເກີດລູກ ແລະ ການປັບປຸງນ້ຳສະອາດ ແລະ ອຸປະກອນດ້ານສຸຂະອະນາໄມແມ່ນເປັນກຸນແຈທີ່ສຳຄັນເພື່ອລຸດຜ່ອນອັດຕາການຕາຍຂອງແມ່ (ທະນາຄານ ໂລກ 2006).

### *ອັດຕາການຕາຍຂອງເດັກນ້ອຍ ແລະ ເດັກເກີດໃໝ່ ແມ່ນຫຼຸດລົງເພາະວ່າມີການສັກຢາວັກຊີນປ້ອງກັນ*

ໃນລະຫວ່າງປີ 1995-2000, ອັດຕາການຕາຍຂອງເດັກເກີດໃໝ່ (IMR) ຫຼຸດລົງ ຈາກ 104 ເຖິງ 82 ຕໍ່ ເດັກເກີດມີຊີວິດ 1000 ຄົນ ແລະ ອັດຕາການຕາຍຂອງເດັກນ້ອຍ (CMR)ກໍ່ຫລຸດລົງ ຈາກ 170 ເຖິງ 106 ຕໍ່ ເດັກເກີດມີຊີວິດ 1000 ຄົນ. ສາເຫດທີ່ເຮັດໃຫ້ມີການປັບປຸງແມ່ນຍ້ອນມີການສັກຢາປ້ອງກັນພະຍາດໃຫ້ແກ່ເດັກນ້ອຍອາຍຸຕ່ຳກວ່າ 5 ປີ. ໂດຍອີງຕາມຂໍ້ມູນຂອງກະຊວງສາທາລະນະສຸກ, ຫຼາຍກວ່າ 60% ຂອງຈຳນວນ ເດັກຕ່ຳກວ່າ 5 ປີ ແມ່ນໄດ້ຮັບການສັກຢາກັນພະຍາດ. ໃນປະຈຸບັນພົນລະເມືອງລາວເກືອບທັງໝົດແມ່ນໄດ້ຮັບການບໍລິການຈາກໂຄງການສັກຢາກັນພະຍາດ. ໂຄງການຕ້ານພະຍາດໄຂ້ປ່າໄດ້ດຳເນີນກວມເອົາ 72% ຂອງພົນລະເມືອງ ແລະ ຕົວເລກຜູ້ທີ່ນຳໃຊ້ມຸ້ງປ້ອງກັນຍຸງເພີ່ມຂຶ້ນ. ແຕ່ແນວໃດກໍ່ຕາມ, ຕົວເລກ IMR ແລະ CRM ແມ່ນຍັງສູງໃນຂົງເຂດຫ່າງໄກສອກຫຼີກບ່ອນທີ່ການເຂົ້າເຖິງການບໍລິການດ້ານສາທາລະນະສຸກຍັງຈຳກັດ (MOH, 2001).

### *ອາຍຸໃນການແຕ່ງງານຄັ້ງທຳອິດ ແລະ ລະດັບການສຶກສາມີອິດທິພົນຕໍ່ການຮັກສາສຸຂະພາບ*

ອາຍຸໃນການແຕ່ງງານຄັ້ງທຳອິດຈະກ່ຽວຂ້ອງກັບຈຸດປ່ຽນແປງຂອງຊີວິດໃນດ້ານໂອກາດທາງເສດຖະກິດ, ສັງຄົມ ແລະການສຶກສາຂອງແມ່ຍິງ ແລະ ຜູ້ຊາຍ. ອາຍຸສະເລ່ຍໃນການແຕ່ງງານຄັ້ງທຳອິດ ລະຫວ່າງເຂດຊົນນະບົດ ແລະ ຕົວເມືອງມີຄວາມແຕກຕ່າງກັນເລັກໜ້ອຍ. ໂດຍທົ່ວໄປແລ້ວ, ແມ່ຍິງທີ່ດຳລົງຊີວິດໃນເຂດຊົນນະບົດແຕ່ງງານກ່ອນແມ່ຍິງໃນຕົວເມືອງໜຶ່ງປີ ແລະ ຜູ້ຊາຍຊົນນະບົດແຕ່ງງານກ່ອນຜູ້ຊາຍໃນຕົວເມືອງ 2 ປີ. ຄວາມແຕກຕ່າງດັ່ງກ່າວແມ່ນມີຜົນກະທົບຕໍ່ການສຶກສາ ໂດຍສະເພາະແມ່ນເດັກຍິງ. ອີງຕາມຂໍ້ມູນໄດ້ສະແດງໃຫ້ເຫັນວ່າ ລະດັບການສຶກສາຂອງແມ່ສູງຂຶ້ນຈະເຮັດໃຫ້ລະດັບອັດຕາການຕາຍຂອງ ເດັກເກີດໃໝ່ ແລະ ເດັກຕ່ຳກວ່າ 5 ປີ ແມ່ນຫຼຸດລົງ (ຮູບສະແດງ 11).




ຮູບ 11: ອັດຕາການຕາຍຂອງ ເດັກເກີດໃໝ່ ແລະ ເດັກຕ່ຳກວ່າ 5 ປີ ຕໍ່ ເດັກເກີດມີຊີວິດ 1.000 ຄົນ ທຽບໃສ່ ລະດັບການສຶກສາຂອງແມ່.

*ແຫຼ່ງຂໍ້ມູນ: ການສຳຫຼວດສາທາລະນະສຸກແຫ່ງຊາດ, 2001*

ໃນປີ 1995, ການສຳຫຼວດການຈະເລີນພັນ ແລະ ການເກີດລູກຫ່າງ ໄດ້ສະຫຼຸບວ່າ ອາຍຸໃນການແຕ່ງງານຄັ້ງທຳອິດ ແລະ ການເກີດລູກຄັ້ງທຳອິດແມ່ນຫຼຸດລົງ. ຄົນຍຸກປັດຈຸບັນທີ່ມີອາຍຸ 15 -24 ປີ ແມ່ນກຳລັງແຕ່ງງານ ແລະ ສ້າງຄອບຄົວ ໃນເວລາອາຍຸຍັງໜ້ອຍໄວກວ່າຄົນລຸ້ນກ່ອນ. ໃນອະນາຄົດ, ການຕິດຕາມຕົວຊີ້ບອກບົດບາດຍິງ-ຊາຍ (ອາຍຸຂອງແຕ່ງງານຄັ້ງທຳອິດ) ແມ່ນມີຄວາມສຳຄັນ ເພື່ອວັດແທກອັດຕາການຈະເລີນພັນ, ອັດຕາການຕາຍຂອງແມ່ ແລະ ການເກີດລູກຫ່າງ. ອັດຕາການຈະເລີນພັນຫລຸດລົງຈາກ 7.1% ໃນຊ່ວງ ປີ 1990 ເປັນ 5.6% ໃນປີ 1995 ແລະ 4.9% ໃນປີ 2000 ເປັນການຊີ້ໃຫ້ເຫັນວ່າປະຊາຊົນມີຄວາມເຂົ້າໃຈເຖິງວິທີການວາງແຜນຄອບຄົວ ແລະ ການເກີດລູກຫ່າງ (NSC, 2005).

ໂຄງການການວາງແຜນຄອບຄົວ/ໂຄງການເກີດລູກຫ່າງ, ໂຄງການຊີວິດແມ່ທີ່ປອດໄພ ແລະ ໂຄງການເບິ່ງແຍງເດັກນ້ອຍຢູ່ໃນບັນດາແຂວງ, ເມືອງ ແລະ ບ້ານ ແມ່ນກວມເອົາ 203.436 ຂອງແມ່ຍິງ ແລະ ຜູ້ຊາຍລາວ. ລັດຖະບານໄດ້ສ້າງຕັ້ງແຜນງານກ່ຽວກັບການຮັກສາຊີວິດແມ່ທີ່ປອດໄພ, ການເບິ່ງແຍງເດັກນ້ອຍ ແລະ ການເກີດລູກຫ່າງ ເພື່ອຫຼຸດອັດຕາການຕາຍຂອງແມ່, ເດັກເກີດໃໝ່ ແລະ ເດັກຕ່ຳກວ່າ 5 ປີ ໃຫ້ໄດ້ 25%. ຜູ້ຊາຍກໍ່ຕ້ອງເຂົ້າຮ່ວມເພື່ອຊາບຊຶ້ງ ແລະ ມີຄວາມຮັບຮູ້ກ່ຽວກັບການວາງແຜນຄອບຄົວ. ໃນ ປີ 2002, ມີແມ່ຍິງຈຳນວນ 337 ຄົນເຮັດໝັນ, ສ່ວນຜູ້ຊາຍຍັງບໍ່ທັນມີຜູ້ໃດເຮັດໝັນ. ຜົນການສຳຫຼວດຂອງກະຊວງສາທາລະນະສຸກ ໃນປີ 2002 ພົບວ່າ ໃນຈຳນວນ 203.436 ຄົນ, ໃນນັ້ນມີຜູ້ຊາຍ ຈຳນວນ 17.482 ຄົນ (8.5%)ໄດ້ນຳໃຊ້ຖົງຢາງອະນາໄມ, ແມ່ຍິງຈຳນວນ 94.898 ຄົນ (47%) ໄດ້ນຳໃຊ້ຢາຄຸມກຳເນີດ/ຊະນິດເມັດ, 69.123 ຄົນ (34%) ໄດ້ໃຊ້ວິທີຄຸມກຳເນີດ ໂດຍການສັກຢາ ແລະ 21.587 ຄົນນຳໃຊ້ຫ່ວງ.

### 6.3. ການເຂົ້າເຖິງການບໍລິການສາທາລະນະສຸກ

*ການເຂົ້າເຖິງສະຖານທີ່ບໍລິການສາທາລະນະສຸກແມ່ນຍັງເປັນສິ່ງທ້າທາຍ ໂດຍສະເພາະ ແມ່ນໃນຂົງເຂດຊົນນະບົດ*

ດັ່ງທີ່ໄດ້ກ່າວມາຂ້າງເທິງ, ຕົວຊີ້ບອກດ້ານສາທາລະນະສຸກ ໃນ ສປປ ລາວ ແມ່ນຢູ່ໃນລະດັບຕໍ່າສຸດໃນພາກພື້ນ, ຊຶ່ງມີອັດຕາການຕາຍຂອງແມ່ ແລະ ເດັກສູງ. ໃນອັດຕາສ່ວນດັ່ງກ່າວ, ຄວາມແຕກໂຕນລະຫວ່າງ ຊົນນະບົດ ແລະ ຕົວເມືອງແມ່ນຍັງຫ່າງກັນຫຼາຍ ທີ່ມີສາເຫດມາຈາກການຂາດແຄນສູນປິ່ນປົວສຸຂະພາບ ແລະ ບຸກຄະລາກອນໃນຂົງເຂດຊົນນະບົດ ແລະ ມີຄວາມຫຍຸ້ງຍາກໃນການເຂົ້າເຖິງສຸກສາລາຍ້ອນໄລຍະທາງໄກ, ສະພາບທາງພູມສາດຕັ້ງຢູ່ຫ່າງໄກສອກຫລີກ ແລະ ພື້ນຖານໂຄງລ່າງທີ່ບໍ່ດີ.

> Box 8: ແມ່ຍິງ, ຂໍ້ມູນຂ່າວສານ ແລະ ສຸຂະພາບຂອງຊົນເຜົ່າຕ່າງໆ
>
> ສໍາລັບ ລາວ-ໄຕ, ໂດຍສະເພາະກຸ່ມກັບຊົນເຜົ່າລື້, ອັດຕາການຕາຍຂອງເດັກເກີດໃຫ່ມແມ່ນຢູ່ໃນລະດັບຕໍ່າຍ້ອນວ່າແມ່ຍິງຮູ້ຈັກຮັກສາສຸຂະພາບ ແລະ ຮູ້ວ່າຈະໄປຮັກສາຢູ່ບ່ອນໃດ. ຍ້ອນວ່າມີຜູ້ໃຫ້ບໍລິການທາງແພດ ໂດຍສະເພາະແມ່ນພະຍາບານດໍາລົງຊີວິດພາຍໃນບ້ານ, ຊົນເຜົ່າລື້ຈຶ່ງມີຄວາມຮູ້ດ້ານສຸຂະສຶກສາເປັນຕົ້ນແມ່ນການລ້ຽງລູກທີ່ປອດໄພ. ຖ້າຢາກໃຫ້ປະຊາຊົນໄດ້ຮັບຜົນປະໂຫຍດຈາກການບໍລິການດ້ານສາທາລະນະສຸກ, ເຂົາເຈົ້າຕ້ອງໄດ້ຮັບຂໍ້ມູນຂ່າວສານຢ່າງພຽງພໍ. ດັ່ງນັ້ນຈຶ່ງມີຄວາມຈໍາເປັນເພື່ອໃຫ້ຂໍ້ມູນຂ່າວສານດ້ານສາທາລະນະສຸກ ຕໍ່ສະມາຊິກຂອງຊຸມຊົນໃນເຂດຊົນເຜົ່າຕ່າງໆ (RTI, 2000)

ພູມສັນຖານຂອງປະເທດກໍ່ແມ່ນປັດໃຈສໍາຄັນອັນໜຶ່ງ ທີ່ເປັນຕົວກໍານົດການເຂົ້າເຖິງສິ່ງອໍານວຍຄວາມສະດວກດ້ານສາທາລະນະສຸກ, ໂດຍສະເພາະ ແມ່ນ ໃນລະດູຝົນ. ອີງຕາມການສໍາຫຼວດພົນລະເມືອງທົ່ວປະເທດ 2005 ມີພຽງ 8% ຂອງຈໍານວນບ້ານທີ່ມີສຸກສາລາ. ອີງຕາມຂໍ້ມູນຈາກ LECS 3 ຊີ້ໃຫ້ເຫັນວ່າ ເວລາສະເລັ່ຍທີ່ໃຊ້ໃນການເດີນທາງໄປເຖິງສະຖານທີ່ພະຍາບານແມ່ນ 92 ນາທີ ໃນ ສປປ ລາວ, ສໍາລັບຜູ້ທີ່ຢູ່ໃນຊົນນະບົດແມ່ນໃຊ້ເວລາເຖິງ 108 ນາທີ ແລະ ໃນຕົວເມືອງແມ່ນ 19 ນາທີ. ເຊັ່ນດຽວກັນປະຊາຊົນທີ່ອາໄສຢູ່ເຂດພູສູງໃຊ້ເວລາ 3 ຊົ່ວໂມງ ເພື່ອໄປເຖິງບ່ອນປິ່ນປົວພະຍາດ, ສ່ວນໃນເຂດທົ່ງພຽງແມ່ນ 48 ນາທີ. ດັ່ງສະແດງໃນຕາຕະລາງ 7, ໃນເຂດຊົນນະບົດທີ່ບໍ່ມີທົນທາງໄປເຖິງ, 20% ຂອງພົນລະເມືອງ ໃຊ້ເວລາ 8 ຊົ່ວໂມງ ຫຼື ຫຼາຍກວ່າ ເພື່ອໄປເຖິງໂຮງໝໍທີ່ໃກ້ທີ່ສຸດ ແລະ ມີພຽງ 30% ໄດ້ເຂົ້າເຖິງຮ້ານຂາຍຢາຢູ່ພາຍໃນບ້ານ (LECS 3, 2003). ປະມານ 15% ທີ່ມີບັນຫາສຸຂະພາບພຽງຊົ່ວຄາວ ໄດ້ຊອກຫາການປິ່ນປົວຕາມສະຖານທີ່ ຫຼື ຜູ້ໃຫ້ບໍລິການ ຕ່າງໆ, ໃນນີ້ 20% ໃນຕົວເມືອງ ແລະ10% ໃນ ຊົນນະບົດ ຊຶ່ງແມ່ນບ່ອນທີ່ບໍ່ສາມາດເຂົ້າເຖິງຖະໜົນຫົນທາງ. ຍ້ອນມີຄວາມຫຍຸ້ງຍາກດ້ານການເຂົ້າເຖິງສະຖານບໍລິການ ແລະ ບໍ່ມີຜູ້ໃຫ້ບໍລິການປິ່ນປົວເປັນເຫດຜົນສໍາຄັນ ທີ່ເຮັດໃຫ້ຊາວບ້ານບໍ່ຢາກໄປໃຊ້ບໍລິການ.

**ຕາຕະລາງ 7: ການເຂົ້າເຖິງການບໍລິການດ້ານສາທາລະນະສຸກຢູ່ພາຍໃນບ້ານ**

| | % ຂອງປະຊາຊົນໂດຍອີງຕາມໄລຍະທາງເຖິງໂຮງໝໍທີ່ໃກ້ສຸດ | | | % ຂອງປະຊາຊົນໂດຍອີງຕາມໄລຍະທາງເຖິງສຸກສາລາທີ່ໃກ້ສຸດ | | | % ຂອງປະຊາຊົນໃຊ້ເວລາ 8 ຊົ່ວໂມງຂື້ນໄປເພື່ອໄປຫາ: | |
|---|---|---|---|---|---|---|---|---|
| ກິໂລແມັດ | ≤ 10 | 11 -30 | 31 | ≤ 10 | 11 -30 | 31 | ໂຮງໝໍທີ່ຢູ່ໃກ້ສຸດ | ສຸກສາລາທີ່ຢູ່ໃກ້ສຸດ |
| ສປປ ລາວ | 54 | 31 | 15 | 78 | 17 | 5 | 5 | 3 |
| ຕົວເມືອງ | 94 | 6 | 0 | 100 | 0 | 0 | 0 | 0 |
| ຊົນນະບົດມີທາງເຂົ້າເຖິງ | 47 | 39 | 14 | 76 | 21 | 3 | 1 | 1 |
| ຊົນນະບົດບໍ່ມີທາງເຂົ້າເຖິງ | 28 | 37 | 35 | 56 | 27 | 16 | 20 | 11 |

*ແຫຼ່ງຂໍ້ມູນ: LECS3*

ດັ່ງທີ່ສະແດງຂ້າງເທິງ, ເຂດພູສູງສ່ວນຫຼາຍແມ່ນຊົນເຜົ່າທີ່ບໍ່ແມ່ນຊົນເຜົ່າລາວ-ໄຕ, ຕົວເລກດັ່ງກ່າວຊີ້ໃຫ້ເຫັນວ່າ ການເຂົ້າເຖິງສະຖານທີ່ສາທາລະນະສຸກແມ່ນຈຳກັດ. ຄວາມຫຍຸ້ງຍາກໃນການເຂົ້າເຖິງສະຖານທີ່ສາທາລະນະສຸກເປັນສາເຫດໃຫ້ແມ່ຍິງລາວ ໃນ 4 ກຸ່ມຊົນເຜົ່າ ບໍ່ຊອກຫາການປິ່ນປົວ, ຊຶ່ງແມ່ຍິງຈາກຊົນເຜົ່າຈີນ-ຕິເບດ ກວມເອົາຈຳນວນສູງສຸດ (38%) (*LECS3).* ນອກຈາກນັ້ນ, ໃນຊົນເຜົ່າດັ່ງກ່າວ ນັ້ນຍັງແມ່ຍິງຫຼາຍກວ່າຜູ້ຊາຍທີ່ບອກວ່າ ມີຄວາມຫຍຸ້ງຍາກໃນການໄປຫາສະຖານບໍລິການດ້ານສາທາລະນະສຸກຈຶ່ງບໍ່ໄປຊອກຫາປິ່ນປົວ.

ຕາຕະລາງ 8: ການເຂົ້າເຖິງການບໍລິການສາທາລະນະສຸກ,ແບ່ງຕາມແຂວງ ແລະເຂດ ໃນປີ 2002/03

| % ທີ່ປະຊາຊົນພາຍໃນບ້ານເຂົ້າຫາ | | | | | | | |
|---|---|---|---|---|---|---|---|
| ກິໂລແມັດ | ຮ້ານຂາຍຢາ | ຮ້ານຂາຍຢາທີ່ມີທະບຽນ | ອຸປະກອນການແພດ | ໝໍຕຳແຍ | ປິ່ນປົວດ້ວຍຢາພື້ນເມືອງ | ອາສາສະໝັກດ້ານສາທາລະນະສຸກ | ແພດ |
| ສປປ ລາວ | 30 | 26 | 37 | 54 | 44 | 59 | 36 |
| ຕົວເມືອງ | 62 | 60 | 21 | 41 | 40 | 40 | 81 |
| ຊົນນະບົດມີຫົນທາງງ | 26 | 20 | 43 | 64 | 48 | 67 | 28 |
| ຊົນນະບົດບໍ່ມີຫົນທາງ | 10 | 6 | 36 | 37 | 37 | 54 | 12 |

*ແຫຼ່ງຂໍ້ມູນ: LECS3*

ບັນຫາດ້ານການເງິນແມ່ນບັນຫາໜຶ່ງ ທີ່ສ້າງຄວາມຫຍຸ້ງຍາກຕໍ່ການໄປໂຮງໝໍ ແລະ ປິ່ນປົວ, ໂດຍສະເພາະແມ່ນຄ່າເດີນທາງ ແລະ ປິ່ນປົວພະຍາດ. ເວລາເຈັບເປັນຕ້ອງໄດ້ຢືມເງິນ ແລະ ຂາຍຊັບສິນ ຫຼື ສິນບັດ ເພື່ອໃຫ້ພຽງພໍກັບຄ່າຢາ, ຊຶ່ງເປັນປະກົດການທີ່ມັກເກີດຂື້ນເລື້ອຍໆ, ໂດຍສະເພາະສິ່ງນີ້ມັກເກີດ ຂື້ນກັບແມ່ຍິງຫຼາຍກວ່າຜູ້ຊາຍ. ໃນຊົນເຜົ່າລາວ-ໄຕແມ່ຍິງມີການໃຊ້ຈ່າຍເງິນເຂົ້າໃນການໄປຮັກສາ

ສຸຂະພາບຫຼາຍກ່ວາຜູ້ຊາຍປະມານ 8%. ເຫດຜົນທີ່ແມ່ຍິງໃຊ້ງົບປະມານຫລາຍກວ່າຜູ້ຊາຍອາດເນື່ອງມາຈາກແມ່ຍິງໄປຮັບບໍລິການປິ່ນປົວຫລາຍກວ່າເພດຊາຍ, ໂດຍສະເພາະແມ່ຍິງຈຳເປັນຕ້ອງຮັກສາສຸຂະພາບ ຈະເລີນພັນ.

ໃນກຸ່ມຊົນເຜົ່າ ລາວ-ໄຕ ແລະ ມອນ-ຂະແມ, ແມ່ຍິງໄດ້ນຳໃຊ້ການບໍລິການດ້ານສຸຂະພາບແບບສະໄໝໃໝ່ ແລະ ແບບພື້ນເມືອງຫຼາຍກວ່າຜູ້ຊາຍປະມານ 1-3 ຄັ້ງ. ສ່ວນອັດຕາການນຳໃຊ້ການບໍລິການດ້ານສຸຂະພາບຂອງແມ່ຍິງ ຊົນເຜົ່າມົ້ງນັ້ນຈະສູງກວ່າຜູ້ຊາຍເລັກໜ້ອຍ, ເຖິງວ່າກຸ່ມຊົນເຜົ່ານີ້ໄດ້ຊອກຫາວິທີຮັກສາໜ້ອຍກວ່າກຸ່ມຊົນເຜົ່າລາວ-ໄຕ ຫຼື ມອນຂະແມ, ສ່ວນແມ່ຍິງລາວ-ໄຕ ແລະ ມອນຂະແມໄດ້ເຂົ້າປິ່ນປົວຢູ່ໂຮງໝໍຫຼາຍກວ່າຜູ້ຊາຍພຽງເລັກໜ້ອຍ, ໃນຂະນະທີ່ຈຳນວນແມ່ຍິງ ແລະ ຜູ້ຊາຍເຜົ່າມົ້ງທີ່ເຂົ້າມາປິ່ນປົວຢູ່ໃນໂຮງໝໍແມ່ນເກືອບເທົ່າໆກັນໃນແຕ່ລະປີ. ສະພາບດັ່ງກ່າວມັນໄດ້ສ້າງຄວາມຫຍຸ້ງຍາກໃຫ້ກັບແມ່ຍິງ, ເພາະວ່າບໍ່ພຽງແຕ່ເບິ່ງແຍງຕົວເຂົາເຈົ້າເອງເທົ່ານັ້ນ ແຕ່ຍັງໄດ້ເອົາໃຈໃສ່ເບິ່ງແຍງສຸຂະພາບຂອງສະມາຊິກຄອບຄົວນຳອີກ. ນອກຈາກນັ້ນພະນັກງານແພດທີ່ມີວຸດທິການສຶກສາສູງຊຳ້ພັດມັກຫຼັ່ງໄຫຼກັນເຂົ້າມາເຮັດວຽກຢູ່ໃນຕົວເມືອງ.

***ຄຸນນະພາບຂອງການບໍລິການດ້ານສາທາລະນະສຸກ, ຄວາມເຂົ້າໃຈແບບພື້ນເມືອງ ແລະ ອຸປະສັກທາງດ້ານພາສາມີອິດທິພົນຕໍ່ພຶດຕິກຳ ແລະ ຄວາມຕ້ອງການໃນການຊອກໃຊ້ບໍລິການດ້ານສາທາລະນະສຸກ, ໂດຍສະເພາະໃນກຸ່ມຊົນເຜົ່າສ່ວນນ້ອຍ.***

ໂດຍທົ່ວໄປແລ້ວ ຄວາມເຂົ້າໃຈ ກ່ຽວກັບ ເລື້ອງສຸຂະພາບຂອງຊົນເຜົ່າສ່ວນໜ້ອຍ ແມ່ນ ໄດ້ຮັບອິດທິພົນຈາກແນວຄິດການເຊື່ອຖືແບບງົມງວາຍ (ເຊື່ອຖືຜີ), ຮີດຄອງປະເພນີ ແລະ ສະພາບແວດລ້ອມອ້ອມຂ້າງ ແລະ ສິ່ງທີ່ເຄີຍປະຕິບັດກັນມາແຕ່ດັ່ງເດີມ, ການເຊື່ອຖືແບບງົມງວາຍນີ້ຍັງຄົງມີຢູ່ໃນບັນດາຊົນເຜົ່າສ່ວນນ້ອຍໃນ ສປປ ລາວ ແລະ ມີອິດທິພົນຕໍ່ແນວຄວາມຄິດກ່ຽວກັບບັນຫາສຸຂະພາບ, ສະຫວັດດີການ ແລະ ພະຍາດຕ່າງໆ. ຄວາມເຊື່ອຖືດັ່ງກ່າວນີ້ແຕກຕ່າງກັນ ໄປຕາມແຕ່ລະຊົນເຜົ່າ ແລະ ລະຫ່ວາງຄົວເຮືອນຢູ່ໃນໝູ່ບ້ານດຽວກັນ. ບັນດາປັດໃຈທີ່ມີອິດທິພົນຕໍ່ຄວາມເຂົ້າໃຈກ່ຽວກັບບັນຫາສຸຂະພາບຍັງຂຶ້ນກັບ ເກນອາຍຸ, ລະດັບການສຶກສາ, ບົດບາດຍິງ-ຊາຍ, ສະພາບເສດຖະກິດ-ສັງຄົມ, ວັດທະນະທຳ ແລະ ທ້ອງຖິ່ນຕ່າງໆ (ເບິ່ງໃນ Box 9).

**Box 9: ພຶດຕິກຳການຮັກສາສຸຂະພາບຂອງຊົນເຜົ່າສ່ວນນ້ອຍ.**

ໃນຊົນເຜົ່າ ບລູ ມະກອງ (ມອນ-ຂະເເມ), ການເຊື່ອຖືງມງວາຍ (ຂ້າສັດເພື່ອບູຊາຍັນ) ແມ່ນທາງເລືອກທຳອິດຂອງຊົນເຜົ່າດັ່ງກ່າວຍ້ອນຂາດການເຂົ້າເຖິງ ການບໍລິການດ້ານສາທາລະນະສຸກ. ມີແຕ່ເຈັບໜັກເທົ່ານັ້ນຈຶ່ງໃຊ້ການປິ່ນປົວຢູ່ໂຮງໝໍ. ໄລຍະທາງລະຫວ່າງບ້ານຫາບ່ອນປິ່ນປົວສຸຂະພາບແມ່ນອຸປະສັກຕົ້ນຕໍຂອງຊົນເຜົ່າມະກອງ, ໂດຍສະເພາະແມ່ນຄອບຄົວທີ່ທຸກຍາກເຮັດໃຫ້ເຂົາເຈົ້າບໍ່ສາມາດໄປຮັບການປິ່ນປົວສຸຂະພາບໄດ້. ໃນເຜົ່າມົ້ງ-ຢ້າວ, ຈາກຂໍ້ມູນຊີ້ໃຫ້ເຫັນວ່າການປິ່ນປົວແບບພື້ນເມືອງແມ່ນທາງເລືອກທຳອິດເພາະວ່າຜູ້ເຖົ້າ(ສ່ວນຫຼາຍແມ່ຍິງ)ມີປະສົບການໃນການຮັກສາດ້ວຍຢາສະມຸນໄພ. ການສຳຫຼວດການຮັກສາສຸຂະພາບຂັ້ນຕົ້ນ ໃນປີ 1999 ສະແດງໃຫ້ເຫັນວ່າເງິນເປັນອຸປະສັກຕົ້ນຕໍໃນການໄປປິ່ນປົວສຸຂະພາບຂອງຄົວເຮືອນຊົນເຜົ່າທີ່ມີພົນລະເມືອງໜ້ອຍ.

ເວົ້າສະເພາະຢູ່ໃນເຂດຊົນນະບົດ, ຄຸນນະພາບການບໍລິການດ້ານສາທາລະນະສຸກຍັງຕ່ຳ, ຊຶ່ງເປັນຜົນກະທົບຕໍ່ການປິ່ນປົວສຸຂະພາບຂອງປະຊາຊົນ. ຜ່ານມາກໍ່ໄດ້ປັບປຸງຫລາຍຢ່າງເພື່ອແກ້ໄຂບັນຫາເລື້ອງ ພາສາ ໂດຍນຳໃຊ້ອາສາສະໝັກສາທາລະນະສຸກບ້ານ, ແຕ່ກໍ່ຍັງມີບັນຫາດ້ານການສື່ສານເນື່ອງຈາກວ່າຍັງມີທ່ານໝໍຈຳນວນຫລາຍທ່ານບໍ່ເຂົ້າໃຈພາສາຂອງຊົນເຜົ່າຕ່າງໆ. ປະຈຸບັນພະນັກງານແພດຊົນເຜົ່າສ່ວນນ້ອຍໄດ້ຮັບການຝຶກອົບຮົມໜ້ອຍຫລາຍ, ຊຶ່ງບັນຫາດັ່ງກ່າວນີ້ຈະເປັນຜົນກະທົບອັນບໍ່ດີໃຫ້ແກ່ການບໍລິການດ້ານສາທາລະນະສຸກສຳລັບກຸ່ມຊົນເຜົ່າໃນອະນາຄົດ. ນອກຈາກນັ້ນ, ຍັງມີຂໍ້ມູນຊີ້ໃຫ້ເຫັນວ່າຄວາມຕ້ອງການໃນການນຳໃຊ້ຢາປົວພະຍາດ ຈະພົວພັນໂດຍກົງກັບລະດັບຂອງຄວາມເຂົ້າໃຈ/ຄວາມຮູ້ໃນການ ນຳໃຊ້ຢາດັ່ງກ່າວຢູ່ໃນກຸ່ມຊົນເຜົ່າສ່ວນນ້ອຍ (LECS 3).

## 6.4. ບູລິມະສິດດ້ານສາທາລະນະສຸກຂອງຊາດ

*ບັນດາບູລິມະສິດດ້ານສາທາລະນະສຸກຂອງຊາດແມ່ນໄດ້ຖືກກຳນົດໃນແຜນຍຸດທະສາດຕ່າງໆ.*

ສປປ ລາວ ມີເອກະສານຈຳນວນໜຶ່ງທີ່ໄດ້ກຳນົດບັນດາບູລິມະສິດຕ່າງໆຂອງຂະແໜງສາທາລະນະສຸກ. ໜຶ່ງໃນຈຳນວນນັ້ນແມ່ນ "ແຜນຍຸດທະສາດດ້ານສາທາລະນະສຸກແຕ່ນີ້ເຖິງປີ 2020" ຊຶ່ງມີ 4 ແນວຄວາມຄິດພື້ນຖານ ເຊັ່ນ:

- ຂະຫຍາຍຕາໜ່າງການບໍລິການດ້ານສາທາລະນະສຸກຢ່າງທົ່ວເຖິງ ແລະ ຮັບປະກັນໃຫ້ການບໍລິການເທົ່າທຽມກັນ.
- ພັດທະນາການບໍລິການດ້ານສາທາລະນະສຸກແບບຄົບວົງຈອນ.
- ຕອບສະໜອງການບໍລິການດ້ານສາທາລະນະສຸກຂັ້ນພື້ນຖານ ແລະ
- ສົ່ງເສີມການບໍລິການດ້ານສາທາລະນະສຸກແບບເພິ່ງຕົນເອງ.

ໃນແຜນຍຸດທະສາດເພື່ອການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ (NGPES) ໄດ້ສຸມໃສ່ແກ້ໄຂຄວາມທຸກຍາກໃນ 47 ເມືອງ ທີ່ທຸກຍາກທີ່ສຸດ ໃນປະເທດ, ຊຶ່ງໃນນັ້ນກໍ່ໄດ້ໃຫ້ບູລິມະສິດສຳຄັນແກ່ວຽກງານສາທາລະນະສຸກ ລວມທັງການຂະຫຍາຍຕາໜ່າງການສົ່ງເສີມບໍລິການດ້ານສາທາລະນະສຸກ ໃຫ້ແກ່ປະຊາຊົນໃນເຂດຊົນນະບົດ. ປັບປຸງ ແລະ ຍົກລະດັບຂີດຄວາມສາມາດຂອງພະນັກງານສາທາລະນະສຸກຈາກລະດັບຊັ້ນຕົ້ນຈົນເຖິງລະດັບເໜືອປະລິນຍາຕີ, ໂດຍເອົາໃຈໃສ່ສົ່ງເສີມໃຫ້ມີພະນັກງານສາທາລະນະສຸກຊົນເຜົ່າສ່ວນນ້ອຍຫຼາຍຂຶ້ນ, ຮັບປະກັນຄວາມດຸນດ່ຽງລະຫວ່າງຍິງ-ຊາຍ ແລະ ກະຕຸກຊຸກຍູ້ແພດອາສາສະໝັກທີ່ຢູ່ບ່ອນທຸກຍາກຫ່າງໄກສອກຫຼີກທັງວັດຖຸ ແລະ ຈິດໃຈ, ນອກຈາກນັ້ນ ຍຸດທະສາດດັ່ງກ່າວຍັງໄດ້ສຸມໃສ່ການສົ່ງເສີມການເບິ່ງແຍງສຸຂະພາບຂອງແມ່ ແລະ ເດັກ ຢູ່ໃນເຂດຊົນນະບົດ.

# ບົດທີ 7

## ປະກົດການຫຍໍ້ທໍ້

### 7.1. ສະພາບລວມ

ໄປພ້ອມໆກັບການປ່ຽນແປງຢ່າງໄວວາໃນ ສປປ ລາວ, ມັນເຮັດໃຫ້ມີບັນຫາປະກົດການຫຍໍ້ທໍ້ໃນສັງຄົມເກີດຂື້ນຫຼາຍຢ່າງ, ຊຶ່ງເຫັນໄດ້ວ່າມີຜົນກະທົບຕໍ່ແມ່ຍິງຫຼາຍຂື້ນ. ການພັດທະນາ ແລະ ເປີດກວ້າງເສດຖະກິດກັບສາກົນເຮັດໃຫ້ຊາວໜຸ່ມເຄື່ອນຍ້າຍແຮງງານ ເພື່ອໄປເຮັດວຽກຢູ່ປະເທດໃກ້ຄຽງ, ໂດຍສະເພາະ ແມ່ນປະເທດໄທ, ການອົບພະຍົບແຮງງານເຮັດໃຫ້ເຂົາເຈົ້າມີຄວາມສ່ຽງຫຼາຍດ້ານ ເປັນຕົ້ນ: ຖືກສວຍໃຊ້ທາງເພດ, ໂລກເອດ (HIV/AIDS), ຄວາມຮຸນແຮງ ແລະ ຕົກເປັນເຫຍື່ອຂອງເຄືອຂ່າຍການຄ້າມະນຸດ. ການນຳໃຊ້ຄວາມຮຸນແຮງຕໍ່ແມ່ຍິງແມ່ນບັນຫາໜຶ່ງທີ່ກຳລັງເກີດຂື້ນຫຼາຍ. ຈາກການຄົ້ນຄວ້າຫລ້າສຸດໄດ້ສະແດງໃຫ້ເຫັນວ່າແມ່ຍິງຫຼາຍຄົນໃນຄອບຄົວຖືກທຳຮ້າຍທາງດ້ານຮ່າງກາຍ ຫຼື ຈິດໃຈ, ແຕ່ມີແມ່ຍິງບໍ່ເທົ່າໃດຄົນ ທີ່ນຳໃຊ້ກົດໝາຍເພື່ອດຳເນີນຄະດີກັບຄູ່ກໍລະນີ. ແມ່ຍິງໂດຍສະເພາະຊົນເຜົ່າສ່ວນໜ້ອຍທີ່ທຸກຍາກຕ້ອງໄດ້ຮັບພາລະເພື່ອເບິ່ງແຍງສະມາຊິກຄອບຄົວທີ່ຕິດຝິ່ນ, ຊຶ່ງເຮັດໃຫ້ມີພາລະໜັກໜ່ວງຂື້ນກວ່າເກົ່າ.

### 7. 2. ການເຄື່ອນຍ້າຍແຮງງານ ແລະ ການຄ້າມະນຸດ

*ເມື່ອມີການເຄື່ອນຍ້າຍແຮງງານເພີ່ມຂື້ນ,ເຮັດໃຫ້ມີຄວາມສ່ຽງຕໍ່ກັບການຄ້າມະນຸດເພີ່ມຂື້ນເຊັ່ນກັນ*

ຍ້ອນຄວາມທຸກຍາກ ແລະ ຂາດວຽກເຮັດງານທຳຢູ່ໃນບ້ານ, ເຮັດໃຫ້ມີຜູ້ເຄື່ອນຍ້າຍແຮງງານຫຼາຍຂື້ນ. ອີງຕາມຂໍ້ມູນຕົວຈິງແລ້ວ ມີຊາວໜຸ່ມລາວຫຼາຍຄົນອົບພະຍົບໄປຊອກຫາວຽກເຮັດງານທຳຢູ່ປະເທດເພື່ອນບ້ານ. ບາງຄົນໄປເຮັດວຽກແບບຖືກກົດໝາຍ, ບາງຄົນໄປແບບຜິດກົດໝາຍ ແລະ ບາງຄັ້ງໄປໂດຍມີຄົນພາຍນອກຊ່ວຍເຫຼືອ ລວມມີ: ພໍ່ແມ່ ຫຼື ກຸ່ມຄົນທີ່ຄ້າມະນຸດ. ມີຄົນລາວຫຼາຍໆຄົນທີ່ອາໃສຢູ່ລຽບຕາມຊາຍແດນໄປເຮັດວຽກຢູ່ປະເທດເພື່ອນບ້ານ, ຊຶ່ງເຮັດໃຫ້ເຂົາເຈົ້າມີລາຍໄດ້ເຂົ້າຄອບຄົວ ແລະ ເຮັດໃຫ້ສະຖານະພາບດ້ານການເງິນຂອງຄອບຄົວ ແລະ ຮັບປະກັນຊີວິດການເປັນຢູ່ໃນອະນາຄົດ.

ບາງຄັ້ງຊາວໜຸ່ມຜູ້ທີ່ໂຊກຮ້າຍກໍ່ຈົບລົງໂດຍການຖືກຂາຍ, ຕົກເປັນເຫຍື່ອຂອງຜູ້ທີ່ສວຍໂອກາດເອົາລັດເອົາປຽບຍ້ອນເຂົາເຈົ້າທຸກຍາກ ແລະ ຖືກປະປ່ອຍ. ການຄ້າມະນຸດແມ່ນການກະທຳຄວາມຮຸນແຮງປະເພດໜຶ່ງໂດຍການບັງຄັບໃຫ້ບຸກຄົນ ຫຼື ກຸ່ມຄົນໃດໜຶ່ງເຂົ້າໄປໃນປະເທດອື່ນແບບຖືກກົດໝາຍ ຫຼື

ຜິດກົດໝາຍ, ໂດຍການບັງຄັບ ແລະ ປາສະຈາກຄວາມຮັບຮູ້ ຫຼື ຄວາມຍິນຍອມຈາກບຸກຄົນ ຫຼື ກຸ່ມຄົນທີ່ຕົກເປັນເຫຍື່ອຂອງການຄ້າມະນຸດ, ໂດຍມີຈຸດປະສົງເພື່ອສວຍໃຊ້ຜົນປະໂຫຍດຈາກເຂົາເຈົ້າ. ສົນທິສັນຍາຂອງສະຫະປະຊາຊາດວ່າດ້ວຍການຕໍ່ຕ້ານການກໍ່ອາດຊະຍະກຳຂ້າມຊາດທີ່ຖືກຮັບຮອງເອົາໂດຍກອງປະຊຸມສະມັດຊາໃຫຍ່ຂອງສະຫະປະຊາຊາດໃນປີ 2000, ໄດ້ໃຫ້ນິຍາມການຄ້າມະນຸດວ່າ:

- *ການບັນຈຸ, ການຂົນສົ່ງ ແລະ ມອບໂອນ, ການອອກແຮງງານ ຫລື ການຮັບບຸກຄົນ ໂດຍໃຊ້ການຂົ່ມຂູ່ ຫຼື ໃຊ້ຄວາມຮຸນແຮງ ຫຼື ຮູບແບບບັງຄັບ ຫຼື ການລັກພາຕົວ ຫຼື ການຫຼອກລວງ ຫຼື ການໃຊ້ອຳນາດໜ້າທີ່ ໃນທາງທີ່ຜິດ ຫຼື ການໃຫ້ ຫຼື ການຮັບເອົາເງິນ ຫຼື ຜົນປະໂຫຍດອື່ນໆໂດຍປາສະຈາກການຍິນຍອມຈາກບຸກຄົນໃດໜຶ່ງ ຊຶ່ງຢູ່ໃຕ້ການຄວບຄຸມເພື່ອນຳໃຊ້ຜົນປະໂຫຍດ "ການສະແຫວງຫາຜົນປະໂຫຍດສ່ວນໃຫຍ່ຈະແມ່ນ ການຄ້າປະເວນີ ຫຼື ຮູບແບບການສະແຫວງຫາຜົນປະໂຫຍດທາງເພດອື່ນໆ, ການບັງຄັບໃຊ້ແຮງງານ ຫຼື ການບໍລິການຕ່າງໆ, ການເປັນຂ້າທາດຮັບໃຊ້ ຫຼື ການປະຕິບັດຄືກັບຂ້າທາດ, ການຮັບໃຊ້ແບບຂ້າທາດ ຫຼື ການຕັດອະໄວຍະວະຮ່າງກາຍໃດໜຶ່ງ"*

ໃນໄລຍະສອງສາມປີຜ່ານມານີ້ ສປປ ລາວ ໄດ້ຖືເອົາການຄ້າມະນຸດເປັນບັນຫາສຳຄັນ. ໃນປະຈຸບັນ, ມີບາງອົງການຈັດຕັ້ງໄດ້ເຮັດວຽກເພື່ອຊ່ວຍເຫລືອຄົນທີ່ໄດ້ຮັບເຄາະຮ້າຍຈາກການຄ້າມະນຸດລວມມີ ສູນກາງສະຫະພັນແມ່ຍິງລາວ (LWU), ສູນກາງຊາວໜຸ່ມລາວ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ກຸ່ມພັດທະນາບົດບາດຍິງ-ຊາຍ (GDG). ແຕ່ເຖິງຢ່າງໃດກໍ່ຕາມ, ການຂາດແຄນ ຫຼື ມີຂໍ້ມູນຈຳກັດເຮັດໃຫ້ລັດຖະບານມີຄວາມຫຍຸ້ງຍາກເພື່ອກຳຈັດບັນຫານີ້ຢ່າງມີປະສິດທິຜົນ. ໃນປີ 2001 ກະຊວງແຮງງານ ແລະ ສະຫວັດດີການສັງຄົມໄດ້ປະສານສົມທົບກັບອົງການຊ່ວຍເຫຼືອສາສະໜານອກແວ (NCA) ໄດ້ຊ່ວຍເດັກຍິງລາວຈຳນວນ 21 ຄົນ ທີ່ເຮັດວຽກຢູ່ປະເທດໄທ ກັບຄືນບ້ານໄດ້ຢ່າງປອດໄພ. ແຕ່ເຖິງຢ່າງໃດກໍ່ຕາມ, ມັນກໍ່ບໍ່ແມ່ນເລື່ອງງ່າຍໃນການສ້າງຖິ່ນຖານ ໃຫ້ແກ່ຜູ້ກັບຄືນຖິ່ນ ເພາະບໍ່ມີຄວາມພ້ອມ ແລະ ຄວາມສາມາດພຽງພໍໃນການຟື້ນຟູເຂົາເຈົ້າ. ນອກຈາກນັ້ນ, ສະພາບດັ່ງກ່າວໄດ້ເຮັດໃຫ້ເກີດບັນຫາຂຶ້ນກັບຄອບຄົວເດັກຍິງຜູ້ທີ່ບໍ່ມີຄວາມພ້ອມທີ່ຈະກັບຄືນມາບ້ານ. ດັ່ງນັ້ນ ບາງຄົນກໍ່ກັບຄືນໄປປະເທດໄທອີກ ແລະ ບາງຄົນກໍ່ເຂົ້າໄປໃນນະຄອນຫຼວງວຽງຈັນເພື່ອຊອກຫາວຽກເຮັດງານທຳ, ນອກຈາກນັ້ນ ອົງການໄອໂລ-ໄອເປັກ (ILO-IPEC) ໄດ້ຮ່ວມມືກັບ ລັດຖະບານແຫ່ງ ສປປ ລາວ ປະຕິບັດໂຄງການຕ້ານການຄ້າແມ່ຍິງ ແລະ ເດັກນ້ອຍ ໃນເຂດລຸ່ມແມ່ນ້ຳຂອງ, ຊຶ່ງເລີ່ມປະຕິບັດຢູ່ແຂວງຄຳມ່ວນ, ສະຫວັນນະເຂດ ແລະ ຈຳປາສັກ ໃນເດືອນ 5 ປີ 2000.

## 7.3. ເຊື້ອໄວຣັດເອດສໄອວີ/ເອດສ (HIV/AIDS)

*ເຖິງວ່າອັດຕາການຕິດເຊື້ອຍັງຢູ່ໃນລະດັບຕ່ຳ ແຕ່ການແຜ່ເຊື້ອໄວຣັດເອດສໄອວີ/ເອດສ ກຳລັງເພີ່ມຂຶ້ນ*

ອັດຕາການແຜ່ເຊື້ອໄວຣັດເອດສໄອວີ/ເອດສ ຢູ່ ສປປ ລາວ ແມ່ນ 0.5% ຊຶ່ງຍັງຕ່ຳເມື່ອທຽບໃສ່ກັບປະເທດເພື່ອນບ້ານ (NCCA 2003). ການພົບເຊື້ອໄວຣັດເອດສໄອວີ ຄັ້ງທຳອິດ ໃນປີ 1990 ແລະ ໂລກເອດສ ປີ 1992 ໃນ ສປປ ລາວ. ໃນ ສປປ ລາວ ມີປະມານ 1094 ຄົນທີ່ຕິດເຊື້ອເອດສໄອວີ/ເອດສ ແລະ ມີຜູ້ທີ່ກວດພົບເລືອດບວກປະມານ 227 ຄົນ (UNAIDS). ໃນປະຈຸບັນ ການສະກັດກັ້ນເຊື້ອໂລກເອດສໄອວີ/ເອດສ ແມ່ນໜຶ່ງແຜນງານໃນ 08 ແຜນງານໃຫຍ່ຂອງລັດຖະບານ ເພື່ອຫຼຸດຜ່ອນຄວາມທຸກຍາກຄືດັ່ງໄດ້ລະບຸຢູ່ໃນແຜນຍຸດທະສາດເພື່ອຫຼຸດຜ່ອນຄວາມທຸກຍາກແຫ່ງຊາດ (NGPES).

ຄືດັ່ງສະແດງຢູ່ໃນຕາຕະລາງທີ 10 ອັດຕາການແຜ່ເຊື້ອໄວຣັດເອດສໄອວີ/ເອດສ ໃນກຸ່ມແມ່ຍິງແມ່ນມີທ່າອຽງເພີ່ມຂຶ້ນ (NCCA, 2003) ຊຶ່ງຈຳນວນເປີເຊັນຂອງແມ່ຍິງທີ່ຕິດເຊື້ອເອດສໄອວີເພີ່ມຂຶ້ນໂດຍສະເລ່ຍ 8% ຕໍ່ປີ. ໃນປີ 1995 ມີຈຳນວນແມ່ຍິງກວມເອົາເຖິງ 33% ຂອງຈຳນວນທີ່ຕິດເຊື້ອທັງໝົດ, ໃນຂະນະທີ່ການຄິດໄລ່ເປີເຊັນຄາດຄະເນຈາກຂໍ້ມູນໃໝ່ນີ້ມີເຖິງ 60%. ຈາກຂໍ້ມູນດັ່ງກ່າວ ເຫັນວ່າຈຳນວນແມ່ຍິງທີ່ຕິດເຊື້ອເອດສ ມີທ່າອຽງເພີ່ມຂຶ້ນເລື້ອຍໆ.

ຕາຕະລາງ 10: ເປີເຊັນຂອງຄົນທີ່ຕິດເຊື້ອ ເອດສໄອວີ ແລະ ຄົນທີ່ເປັນໂຣກເອດສ.

| ລ/ດ | ຜູ້ທີ່ຕິດເຊື້ອເອດສໄອວີ | | | | | ຜູ້ທີ່ເປັນໂຣກເອດສ | | | | |
|---|---|---|---|---|---|---|---|---|---|---|
| ປີ | ລວມ | ຜູ້ຊາຍ | % | ແມ່ຍິງ | % | ລວມ | ຜູ້ຊາຍ | % | ແມ່ຍິງ | % |
| 1995 | 33 | 22 | 66,6 | 11 | 33,3 | 24 | 17 | 70,8 | 7 | 29,1 |
| 2002 | 187 | 112 | 59,8 | 75 | 40,1 | 85 | 52 | 61,1 | 33 | 38,8 |
| ເດືອນ6 2003 | 60 | 24 | 40 | 36 | 60 | 39 | 17 | 43,5 | 22 | 56,4 |

*ແຫຼ່ງຂໍ້ມູນ: NCCA, 2003*

ເຫດຜົນສ່ວນໜຶ່ງຂອງການເພີ່ມຂຶ້ນຂອງເຊື້ອໂຣກເອດສ ແມ່ນເນື່ອງມາຈາກການຂາດຈິດສຳນຶກ ແລະ ຄວາມຮູ້ຂອງປະຊາຊົນກ່ຽວກັບເຊື້ອໂຣກເອດສໄອວີ/ເອດສ, ເຖິງວ່າຈະມີການເປີດກ້ວາງການເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບເຊື້ອໂຣກດັ່ງກ່າວໃຫ້ປະຊາຊົນໄດ້ຮັບຮູ້ ແລ້ວກໍ່ຕາມ. ຈາກການສຶກສາຄົ້ນຄວ້າພົບວ່າ ລະດັບຈິດສຳນຶກກ່ຽວກັບໂຣກນີ້ແມ່ນສູງຫຼາຍ ແຕ່ຄວາມຮູ້ກ່ຽວກັບເຊື້ອໂລກເອດສໄອວີ/ເອດສ ແມ່ນຍັງມີໜ້ອຍ (PSI 2000) ຕົວຢ່າງ ເຊັ່ນ: ມີຈຳນວນຜູ້ທີ່ຖືກສຳພາດເຖິງ 23% ທີ່ບໍ່ຮູ້ວ່າ ເຊື້ອ ເອດສໄອວີ ສາມາດຕິດຕໍ່ໄດ້ທາງເລືອດ. ຫຼາຍກວ່າເຄິ່ງໜຶ່ງ ບໍ່ຮູ້ວ່າມັນສາມາດຜ່ານຈາກແມ່ໄປຫາລູກໄດ້ໃນໄລ

ຍະຖືພາ ແລະ ການໃຫ້ນ້ຳນົມລູກ. ນອກຈາກນັ້ນ ການປ້ອງກັນເຊື້ອພະຍາດເກືອບ 1/3 ຂອງຜູ້ທີ່ມັກມີເພດສຳພັນທີ່ບໍ່ປອດໄພ, ບໍ່ໃຊ້ຖົງຢາງອະນາໄມ.

*ຈາກເຫດຜົນຫຼາຍຢ່າງຊີ້ໃຫ້ເຫັນວ່າແມ່ຍິງມີຄວາມສ່ຽງສູງຕໍ່ເຊື້ອໂຣກເອດສ*

ຈາກການສຶກສາຄົ້ນຄວ້າໃນປີ 2000-2001 ຢູ່ໃນ 3 ແຂວງໄດ້ສະແດງໃຫ້ເຫັນວ່າ ແມ່ຍິງທີ່ເຮັດວຽກບໍລິການຢູ່ໃນສະຖານບັນເທີງມີຄວາມສ່ຽງຕໍ່ການຕິດພະຍາດດັ່ງກ່າວ. ມີຈຳນວນແມ່ຍິງທີ່ເຮັດວຽກດັ່ງກ່າວປະມານ 0,9% ແມ່ນຕິດເຊື້ອເອດສໄອວີ, ມີແມ່ຍິງທີ່ເຮັດວຽກຢູ່ໃນຂະແໜງການນີ້ພຽງແຕ່ 22% ເທົ່ານັ້ນທີ່ບອກວ່າ ເຂົາເຈົ້າໄດ້ປ້ອງກັນຕົນເອງໂດຍການໃຊ້ຖົງຢາງອະນາໄມ. ນອກຈາກນັ້ນ ແມ່ຍິງທີ່ເຮັດວຽກບໍລິການ, ກຸ່ມເຄື່ອນທີ່ຕ່າງໆ ເຊັ່ນ: ຄົນຂັບລົດ, ຕຳຫຼວດ, ທະຫານ ແລະ ຜູ້ເຄື່ອນຍ້າຍແຮງງານເປັນກຸ່ມສ່ຽງຕໍ່ການຕິດເຊື້ອໂຣກ ເພາະວ່າພວກເຂົາມັກມີເພດສຳພັນທີ່ບໍ່ປອດໄພ. ຄວາມທຸກຍາກ, ຄວາມບໍ່ສົນໃຈ, ການສວຍໃຊ້ທາງເພດ, ການຄ້າມະນຸດ ແລະ ການເຄື່ອນຍ້າຍແຮງງານ ເພື່ອຊອກຫາວຽກເຮັດງານທຳ ຫຼື ທຸລະກິດ ແມ່ນສາເຫດຕົ້ນຕໍທີ່ເຮັດໃຫ້ແມ່ຍິງ ແລະ ເດັກຍິງມີຄວາມສ່ຽງຕໍ່ການຕິດເຊື້ອໂຣກເອດສໄອວີ/ເອດສ. ການທີ່ແມ່ຍິງມີສະຖານະພາບຕ່ຳ, ຂາດອຳນາດໃນການຕັດສິນໃຈ ແລະ ເສດຖະກິດທີ່ບໍ່ໝັ້ນຄົງ, ໂດຍສະເພາະແມ່ນແມ່ຍິງທີ່ແຕ່ງງານແລ້ວ ມີຄວາມຫຍຸ້ງຍາກຫຼາຍ ໃນການຮັບມືກັບການມີເມຍນອກສົມລົດ (ເມຍນ້ອຍ) ຂອງຜົວເຂົາເຈົ້າ ຫຼື ການຕໍ່ລອງໃນການໃຊ້ຖົງຢາງອະນາໄມ. ວັດທະນະທຳ ແລະ ຮີດຄອງປະເພນີ ທີ່ມີມາແຕ່ດັ້ງເດີມນັ້ນ ຍັງເປັນສິ່ງກີດຂວາງໃນການມີເພດສຳພັນທີ່ປອດໄພອີກຢ່າງໜຶ່ງ.

*ລັດຖະບານແຫ່ງ ສປປ ລາວ ກຳລັງສຸມທຸກຄວາມພະຍາຍາມເພື່ອປ້ອງກັນການແຜ່ລະບາດຂອງພະຍາດດັ່ງກ່າວ*

ລັດຖະບານລາວໄດ້ວາງແຜນຍຸດທະສາດ ແລະ ແຜນປະຕິບັດລະດັບຊາດ ເພື່ອຕ້ານໂຣກເອດສໄອວີ/ເອດສ ສົກປີ 2000-2005, ຊຶ່ງປະສານງານໂດຍ ຫ້ອງການຄະນະກຳມະການຕ້ານເອດແຫ່ງຊາດ (NCCAB). ໃນເດືອນ ທັນວາ ປີ 2001, ກະຊວງ ສາທາລະນະສຸກ ໄດ້ອອກນະໂຍບາຍກ່ຽວກັບໂຣກເອດສ ແລະ ພະຍາດຕິດຕໍ່ທາງເພດສຳພັນ ເພື່ອປ້ອງກັນການແຜ່ລະບາດຂອງການຕິດເຊື້ອເອດສໄອວີ. ລັດຖະບານໄດ້ສົ່ງເສີມໂຄງການສຶກສາເພື່ອນສອນເພື່ອນ, ການຝຶກອົບຮົມວິຊາຊີບ ແລະ ກິດຈະກຳ ການສ້າງຈິດສຳນຶກ ໂດຍການສະໜັບສະໜູນຈາກໂຄງການ UNAIDS, ຄະນະກຳມະການຮັບຜິດຊອບກອງທຶນຕ້ານເອດສ ໄດ້ຮັບການສ້າງຕັ້ງຂຶ້ນເພື່ອລະດົມ ແລະ ປະສານສົມທົບແຈກຢາຍຊັບພະຍາກອນລົງແຂວງຕ່າງໆ ແລະ ພາກສ່ວນຂະແໜງການຕ່າງໆ ເພື່ອສ້າງຄວາມສາມາດໃຫ້ແກ່ເຂົາເຈົ້າ. ນອກຈາກນັ້ນ ລັດຖະມົນຕີວ່າການກະຊວງສາທາລະນະສຸກ ຍັງໄດ້ຮຽກຮ້ອງໃຫ້ເອົາໃຈໃສ່ໃຫ້ມີການພັດທະນາແບບປະສົມປະສານຮອບດ້ານຫຼາຍຂຶ້ນ. ໂດຍສະເພາະ ການບໍລິການດ້ານສຸຂະພາບຂອງແມ່ ແລະ ເດັກ ແລະ

ການສັກຢາກັນພະຍາດຕ່າງໆ; ການພັດທະນາແບບກະຈາຍອຳນາດດ້ານການບໍລິການລົງສູ່ຊຸມຊົນ ແລະ ເປັນລະບົບພ້ອມທັງພັດທະນາລະບົບຂໍ້ມູນຂ່າວສານດ້ານສາທາລະນະສຸກໃຫ້ເປັນລະບົບ ແລະ ງ່າຍຂຶ້ນຕື່ມອີກ.

## 7.4. ການນຳໃຊ້ຄວາມຮຸນແຮງຕໍ່ກັບແມ່ຍິງ

***ການສຶກສາຄົ້ນຄວ້າໄດ້ສະແດງໃຫ້ເຫັນວ່າຄວາມຮຸນແຮງຕໍ່ແມ່ຍິງ (VAW) ເປັນເລື່ອງທຳມະດາທີ່ເກີດຂຶ້ນໃນ ສປປ ລາວ***

ຕາມການສຳຫຼວດໃນປີ 2003 ເຫັນວ່າ ມີແມ່ຍິງລາວ ປະມານ 1.000 ຄົນໄດ້ຮັບຄວາມຮຸນແຮງ (GDG 2003), ໃນນັ້ນຈຳນວນ 35% ແມ່ນຖືກຄວາມຮຸນແຮງທາງດ້ານຈິດໃຈ, 17% ໄດ້ຮັບຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ມີແມ່ຍິງ 15 ຄົນ ( ຫລື 1,6% ) ໄດ້ຮັບຄວາມຮຸນແຮງທາງເພດສຳພັນຈາກຜົວຂອງເຂົາເຈົ້າ. ມີແມ່ຍິງ 19 ຄົນ (1,9%) ບອກວ່າເຂົາເຈົ້າໄດ້ຮັບຄວາມຮຸນແຮງໃນໄລຍະທີ່ກຳລັງຖືພາ (ມີລູກ). ຈຳນວນ 25% ແມ່ນຖືກທຳຮ້າຍຮ່າງກາຍ. ໃນຈຳນວນທັງໝົດ 57 ກໍລະນີນັ້ນ ມີ 14 ກໍລະນີທີ່ຖືກບາດເຈັບເຖິງຂັ້ນຕ້ອງໄດ້ປິ່ນປົວ ແລະ ມີແມ່ຍິງ 6 ຄົນຖືກຕົບຕີຈົນສະຫຼົບ. ນອກຈາກການຖືກທຳຮ້າຍທາງດ້ານຮ່າງກາຍແລ້ວ, ຍັງມີຜົນກະທົບຕໍ່ສຸຂະພາບທາງຈິດໃຈຂອງແມ່ຍິງອີກນຳ.

ການສຳຫຼວດໄດ້ລາຍງານວ່າ ມີຈຳນວນຫຼາຍກ່ວາເຄິ່ງໜຶ່ງຂອງຜູ້ໄດ້ຮັບເຄາະຮ້າຍ ຈາກຄວາມຮຸນແຮງໄດ້ອອກຈາກບ້ານໄປ ເພາະວ່າເຂົາເຈົ້າບໍ່ສາມາດຈະທົນຕໍ່ຄວາມຮຸນແຮງທີ່ເກີດຂຶ້ນໄດ້, ແຕ່ວ່າມີແມ່ຍິງເກືອບທັງໝົດໄດ້ກັບຄືນມາຢູ່ກັບຜົວຂອງເຂົາເຈົ້າຄືເກົ່າ. ໃນກໍລະນີຄວາມຮຸນແຮງເກີດຂຶ້ນໃນຄອບຄົວ, ແມ່ຍິງສ່ວນໃຫຍ່ຈະຊອກຫາຄວາມຊ່ວຍເຫຼືອຈາກສະມາຊິກຄອບຄົວ ຫຼື ຄະນະບ້ານ ແລະ ສ່ວນຫຼາຍຈະຖືກແນະນຳໃຫ້ແມ່ຍິງຢູ່ກັບຜົວຂອງເຂົາເຈົ້າ ເພື່ອ ປຶກສາຫາລືກ່ຽວກັບໜ້າທີ່ຄວາມຮັບຜິດຊອບ ແລະ ພະຍາຍາມປັບປຸງຄວາມປອງດອງກັນລະຫວ່າງຜົວ-ເມຍ. ສິ່ງນີ້ສະແດງໃຫ້ເຫັນວ່າ ສັງຄົມໄດ້ບັງຄັບໃຫ້ແມ່ຍິງລາວຕ້ອງແຕ່ງງານ ແລະ ຄົງທົນຕໍ່ສະພາບການແຕ່ງງານໂດຍບໍ່ມີເງື່ອນໄຂ.

ຢູ່ໃນສັງຄົມລາວ, ແມ່ຍິງສ່ວນໃຫຍ່ບໍ່ຄ່ອຍຈະເວົ້າ ແລະ ລາຍງານບັນຫາທີ່ເກີດຂຶ້ນໃນຄອບຄົວ ແລະ ຕົນເອງ, ໂດຍສະເພາະແມ່ນຄວາມຮຸນແຮງທາງເພດ. ບັນຫາດັ່ງກ່າວນີ້ໄດ້ສ່ອງແສງເຖິງຄຸນຄ່າທາງສັງຄົມ ແລະ ຄວາມເຂົ້າໃຈຂອງຄົນທີ່ເຊື່ອວ່າ ການລ່ວງລະເມີດທາງເພດເປັນເລື່ອງບໍ່ຮ້າຍແຮງ. ໃນກຸ່ມຄົນໜຸ່ມຈຳນວນ 53%, ຊຶ່ງໃນນັ້ນມີເດັກນ້ອຍຍິງ 63% ແລະ ມີເດັກນ້ອຍຊາຍ 45% ໄດ້ຕົກລົງເຫັນດີວ່າມັນເປັນເລື່ອງທຳມະດາທີ່ຜົວຈະຕ້ອງຕີເມຍເມື່ອເມຍເຮັດຜິດ (ຟັງສຽງຂອງຄົນໜຸ່ມ 1998). ນອກຈາກ

ນັ້ນ, ສັງຄົມຍັງເຂົ້າໃຈວ່າການນຳໃຊ້ຄວາມຮຸນແຮງລະຫວ່າງຄູ່ຜົວເມຍ ແມ່ນເລື່ອງພາຍໃນຄອບຄົວ ແລະ ບໍ່ເປັນອັນຕະລາຍຮ້າຍແຮງຕໍ່ກັບຜູ້ໄດ້ຮັບເຄາະຮ້າຍ ຊຶ່ງສ່ວນຫຼາຍແມ່ນເກີດຂຶ້ນກັບແມ່ຍິງ.

ທັດສະນະຄະຕິແບບນີ້ຍັງໄດ້ລະບຸໄວ້ໃນກົດໝາຍອາຍາ (ປີ 1992), ຊຶ່ງບໍ່ໄດ້ວາງມາດຕະການແກ້ໄຂຄວາມຮຸນແຮງໃນຄົວເຮືອນຢ່າງຊັດເຈນ ແຕ່ວ່າໄດ້ລະບຸໄວ້ໃນກົດໝາຍອາຍາ (ມາດຕາ 22) ວ່າອາດຈະບໍ່ມີຄວາມຜິດຖ້າໃນກໍລະນີທີ່ການທຳຮ້າຍຮ່າງກາຍບໍ່ຮຸນແຮງ ຫຼື ການໃຊ້ຄວາມຮຸນແຮງລະຫ່ວາງຍາດພີ່ນ້ອງທີ່ບໍ່ໄດ້ຮັບບາດເຈັບ ຫຼື ຄວາມເສຍຫາຍທາງຮ່າງກາຍຢ່າງຮຸນແຮງ ເຊັ່ນ: ການມິ່ນປະມາດ, ການໃສ່ຮ້າຍປ້າຍສີ, ການດູຖູກ ຫຼື ການລ່ວງລະເມີດຕ່າງໆ.

- *ໃນກໍລະນີການລ່ວງລະເມີດທີ່ບໍ່ເປັນອັນຕະລາຍຕໍ່ສັງຄົມ ແລະ ຖ້າຝ່າຍໄດ້ຮັບຄວາມເສຍຫາຍບໍ່ມີການຮ້ອງຟ້ອງ ກໍ່ຈະບໍ່ມີການພິພາກສາຄະດີເກີດຂຶ້ນ ຊຶ່ງລວມມີ:ການທຳຮ້າຍຮ່າງກາຍລະຫ່ວາງຍາດພີ່ນ້ອງໂດຍບໍ່ບາດເຈັບສາຫັດ ຫຼື ເສຍຫາຍທາງດ້ານຮ່າງກາຍ, ການມິ່ນປະມາດ, ການໃສ່ຮ້າຍປ້າຍສີ, ການດູຖູກ, ການລ່ວງລະເມີດຕໍ່ບຸກຄົນ ຫຼື ຊື່ສຽງຂອງຜູ້ທີ່ລ່ວງລັບໄປແລ້ວ, ການທຳລາຍຊັບສົມບັດຂອງຍາດພີ່ນ້ອງ, ການລ່ວງລະເມີດຕໍ່ທີ່ຕັ້ງພູມລຳເນົາ ແລະ ຄວາມລັບສ່ວນຕົວຕ່າງໆ.*

## *ແນວຄວາມຄິດ ແລະ ຄວາມເຂົ້າໃຈກ່ຽວກັບຄວາມຮຸນແຮງຕໍ່ກັບແມ່ຍິງແມ່ນຍັງຢູ່ໃນລະດັບຕ່ຳຫຼາຍ*

ບັນດາອົງການຈັດຕັ້ງທີ່ບັງຄັບໃຊ້ກົດໝາຍຕ່າງໆ ເຊັ່ນ: ຕຳຫຼວດ, ຜູ້ເຮັດວຽກການປົກຄອງ, ຜູ້ເຮັດວຽກດ້ານສາທາລະນະສຸກຍັງບໍ່ທັນເຂົ້າໃຈເຖິງຄວາມຮຸນແຮງຕໍ່ກັບແມ່ຍິງຢ່າງເລິກເຊິ່ງ. ຍັງມີຫຼາຍກໍລະນີທີ່ຄວາມຮຸນແຮງຕໍ່ກັບແມ່ຍິງຍັງບໍ່ມີການລາຍງານ, ບັນທຶກ ແລະ ຄົ້ນຄ້ວາ. ຄວາມຈິງແລ້ວ, ຕາມການສຳຫຼວດຕົວຢ່າງ 2.399 ຄົວເຮືອນ ຢູ່ 3 ແຂວງ ແລະ ນະຄອນຫຼວງວຽງຈັນ, ມີຈຳນວນຄົວເຮືອນພຽງເຄິ່ງໜຶ່ງເທົ່ານັ້ນທີ່ມີແມ່ຍິງໄດ້ຮັບຄວາມຮຸນແຮງທາງເພດພາຍໃນໄລຍະ 12 ເດືອນຜ່ານມາ (ມີ15 ຄົນ ໃນຈຳນວນ 29 ຄົນ) ທີ່ໄດ້ລາຍງານເຫດການທີ່ເກີດຂຶ້ນ, ມີແມ່ຍິງ 11 ຄົນໄດ້ລາຍງານຕໍ່ກັບອຳນາດການປົກຄອງບ້ານ, ມີ 2 ຄົນໄດ້ຖືກສົ່ງໃຫ້ຕຳຫຼວດ ແລະ ອີກ 2 ຄົນໄດ້ສົ່ງຟ້ອງສານ (GRID 1998). ສິ່ງນີ້ໄດ້ສະແດງໃຫ້ເຫັນບົດບາດສຳຄັນຂອງອຳນາດການປົກຄອງບ້ານ, ຊຶ່ງແມ່ຍິງ ສ່ວນໃຫ່ຍໄດ້ເຂົ້າໄປລາຍງານໃຫ້ເຂົາເຈົ້າໃນກໍລະນີມີຄວາມຮຸນແຮງເກີດຂຶ້ນ. ມີຂໍ້ມູນກ່ຽວກັບການມີສ່ວນຮ່ວມຂອງແມ່ຍິງຢູ່ໃນຄະນະກຳມະການຕ່າງໆຂັ້ນບ້ານ ໄດ້ສະແດງໃຫ້ເຫັນວ່າ ຄະນະກຳມະການໄກ່ເກ່ຍ ຊຶ່ງລວມມີຕົວແທນສະຫະພັນແມ່ຍິງລາວໄດ້ມີບົດບາດອັນສຳຄັນໃນການແກ້ໄຂບັນຫາດັ່ງກ່າວ (GRID 2003).

*ຄວາມພະຍາຍາມເພື່ອແກ້ໄຂບັນຫາຄວາມຮຸນແຮງຕໍ່ແມ່ຍິງ (VAW)*

ສະຫະພັນແມ່ຍິງລາວໄດ້ສ້າງຕັ້ງຫ້ອງການໃຫ້ຄໍາປຶກສາສໍາລັບແມ່ຍິງຂຶ້ນ (WCO) ທີ່ຂຶ້ນກັບກົມປົກປ້ອງສິດ ແລະ ຜົນປະໂຫຍດຂອງແມ່ຍິງ. ແຕ່ເດືອນ 9 ປີ 2002 ເຖິງເດືອນ 8 ປີ 2003, ຫ້ອງການດັ່ງກ່າວ (WCO) ໄດ້ໃຫ້ຄໍາປຶກສາແກ່ແມ່ຍິງເຖິງຈໍານວນ 122 ຄົນ, ຊຶ່ງໄດ້ແບ່ງກໍລະນີຜູ້ມາຮັບຄໍາປຶກສາອອກເປັນກຸ່ມຕ່າງໆ ເຊັ່ນ: ກຸ່ມມີບັນຫາດ້ານກົດໝາຍ, ບັນຫາດ້ານສຸຂະພາບ ແລະ ດ້ານຈິດຕະສາດ. ໃນຈໍານວນ 3 ກຸ່ມນີ້, ພວກເຮົາໄດ້ຄົ້ນພົບກໍລະນີຕ່າງໆ ເຊັ່ນ: ແມ່ຍິງໄດ້ມາຮ້ອງທຸກກ່ຽວກັບການຖືກຂົ່ມຂືນຊໍາເລົາ, ການທາລຸນທາງເພດເດັກນ້ອຍ, ການຄ້າມະນຸດ ຫຼື ການຄ້າປະເວນີ, ຜົນກະທົບຕໍ່ສຸຂະພາບຫຼັງການຂົ່ມຂືນ, ທໍາຮ້າຍຮ່າງກາຍ, ການຖືພາແບບບໍ່ໄດ້ຕັ້ງໃຈ ແລະ ການບັງຄັບໃຫ້ແທ້ງລູກ (ເອົາລູກອອກ). ຫ້ອງການໃຫ້ຄໍາປຶກສາແກ່ແມ່ຍິງໄດ້ໃຫ້ການຊ່ວຍເຫຼືອແກ່ແມ່ຍິງໃນດ້ານຕ່າງໆ ລວມທັງການຂຽນເອກະສານຮ້ອງຟ້ອງຂຶ້ນສານ ແລະ ພ້ອມທັງຕິດຕາມ ແລະ ນໍາແມ່ຍິງເຂົ້າໂຮງໝໍ, ສະໜັບສະໜູນຜູ້ໄດ້ຮັບເຄາະຮ້າຍຕ່າງໆບໍ່ວ່າທາງດ້ານຮ່າງກາຍ ກໍຄືຈິດໃຈ ແລະ ປົກປ້ອງເຂົາເຈົ້າຈາກການສູນເສຍຄວາມນັບຖື, ຄວາມໝັ້ນໃຈ ແລະ ສັກສີຂອງຕົນເອງ. ເຖິງຢ່າງໃດກໍ່ຕາມ, ມັນມີຄວາມຈໍາເປັນຈະຕ້ອງໄດ້ໂຄສະນາເຜີຍແຜ່ ເພື່ອ ສ້າງຈິດສໍານຶກກ່ຽວກັບຜົນເສຍຫາຍຕ່າງໆ ຈາກການກະທໍາຄວາມຮຸນແຮງຕໍ່ກັບແມ່ຍິງໃຫ້ທົ່ວເຖິງບັນດາ ແຂວງ ແລະ ເມືອງຕ່າງໆ. ນອກຈາກນັ້ນ, ມັນຍັງມີຄວາມຈໍາເປັນອັນເລັ່ງດ່ວນທີ່ຕ້ອງໄດ້ສ້າງຕັ້ງທີ່ພັກ ອາໃສສໍາລັບຜູ້ເຄາະຮ້າຍຕ່າງໆ.

## 7.5. ຢາເສບຕິດ

*ການຕິດຢາຝິ່ນເປັນພາລະອັນໜັກໜ່ວງໃຫ້ແມ່ຍິງ, ໂດຍສະເພາະແມ່ຍິງຊົນເຜົ່າທີ່ທຸກຍາກ*

ການຕິດຝິ່ນ ແລະ ກະທໍາຜິດມັກປະກົດມີຢູ່ໃນບັນດາກຸ່ມຊົນເຜົ່າທີ່ທຸກຍາກຕ່າງໆ. ໃນຈໍານວນຄົນຕິດຝິ່ນທັງໝົດ 52.613 ຄົນນັ້ນ, ຈໍານວນ 80% ແມ່ນຜູ້ຊາຍ ແລະ 20% ແມ່ນແມ່ຍິງ (MOH 2003). ການຕິດຝິ່ນມີຜົນກະທົບທາງລົບຕໍ່ການຜະລິດຂອງຄອບຄົວຫຼາຍຢ່າງ. ຜູ້ເປັນພໍ່ ຫຼື/ແລະ ຜົວຂອງຄອບຄົວຜູ້ທີ່ຕິດຝິ່ນຕ້ອງແມ່ນຜູ້ຮັບຜິດຊອບຕົ້ນຕໍຂອງຄອບຄົວ.

ແຕ່ເນື່ອງຈາກວ່າພວກເຂົາເຈົ້າຕິດຝິ່ນ, ສະນັ້ນບາງຄັ້ງຄອບຄົວອາດຈະຂາດເຂີນແຮງງານໃນການຜະລິດ ແລະ ໃນທີ່ສຸດກໍເຮັດໃຫ້ແມ່ຍິງຕ້ອງຮັບພາລະ ໜັກຫຼາຍຂຶ້ນ. ຖ້າຫາກແມ່ຍິງຕິດຝິ່ນອີກຄົນໜຶ່ງແລ້ວ ທຸກສິ່ງຢ່າງກໍ່ຈະຍິ່ງກາຍເປັນເລື່ອງທີ່ຮ້າຍລົງກວ່າ ເກົ່າ ແລະ ບັນດາລູກຂອງເຂົາເຈົ້າກໍ່ໄດ້ຮັບຜົນກະທົບໄປນໍາ ແລະ ບາງຄັ້ງພວກເຂົາກໍ່ອາດຈະກາຍເປັນຄົນຕິດຝິ່ນໄປນໍາເພາະວ່າພວກເຂົາໄດ້ຮຽນຮູ້ວິທີການສູບຝິ່ນຈາກພໍ່ແມ່. ມີຂໍ້ມູນລາຍງານວ່າ ການຜະລິດຢາຝິ່ນ ຊຶ່ງແຕ່ກ່ອນມີແມ່ຍິງປະກອບສ່ວນແຮງງານເຖິງ 62% ແມ່ນມີທ່າທາງຫຼຸດລົງຕັ້ງແຕ່ປີ 1989 ເປັນຕົ້ນມາ ເນື່ອງຈາກລັດຖະບານມີໂຄງການ ແລະ ໄດ້ວາງແຜນປະຕິບັດເພື່ອແນໃສ່ຍຸດຕິການປູກຝິ່ນຢ່າງສິ້ນເຊີງກ່ອນປີ 2006.

# ບົດທີ 8

## ການມີສ່ວນຮ່ວມຂອງແມ່ຍິງໃນການຕັດສິນໃຈ

### 8.1. ສະພາບລວມ

ໃນປະຈຸບັນມີແມ່ຍິງ 23% ໃນສະມາຊິກສະພາແຫ່ງຊາດ ສປປ ລາວ, ຊຶ່ງເປັນສ່ວນຮ້ອຍທີ່ສູງທີ່ສຸດໃນພາກພື້ນອາຊີຕາເວັນອອກສຽງໃຕ້ (ຮູບສະແດງ 12). ແຕ່ໃນຂະນະດຽວກັນ, ມີແມ່ຍິງໜ້ອຍໃນຕໍາແໜ່ງຂັ້ນການນໍາຂອງກະຊວງ ແລະ ອົງການຈັດຕັ້ງຕ່າງໆ, ຊຶ່ງບໍ່ມີແມ່ຍິງເປັນລັດຖະມົນຕີ, ມີແມ່ຍິງພຽງ 2 ທ່ານ ເປັນຮອງລັດຖະມົນຕີ, ມີແມ່ຍິງ 1 ທ່ານ ເປັນຄະນະສານປະຊາຊົນ ແລະ ມີແມ່ຍິງພຽງ 1 ທ່ານ ເປັນເຈົ້າແຂວງ. ຈາກຄວາມພະຍາຍາມຂອງລັດຖະບານໃນການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ເຮັດໃຫ້ມີຈໍານວນແມ່ຍິງເພີ່ມຂຶ້ນໃນຕໍາແໜ່ງຜູ້ບໍລິຫານຂອງຄະນະກໍາມະການແຜນການ ແລະ ການຮ່ວມມື. ຄ່ານິຍົມທາງດ້ານວັດທະນະທໍາແມ່ນສາເຫດໜຶ່ງ ທີ່ເຮັດໃຫ້ແມ່ຍິງບໍ່ມີໂອກາດເຂົ້າມາມີສ່ວນຮ່ວມໃນວຽກງານການເມືອງ ແລະ ຂັ້ນຕັດສິນໃຈຕ່າງໆ.




ຮູບສະແດງ 12: ແມ່ຍິງໃນລັດຖະສະພາຕໍ່າໃນອາຊີຕາເວັນອອກ (2005)
ແຫຼ່ງຂໍ້ມູນ: IPU 2005

## 8.2. ແມ່ຍິງໃນສະພາແຫ່ງຊາດ

*ມີຈຳນວນແມ່ຍິງເພີ່ມຂຶ້ນໃນສະພາແຫ່ງຊາດຂອງສປປ ລາວ*

ໃນລະບົບການເມືອງ ແລະ ການປົກຄອງແຫ່ງ ສປປ ລາວ, ປະຊາຊົນລາວບັນດາເຜົ່າຈະເປັນຜູ້ເລືອກເອົາສະມາຊິກສະພາແຫ່ງຊາດ, ຊຶ່ງ 5 ປີ ເລືອກເອົາຄັ້ງໜຶ່ງ. ປະທານປະເທດເປັນຜູ້ນຳສູງສຸດຂອງລັດ ແລະ ກົງຈັກການຈັດຕັ້ງຕົ້ນຕໍຂອງລັດຖະບານແມ່ນສຳນັກງານນາຍົກລັດຖະມົນຕີ. ໂຄງຮ່າງການຈັດຕັ້ງຂອງລັດຖະບານແມ່ນເລີ່ມຈາກລະດັບຂັ້ນແຂວງ ຫາ ຂັ້ນເມືອງ ແລະ ຂັ້ນບ້ານ, ຊຶ່ງໃນແຕ່ລະຂັ້ນໄດ້ແບ່ງເປັນເຂດຮັບຜິດຊອບຄືກັບຂັ້ນສູນກາງຂອງກະຊວງຕ່າງໆ, ຍົກເວັ້ນແຕ່ເຂດຄວາມຮັບຜິດຊອບຂອງກະຊວງປ້ອງກັນປະເທດ, ກະຊວງການຕ່າງປະເທດ ແລະ ຕຳຫຼວດ.

ນອກຈາກສະໄໝທີ່ໜຶ່ງຂອງສະພາແຫ່ງຊາດ, ແມ່ຍິງລາວແມ່ນໄດ້ທີ່ນັ່ງໃນສະພາແຫ່ງຊາດ ທັງ 4 ສະໄໝ, ໃນ ປີ 1997 ມີແມ່ຍິງເປັນສະມາຊິກສະພາແຫ່ງຊາດ 20% ແລະ 23% ຈາກການເລືອກຕັ້ງໃນຊຸດທີ່ຜ່ານມາ (ຮູບສະແດງ13). ເຖິງວ່າ ເປັນອັດຕາທີ່ສູງໃນຂົງເຂດພາກພື້ນ ແລະ ໃນໂລກກໍ່ຕາມ, ແຕ່ອັດຕາສ່ວນຮ້ອຍດັ່ງກ່າວຍັງຕໍ່າກວ່າຕົວເລກຄາດໝາຍ 50% ຂອງກອງປະຊຸມປັກກິ່ງ + 5. ຈຳນວນຜູ້ແທນແມ່ຍິງແມ່ນແຕກຕ່າງກັນໄປຕາມແຂວງເລີ່ມຈາກ 0% ໃນເຂດພິເສດໄຊສົມບູນ ເຖິງ 50% ຢູ່ ແຂວງຊຽງຂວາງ (ຮູບສະແດງ14), ຊຶ່ງມັນສະທ້ອນໃຫ້ເຫັນເຖິງຜົນກະທົບຂອງຄວາມແຕກຕ່າງທາງດ້ານວັດທະນະທຳ ແລະ ຄວາມເຂົ້າໃຈຂອງບັນດາເຜົ່າແຕ່ລະຂົງເຂດ.

ເມື່ອເບິ່ງຈຳນວນຜູ້ແທນໃນຄະນະກຳມະການສະພາແຫ່ງຊາດ (NA), ເຫັນວ່າ ມີຈຳນວນແມ່ຍິງເປັນຄະນະກຳມະການດ້ານວັດທະນະທຳ ແລະ ສັງຄົມຫຼາຍກ່ວາເປັນຄະນະກຳມະການດ້ານຄວາມໝັ້ນຄົງ, ກົດໝາຍ ແລະ ເສດຖະກິດ. ມີແມ່ຍິງຈຳນວນ 28% ເປັນຄະນະກອງເລຂາທິການສະພາແຫ່ງຊາດ. ມີແມ່ຍິງພຽງ 24 ທ່ານ ໃນຈຳນວນ 87 ທ່ານ ແລະ ບໍ່ມີແມ່ຍິງເປັນຜູ້ບໍລິຫານໃນຫ້ອງການສະພາແຫ່ງຊາດຂັ້ນແຂວງ.




ຮູບສະແດງ 13: ອັດຕາສ່ວນລະຫວ່າງຍິງ-ຊາຍໃນສະພາແຫ່ງຊາດລາວ (ສະໄໝທີ 5 ຜ່ານມາ)
ແຫຼ່ງຂໍ້ມູນ: GRID 2004




ຮູບສະແດງ 14: ອັດຕາສ່ວນລະຫວ່າງຍິງ-ຊາຍໃນສະພາແຫ່ງຊາດຂັ້ນແຂວງ

ແຫຼ່ງຂໍ້ມູນ: GRID 2004

## 8.3. ແມ່ຍິງໃນໜ່ວຍງານຂອງລັດ

***ແມ່ຍິງມີໜ້າທີ່ຕຳແໜ່ງຕ່ຳໃນໜ່ວຍງານຂອງລັດ***

ໃນຕາຕະລາງ 11 ສະແດງໃຫ້ເຫັນວ່າ ມີຈຳນວນແມ່ຍິງໜ້ອຍໃນຕຳແໜ່ງການນຳຂອງໜ່ວຍງານຂອງລັດ. ປະຈຸບັນມີແມ່ຍິງພຽງ 2 ທ່ານ ເປັນຮອງລັດຖະມົນຕີ, ບໍ່ມີຈັກທ່ານເປັນເຈົ້າແຂວງ ແລະ ຮອງເຈົ້າແຂວງ, ແລະ ມີພຽງ 1 ທ່ານ ເປັນຫົວໜ້າພະແນກຂອງແຂວງໃນຈຳນວນທັງໝົດ 28 ທ່ານ.

ຕາຕະລາງ11: ການມີສ່ວນຮ່ວມຂອງແມ່ຍິງ ແລະ ຜູ້ຊາຍ ໃນຕຳແໜ່ງການນຳຂອງລັດ (2004)

| | ແມ່ຍິງ | ຜູ້ຊາຍ | ລວມ |
|---|---|---|---|
| ລັດຖະມົນຕີ ແລະ ທຽບເທົ່າລັດຖະມົນຕີ | 2,7% | 97,2% | 100% |
| ຮອງລັດຖະມົນຕີ ແລະ ທຽບເທົ່າຮອງລັດຖະມົນຕີ | 9,0% | 91,0% | 100% |
| ເອກອັກຄະລັດຖະທູດ | 0% | 100% | 100% |

ແຫ່ງຂໍ້ມູນ: DOA, 2004

### *ມີແມ່ຍິງຈຳນວນໜ້ອຍຫຼາຍໃນຕຳແໜ່ງການນຳຂັ້ນແຂວງ ແລະ ເມືອງ*

ຕາຕະລາງ12: ການມີສ່ວນຮ່ວມຂອງແມ່ຍິງໃນຕຳແໜ່ງການນຳຂັ້ນແຂວງ ແລະ ເມືອງ (2004)

| | ແມ່ຍິງ | ຜູ້ຊາຍ | ລວມ |
|---|---|---|---|
| ເຈົ້າແຂວງ | 0 | 18 | 18 |
| ຮອງເຈົ້າແຂວງ | 0 | 18 | 18 |
| ເຈົ້າເມືອງ | 3 | 138 | 141 |
| ຮອງເຈົ້າເມືອງ | 2 | 179 | 181 |
| ຫົວໜ້າຫ້ອງວ່າການແຂວງ | 1 | 17 | 18 |
| ຮອງຫົວໜ້າຫ້ອງວ່າການແຂວງ | 0 | 55 | 55 |
| ຫົວໜ້າຫ້ອງວ່າການເມືອງ | 0 | 141 | 141 |
| ຮອງຫົວໜ້າຫ້ອງວ່າການເມືອງ | 2 | 211 | 213 |

ແຫ່ງຂໍ້ມູນ: DOA, 2004

ໃນຕາຕະລາງ12 ສະແດງໃຫ້ເຫັນວ່າ ມີແມ່ຍິງພຽງ 3 ທ່ານ ເປັນເຈົ້າເມືອງ ແລະ ມີ 2 ທ່ານຮອງເຈົ້າເມືອງ. ຂໍ້ມູນດັ່ງກ່າວນີ້ສະທ້ອນໃຫ້ເຫັນວ່າ ແມ່ຍິງບໍ່ມີບົດບາດສຳຄັນໃນວຽກງານການເມືອງ ແລະ ການຕັດສິນໃຈ, ຊຶ່ງກົງກັນຂ້າມກັບຂໍ້ມູນທີ່ວ່າ ແມ່ຍິງມີບົດບາດສຳຄັນໃນການປະກອບສ່ວນພັດທະນາເສດຖະກິດຂອງຊາດ.

ບໍ່ຄ່ອຍມີແມ່ຍິງເປັນຄະນະບ້ານ. ການຈັດຕັ້ງບ້ານປະກອບມີຄະນະບ້ານທີ່ມີນາຍບ້ານ ແລະ ຮອງນາຍບ້ານ 2 ທ່ານ, ຄະນະກຳມະການແນວໂຮມບ້ານ (ແນວລາວສ້າງຊາດ) ແລະ ຄະນະກຳມະການດ້ານເສດຖະກິດ, ສະຫະພັນແມ່ຍິງບ້ານ, ຊາວໜຸ່ມບ້ານ, ຕຳຫຼວດບ້ານ, ກອງຫຼອນບ້ານ, ຄະນະກຳມະການໄກ່ເກ່ຍ ແລະ ອື່ນໆ ເຊັ່ນ: ກຸ່ມຜູ້ນຳໃຊ້ນ້ຳ, ຊາວນາ. ສ່ວນຫລາຍແມ່ນຜູ້ຊາຍທີ່ຢູ່ໃນຄະນະກຳມະການຂັ້ນບ້ານຕ່າງໆ. ສຂບພ ໄດ້ເຮັດການສຳຫຼວດຢູ່ນະຄອນຫຼວງວຽງຈັນ ແລະ 3 ແຂວງ ກ່ຽວກັບການມີສ່ວນຮ່ວມຂອງແມ່ຍິງໃນຄະນະກຳມະການຕ່າງໆຂັ້ນບ້ານ ສະແດງໃຫ້ເຫັນວ່າ ນອກຈາກສະຫະພັນແມ່ຍິງບ້ານແລ້ວ, ມີແມ່ຍິງໜ້ອຍທີ່ສຸດໃນຄະນະກຳມະການຕ່າງໆຂັ້ນບ້ານ (ຕາຕະລາງທີ13).

ຕາຕະລາງ13: ສະຖິຕິຂອງແມ່ຍິງ ແລະ ຜູ້ຊາຍ ໃນ 4 ຄະນະກຳມະການຂັ້ນບ້ານ (ຈຳນວນ 100 ບ້ານ)

| ຊື່ຄະນະກຳມະການ | ຈຳນວນບ້ານທີ່ມີຄະນະກຳມະການ | ລວມ | | ເພດຊາຍ | | ເພດຍິງ | |
|---|---|---|---|---|---|---|---|
| | | ຈຳນວນ | % | ຈຳນວນ | % | ຈຳນວນ | % |
| ຄະນະບ້ານ | 93 | 302 | 100 | 278 | 92,1 | 24 | 7,9 |
| ຄະນະກວດກາ | 45 | 154 | 100 | 128 | 83,1 | 26 | 16,9 |
| ຄະນະໄກ່ເກ່ຍ | 93 | 479 | 100 | 392 | 83,1 | 80 | 16,9 |
| ຊາວໜຸ່ມບ້ານ | 81 | 310 | 100 | 216 | 69,7 | 94 | 30,3 |
| ແນວລາວສ້າງຊາດ | 98 | 400 | 100 | 352 | 88,0 | 48 | 12,0 |
| ກຸ່ມຊາວນາ | 27 | 117 | 100 | 103 | 88,0 | 14 | 12,0 |
| ກຸ່ມຜູ້ນຳໃຊ້ນ້ຳ | 24 | 80 | 100 | 69 | 86,2 | 11 | 13,8 |
| ລວມ | 461 | 1835 | 100 | 1538 | 83,8 | 297 | 16,2 |

ແຫ່ງຂໍ້ມູນ: NSC ແລະ LWU/GRID 1998

ເມື່ອສັງເກດເບິ່ງຕາຕະລາງຂ້າງເທິງເຫັນວ່າ ອົງການຈັດຕັ້ງຊາວໜຸ່ມບ້ານ, ຊຶ່ງເປັນອົງການຈັດຕັ້ງມະຫາຊົນສຳລັບຊາວໜຸ່ມອາຍຸລະຫ່ວາງ 15-35 ປີ ມີສະມາຊິກທີ່ເປັນແມ່ຍິງຫຼາຍທີ່ສຸດເຖິງ 30,3%. ຄະນະບ້ານທີ່ເຮັດວຽກຮ່ວມກັບນາຍບ້ານ ເພື່ອບໍລິຫານບ້ານມີຈຳນວນແມ່ຍິງໜ້ອຍທີ່ສຸດ. ຈາກການສຳຫຼວດນີ້ໄດ້ສະແດງໃຫ້ເຫັນວ່າ ຄະນະນຳ ແລະ ຄະນະກຳມະການຕ່າງໆຂັ້ນບ້ານມີຜູ້ຊາຍເຖິງ 96%. ນອກຈາກນັ້ນ ຍັງປະກົດມີຄວາມບໍ່ດຸ່ນດ່ຽງກັນລະຫວ່າງແມ່ຍິງ ແລະ ຜູ້ຊາຍເລື້ອຍໆໃນກອງປະຊຸມເຜີຍແຜ່ ແລະ ແລກປ່ຽນຂໍ້ມູນຂ່າວສານຕ່າງໆ ຊຶ່ງວຽກນີ້ສ່ວນໃຫຍ່ຈະຖືເອົາ "ຫົວໜ້າຄອບຄົວ" ເປັນຫຼັກ ແລະ ມີແຕ່ຜູ້ຊາຍເຂົ້າຮ່ວມທັງໝົດ.

# ບົດທີ 9

## ບົດສະຫຼຸບ ແລະ ຂໍ້ສະເໜີແນະ

### 9.1. ບົດສະຫຼຸບ

ຜ່ານການຮວບຮວມເອົາບັນດາຂໍ້ມູນດ້ານບົດບາດຍິງ-ຊາຍໃນຂະແໜງການຕ່າງໆ ໃນ ສປ ປ ລາວ, ພວກເຮົາສາມາດສະຫຼຸບລວມໄດ້ດັ່ງນີ້:

- ຜ່ານການຮວບຮວມເອົາປະເດັນບົດບາດຍິງ-ຊາຍຈາກເອກະສານຕ່າງໆ ເພື່ອເຂົ້າໃນເອກະສານເຫຼັ້ມນີ້ເຫັນວ່າ ມີຄວາມສົມບູນແບບທາງດ້ານຄວາມຮູ້ດ້ານບົດບາດຍິງ-ຊາຍ ທີ່ພົວພັນເຖິງບັນຫາຂອງແມ່ຍິງລາວ, ແຕ່ພວກເຮົາຍັງຂາດເຂີນຂໍ້ມູນຂ່າວສານ ແລະ ສະຖິຕິແຍກເພດໃນບາງຂະແໜງການ. ຕົວຢ່າງເຊັ່ນ: ໃນຂະນະທີ່ LECS3 ເກັບຂໍ້ມູນ ແຍກຕາມເພດ, ກຸ່ມຊົນເຜົ່າ, ຄວາມແຕກຕ່າງລະຫ່ວາງຊົນນະບົດ ແລະ ຕົວເມືອງນັ້ນ, ມີພຽງແຕ່ 2-3 ຂະແໜງການເທົ່ານັ້ນທີ່ສະໜອງຂໍ້ມູນໂດຍສະທ້ອນໃຫ້ເຫັນສະຖານະພາບຂອງແມ່ຍິງໃນ ສປປ ລາວ. ຍັງມີຫລາຍຂະແໜງການທີ່ຍັງບໍ່ທັນມີຂໍ້ມູນກ່ຽວກັບບົດບາດຍິງ-ຊາຍເປັນຕົ້ນແມ່ນ: ຂະແໜງການກະສິກຳ, ສາທາລະນະສຸກ, ແຮງງານ ແລະ ການມີສ່ວນຮ່ວມພັດທະນາເສດຖະກິດ, ຊຶ່ງເປັນສິ່ງຈຳເປັນຈະຕ້ອງໄດ້ ເຮັດການຄົ້ນຄວ້າກ່ຽວກັບບົດບາດຍິງ-ຊາຍໃຫ້ຫຼາຍຂື້ນໃນຂະແໜງການເຫຼົ່ານີ້.
- ລັດຖະບານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຕໍ່ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ໄດ້ຮັບຮອງເອົາບົດບາດຂອງແມ່ຍິງເປັນໃຈກາງໃນການພັດທະນາເສດຖະກິດຂອງຊາດ ແລະ ຂອງຄອບຄົວ. ເພື່ອເຮັດໃຫ້ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ປະກົດຜົນເປັນຈິງ, ລັດຖະບານໄດ້ຈັດຕັ້ງປະຕິບັດກິດຈະກຳຕ່າງໆ ລວມທັງເຊື່ອມເຂົ້າໃນການວາງນະໂຍບາຍ ແລະ ແຜນຍຸດທະສາດຕ່າງໆ.
- ເຖິງຢ່າງໃດກໍ່ຕາມ, ການເຮັດໃຫ້ມີຄວາມດຸນດ່ຽງນັ້ນແມ່ນພົບກັບຄວາມຫຍຸ້ງຍາກຫຼາຍ ເພາະວ່າ ແມ່ຍິງລາວຍັງເປັນຜູ້ດ້ອຍໂອກາດໃນຊີວິດປະຈຳວັນ, ບໍ່ມີໂອກາດເຂົ້າເຖິງການບໍລິການ ແລະ ແຫຼ່ງຊັບພະຍາກອນ, ສັງຄົມໄດ້ມອບພາລະໜ້າທີ່ອັນໜັກໜ່ວງ ໃຫ້ແກ່ເຂົາເຈົ້າເປັນແຮງງານຕົ້ນຕໍຂອງຄົວເຮືອນ ແລະ ພ້ອມທັງເປັນຜູ້ຮັບປະກັນຊີວິດການເປັນຢູ່ຂອງຄອບຄົວ.
- ພາຍໃຕ້ສະພາບແວດລ້ອມທີ່ຫຍຸ້ງຍາກເຫຼົ່ານີ້ ໄດ້ເຮັດໃຫ້ແມ່ຍິງຊົນເຜົ່າທີ່ຢູ່ເຂດຫ່າງໄກສອກຫຼີກດ້ອຍໂອກາດໃນຫຼາຍດ້ານ. ການກີກໜັງສື ແລະ ຮີດຄອງປະເພນີຕ່າງໆແມ່ນສາເຫດໜຶ່ງ ທີ່ເຮັດໃຫ້ພວກເຂົາຢູ່ເຂດຫ່າງໄກສອກຫຼີກ, ອາໃສຢູ່ເຂດທີ່ບໍ່ໄດ້ຮັບການພັດທະນາ, ຖືກຕັດຂາດຈາກການເຂົ້າເຖິງຊັບພະຍາກອນ, ການບໍລິການ ແລະ ບໍ່ມີສ່ວນຮ່ວມ ໃນການຕັດສິນໃຈຕ່າງໆ.

- ການມີສ່ວນຮ່ວມຂອງແມ່ຍິງໃນການພັດທະນາເສດຖະກິດ ລວມທັງຂະແໜງການໃນລະບົບ ແລະ ນອກລະບົບ ແມ່ນກຳລັງມີຈຳນວນເພີ່ມຂຶ້ນຫຼາຍ ແຕ່ວ່າມີຄວາມຈຳເປັນ ຕ້ອງໄດ້ເອົາໃຈໃສ່ກັບການໄດ້ຮັບຄ່າຈ້າງ ແລະ ໂອກາດໃນການປະກອບອາຊີບແບບເຄື່ອນທີ່ຂອງແມ່ຍິງຕື່ມອີກ.
- ຈາກການລາຍງານອັດຕາການຮູ້ໜັງສື ໄດ້ຊີ້ໃຫ້ເຫັນເຖິງຜົນສຳເລັດອັນສຳຄັນຂອງສິ່ງເສີມການຮູ້ໜັງສືຂອງຜູ້ໃຫ່ຍໃນຊຸມປີທີ່ຜ່ານມາ, ໂດຍສະເພາະແມ່ນ ບັນດາແມ່ຍິງທີ່ຢູ່ໃນຕົວເມືອງ (ເຂດເທດສະບານ). ແຕ່ເຖິງຢ່າງໃດກໍ່ຕາມ, ແມ່ຍິງຊົນນະບົດຍັງມີໂອກາດໜ້ອຍທີ່ຈະໄປເຂົ້າໂຮງຮຽນ ເພາະວ່າພວກເຂົາມີຄວາມຫຍຸ້ງຍາກຫຼາຍໃນການໄປຮຽນ ແລະ ຄ່າໃຊ້ຈ່າຍໃນການຮຽນກໍ່ສູງ.
- ຕົວຊີ້ບອກທາງດ້ານສຸຂະພາບຊີ້ໃຫ້ເຫັນວ່າໃນທົ່ວປະເທດລາວ ໂດຍສະເພາະໃນເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ ໄດ້ເຂົ້າເຖິງ ແລະ ໄດ້ຮັບການບໍລິການສຸຂະພາບຈຳກັດຫຼາຍ, ແມ່ຍິງສ່ວນຫຼາຍເກີດລູກຢູ່ເຮືອນ ແລະ ບໍ່ໄດ້ຮັບການເບິ່ງແຍງສຸຂະພາບຂອງແມ່ ກ່ອນ ແລະ ຫຼັງການເກີດລູກ, ຊຶ່ງເປັນສາເຫດເຮັດໃຫ້ອັດຕາການຕາຍຂອງແມ່ມີສູງ.
- ຄ່ານິຍົມທາງດ້ານວັດທະນະທຳ ເປັນສາເຫດເຮັດໃຫ້ແມ່ຍິງ ບໍ່ມີໂອກາດໃນການມີສ່ວນຮ່ວມໃນດ້ານການເມືອງ ແລະ ການຕັດສິນໃຈ.

## 9.2. ຂໍ້ສະເໜີແນະ

### 1. ສ້າງຄວາມເຂັ້ມແຂງດ້ານການພັດທະນາຂໍ້ມູນຂ່າວສານດ້ານບົດບາດຍິງ-ຊາຍ

ຈາກການຂຽນບົດລາຍງານສະບັບນີ້ເຫັນວ່າຍັງມີຊ່ອງຫວ່າງຂອງຂໍ້ມູນຂ່າວສານດ້ານບົດບາດຍິງ-ຊາຍຢູ່ໃນຫຼາຍຂົງເຂດ ແລະ ຂະແໜງການຕ່າງໆ, ລວມທັງການຂາດແຄນຂໍ້ມູນດ້ານສະຖິຕິແຍກເພດ, ຂໍ້ມູນທີ່ເອົາໃຈໃສ່ບັນຫາບົດບາດຍິງ-ຊາຍ ແລະ ຂໍ້ມູນດ້ານຄຸນນະພາບ. ການຜະລິດປື້ມຫົວນີ້ແມ່ນມີຄວາມຫຍຸ້ງຍາກຫຼາຍໃນການລວບລວມ ແລະ ເກັບກຳສະພາບລວມດ້ານບົດບາດຍິງ-ຊາຍເພື່ອເຮັດໃຫ້ມີຂໍ້ມູນຫຼາກຫຼາຍ, ເຊື່ອຖືໄດ້ ແລະ ເພື່ອສະທ້ອນໃຫ້ເຫັນສະພາບການທີ່ແນ່ນອນ ແລະ ມີການວິເຄາະໃຫ້ເຫັນສະພາບທີ່ແທ້ຈິງ ດ້ວຍເຫດຜົນນີ້ມັນມີຄວາມຈຳເປັນຕ້ອງໄດ້ສ້າງຖານຂໍ້ມູນຂ່າວສານດ້ານບົດບາດຍິງ-ຊາຍທາງປະລິມານ ແລະ ຄຸນນະພາບ. ເພື່ອເຊື່ອມທັດສະນະບົດບາດຍິງ-ຊາຍ ເຂົ້າໃນລະບົບສະຖິຕິແຫ່ງຊາດ ສຳນັກງານນາຍົກລັດຖະມົນຕີໄດ້ອອກໃບແຈ້ງການເລກທີ 0009 ແລະ ຂໍ້ແນະນຳ ເພີ່ມເຕີມໃນປີ 2005 ເພື່ອເປັນທິດທາງອັນໃໝ່ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດແຈ້ງການດັ່ງກ່າວ.

**ຂໍ້ສະເໜີ:**

- ໃນທຸກໆການສຳຫຼວດລະດັບຊາດຕ້ອງເຊື່ອມບົດບາດຍິງ-ຊາຍເຂົ້ານຳ.
- ປຸງແຕ່ງ ແລະ ວິເຄາະຂໍ້ມູນໃນ LECS 3 ແບບແຍກເພດຍິງ-ຊາຍ.
- ເຮັດການສຳຫຼວດ ແລະ ຄົ້ນຄ້ວາດ້ານບົດບາດຍິງ-ຊາຍ.
- ສະເໜີໃຫ້ລວບລວມຕົວຊີ້ບອກໃໝ່ເຂົ້າໃນລະບົບການເກັບກຳຂໍ້ມູນທີ່ມີແລ້ວຂອງສູນສະຖິຕິແຫ່ງຊາດ (NSC) ເຊັ່ນ: ແຮງງານ, ການເຂົ້າເຖິງສິນເຊື່ອ ແລະ ການບໍລິການອື່ນໆ.

## *2. ຍົກລະດັບຄວາມຮູ້ໃຫ້ພະນັກງານຂັ້ນນຳຂອງລັດເພື່ອເຊື່ອມທັດສະນະບົດບາດຍິງ-ຊາຍ*

ເພື່ອປະຕິບັດຕາມແຜນຍຸດທະສາດ NGPES, ມັນມີຄວາມຈຳເປັນຕ້ອງໄດ້ສ້າງຈິດສຳນຶກ ແລະ ຄວາມຮັບຮູ້ຕໍ່ ບັນຫາບົດບາດຍິງ-ຊາຍໃຫ້ແກ່ພະນັກງານການນຳຢ່າງຮີບດ່ວນ ເພາະວ່າ ແນວຄວາມຄິດດ້ານບົດບາດຍິງ-ຊາຍແມ່ນຍັງໃໝ່ຢູ່ໃນ ສປປ ລາວ. ບາດກ້າວທຳອິດ, ຕ້ອງສ້າງຄວາມຮູ້ ແລະຄວາມຊຳນິຊຳນານດ້ານບົດບາດຍິງ-ຊາຍຢ່າງເລິກເຊິ່ງໃຫ້ແກ່ນັກວາງແຜນ, ນັກເສດຖະສາດ, ນັກການເມືອງ, ຜູ້ຕັດສິນໃຈໃນລະດັບລັດຖະມົນຕີຕ່າງໆ ເພື່ອໃຫ້ເຂົ້າໃຈ ແລະ ສາມາດປະຕິບັດການເຊື່ອມທັດສະນະບົດບາດຍິງ-ຊາຍໄດ້ຢ່າງມີປະສິດທິຜົນ. ສິ່ງນີ້ຈະຊ່ວຍໃຫ້ການສົ່ງເສີມ ແລະ ພິຈາລະນາບັນຫາບົດບາດຍິງ-ຊາຍເຂົ້າໃນລະດັບມະຫາພາກຢ່າງເປັນລະບົບ ແລະ ພົວພັນເຖິງການຕັດສິນໃຈໃນການແບ່ງປັນງົບປະມານການໃຊ້ຈ່າຍຂອງລັດຖະບານ (ອະນຸມັດງົບປະມານສະເພາະບົດບາດຍິງ-ຊາຍ).

**ຂໍ້ສະເໜີ:**

- ໃຫ້ມີການສືບຕໍ່ປຶກສາຫາລືກ່ຽວກັບ NGPES ກັບພະນັກງານການນຳເພື່ອຕົກລົງເຫັນດີເປັນເອກະພາບກັນກ່ຽວກັບການສ້າງແຜນງານຍຸດທະສາດ ແລະ ແຜນການປະຕິບັດດ້ານບົດບາດຍິງ-ຊາຍ.
- ໃຫ້ມີການສ້າງກອບການຮ່ວມມື ແລະ ກົນໄກທີ່ເໝາະສົມ ເພື່ອການຕິດຕາມ ແລະ ປະເມີນຜົນ.
- ສ້າງຄວາມສາມາດໃຫ້ແກ່ຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ສະຫະພັນແມ່ຍິງລາວ ແລະ ສູນຂໍ້ມູນຂ່າວສານບົດບາດຍິງ-ຊາຍເພື່ອການພັດທະນາ ຕະຫຼອດເຖິງຜູ້ປະສານງານດ້ານບົດບາດຍິງ-ຊາຍ ຈາກຂະແໜງການ/ກະຊວງ/ຄະນະກຳມະການ/ກຸ່ມເຮັດວຽກກ່ຽວກັບບົດບາດຍິງ-ຊາຍ. ສິ່ງດັ່ງກ່າວນີ້ສາມາດເຮັດໄດ້ໂດຍຜ່ານການຮ່ວມມືກັບຜູ້ໃຫ້ທຶນຕ່າງໆ ແລະ ຈັດຊຸດຝຶກອົບຮົມ/ສຳມະນາ ເພື່ອການແລກປ່ຽນປະສົບການຮ່ວມກັນຢູ່ໃນພາຍໃນ ແລະຕ່າງປະເທດ.
- ນຳໃຊ້ ແລະ ປັບປຸງເຄື່ອງມືການເຊື່ອມທັດສະນະບົດບາດຍິງ-ຊາຍ ໃຫ້ແທດເໝາະກັບທ້ອງຖິ່ນ ຫຼື ສະເພາະຂະແໜງການໃດໜຶ່ງ.
- ຕອບສະໜອງຂໍ້ມູນພື້ນຖານທາງດ້ານບົດບາດຍິງ-ຊາຍ ແລະ ປັບປຸງຂໍ້ມູນຂ່າວສານໂດຍແຍກຕາມເພດ.

3. *ວາງເປົ້າໝາຍການພັດທະນາເສດຖະກິດ-ສັງຄົມ ສຳລັບຄົນທຸກຍາກໃນເຂດຊົນນະບົດ ໂດຍສະເພາະແມ່ນຊົນເຜົ່າທີ່ທຸກຍາກ*

ຄືດັ່ງໄດ້ກ່າວໃນບົດລາຍງານສະບັບນີ້ແລ້ວວ່າ ຄວາມແຕກຕ່າງກັນລະຫວ່າງຊົນນະບົດ ແລະ ຕົວເມືອງໄດ້ມີຜົນກະທົບຕໍ່ແມ່ຍິງຊົນເຜົ່າສ່ວນນ້ອຍໂດຍກົງ. ຈາກເຫດຜົນດັ່ງກ່າວ, ມັນຈຶ່ງຮຽກຮ້ອງມີການພັດທະນາເສດຖະກິດ-ສັງຄົມ (ແຜນການ ແລະ ງົບປະມານ) ທີ່ມີເປົ້າໝາຍ ສຸມໃສ່ຊົນເຜົ່າສ່ວນນ້ອຍ ແລະ ກຸ່ມດ້ອຍໂອກາດອື່ນໆໃນເຂດຊົນນະບົດ ເພື່ອຫລຸດຜ່ອນຄວາມທຸກຍາກ ແລະ ຊ່ອງຫ່ວາງດ້ານບົດບາດຍິງ-ຊາຍຕ່າງໆ. ສິ່ງນີ້ໄດ້ປະກອບສ່ວນໃນການຫຼຸດຜ່ອນຄວາມດ້ອຍໂອກາດຕ່າງໆຂອງຄົນທຸກຍາກຢູ່ໃນເຂດຊົນນະບົດໂດຍທົ່ວໄປ, ໂດຍສະເພາະແມ່ນແມ່ຍິງ ແລະ ເດັກຍິງ ທີ່ໄດ້ຮັບເຄາະຮ້າຍຈາກການຄ້າມະນຸດ.

**ຂໍ້ສະເໜີ:**

- ດຳເນີນການຄົ້ນຄວ້າກ່ຽວກັບສະພາບການດຳລົງຊີວິດຂອງແຕ່ລະກຸ່ມຊົນເຜົ່າສ່ວນນ້ອຍກ່ອນຈະອອກແບບໂຄງການພັດທະນາຊຸມຊົນໃດໜຶ່ງ. ສູນກາງແນວລາວສ້າງຊາດ ແລະ ສູນກາງຊາວໜຸ່ມລາວຄວນມີສ່ວນຮ່ວມໃນໂຄງການພັດທະນາຊົນນະບົດ ທີ່ມີເປົ້າໝາຍສຸມໃສ່ບັນດາບ້ານທຸກຍາກທີ່ສຸດ ແລະ ຊົນເຜົ່າສ່ວນນ້ອຍ.
- ຊຸກຍູ້ສົ່ງເສີມວຽກງານປະຊາສຶກສາເພື່ອລຶບລ້າງການກືກໜັງສື, ສົ່ງເສີມການເຂົ້າເຖິງ ການບໍລິການດ້ານການຜະລິດກະສິກຳ, ຫັດຖະກຳ ແລະ ການຕະຫຼາດ, ບັນດາກິດຈະກຳການສ້າງລາຍໄດ້ ແລະ ການໄດ້ຮັບສິນເຊື່ອ. ການສະໜັບສະໜູນເຫຼົ່ານີ້ ຄວນມາຈາກລັດຖະບານ ແລະ ຜູ້ໃຫ້ທຶນຈາກຕ່າງປະເທດຕ່າງໆ.

ນອກຈາກນັ້ນ, ຜູ້ເຮັດວຽກພັດທະນາຄວນພິຈາລະນາບູລິມະສິດຕ່າງໆດັ່ງລຸ່ມນີ້:

- **<u>ດ້ານກະສິກຳ</u>:** ແມ່ຍິງຄວນຈະຖືກຍອມຮັບວ່າເປັນຊາວນາ ແລະ ຄວນຈະໄດ້ຮັບສິນເຊື່ອ ແລະ ຝຶກອົບຮົມກ່ຽວກັບເຕັກນິກການຜະລິດແບບໃໝ່, ດັ່ງນັ້ນ ພວກເຂົາຈຶ່ງສາມາດຫລຸດຜ່ອນພາລະການເຮັດວຽກໜັກ ແລະ ສາມາດເພີ່ມແຮງງານຂອງເຂົາເຈົ້າໃນການຜະລິດ. ແຜນງານ/ໂຄງການຄວນຈະເອົາໃຈໃສ່ບັນຫາອຸປະສັກທາງດ້ານເວລາຂອງແມ່ຍິງທີ່ແຕກຕ່າງກັນໄປຕາມລະດູການ ແລະ ແຕ່ລະຂົງເຂດການຜະລິດກະສິກຳ.

- **<u>ດ້ານການສຶກສາ ແລະ ຝຶກອົບຮົມວິຊາຊີບ</u>:** ຕອບສະໜອງເງື່ອນໄຂຕ່າງໆເພື່ອດຶງດູດໃຫ້ແມ່ຍິງເຂົ້າມາຮຽນ ແລະ ຫຼຸດຜ່ອນອັດຕາການອອກໂຮງຮຽນຂອງເດັກຍິງ. ໃຫ້ທຶນການສຶກສາ, ສ້າງໂຄງການອາຫານໃນໂຮງຮຽນ, ປຸກສ້າງໂຮງຮຽນຢູ່ໃນທ້ອງຖິ່ນຕ່າງໆໃຫ້ແທດເໝາະ ແລະ ມີຄວາມຢືດຢຸ່ນທາງດ້ານເວລາເພື່ອຊຸກຍູ້ໃຫ້ແມ່ຍິງເຂົ້າມາຮຽນຫຼາຍຂຶ້ນ ແລະ ຫຼຸດຜ່ອນອັດຕາການອອກໂຮງຮຽນ. ວຽກງານເຫຼົ່ານີ້ຄວນຈະສອດຄ່ອງກັບແຜນແມ່ບົດເພື່ອປັບປຸງການສຶກສາໃຫ້ທົ່ວເຖິງ ແລະ ມີຄຸນນະພາບ. ມັນມີຄວາມຈຳເປັນຕ້ອງໄດ້ມີຄວາມພະຍາຍາມ ເພື່ອລຶບລ້າງການກີກໜັງສືຂອງແມ່ຍິງ, ຖ້າເປັນໄປໄດ້ວຽກງານສຶກສາຕ້ອງໃຫ້ສອດຄ່ອງກັບການພັດທະນາຂະແໜງການອື່ນນຳອີກ(ເຊັ່ນ: ສາທາລະນະສຸກ ແລະ ກະສິກຳ). ຕ້ອງໄດ້ເອົາໃຈໃສ່ເຖິງຄວາມຕ້ອງການໃນການນຳໃຊ້ເວລາຂອງແມ່ຍິງ. ອີກຢ່າງໜຶ່ງ, ຄວນສະໜອງການຝຶກອົບຮົມວິຊາຊີບໃຫ້ພະນັກງານເພດຍິງໃຫ້ຫຼາຍຂຶ້ນ.

- **<u>ດ້ານສາທາລະນະສຸກ</u>:** ສະໜັບສະໜູນໂຄງການພັດທະນາດ້ານສຸຂະພາບທີ່ເໝາະສົມ, ຊຶ່ງລວມມີດ້ານໂພຊະນາການ, ສຸຂະອານະໄມ, ການສຶກສາ ແລະ ມາດຕະການປ້ອງກັນຕ່າງໆເປັນຕົ້ນແມ່ນການສັກຢາກັນພະຍາດ. ສິ່ງເຫຼົ່ານີ້ ຄວນຈັດເປັນບູລິມະສິດຂອງສະຖາບັນບໍລິການດ້ານສຸຂະພາບຕ່າງໆ ຊຶ່ງປະຊາຊົນສ່ວນໃຫ່ຍອາດຈະບໍ່ເຂົ້າເຖິງ. ການປັບປຸງສະຖານະພາບດ້ານສຸຂະພາບ ຂອງແມ່ຍິງ ແລະ ເດັກນ້ອຍ, ໂດຍສະເພາະແມ່ນຊົນເຜົ່າສ່ວນນ້ອຍ ຄວນເປັນບູລິມະສິດທີ່ສຳຄັນໃນໂຄງການນີ້. ນອກຈາກນັ້ນຍັງມີບູລິມະສິດອື່ນໆອີກເຊັ່ນ: ການສົ່ງເສີມການເຂົ້າເຖິງໂຄງການສຸຂະພາບໄວຈະເລີນພັນ, ການວາງແຜນຄອບຄົວ, ສຸຂະພາບຂອງແມ່ ແລະ ເດັກ ແລະ ໂຄງການການປ້ອງກັນ HIV/AIDS. ຈາກບົດຮຽນ ແລະ ປະສົບປະການຈາກບ່ອນອື່ນໆໄດ້ສະແດງໃຫ້ເຫັນວ່າ ຜູ້ຊາຍຈຳເປັນຕ້ອງໄດ້ເຂົ້າຮ່ວມກິດຈະກຳການວາງແຜນຄອບຄົວ ແລະ ກິດຈະກຳສ້າງຈິດສຳນຶກກ່ຽວກັບໂລກເອດໃຫ້ຫຼາຍຂຶ້ນເພື່ອໃຫ້ມີປະສິດທິຜົນດີຂຶ້ນ.

## *4. ສົ່ງເສີມການພັດທະນາທຸລະກິດຂະໜາດນ້ອຍ ແລະ ກາງ (SME)*

***ຂໍ້ສະເໜີ:***

- ການປັບປຸງນະໂຍບາຍ ແລະ ສະພາບແວດລ້ອມ ເພື່ອເອື້ອຍອຳນວຍໃຫ້ນັກທຸລະກິດຍິງ-ຊາຍ ສາມາດເລີ່ມຕົ້ນເຮັດ ແລະຂະຫຍາຍທຸລະກິດຂອງເຂົາເຈົ້າໄດ້. ຄວນໃຫ້ມີການສ້າງຕັ້ງຄະນະກຳມະການສົ່ງເສີມທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍແຫ່ງຊາດຂຶ້ນ, ຊຶ່ງລວມມີຕົວແທນຈາກສູນກາງສະຫະພັນແມ່ຍິງລາວ ແລະ ຄະນະກຳມະການ ເພື່ອຄວາມກ້າວໜ້າຂອງແມ່ຍິງ ຢູ່ໃນລະດັບການຕັດສິນໃຈ.
- ເຊື່ອມບົດບາດຍິງ-ຊາຍເຂົ້າໃນການພັດທະນາທຸລະກິດຂະໜາດກາງແລະຂະໜາດນ້ອຍ.

- ສະເໜີໃຫ້ມີການແຕ່ງຕັ້ງຜູ້ປະສານງານດ້ານບົດບາດຍິງ-ຊາຍໃນລະດັບຕ່າງໆ(ລະດັບກະຊວງ,ແຂວງ ແລະ ເມືອງ) ເພື່ອຄວາມສະດວກໃນການເສີມສ້າງຄວາມເຂັ້ມແຂງດ້ານເສດຖະກິດຂອງແມ່ຍິງ, ການສ້າງລາຍຮັບ ແລະ ການພັດທະນາວິສະຫະກິດສໍາລັບແມ່ຍິງ ແລະ ຜູ້ຊາຍ.
- ໃຫ້ມີການປັບປຸງເງື່ອນໄຂ ແລະ ການເຂົ້າເຖິງສິນເຊື່ອ ແລະ ການບໍລິການທາງການເງິນ. ກອງທຶນກູ້ຢືມຂະໜາດນ້ອຍ, ລະບົບສິນເຊື່ອ ແລະ ເງື່ອນໄຂລະບຽບຫຼັກການທະນາຄານຕ່າງໆ ຄວນໄດ້ຮັບການປຸງເຮັດໃຫ້ມັນງ່າຍຂື້ນ ແລະ ອອກແບບໃຫ້ແທດເໝາະກັບ ແຕ່ລະກຸ່ມທຸລະກິດ ແລະ ອີງໃສ່ຄວາມຕ້ອງການຂອງນັກທຸລະກິດຂະໜາດກາງ ແລະ ຂະໜາດຄອບຄົວ ໂດຍສະເພາະແມ່ນຄວາມຕ້ອງການສະເພາະຂອງແມ່ຍິງ ແລະ ກຸ່ມດ້ອຍໂອກາດຕ່າງໆ. ຄວນສ້າງກອງທຶນສົ່ງເສີມທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍຂື້ນ ໂດຍມີແມ່ຍິງທີ່ປະກອບການທຸລະກິດ ແລະ ກຸ່ມດ້ອຍໂອກາດຕ່າງໆ ເປັນກຸ່ມເປົ້າໝາຍບຸລິມະສິດຂອງກອງທຶນກູ້ຢືມເຫຼົ່ານີ້.
- ສ້າງຄວາມສາມາດໃຫ້ແກ່ອົງການຈັດຕັ້ງມະຫາຊົນເຊັ່ນ: ສະຫະພັນແມ່ຍິງລາວ, ອົງການຈັດຕັ້ງຊາວໜຸ່ມລາວ, ສະພາການຄ້າລາວ ແລະ ສູນກາງແນວລາວສ້າງຊາດ ເພື່ອໃຫ້ເຂົາເຈົ້າສາມາດປະຕິບັດໂຄງການສົ່ງເສີມການເງິນຈຸລະພາກ ໃນເຂດເຄິ່ງຕົວເມືອງ ແລະ ຊົນນະບົດໃຫ້ໄດ້ດີ.
- ຕອບສະໜອງການຝຶກອົບຮົມ, ແນະນໍາ ແລະ ໃຫ້ຄໍາປຶກສາແກ່ນັກທຸລະກິດຍິງໃຫ້ເຂົ້າໃຈແຈ້ງຕໍ່ຫຼັກການດ້ານການເງິນ ແລະ ຂັ້ນຕອນຕ່າງໆ, ຊ່ວຍເຫຼືອເຂົາເຈົ້າໃນການສຶກສາຄວາມເປັນໄປໄດ້ໃນການເຮັດທຸລະກິດ ແລະ ວາງແຜນທຸລະກິດໃຫ້ມີຄຸນນະພາບເພື່ອໃຫ້ສະຖາບັນໃຫ້ກູ້ຢືມເງິນຕ່າງໆຍອມຮັບ.
- ໃຫ້ມີການຊຸກຍູ້ສົ່ງເສີມການເຜີຍແຜ່ຂໍ້ມູນຂ່າວສານ ແລະ ສ້າງເຄືອຂ່າຍ. ການເຜີຍແຜ່ຂໍ້ມູນກ່ຽວກັບກົດໝາຍ, ກົດລະບຽບ ແລະ ຂັ້ນຕອນການບໍລິຫານ, ການເຮັດທຸລະກິດ ແລະ ຂໍ້ມູນທາງດ້ານການຕະຫຼາດກ່ຽວກັບທຸລະກິດຂະໜາດນ້ອຍ ແລະ ກາງ ຄວນຈະໃຫ້ເປັນບຸລິມະສິດຂອງໜ່ວຍງານລັດທີ່ເຮັດວຽກກ່ຽວກັບທຸລະກິດຂະໜາດນ້ອຍ ແລະ ກາງ .
- ໃຫ້ມີການເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບການຝຶກອົບຮົມທາງດ້ານທຸລະກິດ ແລະ ສິນເຊື່ອທີ່ມີຢູ່, ພ້ອມ ທັງຮັບປະກັນໃຫ້ນັກທຸລະກິດທັງແມ່ຍິງ ແລະ ຜູ້ຊາຍໄດ້ເຂົ້າເຖິງ.
- ໃຫ້ມີການຊຸກຍູ້ ແລະ ສະໜັບສະໜູນກຸ່ມ/ສະມະຄົມນັກທຸລະກິດຍິງ ແລະ ສ້າງເຄືອຂ່າຍກັບອົງການພັດທະນາທຸລະກິດທີ່ສໍາຄັນຕ່າງໆ ເພື່ອອໍານວຍຄວາມສະດວກໃນການແລກປ່ຽນຂໍ້ມູນ ແລະ ປະສົບການລະຫວ່າງກຸ່ມທຸລະກິດຂະໜາດນ້ອຍ ແລະ ກາງ ຢູ່ລະດັບທ້ອງຖິ່ນ.

## 5. ແກ້ໄຂບັນຫາຄວາມຮຸນແຮງລະຫວ່າງຍິງ-ຊາຍ ແລະ ການຄ້າມະນຸດ

ຍ້ອນວ່າຍັງມີປະຊາຊົນລາວຫຼາຍຄົນ ໂດຍສະເພາະແມ່ນແມ່ຍິງ ແລະ ເດັກນ້ອຍຮູ້ສຶກບໍ່ມີຄວາມສະດວກ ແລະ ບໍ່ຢາກເວົ້າເຖິງເລື້ອງຄວາມຮຸນແຮງລະຫວ່າງຍິງ-ຊາຍ, ສະນັ້ນມັນຈຶ່ງມີຄວາມຈໍາເປັນຈະຕ້ອງມີມາດຕະການພຽງພໍເພື່ອສ້າງຈິດສໍານຶກ ແລະ ເຮັດໃຫ້ເກີດຄວາມຊັດເຈນຕໍ່ບັນຫາດັ່ງກ່າວ ເພື່ອ

ໃຫ້ປະຊາຊົນທັນມາສົນໃຈປຶກສາຫາລືກັນແບບເປີດກ້ວາງ ແລະ ມີການລາຍງານເລື້ອງດັ່ງກ່າວນີ້. ຄວນເພີ້ມຄວາມກະຈ່າງແຈ້ງດ້ານຄວາມຮຸນແຮງລະຫວ່າງຍິງ-ຊາຍປະເພດຕ່າງໆ ເຊັ່ນ: ຄວາມຮຸນແຮງໃນຄອບຄົວ, ການຂົ່ມຂືນຊຳເລົາ, ການທຳຮ້າຍເດັກ ແລະ ການຄ້າມະນຸດ, ເລື່ອງທັງໝົດນີ້ຄວນເປັນບູລິມະສິດອັນສຳຄັນຂອງໜ່ວຍງານຕ່າງໆຂອງອົງການຈັດຕັ້ງພາກລັດ. ໃນເວລາດຽວກັນ, ການສ້າງຄວາມກະຈ່າງແຈ້ງ ແລະ ຈິດສຳນຶກຂອງປະຊາຊົນ ຄວນປະຕິບັດໄປພ້ອມໆກັບການລົບລ້າງຮີດຄອງປະເພນີ ອັນເປັນຜົນຮ້າຍ ແລະ ບໍ່ເໝາະສົມຕ່າງໆ.

***ຂໍ້ສະເໜີ:***

*ມາດຕະການທາງກົດໝາຍ*

- ສະເໜີໃຫ້ມີການທົບທວນກົດໝາຍຄືນໂດຍໃຫ້ກຳນົດຮູບແບບຂອງຄວາມຮຸນແຮງລະຫວ່າງຍິງ-ຊາຍຕ່າງໆເປັນຄວາມຜິດທາງອາຍາ.
- ສະເໜີໃຫ້ວາງມາດຕະການຕ່າງໆທີ່ເໝາະສົມເພື່ອລົງໂທດທາງອາຍາ ແລະ ບັງຄັບໃຊ້ກົນໄກອື່ນໆເພື່ອປ້ອງກັນ ແລະ ລົບລ້າງບັນຫາຄວາມແຮງຕໍ່ກັບແມ່ຍິງ.
- ບັງຄັບໃຊ້ມາດຕະການຕ່າງໆເພື່ອປ້ອງກັນ ແລະ ລົບລ້າງທຸກຮູບແບບການຈຳແນກຕໍ່ແມ່ຍິງ ແລະ ສ້າງຄວາມເຂັ້ມແຂງໃຫ້ກັບຄົນພິການ, ແມ່ຍິງ, ເດັກຍິງ ແລະ ຜູ້ເຖົ້າ.
- ໃຫ້ຄຳແນະນຳດ້ານກົດໝາຍ ແລະ ລະບຽບຫຼັກການຕ່າງໆແກ່ແມ່ຍິງ ແລະ ເດັກນ້ອຍ ຜູ້ທີ່ໄດ້ຮັບຄວາມຮຸນແຮງ, ເອົາໃຈໃສ່ໃຫ້ເຂົ້າເຖິງການບໍລິການຄຳປຶກສາຢ່າງມີປະສິດທິພາບ, ແນະນຳວິທີການຮຽກຮ້ອງຄ່າຊົດໃຊ້ຄວາມເສຍຫາຍ, ຄ່າທຳຂັວນ ແລະ ຮູບແບບການແກ້ໄຂຂໍ້ຂັດແຍ່ງອື່ນໆ.
- ໃຫ້ທົບທວນຄືນ ແລະ ປະຕິຮູບກົດໝາຍອາຍາ ແລະ ລະບຽບຫຼັກການຕ່າງໆທີ່ຈະນຳໃຊ້ໃນກໍລະນີມີການກະທຳຄວາມຜິດທາງເພດສຳພັນ ເພື່ອກຳຈັດຄວາມລຳອຽງຕໍ່ກັບແມ່ຍິງ ແລະ ຜູ້ຊາຍ ພ້ອມທັງຮັບປະກັນຄວາມຍຸດຕິທຳໃຫ້ແກ່ຄູ່ກໍລະນີທັງຜູ້ຮັບເຄາະຮ້າຍ ແລະ ຜູ້ຕ້ອງຫາ.

***ດ້ານການສຶກສາ, ການຝຶກອົບຮົມ ແລະ ການສ້າງຈິດສຳນຶກ***

- ອຳນວຍຄວາມສະດວກໃຫ້ມີການສຶກສາຄົ້ນຄ້ວາ, ສ້າງເອກະສານ ແລະ ເຜີຍແຜ່ກ່ຽວກັບສາເຫດ, ລັກສະນະ, ປະກົດການ ແລະ ຜົນກະທົບຂອງຄວາມຮຸນແຮງລະຫວ່າງຍິງ-ຊາຍ.
- ສົ່ງເສີມການສ້າງຈິດສຳນຶກ ແລະ ຈັດຝຶກອົບຮົມບົດບາດຍິງ-ຊາຍໃຫ້ແກ່ພະນັກງານທັງໝົດ ເຊັ່ນ: ພະນັກງານບໍລິຫານຂອງກະຊວງຍຸດຕິທຳ, ພະນັກງານກົດໝາຍ, ໄອຍະການສານ, ຕຳຫຼວດ, ພະນັກງານຄຸມຂັງ, ພະນັກງານຊຸມຊົນ ແລະ ສະວັດດີການສັງຄົມ, ພະນັກງານສາທາລະນະສຸກ ແລະ ພະຍາບານອື່ນໆ.

- ອຳນວຍຄວາມສະດວກໃນການສ້າງເຄືອຂ່າຍເພື່ອແລກປ່ຽນຂໍ້ມູນຂ່າວສານຮ່ວມກັນກ່ຽວກັບບົດຮຽນທີ່ດີ ໃນການຈັດຕັ້ງປະຕິບັດການສະກັດກັ້ນຄວາມຮຸນແຮງລະຫວ່າງຍິງ-ຊາຍໃນຕົວຈິງ.

*ການໃຫ້ການບໍລິການຕ່າງໆ*

- ສ້າງຄວາມເຂັ້ມແຂງໃຫ້ກັບສູນໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍຂອງສະຫະພັນແມ່ຍິງລາວ ແລະ ຊ່ວຍໃຫ້ຄໍາປຶກສາດ້ານກົດໝາຍໃຫ້ແກ່ຜູ້ໄດ້ຮັບເຄາະຮ້າຍຈາກ ຄວາມຮຸນແຮງລະຫວ່າງຍິງ-ຊາຍ.
- ສ້າງແຜນປະຕິບັດເພື່ອສະກັດກັ້ນຄວາມຮຸນແຮງລະຫວ່າງຍິງ-ຊາຍ ແລະ ເຊື່ອມເຂົ້າໃນແຜນງານຂອງແຕ່ລະຂະແໜງການ ພ້ອມທັງຈັດຫາງົບປະມານສໍາລັບການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.
- ສ້າງຂໍ້ມູນຂ່າວສານກ່ຽວກັບຄວາມຮຸນແຮງລະຫວ່າງຍິງ-ຊາຍ ເພື່ອໃຫ້ແມ່ຍິງ ແລະ ເດັກນ້ອຍ ໄດ້ເຂົ້າເຖິງການບໍລິການສາທາລະນະຊົນ.
- ສ້າງເງື່ອນໄຂໃຫ້ມີການເຂົ້າເຖິງການບໍລິການຂອງຕໍາຫຼວດ, ໄອຍະການສານ, ສາທາລະນະສຸກ, ສະຫວັດດີການສັງຄົມ ແລະ ການບໍລິການອື່ນໆ ເພື່ອແກ້ໄຂບັນຫາຄວາມຮຸນແຮງຕໍ່ແມ່ຍິງ.

*ດ້ານການຄ້າມະນຸດ*

- ເພື່ອແກ້ໄຂບັນຫາການຄ້າມະນຸດ, ສະຫະພັນແມ່ຍິງລາວ ແລະ ສູນກາງຊາວໜຸ່ມລາວ ຕ້ອງສ້າງຄວາມສາມາດໃຫ້ຊາວໜຸ່ມທີ່ບໍ່ມີວຽກເຮັດງານທໍາ ເຂົ້າໃຈເຖິງຄວາມສ່ຽງຕໍ່ການຄ້າມະນຸດ ແລະ ເປັນຄົນເຂົ້າເມືອງ ຫຼື ຜູ້ເຮັດວຽກທີ່ຜິດກົດໝາຍ.
- ສ້າງກິດຈະກໍາເພື່ອສ້າງຄວາມສາມາດ ແລະ ຈິດສໍານຶກໃຫ້ແກ່ຊາວໜຸ່ມ, ພໍ່ແມ່ ແລະ ຊາວບ້ານໃນລະດັບສູນກາງ, ແຂວງ, ບ້ານ ແລະ ລະດັບຮາກຖານ ກ່ຽວກັບການຄ້າມະນຸດ ແລະ ບັນຫາອື່ນໆທີ່ກ່ຽວຂ້ອງ ເຊັ່ນ: ການຖືກກັກຂັງ ແລະ ຄວາມອັນຕະລາຍຂອງການຕິດເຊື້ອພະຍາດຕ່າງໆ ເຊັ່ນ: ໂຣກເອດສ.
- ໃຫ້ມີການສົ່ງເສີມຜູ້ໄດ້ຮັບເຄາະຮ້າຍ ໂດຍສ້າງທາງເລືອກເພື່ອການຫາລາຍໄດ້ຕ່າງໆເຊັ່ນ: ການຕໍ່າຫູກ, ອຸດສະຫະກໍາຂະໜາດນ້ອຍເຊັ່ນ: ການປູກຝ້າຍ, ສາລີ ແລະ ຖົ່ວເຫຼືອງ; ການລ້ຽງສັດປະເພດຕ່າງໆ ເຊັ່ນ: ການລ້ຽງງົວ, ໝູ, ເປັດ ແລະ ໄກ່ ພ້ອມທັງສະໜອງວິຊາການດ້ານສັດຕະວະແພດ ແລະການຕະຫຼາດຢ່າງພຽງພໍ.
- ສົ່ງເສີມການປະກອບອາຊີບ, ສ້າງວຽກເຮັດງານທໍາ ແລະ ກິດຈະກໍາການພັດທະນາຊຸມຊົນ ຕະຫຼອດເຖິງການສະໜອງສິນເຊື່ອໃຫ້ແກ່ຊາວໜຸ່ມເພື່ອໃຫ້ເຂົາເຈົ້າສາມາດຊອກຫາລາຍໄດ້ລ້ຽງຄອບຄົວແລະຕົວເຂົາເຈົ້າເອງ.

- ສ້າງຕັ້ງກຸ່ມສ້າງລາຍໄດ້ ຫຼື ຝຶກອົບຮົມສຳລັບຜູ້ທີ່ກັບຄືນຖິ່ນ ແລະ ສ້າງເຄື່ອຂ່າຍເພື່ອແລກປ່ຽນປະສົບປະການອັນດີ ແລະ ອັນບໍ່ດີ ພ້ອມທັງຖອດຖອນບົດຮຽນຮ່ວມກັນ.
- ໃຫ້ມີບ່ອນໃຫ້ຄຳປຶກສາ, ສູນຟື້ນຟູ ແລະ ບໍລິການດ້ານສຸຂະພາບສຳລັບຜູ້ໄດ້ຮັບເຄາະຮ້າຍຈາກການຄ້າມະນຸດ.
- ອຳນວຍຄວາມສະດວກໃນການສ້າງເຄືອຂ່າຍຂອງບັນດາອົງການຈັດຕັ້ງທີ່ພົວພັນເຖິງກິດຈະກຳການສະກັດກັ້ນການຄ້າມະນຸດ ໂດຍຜ່ານການແລກປ່ຽນປະສົບປະການ, ແຜນຍຸດທະສາດທີ່ດີ ແລະ ເພີ້ມທະວີການຮ່ວມມືເທື່ອລະກ້າວ.

# ເອກະສານອ້າງອີງ

ADB ແລະ ສະຫະພັນແມ່ຍິງລາວ (2002). ບົດແນະນຳກ່ຽວກັບການເຊື່ອມທັດສະນະບົດບາດຍິງ-ຊາຍ: ບາດກ້າວການວາງແຜນປະຕິບັດບົດບາດຍິງ-ຊາຍແຫ່ງຊາດ, ບົດບາດຍິງ-ຊາຍ ເພື່ອການພັດທະນາ ໃນ ສປປ ລາວ.

ADB ແລະ ກະຊວງ ສຶກສາທິການ, ກົມສາມັນສຶກສາ (2002). ການສຶກສາຄົ້ນຄ້ວາກ່ຽວກັບການປ່ຽນແປງໃນການລົງທະບຽນເຂົ້າຮຽນຂອງນັກຮຽນຊົນເຜົ່າ ຢູ່ໃນປະເທດ, ໂຄງການການສຶກສາຂັ້ນພື້ນຖານສຳລັບເດັກແມ່ຍິງ.

ADB ແລະ ສູນສະຖິຕິແຫ່ງຊາດ, ຄະນະກຳມະການແຜນການ ແລະ ການຮ່ວມມື (2002). ສະຫຼຸບຜົນຂອງການປະເມີນຜົນຄວາມທຸກຍາກແບບມີສ່ວນຮ່ວມ.

ADB (1998). ນະໂຍບາຍກ່ຽວກັບ ບົດບາດຍິງ-ຊາຍເພື່ອການພັດທະນາ.

-------(1996) ແມ່ຍິງໃນການພັດທະນາ.

-------(2004): ສປປປ ລາວ, ບົດບາດຍິງ-ຊາຍ, ຄວາມທຸກຍາກ ແລະ ເປົ້າໝາຍການພັດທະນາສະຫັດສະຫວັດ

CAPWIP (1999) ແມ່ຍິງ ໃນການເມືອງລາວ.

ຄະນະກອງເລຂາເຄືອຈັກກະພົບອັງກິດ (2001). ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນປະຕິບັດບົດບາດຍິງ-ຊາຍເພື່ອການພັດທະນາຂອງເຄືອຈັກກະພົບອັງກິດປີ 1995: ການປະເຊີນກັບບັນຫາທີ່ທ້າທາຍອັນໃໝ່.

ອົງການຄອນເຊີນ ເວີນວາຍ, 1999, ອົງການທີ່ບໍ່ແມ່ນຂອງລັດຖະບານ, ແມ່ຍິງຊົນເຜົ່າ ແລະ ການເງິນຈຸລະພາກ: ລົງເລິກ ສປປ ລາວ

David, Karina (1995). ການສຳມະນາບົດບາດຍິງ-ຊາຍສຳລັບຜູ້ຊາຍ: ປະສົບການຂອງ HASIK.

ສຳນັກງານນາຍົກ, ກົມການປົກຄອງ, ບົດລາຍງານສະຖິຕິປີ 2004

ອົງການອາຫານ ແລະ ການກະເສດ, 2001: ບົດບາດຍິງ-ຊາຍ ແລະ ການລ້ຽງປາ ໃນ ສປປ ລາວ

ລັດຖະບານແຫ່ງ ສປປ ລາວ (2000). ຂະແໜງນ້ຳສະອາດ ແລະ ສາທາລະນະສຸກ ໃນເຂດຊົນນະບົດ, ຮ່າງຍຸດທະສາດ ແລະ ທິດທາງແຫ່ງຊາດ.

ລັດຖະບານແຫ່ງ ສປປ ລາວ (2003). ໂຄງການອອກໃບຕາດິນ: ການສຶກສາເສດຖະກິດ-ສັງຄົມຂັ້ນພື້ນຖານ. ກະຊວງການເງິນ.

ລັດຖະບານແຫ່ງ ສປປ ລາວ (2004). ຄົວເຮືອນ ຂອງ ສປປ ລາວ, ຕົວຊີ້ວັດທາງດ້ານເສດຖະກິດ-ສັງຄົມ, ການສຳຫຼວດການໃຊ້ຈ່າຍ ແລະ ຊົມໃຊ້ ຂອງຄົວເຮືອນລາວ 2002/2003 LECS 3.

Ireson, Carol J (1996). ທີ່ດິນ, ປ່າໄມ້ ແລະ ຄອບຄົວ. ວຽກ ແລະ ອຳນາດຂອງແມ່ຍິງຢູ່ໃນຊົນນະບົດລາວ.

King, Elizabeth Dominiqe Van de Welle (2005). ການເຂົ້າໂຮງຮຽນ ແລະ ຄວາມທຸກຍາກໃນ ສປປ ລາວ. ກຸ່ມພັດທະນາເສດຖະກິດ.

GDG 2003, ບົດຄົ້ນຄ້ວາວິໄຈບົດບາດຍິງ-ຊາຍ ແລະ ຄວາມຮຸນແຮງໃນຄອບຄົວຊົນນະບົດ

ສຂບພ 1998, ຄວາມຮຸນແຮງຕໍ່ແມ່ຍິງ: ສະຫລຸບຫຍໍ້ການຄົ້ນຄ້ວາຈາກຫວຽດນາມ ແລະ ຂໍ້ຄົ້ນພົບເບື້ອງຕົ້ນໃນ ສ ປປ ລາວ

ສຂບພ 2000, ການແຕ່ງງານ ແລະ ຄອບຄົວໃນ ສປປ ລາວ

ສຂບພ 2003, ບົດບາດຍິງ-ຊາຍ, ການເງິນຈຸລະພາກ ແລະ ກິດຈະກຳສ້າງລາຍຮັບ

ສຂບພ 2003, ການມີສ່ວນຮ່ວມຂອງແມ່ຍິງໃນຄະນະກຳມະການຕ່າງໆຂັ້ນບ້ານ

LWU ແລະ GRID (2000) ບົດບາດຍິງ-ຊາຍ ແລະ ເອກະສານທີ່ດິນ: ທັດສະນະຂອງສັງຄົມຕໍ່ບັນຫາບົດບາດຍິງ-ຊາຍມີຜົນກະທົບຕໍ່ແມ່ຍິງຄືແນວໃດ?

GRID (2001) ພະລັງງານເພື່ອຊີວິດ, ແມ່ຍິງ, ຜູ້ຊາຍ ແລະ ການນຳໃຊ້ໄມ້ຟືນ ໃນ ສປປ ລາວ

-------(2004) ປະເດັນບົດບາດຍິງ-ຊາຍໃນວິສາຫະກິດຂະໜາດນ້ອຍ ແລະ ກາງ

ສປປລາວ, ກົດໝາຍ ອາຍາ (1990)

ສປປລາວ, ສົນທິສັນຍາຊີດໍ: ສັງລວມສະບັບທໍາອິດເຖິງສະບັບທີຫ້າ

LWU ແລະ UNIFEM (1998) ແຜນການພັດທະນາສໍາລັບແມ່ຍິງລາວ.

ອົງການແມ່ນໍ້າຂອງ, 2003

ກະຊວງກະສິກໍາ, 2002, ປື້ມສະຖິຕິປະຈໍາປີ

ກະຊວງສຶກສາ, ບົດລາຍງານ ປີ 2004

ກະຊວງການຕ່າງປະເທດ, ກົມສົນທິສັນຍາ ແລະ ກົດໝາຍ (1999). ການລວບລວມສົນທິສັນຍາສາກົນວ່າດ້ວຍສິດທິມະນຸດ.

ກະຊວງສາທາລະນະສຸກ, 2001, ສໍາຫລວດສາທາລະນະສຸກແຫ່ງຊາດ: ສະພາບກ່ຽວກັບສຸຂະພາບຂອງປະຊາຊົນລາວ

ກະຊວງອຸດສະຫະກໍາ ແລະ ຫັດຖະກໍາ/ອົງການ GTZ 1996, ການສໍາຫລວດວິສາຫະກິດຂະໜາດນ້ອຍ ແລະ ກາງ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການໄອໂລ, 2003: ການສໍາຫລວດການເຄື່ອນຍ້າຍແຮງງານໃນແຂວງ ຄໍາມ່ວນ, ສະຫວັນນະເຂດ ແລະ ຈໍາປາສັກ

Minot, Nicholas (1996). ຜົນການສໍາຫລວດລະດັບຊາດກ່ຽວກັບວິສາຫະກິດຂະໜາດນ້ອຍ ແລະ ກາງ

ກຸ່ມປະເມີນຜົນການສຶກສາສໍາລັບທຸກຄົນ ແຫ່ງຊາດ 2000 (1999). ຮ່າງບົດລາຍງານການປະເມີນ ສະພາບການສຶກສາສໍາລັບທຸກຄົນ ໃນ ສປປ ລາວ.

ຄະນະກໍາມະການກະກຽມກອງປະຊຸມໂລກຄັ້ງທີ່ 4 ແຫ່ງຊາດ ກ່ຽວກັບແມ່ຍິງ (1995). ບົດລາຍງານແຫ່ງຊາດ ກ່ຽວກັບແມ່ຍິງ ຢູ່ ສປປ ລາວ.

ສູນສະຖິຕິແຫ່ງຊາດ (2001) ບົດລາຍງານການສໍາຫຼວດສະພາບສາທາລະນະສຸກແຫ່ງຊາດ, ສະຖານະພາບທາງດ້ານສຸຂະພາບຂອງປະຊາຊົນ ໃນ ສປປ ລາວ.

ສູນສະຖິຕິແຫ່ງຊາດ (2005). ບົດລາຍງານເບື້ອງຕົ້ນກ່ຽວກັບການສຳຫຼວດພົນລະເມືອງ ແລະ ຄົວເຮືອນ ໃນ ສປປ ລາວ.

ສູນສະຖິຕິແຫ່ງຊາດ, ທະນາຄານພັດທະນາອາຊີ, ອົງການຊີດາ ແລະ ທະນາຄານໂລກ, 2006 : ”ຈາກ ຮ່ອມພູ ເຖິງ ຈອມເຂົາ- ສິບຫ້າປີແຫ່ງການຫລຸດຜ່ອນຄວາມທຸກຍາກ” ການປະເມີນຄວາມທຸກຍາກໃນ ສປປ ລາວ

NCCA 2003: ບົດລາຍງານປະຈຳປີ

PSI 2002: ບໍ່ມີຊື່

RTI ແລະ ADB (2000) ຄວາມຕ້ອງການດ້ານສາທາລະນະສຸກ ແລະ ການສຶກສາຂອງຊົນເຜົ່າສ່ວນ ນ້ອຍ ໃນເຂດລຸ່ມແມ່ນ້ຳຂອງ.

Schenk - Sandbergen, Loes (1999). ການຝຶກອົບຮົມສຳລັບ GRID ກ່ຽວກັບການເກັບກຳຂໍ້ ມູນແບບຄຸນນະພາບ, ບົດບາດຍິງ-ຊາຍ, ການນຳໃຊ້ໄມ້ຟືນ ແລະ ການສ້າງຄວາມເຂັ້ມແຂງ.

ຄະນະກຳມະການແຜນການແຫ່ງລັດ (1999). ນະໂຍບາຍແຫ່ງຊາດ ກ່ຽວກັບການພັດທະນາພົນລະເມືອງ ຂອງ ສປປ ລາວ.

ກະຊວງການຕ່າງປະເທດຊູແອດ (1998). ຄວາມສະເໝີພາບດ້ານບົດບາດຍິງ-ຊາຍລະຫ່ວາງແມ່ຍິງ ແລະ ຜູ້ຊາຍ ໃນການຮ່ວມມືການພັດທະນາ.

UN (1996) ຖະແຫຼງການ ແລະ ແຜນປະຕິບັດປັກກິ່ງ.
-----(2001). ບົດລາຍງານຫຍໍ້ກ່ຽວກັບການພັດທະນາພົນລະເມືອງ ແລະ ບົດບາດຍິງ-ຊາຍ.

-----(2000) ການປະເມີນສະພາບຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
-----(2004) ບົດລາຍງານເປົ້າໝາຍການພັດທະນາສະຫັດສະຫວັດ

UNAIDS (2003). HIV/AIDS ແລະ ທິດທາງຂອງສາກົນກ່ຽວກັບສິດທິມະນຸດ, ສະບັບປັບປຸງ ຄັ້ງທີ່ 6.

UNESAP(1999). ຂະໜາດບົດບາດຍິງ-ຊາຍ ຂອງພົນລະເມືອງ ແລະ ການພັດທະນາ ໃນອາຊີຕາເວັນ ອອກສ່ຽງໃຕ້.

-----(1998) ທັດສະນະຂອງປະຊາກອນຕໍ່ກັບບັນຫາແມ່ຍິງໃນການພັດທະນາ ຢູ່ກຳປູເຈັຍ, ສປປ ລາວ, ມຽນມາ ແລະ ຫວຽດນາມ.

UNDP (1997). ໂຄງການສ້າງກິດຈະກໍາການຫາລາຍໄດ້ ແລະ ປະສົບການຢູ່ ສປປ ລາວ.

-------(1998). ການເຊື່ອມທັດສະນະບົດບາດຍິງ-ຊາຍ, ການສ້າງຄວາມສາມາດດ້ານການເຊື່ອມທັດສະນະບົດບາດຍິງ-ຊາຍ.

-------(1999). ບົດລາຍງານໄລຍະສອງປີ ຂອງ ສປປ ລາວ.

-------(2001). ບົດລາຍງານການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໃນ ສປປ ລາວ.

UNDP ແລະ ສູນສະຖິຕິແຫ່ງຊາດ (1999) . ບົດລາຍງານການພັດທະນາຊັບພະຍາກອນມະນຸດແຫ່ງຊາດຄັ້ງທໍາອິດ ແລະ ບົດສະຫຼຸບກອງປະຊຸມຂອງບັນດາປະເທດທີ່ສົ່ງບົດລາຍງານ.

UNDP ແລະ UNIFEM (2000). ສະພາບ ແລະ ສະຖິຕິບົດບາດຍິງ-ຊາຍ ແລະ ການພັດທະນາໃນປະເທດໄທ.

UNESCO 2003, ທົບທວນການສຶກສາສາມັນໃນອາຊີຕາວັນອອກ

UNIDO, 2001, ສໍາຫລວດການສ້າງຕັ້ງວິສະຫະກິດຂະໜາດນ້ອຍ

ທະນາຄານໂລກ (2000). ເອົາໃຈໃສ່ໃຫ້ການພັດທະນາມີທັດສະນະບົດບາດຍິງ-ຊາຍ, ໂດຍສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍໃນສິດ, ຊັບພະຍາກອນ ແລະ ການປະກອບຄໍາຄິດຄໍາເຫັນ.

--------GenderStats, http://devdata.worldbank.org/genderstats/home.asp

ທະນາຄານໂລກ (2004) ກຸ່ມຊົນເຜົ່າ, ບົດບາດຍິງ-ຊາຍ ແລະ ການລຶບລ້າງຄວາມທຸກຍາກ: ກໍລະນີສຶກສາ ຈາກຊຸມຊົນ ຄະມຸລູ ໃນແຂວງອຸດົມໄຊ.

--------(2005) ການຕິດຕາມເສດຖະກິດໃນ ສປປ ລາວ.

--------(2005) ການປະເມີນຄວາມທຸກຍາກ ໃນ ສປປ ລາວ.

ສີລີພົງ, ໄພທອງ, 1999: ເອກະສານວິຊາການ: ແມ່ຍິງ ແລະ ການເງິນຈຸລະພາກໃນຊົນນະບົດຂອງ ສປປ ລາວ